ພົ້ງສະໜັບ ບຸບຜາ

ການຂະຫຍາຍຕົວຂອງລັດ

ລາວ

1996

ຝ່າຍສະໜັບ ບຸບຜາ

ການຂະຫຍາຍຕົວຂອງລັດ

ລາວ

ພິມເທື່ອທີ I

ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ

1996

ພິມຄັ້ງທີ I

ອ.ພ : 059/ພຫປ

ຂະໜາດ 13 x 19 ຊມ

ຈຳນວນ : 2.000 ເຫລັ້ມ

ພິມທີ່ : ໂຮງພິມນະຄອນຫລວງ

ຄຳ ນຳ

ບັນຫາການຂະຫຍາຍຕົວ ຂອງລັດໃນຍຸກສະໄໝປະຈຸບັນ ໄດ້ເປັນບັນຫາ ສຳຄັນຍິ່ງສຳລັບບັນດາປະຊາຊາດ, ເພາະວ່າ ການເລືອກເສັ້ນທາງ ການຂະຫຍາຍຕົວກໍ່ຄືການພັດທະນາ ເສດ ຖະກິດ ແລະສັງຄົມຂອງປະເທດໃດນຶ່ງນັ້ນ ແມ່ນຂຶ້ນກັບສະພາບ ການປ່ຽນແປງ ທາງການເມືອງ ອັນເນື່ອງມາຈາກປັດໄຈທາງ ພາຍໃນ ແລະ ພາຍນອກ.

ຈາກການພັງທະລາຍຂອງລະບອບລ່າເມືອງຂຶ້ນໃນຂອບ ເຂດທົ່ວໂລກໃນເມື່ອກ່ອນ, ປະຊາຊາດທັງຫຼາຍ ໄດ້ດຳເນີນການ ຕໍ່ສູ້ເພື່ອປົດປ່ອຍຕົນເອງ ອອກຈາກການເປັນຫົວເມືອງ ຂຶ້ນຂອງ ຕ່າງຊາດ, ໄດ້ກ້າວເດີນຕາມເສັ້ນທາງຊາດນິຍົມ, ເປັນ ການ ຫຼື ເດີນຕາມທ່າອ່ຽງນິຍົມ, ກໍ່ສ້າງສັງຄົມນິຍົມໂດຍບໍ່ຜ່ານ ໄລຍະ ການຂະຫຍາຍຕົວ ຂອງລະບອບທຶນນິຍົມດ້ວຍ ການອີງໃສ່ ສະຫະພາບໂຊວຽດ ແລະ ບັນດາປະເທດສັງຄົມນິຍົມ. ສ່ວນປະ ເທດເຈົ້າ ອານານິຄົມລ່າເມືອງຂຶ້ນ ຊ້ຳພັດໄດ້ຖືວ່າຕົນເອງໄດ້ນຳ ເອົາຄວາມສິວິໄລ ມາສູ່ປະເທດຫົວເມືອງຂຶ້ນຂອງຕົນ, ແຕ່ກົງກັນ ຂ້າມປະຊາຊົນໃນ ບັນດາປະເທດຫົວເມືອງຂຶ້ນແມ່ນບໍ່ສາມາດ ຈະຮັບເອົາການກົດຂີ່ຂົ່ມເຫັງ ແລະຢູ່ໃນສະພາບຂອງການເປັນ

ຂ້ອຍຂ້າຂອງເຈົ້າອາມາມີຄົນຕໍ່ໄປໄດ້ ຍ້ອນວ່າຂາດສິດທິຂອງ ມະນຸດ ແລະສິດ ເສລີພາບປະຊາທິປະໄຕ.

ການພັງທະລາຍຂອງ ສະຫະພາບໂຊວຽດ ແລະ ບັນດາ ປະເທດສັງຄົມນິຍົມເອີລົບຕາເວັນອອກ ໄດ້ເຮັດໃຫ້ສະພາບການ ຂອງໂລກມີການປ່ຽນແປງຢ່າງໃຫຍ່ຫຼວງ ເຊິ່ງບັນດາປະເທດ ຕາເວັນຕົກໄດ້ຊີ້ແຈງວ່າແມ່ນ ຜົນສຳເລັດອັນຍິ່ງໃຫຍ່, ແມ່ນການ ປ່ຽນແປງຈາກຄວາມຜະເດັດການ ໄປສູ່ລະບອບປະຊາທິປະໄຕ ແລະ ການເສີມຂະຫຍາຍສິດທິມະນຸດ. ແຕ່ຊາວຜູ້ອອກແຮງງານ ທັງຫລາຍ ທີ່ໄດ້ຮັບຜົນສະທ້ອນຈາກການປ່ຽນແປງໃນ ຜ່ານ ມານັ້ນ ໄດ້ຖືວ່າເປັນຄວາມຫາຍຍະນະທີ່ໄດ້ນຳເອົາຄວາມ ທຸກ ຈົນ ຄືນມາສູ່ປະຊາຊົນ. ໃນນັ້ນ ວິກິດການທາງການເມືອງ ແລະ ເສດຖະກິດ ໄດ້ເຮັດໃຫ້ມີຄົນຫວ່າງງານຢ່າງຫຼວງຫຼາຍ ອັນພາ ໃຫ້ເຂົາເຈົ້າຄິດເຖິງຄວາມຍິ່ງໃຫຍ່ຂອງລະບອບສັງຄົມນິຍົມ.

ສະນັ້ນ, ບັນຫາການຂະຫຍາຍຕົວຂອງລັດ ຈຶ່ງເປັນບັນ ຫາທີ່ມີຄວາມໝາຍ ທາງປະຫວັດສາດ ເພາະມັນໄດ້ພົວພັນເຖິງ ການເຕີບໃຫຍ່ຂະຫຍາຍຕົວຂອງຊາດ ອີງຕາມເງື່ອນໄຂແຫ່ງ ຄວາມເປັນຈິງໃນຕະຫຼອດໄລຍະທີ່ຜ່ານມາ.

ປະເທດລາວ ໄດ້ເຄີຍເປັນປະເທດລາດຂອງ ປະເທດໃກ້ ຄຽງເປັນເວລາ 100 ກ່ວາປີ, ໄດ້ຕົກຢູ່ໃນແອກຄອບຄອງຂອງ

ລັດທິລ່າເມືອງຂັ້ນແບບເກົ່າ 60 ກ່ວາປີ ແລະໄດ້ຖືກແຊກແຊງ ແລະຮຸກຮານຂອງລັດທິລ່າເມືອງຂັ້ນ ແບບໃໝ່ ເກືອບ 20 ປີ.

ດ້ວຍເຫດນີ້ ການເລືອກເສັ້ນທາງ ຂະຫຍາຍ ຕົວຂອງລັດ ສຳລັບປະຊາຊົນລາວ, ແມ່ນມີຄວາມສຳຄັນເປັນພິເສດ, ຍ້ອນວ່າ ປະຊາຊົນລາວຜູ້ຊຶ່ງໄດ້ຜ່ານຜ່າ ຄວາມທຸກຍາກລຳບາກໃຕ້ລະ ບອບການກົດຂີ່ຂູດຮີດ ຂອງລັດທິລ່າເມືອງຂັ້ນ ແບບເກົ່າແລະ ແບບໃໝ່ນັ້ນ ໄດ້ຮັບຮູ້ແລະເຂົ້າໃຈວ່າຄວນຈະແກ້ໄຂບັນຫາສະ ເພາະໜ້າແລະຍາວນານຂອງຕົນແນວໃດດີ. ຈາກການຕໍ່ສູ້ເພື່ອ ຄວາມເປັນອິດສະລະພາບ ແລະ ເອກະລາດແຫ່ງຊາດເປັນເວລາ ຫຼາຍປີ, ປະຊາຊົນລາວໄດ້ຮັບໄຊຊະນະເປັນຂັ້ນໆມາ ແລະໃນ ປະຈຸບັນພວມເດີນຕາມ ເສັ້ນທາງແຫ່ງ ການຂະຫຍາຍຕົວເພື່ອ: ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດ ທະນາຖາວອນ.

ປັ໋ມນີ້ໄດ້ເປັນການສ່ອງແສງເຖິງ ຄວາມພະຍາຍາມໃນ ການຊອກຮູ້ ເຖິງບັນຫາການຂະຫຍາຍຕົວຂອງ ລັດລາວນັບແຕ່ ໄດ້ຕົກຢູ່ພາຍໃຕ້ລະບອບລ່າເມືອງຂັ້ນແບບເກົ່າເປັນຕົ້ນມາ, ໂດຍ ສະເພາະຈິດໃຈຂອງປັ໋ມນີ້ ແມ່ນໄດ້ເລົ່າເຖິງການຕໍ່ສູ້ຂອງປະຊາ ຊົນລາວບັນດາເຜົ່າໃນການຕ້ານ ລະບອບລ່າເມືອງຂັ້ນແບບເກົ່າ ແລະແບບໃໝ່ພາຍໃຕ້ການນຳພາຂອງ ພັກປະຊາຊົນປະຕິວັດ ລາວເພື່ອຄວາມເປັນ ເອກະພາບຂອງຊາດ ຊຶ່ງຜົນການ ຕໍ່ສູ້ຂອງບັນ ດາກຳລັງຮັກຊາດນັ້ນ ໄດ້ພາໄປເຖິງການລວມ ລາວຮອດ 3 ຄັ້ງ ແລະສະຫຼຸບດ້ວຍໄຊຊະນະແຫ່ງ ການ

ສະຖາປະນາປະເທດລາວ ເອກະພາບເປັນ ສາທາລະນະລັດ ປະຊາທິປະໄຕ ປາຊາຊົນລາວ.

ເນື້ອເລື້ອງຂອງປຶ້ມນີ້ ໄດ້ຊີ້ແຈງໃຫ້ເຫັນ ລັກສະນະປະ ຫວັດສາດ, ການເມືອງ ແລະກົດໝາຍແຫ່ງການຂະຫຍາຍຕົວ ຂອງລັດລາວ ເຊິ່ງບໍ່ອາດຈະຄົບຖ້ວນ ແຕ່ກໍ່ຄົງຈະຊ່ວຍໃຫ້ຜູ ອ່ານມີຄວາມເຂົ້າໃຈບໍ່ໜ້ອຍກໍ່ນ້ອຍ ກ່ຽວກັບຄວາມເປັນມາ ແລະ ການເຕີບໃຫຍ່ຂະຫຍາຍຕົວຂອງ ສາທາລະນະລັດ ປະຊາທິປະ ໄຕ ປາຊາຊົນລາວ.

ສາລະບານ

ໜ້າ

ຄຳນຳ..... 1

I. ການປົກຄອງລ່າເມືອງຂຶ້ນຂອງຝລັ່ງ ຢູ່ລາວ..... 8

1. ປະເທດລາວ-ກ່ອນໜ້າການຄອບຄອງ ຂອງຝລັ່ງ..... 8

2. ລະບອບການປົກຄອງຂອງຝລັ່ງຢູ່ລາວ..... 12

ກ. ປະເທດລາວ-ໃນຮູບການອາລັກຂາ... 13

ຂ. ຫົວເມືອງຂຶ້ນຂອງຝລັ່ງ..... 17

3. ສານແລະກົດໝາຍໃນຫົວເມືອງຂຶ້ນຂອງ ຝລັ່ງຢູ່ລາວ..... 21

4. ສະພາບຂອງຝົນລະເມືອງລາວ..... 26

5. ການຕໍ່ສູ້ຂອງປະຊາຊົນລາວຕ້ານລະບອບ ລ່າເມືອງຂຶ້ນ..... 31

II. ການປະກາດຄວາມເປັນເອກະລາດຂອງ ລັດລາວ..... 38

1. ການປະກາດເອກະລາດຂອງລາວ ອິດສະຫລະ..... 38

2. ລັດຖະທຳມະນູນ 1945..... 45

3. ການກັບຄືນຂອງຝລັ່ງສູ່ອຳນາດການ

24/VII ห้ามจำหน่าย

ປົກຄອງຢູ່ລາວ ຄັ້ງ ທີ 2..... 50
4. ລັດຖະທຳມະນູນ 1947 ແລະ
ການຂະຫຍາຍຕົວທາງການເມືອງຢູ່ລາວ.... 54
5. ການເຕີບໃຫຍ່ຂອງຂະບວນການ
ຕໍ່ສູ້ປົດປ່ອຍຂອງປະຊາຊົນລາວ..... 64
6. ການຂະຫຍາຍຕົວຂອງລັດຖະທຳມະນູນ
ແລະການກຳເໝີດເກີດຂຶ້ນຂອງບັນດາ
ພັກການເມືອງ..... 70
III. ການຕໍ່ສູ້ຂອງປະຊາຊົນລາວ ເພື່ອຄວາມ
ເປັນເອກະພາບແຫ່ງຊາດ..... 80
1. ການເຈລະຈາເພື່ອຄວາມປອງດອງຊາດ... 80
2. ການແຊກແຊງຂອງສະຫະລັດອາເມ
ລິກາເຂົ້າວຽກງານພາຍໃນຂອງລາວ..... 87
3. ການປອງດອງລະຫວ່າງ 3 ເຈົ້າລາວ
ແລະສັນຍາເຊີແນວ 1962 ກ່ຽວກັບລາວ... 95
4. ຄວາມຫຼົ້ມເຫຼວຂອງການລວມລາວຄັ້ງທີ 2...100
5. ຖານະການເມືອງຂອງເຂດປົດປ່ອຍລາວ.....105
6. ຖານະການເມືອງຂອງເຂດວຽງຈັນ..... 117
7. ຖານະການເມືອງຂອງເຂດເປັນກາງ..... 128
IV. ການສະຖາປະນາ ສາທາລະນະລັດ
ປະຊາທິປະໄຕ ປະຊາຊົນລາວ.....138
1. ສະພາວະການໃນໄລຍະຂ້າມຜ່ານ.....138

2. ການລຸກຮືຂຶ້ນຂອງປະຊາຊົນ ແລະ
ການສະຖາປະນາ ສປປ ລາວ..... 147
3. ລະບົບອົງການ ອຳນາດລັດຢູ່ ສປປລາວ.....159
ກ. ອົງການນິຕິບັນຍັດ ແຫ່ງ ສປປລາວ.....161
ຂ. ອົງການບໍລິຫານ ແຫ່ງ ສປປລາວ 171
ຄ. ອົງການຕຸລາການ ແຫ່ງ ສປປ ລາວ ...188
4. ລັດຖະທຳມະນູນ ແຫ່ງ ສາທາລະນະລັດ
ປະຊາທິປະໄຕ ປະຊາຊົນລາວ-1991.....210

---////---

I


ການປົກຄອງລ່າເມືອງຂຶ້ນຂອງຝລັ່ງຢູ່ລາວ .

1. ປະເທດລາວ-ກ່ອນໜ້າການຄອບຄອງຂອງຝລັ່ງ .

ປະຫວັດສາດຂອງລາວ ແມ່ນປະຫວັດສາດ ແຫ່ງການຕໍ່ສູ້ອັນຍືດເຍື້ອຍາວນານ ຂອງປະຊາຊົນລາວ ບັນດາເຜົ່າເພື່ອຄວາມເປັນເອກະພາບແຫ່ງຊາດ.

ນັກຄົ້ນຄ້ວາແລະນັກປະຫວັດສາດຂອງລາວກໍ່ຄືຕ່າງ ປະເທດໄດ້ໃຊ້ຄວາມພະຍາຍາມຢ່າງຕໍ່ເນື່ອງຈົນເຖິງປະຈຸບັນນີ້ ເພື່ອຊອກຫາຫຼັກຖານ ແລະສິ່ງຢັ້ງຢືນຕ່າງໆ ທາງປະຫວັດສາດ ກ່ຽວກັບຄວາມເປັນມາຂອງລາວ. ການຊອກຮູ້ນັ້ນ ບໍ່ພຽງແຕ່ກ່ຽວກັບເຜົ່າລາວ ແຕ່ຍັງໄດ້ລົງເລິກເຂົ້າຕື່ມກ່ຽວກັບເຜົ່າໄທ ເຊິ່ງມີຜາສາປາກເວົ້າ, ຣິດຄອງປະເພນີ ແລະ ວັດທະນະທຳຄ້າຍກັບລາວ.

ເວົ້າໄດ້ວ່າ ໃນຂະນະນີ້ ນັກປະຫວັດສາດດັ່ງກ່າວໄດ້ມີສອງທັດສະນະແຕກຕ່າງກັນ. ຈຳນວນນຶ່ງໃຫ້ຂໍ້ສະຫຼຸບວ່າ, ເຜົ່າລາວ-ໄທ ຫຼື ໄທ-ລາວ ໄດ້ດຳລົງຊີວິດ ຢູ່ທີ່ ອານາຈັກນ່ານເຈົ້າເປັນເວລາ ນານຫຼາຍຊົ່ວຄົນ ຫຼັງຈາກນັ້ນໄດ້ຮັບຜົນສະທ້ອນຈາກການຮຸກຮານ ແລະຂະຫຍາຍ ອານາເຂດ ຂອງ



ຫໍພະແກ້ວ ປາງຖືກ ສະຫຍາມ ທຳລາຍ

ພວກມົງໂກນ ແລ້ວ ຈຳຕ້ອງໄດ້ພາກັນເຄື່ອນຍ້າຍ ລົງສູ່ທິດໃຕ້ ລຽບຕາມລຳແມ່ນ້ຳ ຂອງ ແລະໄດ້ແຈກຢາຍ ກັນຢູ່ຕາມ ເຂດ ແຄ້ມແລະປົກຄອງເປັນ ອານາຈັກໃກ້ຄຽງກັນ. ຈຳພວກທີ່ສອງ ໃຫ້ຂໍ້ສະຫຼຸບວ່າ ເຜົ່າດັ່ງ ກ່າວ ໄດ້ມີຕົ້ນກຳເໜີດ ແລະຕັ້ງ ຖິ່ນຖານຢູ່ຜືນແຜ່ນ ດິນແຫ່ງນີ້ມາກ່ອນ ພ້ອມທັງໄດ້ອ້າງອີງ ຫຼັກຖານບາງຢ່າງທີ່ໄດ້ພົບ. ນອກນັ້ນ ຍັງພະຍາຍາມຊອກຫາ ສິ່ງຢັ້ງຢືນຫຼາຍຢ່າງ ເພື່ອຊີ້ແຈງໃຫ້ເຫັນ ວ່າຄົນເຊື້ອຊາດ ລາວ-ໄທ ນັ້ນແມ່ນເປັນເຈົ້າແຜ່ນດິນແຫ່ງນີ້ ຕະຫຼອດມາ.

ຂໍ້ພິສູດທີ່ແທ້ຈິງຍັງບໍ່ທັນຈະແຈ້ງເທື່ອ, ແຕ່ເຖິງແນວໃດ ກໍ່ຕາມ ປະຫວັດສາດຂອງລາວກໍ່ແມ່ນປະຫວັດສາດເປັນພັນໆປີ. ໃນນັ້ນສາມາດເຫັນໄດ້ວ່າປະຊາຊົນລາວບັນດາເຜົ່າ ບໍ່ໄດ້ລົດລະ ໃນການຕໍ່ສູ້ໂຮມ ເພື່ອຄວາມເປັນເອກະພາບແຫ່ງຊາດ.

- ໃນສັດຕະວັດທີ XIV, ເຈົ້າຟ້າງຸ່ມ ແຫ່ງອານາຈັກຂອມ ດົງຂອງທອງຂອງລາວ ໄດ້ຂະຫຍາຍອານາຈັກດ້ວຍການບັງ ຄັບໃຫ້ຫົວເມືອງໃຫຍ່ ນ້ອຍໃກ້ຄຽງຂຶ້ນໃນການປົກຄອງຂອງຕົນ ໂດຍໄດ້ສ້າງຕັ້ງໃຫ້ເປັນ ລັດນຶ່ງທີ່ຊື່ວ່າ "ອານາຈັກລ້ານຊ້າງ". ເຈົ້າຟ້າງຸ່ມ ໄດ້ກາຍເປັນພະມະຫາກະສັດ ອົງທຳອິດແຫ່ງອານາ ຈັກລ້ານຊ້າງ ເຊິ່ງເປັນລັດທີ່ຂັ້ມແຂງແລະລວມສູນຂອງ ລະບອບ ສັກດິນາໄລຍະຕົ້ນ. ເຈົ້າຟ້າງຸ່ມ ໄດ້ຈັດຕັ້ງຄວາມເປັນລະບຽບ ຮຽບຮ້ອຍພາຍໃນປະເທດ ໂດຍໄດ້ສ້າງຕັ້ງກົງຈັກຂອງລັດ ແລະ

ອົງການປົກຄອງເຊິ່ງອີງໃສ່ສາດສະໜາພຸດ ໃນການຄອງອຳ
ນາດຂອງຕົນ.

- ໃນສັດຕະວັດທີ່ XV, ລັດລ້ານຊ້າງໄດ້ຮັບການປັບປຸງ
ໃຫ້ເຕີບໃຫຍ່ຂະຫຍາຍຕົວ ພາຍໃຕ້ການປົກຄອງຂອງເຈົ້າສາມ
ແສນໄທ ເຊິ່ງແມ່ນ ໂອລົດຂອງເຈົ້າຟ້າງຸ່ມ ທີ່ໄດ້ດຳເນີນການ
ປະຕິຮູບ ທາງດ້ານການເມືອງ, ການທະຫານ ແລະ ໄດ້ຈັດແບ່ງ
ຊົນຊັ້ນວັນນະພາຍໃນລາຊະອານາຈັກ.


- ໃນສັດຕະວັດທີ່ XVI-XVII, ລັດລ້ານຊ້າງໄດ້ຂະ
ຫຍາຍຕົວຂຶ້ນສູ່ຍອດ ສູງພາຍໃຕ້ການປົກຄອງຂອງ ເຈົ້າໄຊເສດ
ຖາທິລາດ ແລະສຸລິຍະວົງສາ ເຊິ່ງໃນໄລຍະດັ່ງກ່າວ ໄດ້ມີຊາວ
ເອີລົບເຂົ້າມາຢ້ຽມຢາມພົວພັນສັນທະວະໄມຕີ, ເຊັ່ນ : ຄະນະຜູ້
ແທນໂຮມລັງ ນຳໂດຍທ່ານ ວັນວຸດສະຕິບ ເຊິ່ງໄດ້ມາສາລະເອ
ໃນປີ 1641-1642 ແລະ ຄະນະຜູ້ແທນ ອິຕາລີ ນຳໂດຍຄຸນພໍ່
ມາຣິນີ ທີ່ໄດ້ມາໃນປີ 1642-1647.

- ໃນສັດຕະວັດທີ່ XVIII, ລັດລ້ານຊ້າງໄດ້ສູ້ລົບຕົບຕີ
ກັບລັດໃກ້ຄຽງ ເພື່ອປ້ອງກັນອານາຈັກຂອງຕົນ. ຈາກກົນອຸບາຍ
ແຊກແຊງແລະຍຸແຍ່ຂອງພາຍນອກ ອັນໄດ້ພາໃຫ້ມີຄວາມແຕກ
ແຍກຄວາມສາມັກຄີພາຍໃນ, ລັດລ້ານຊ້າງທີ່ ເຂັ້ມແຂງ ຈຶ່ງໄດ້
ຖືກແຕກຫັກເປັນສາມອານາຈັກພໍໃຫ້ພໍລາວຄື : ຫຼວງພະບາງ ຢູ່
ພາກເໜືອ, ວຽງຈັນ ຢູ່ພາກກາງ, ຈຳປາສັກຢູ່ພາກໃຕ້. ຄວາມ
ຂັດແຍ້ງ ແລະ ສົງຄາມພາຍໃນໄດ້ພາໃຫ້ອານາຈັກ ລ້ານຊ້າງ
ຕົກເປັນເປົ້າໝາຍຮຸກຮານ ຂອງອານາຈັກສະຫຍາມ ເຊິ່ງໃນທີ່

ສຸດກໍ່ໄດ້ກາຍເປັນປະເທດລາດ ຂອງສະຫຍາມເປັນເວລາເຖິງ 115 ປີ. ເຖິງວ່າລັດລ້ານຊ້າງໄດ້ເປັນປະເທດລາດຂອງສະຫຍາມ, ແຕ່ທົ່ວດິນແດນລ້ານຊ້າງ ແມ່ນບໍ່ໄດ້ຖືກປົກຄອງໂດຍສະຫຍາມທັງໝົດ.ຫຼາຍທ້ອງຖິ່ນຫ່າງໄກບໍ່ໄດ້ຂຶ້ນ ຕໍ່ອິດທິພົນ ຂອງ ສະຫຍາມ ແລະ ກໍ່ບໍ່ໄດ້ເສຍບັນນາການໃຫ້ແຕ່ຢ່າງໃດ. ຍ້ອນນ້ຳໃຈສູ້ຊົນບໍ່ຍອມຈຳນົນ ທີ່ຈະຢູ່ພາຍໃຕ້ການຄອບຄອງ ຂອງຕ່າງຊາດວິລະບູລຸດຂອງລາວກໍ່ໄດ້ນຳພາປະຊາຊົນລາວລຸກຂຶ້ນຕໍ່ສູ້ຢ່າງເມື່ອງນິດ ເພື່ອຄວາມເປັນອິດສະລະພາບ ແລະ ເອກະລາດແຫ່ງຊາດ.

- ການປະທະກັນລະຫວ່າງພວກສັກດິນາ ແລະ ສົງຄາມ ລຣນຕິດທີ່ມີຂຶ້ນ ລະຫວ່າງ ລັດສັກດິນາໃກ້ຄຽງກັບລັດລ້ານຊ້າງ ເຊິ່ງແມ່ນການຍາດຊິງກັນເປັນ ເຈົ້າແຜ່ນດິນຂອງລະບອບສັກດິນານັ້ນ ໄດ້ຕົກເປັນເຫຍື່ອ ອີກຕໍ່ນຶ່ງໃຫ້ຈັກກະພັດລ່າເມືອງຂຶ້ນຝລັ່ງໃນສັດຕະວັດທີ XIX.

- ພວກລ່າເມືອງຂຶ້ນຝລັ່ງ ເຊິ່ງໄດ້ຍຶດຄອງເອົາ ຫວຽດນາມ ແລະກຳປູເຈັຍເປັນຫົວເມືອງຂຶ້ນຂອງຕົນ ຕາມລຳດັບແລ້ວ ກໍ່ໄດ້ສົ່ງກຳລັງເຂົ້າມາຮຸກຮານດິນແດນລາວ, ຫຼັງຈາກນັ້ນກໍ່ໄດ້ໃຊ້ອຳນາດໜີບໃຫ້ສະຫຍາມ ຮັບຮູ້ກຳມະສິດ ຕໍ່ພາກສ່ວນຕ່າງ ເວັ້ນອອກຂອງ ອານາຈັກລ້ານຊ້າງ ໃນເມື່ອກ່ອນ ຄື ດິນແດນຝັ່ງຊ້າຍຂອງແມ່ນ້ຳ ຂອງ ພ້ອມດ້ວຍດິນແດນສ່ວນນຶ່ງຢູ່ຝັ່ງຂວາ ຂອງແມ່ນ້ຳຂອງ. ໃນປີ 1893 ຝລັ່ງເສດ ກໍ່ໄດ້ປະກາດເອົາລາວເຂົ້າຮ່ວມເປັນພາກສ່ວນນຶ່ງ ຂອງອິນດູຈີນຝລັ່ງ



ເມືອງລາວກ່ອນການປົກຄອງຂອງຝະລັ່ງ

ເສດ. ຄຽງຄູ່ກັບ ການຈັດຕັ້ງອົງການປົກຄອງຂອງຕົນຢູ່ລາວ ຝລັ່ງໄດ້ກຳນົດ ເສັ້ນຊາຍແດນລາວ-ໄທ ໄວ້ດ້ວຍການເຮັດສັນຍາ ແລະ ຂໍ້ຕົກລົງ ຊຶ່ງລາຍລະອຽດ ຈະສາມາດເບິ່ງໄດ້ໃນປະ ມວນສົນທິສັນຍາການ ກຳນົດເສັ້ນຊາຍແດນອິນດູຈີນ-ສະຫຍາມ (ລາວ-ໄທ) 1886-1946ຈັດພິມ ໂດຍກົມສົນທິສັນຍາ ແລະ ກົດໝາຍ ກະ ຊວງການຕ່າງປະເທດ ສປປ ລາວ.

2. <u>ລະບອບການປົກຄອງຂອງຝລັ່ງຢູ່ລາວ</u> .

ພາຍຫຼັງທີ່ຝລັ່ງ ໄດ້ໂອນເອົາລາວ ເຂົ້າໃນການປົກຄອງ ລວມຢູ່ອິນດູຈີນແລ້ວ ພວກເຂົາກໍ່ໄດ້ຈັດຕັ້ງລະບອບການປົກ ຄອງຢູ່ລາວ ໂດຍໃຊ້ອຳນາດການເມືອງຢ່າງເປີດແປນ ເຊິ່ງໄດ້ ກົດຂີ່ຂູດຮີດພົນລະເມືອງທ້ອງຖິ່ນຢ່າງຮ້າຍແຮງ.

ລະບອບການປົກຄອງ ຂອງຝລັ່ງຢູ່ລາວແມ່ນມີລັກສະ ນະຄ້າຍຄືກັນກັບຢູ່ໃນ ບັນດາຫົວເມືອງຂຶ້ນອື່ນໆຂອງຝລັ່ງເຊັ່ນ : ພົນລະເມືອງທ້ອງຖິ່ນບໍ່ມີສິດ, ແຕ່ໃຫ້ມີການສ້າງອຳນາດການ ປົກຄອງຂອງຕົນ, ອະນຸຍາດໃຫ້ມີລັດຖະທຳມະນູນຂອງລະບອບ ລ່າເມືອງຂຶ້ນ, ນຳໃຊ້ເຈົ້າຂຸນມຸນນາຍ ເຂົ້າຮັບໃຊ້ອົງການປົກ ຄອງ, ຮັກສາຮູບການປົກຄອງຂັ້ນຕ່ຳຂອງທ້ອງຖິ່ນ ເພື່ອເປັນ ເຄື່ອງມືໃຫ້ແກ່ການເກັບຂ່ວຍສາອາກອນຕ່າງໆ.

ເພື່ອສະດວກໃນການປົກຄອງ ຫົວເມືອງຂຶ້ນຂອງຕົນ, ພວກລ່າເມືອງຂຶ້ນຝລັ່ງ ໄດ້ດຳເນີນນະໂຍບາຍ "ແບ່ງແຍກເພື່ອ ຄອບຄອງ". ໂດຍຫຼິງເຫັນວ່າ ອານາຈັກຫຼວງພະບາງ ແມ່ນເຂັ້ມ



ລ່າເມືອງ ຂົ້ນ ພະລັ່ງ ເລີ່ມເຂົ້າມາລາວ

ແຂວງກ່ອາວຽງຈັນ ແລະຈຳປາສັກ, ພວກລ່າເມືອງ ຂຶ້ນຝລັ່ງຈຶ່ງ ໄດ້ຈັດແບ່ງແຜ່ນດິນລາວເປັນສອງພາກສ່ວນການປົກຄອງ ເຊັ່ນ ວ່າ ອານາຈັກຫຼວງພະບາງໃຫ້ຢູ່ໃນອາລັກຂາຂອງຝລັ່ງ ເຊິ່ງໃນ ດ້ານຮູບການຄືວ່າ ຮັກສາອຳນາດຂອງເຈົ້າຊີວິດ. ສ່ວນອານາ ຈັກວຽງຈັນ ແລະຈຳປາສັກນັ້ນແມ່ນ ເປັນຫົວເມືອງຂຶ້ນ ແລະ ຢູ່ ໃຕ້ການປົກຄອງໂດຍກົງຂອງຝລັ່ງ. ເຖິງວ່າຈະມີຄວາມແຕກ ຕ່າງກັນໃນລະບອບການເມືອງຂອງສອງພາກສ່ວນດັ່ງກ່າວ ແຕ່ ແຜ່ນດິນລາວທັງໝົດແມ່ນໄດ້ເຂົ້າໃນອິນດູຈີນຝລັ່ງເສດ ອັນປະ ກອບມີ: ຕົງແກ, ອານາມ, ໂກແຊງຊີນ, ກຳປູເຈັຍ, ລາວ ເຊິ່ງ ແມ່ນອົງການຈັດຕັ້ງທາງການເມືອງ ແລະ ການປົກຄອງອັນ ດຽວກັນ ເພາະວ່າວຽກງານການປົກຄອງລາວທັງໝົດແມ່ນ ຕົກ ຢູ່ໃນກຳມືຂອງຂ້າຫຼວງໃຫຍ່ຝລັ່ງ ເຊິ່ງມີທີ່ຕັ້ງປະຈຳຢູ່ວຽງຈັນ ແລະ ຂຶ້ນກັບອຳນາດຂອງ ຜູ້ສຳເລັດລາຊະການຂອງ ຝລັ່ງຢູ່ ອິນດູຈີນ ເຊິ່ງມີທີ່ຕັ້ງປະຈຳຢູ່ ຮາໂນຍ.

ກ. <u>ປະເທດລາວ-ໃນຮູບການອາລັກຂາ</u> .

ອານາຈັກຫຼວງພະບາງທີ່ຢູ່ ໃນອາລັກຂາຂອງຝລັ່ງປະກອບ ດ້ວຍສີ່ແຂວງພາກເໜືອຄື: ຫຼວງພະບາງ, ໄຊຍະບູລີ, ຫົວຂອງ, ຜົ້ງສາລີ ແລະ ນຶ່ງເຂດການທະຫານ. ຖານະທາງກົດໝາຍ ຂອງ ອານາຈັກຫຼວງພະບາງແມ່ນຖືກກຳນົດໄວ້ ໃນສົນທິສັນຍາ ລົງ ວັນທີ 26 ກຸມພາ 1914 ແລະລົງວັນທີ 24 ເມສາ 1917 ທີ່ແມ່ນຂໍ້ຕົກລົງຊົ່ວຄາວສຳລັບອາຂນາຈັກ ຕະຫຼອດໄລຍະ ຢູ່ໃນ

ອາລັກຂາໄດ້ມີການນຳໃຊ້ ຂໍ້ກຳນົດກົດໝາຍຂອງຝລັ່ງເຊິ່ງຈັດແບ່ງເປັນສອງປະເພດ :

1. ກົດໝາຍຂອງລັດຖະບານຝລັ່ງ : ດຳລັດຂອງປະທານາທິບໍດີ, ຂໍ້ຕົກລົງຂອງລັດຖະມົນຕີຫົວ ເມືອງຂຶ້ນ ເຊິ່ງຕໍ່ມາເອີ້ນວ່າລັດຖະມົນຕີດິນແດນ ພົ້ນທະເລ ແລະ ກົດໝາຍອື່ນໆ.

2. ກົດໝາຍຂອງອຳນາດການປົກຄອງທ້ອງຖິ່ນ : ດຳລັດຂອງຜູ້ສຳເລັດລາດຊະການຢູ່ອິນດູຈີນ, ຂໍ້ຕົກລົງຂອງຂ້າໜວງໃຫຍ່ຝລັ່ງຢູ່ລາວ. ສ່ວນອານາຈັກໜວງພະບາງນັ້ນແມ່ນມີພະລາດຊະດຳລັດ. ສຳລັບກົດໝາຍຂອງຝລັ່ງນັ້ນ ຈະໄດ້ຮັບການປະຕິບັດ ກໍ່ຕໍ່ເມື່ອມີການປະກາດດຳລັດຂອງ ຜູ້ສຳເລັດລາດຊະການຂອງຝລັ່ງຢູ່ອິນດູຈີນ. ສົນທິສັນຍາລະຫວ່າງຝລັ່ງກັບອານາຈັກໜວງພະບາງລົງວັນທີ 24 ເມສາ 1917 ນັ້ນໄດ້ມີ ການກຳນົດລະບອບ ການປົກຄອງພາຍໃນ ອານາຈັກໜວງພະບາງ ເຊັ່ນວ່າ ເຈົ້າຊີວິດແມ່ນມີສິດອຳນາດໃນ ອານາຈັກຂອງຕົນ. ໃນນັ້ນໄດ້ມີການຮັກສາອະທິປະໄຕຂອງເຈົ້າຊີວິດ ແລະ ເຈົ້າຂຸນມຸນນາຍຂັ້ນສູງ. ເຈົ້າຊີວິດສາມາດປົກຄອງລັດຂອງຕົນເອງເໝືອນເມື່ອກ່ອນ, ແຕ່ດຳລັດແລະຂໍ້ຕົກລົງໃດໆນັ້ນ ຈະມີຜົນບັງຄັບໃຊ້ກໍ່ຕໍ່ເມື່ອໄດ້ຮັບຄຳເຫັນດີ ແລະຢັ້ງຢືນຂອງຂ້າໜວງໃຫຍ່ຝລັ່ງປະຈຳລາວ. ຢູ່ອານາຈັກໜວງພະບາງແມ່ນຍັງຮັກສາອົງການປົກຄອງເກົ່າຂອງເຈົ້າຊີວິດ ເຊັ່ນ: ມະຫາອຸປະຣາດ, ລາດຊະເລຂາທິ

ການພະລາດຊະວັງ, ຫໍສະໝາມໝວງ ແລະ ສະພາຄອບຄົວລາດ ຊະວັງ. ມະຫາອຸປະຣາດ ແມ່ນຜູ້ສຳ ເລັດລາດຊະການແທນ ເຈົ້າ ຊີວິດ ທັງດູແລຄວາມໝັ້ນຄົງປອດໄພທົ່ວອານາຈັກ. ລາດຊະເລ ຂາທິການພະລາດຊະວັງ ແມ່ນປະຕິບັດໜ້າທີ່ການປົກຄອງ ອຣກາງານ ພາຍໃນພະລາດຊະວັງ, ຫໍສະໝາມໝວງແມ່ນເຮັດໜ້າ ທີ່ລັດຖະບານປະກອບມີສະມາຊິກສາມຄົນ ເຊິ່ງເປັນຂ້າລາດຊະ ການຜູ້ໃຫຍ່ ເຊິ່ງຖືກເລືອກ ແລະແຕ່ງຕັ້ງ ໂດຍເຈົ້າຊີວິດ ໂດຍມີ ການເຫັນດີເຫັນພ້ອມຂອງຂ້າໝວງໃຫຍ່ຝລັ່ງ. ບັນດາສະມາຊິກ ຫໍສະໝາມໝວງແມ່ນເຮັດໜ້າທີ່ : ລັດຖະມົນຕີກະຊວງມະຫາດ ໄທ; ລັດຖະມົນຕີກະຊວງຍຸດຕິທຳ, ສຶກສາ ແລະ ວັດທະນະທຳ; ລັດຖະມົນຕີການຄັງ, ໂຍທາທິການ, ການຄ້າ ແລະ ກະສິກຳ. ພ້ອມນັ້ນກໍ່ມີລັດຖະມົນຕີຊ່ວຍສາມຄົນ ແລະ ເລຂາທິການຜູ້ນຶ່ງ ເຮັດວຽກຊ່ວຍໃນຫໍສະໝາມໝວງ. ໃນການບໍລິຫານວຽກງານ ຕາມໜ້າທີ່ນັ້ນ, ຫໍສະໝາມໝວງມີສິດອອກດຳລັດທີ່ຕ້ອງມີການ ຢັ້ງຢືນຂອງຂ້າໝວງໃຫຍ່ປະຈຳລາວກ່ອນຈະມີຜົນບັງຄັບໃຊ້.

ສະພາຄອບຄົວລາດຊະວັງ ປະກອບດ້ວຍເຊື້ອເຈົ້າທີ່ຖືກ ແຕ່ງຕັ້ງເຂົ້າຮ່ວມໂດຍ ເຈົ້າຊີວິດເຊິ່ງມີໜ້າທີ່ຄຸ້ມຄອງ ລະບຽບ ວິໄນ ທີ່ກ່ຽວຂ້ອງກັບ ສາຍພົວພັນ ລະຫວ່າງເຊື້ອເຈົ້າ ແລະ ລູກໝ້ານເຊື້ອ ເຈົ້າດ້ວຍກັນ.


ສຳລັບສີ່ແຂວງ ທີ່ຂຶ້ນກັບ ອານາຈັກໝວງພະບາງນັ້ນ ແມ່ນປົກຄອງໂດຍເຈົ້າແຂວງ ທີ່ຖືກແຕ່ງຕັ້ງໂດຍຫໍສະໝາມ

ฝ่ายๆ. ในขั้นตาแขวงต่างๆดั่งก่าว ก่มีการแต่งตั้ง ภอมมิแขฃองฝลั่ง โดยผู้สำเล็ด ลาดฃะการของฝลั่งยู่อินดูจิน เผื่อใช้ยู่ครองข้างเจ้าแขวงในการบริหารงาน. เจ้าชีวิด ฝ่ายพะบางสามาดสิบต่ำ มอบนามมะยิดต่างๆใช้ข้าลาดฃะการ ถ้อยการออกดำลัด เชิ่งก่ได้มีการพิจาละนา และใช้ความเห็นชอบ จากข้าฝ่ายใหย่ของฝลั่งนำ. เผื่อควบคุมขั้นหาการเงิน, พวกล่าเมืองขึ้นฝลั่ง ได้จัดวางใช้มีงิบปะมานป่รมแทนดังเงินของลาดฃะอัง. ก่รอกับลายจ่ายสำลับการเถื่อนไหวของเจ้าชีวิด เชิ่งในเมื่อก่อน ได้เอ๊าจากดังพะลาดฃะอัง และ ในต่มาได้ถิกลิบล้างแต่ 1915 เป็นต้นมานั้น ได้มีการจัด แบ่งเอ๊าจากงิบปะมานตามแผนลายจ่ายของเจ้าชีวิด. ถ้อยจุดปะสิง ส้างบ่อมอิงหางสังคม โดยผ่านพวกฃุนนางลาว, พวกล่า เมืองขึ้นฝลั่ง ได้ปะกาดใช้ฑักการยึด จองดินที่บ่มีเจ้าของได้. ผู้ที่มีโอกาดฝ่ายก่อาเผิ่น ในการยึดจองเอ๊าก่ำมะสิด ที่ดินมาเป็นของตินนั้น ส่วนใหย่ก่แม่น เจ้าฃุนมุนนาย, ข้าลาดฃะการชั้นผู้ใหย่ และผู้ที่มีอิดทิ ผินหางอำนาด บริหาน ฝีด้านการเงิน. ส่วนเจ้าชีวิดนั้น ได้ขาดสิด เป็นเจ้าแผ่นดินทังหมิด ลวมทังสิดทิฝ่ายอันที่ เคียมีแต่ก่อน. ก่รอกับ ก่ำมะสิดสะเพาะ ต่แผ่นดินของเจ้าชีวิดนั้น ได้มีการก่ำนิดไว้ใน สินทิสัมยาละหว่าง เจ้าชีวิด สิสะหว่างอิง และ

ຂ້າໜ່ວງໃຫຍ່ຂອງຝລັ່ງຢູ່ລາວໃນປີ 1914 ມີຄື : ເນື້ອທີ່ດິນ ທີ່ຕັ້ງ ຂອງພະລາດຊະວັງ, ເນື້ອທີ່ສວນ ແລະ ປ່າໄມ້ຈຳນວນໜຶ່ງ.

ຂ. <u>ຫົວເມືອງຂຶ້ນຂອງຝລັ່ງ</u> .

ຫົວເມືອງຂຶ້ນຂອງຝລັ່ງປະກອບດ້ວຍ 6 ແຂວງ ພາກໃຕ້ ຂອງລາວເຊິ່ງຂຶ້ນໂດຍກົງ ຕໍ່ຂ້າໜ່ວງໃຫຍ່ຂອງຝລັ່ງທີ່ຢູ່ ວຽງ ຈັນ.ຂ້າໜ່ວງໃຫຍ່ຝລັ່ງມີສິດ ແລະ ອຳນາດໃນການອອກຂໍ້ກຳນົດ ແລະຂໍ້ຕົກລົງທີ່ກ່ຽວຂ້ອງກັບບັນຫາທັງໝົດຂອງລາວ. ໃນພາກ ສ່ວນທີ່ເປັນຫົວເມືອງຂຶ້ນໂດຍກົງຂອງຝລັ່ງນີ້ ໄດ້ມີການສ້າງຕັ້ງ ກົງຈັກການປົກຄອງຕ່າງໆ ຄືກັບຢູ່ຕາມຫົວເມືອງຂຶ້ນ ຂອງຝລັ່ງ ແຫ່ງອື່ນໆ. ເພື່ອແກ້ໄຂບັນຫາສຳຄັນທາງ ດ້ານເສດຖະກິດແລະ ສັງຄົມ, ຂ້າໜ່ວງໃຫຍ່ຝລັ່ງ ໄດ້ແຕ່ງຕັ້ງຂ້າລາດຊະການຝລັ່ງ ແລະ ຂ້າລາດຊະການລາວທ້ອງຖິ່ນ. ແຕ່ເກືອບທຸກຕຳແໜ່ງຮັບ ຜິດຊອບໃນບັນດາອົງການປົກຄອງຂອງແຂວງນັ້ນ ແມ່ນຂຶ້ນຢູ່ ໃນກຳມືຂອງພົນລະເມືອງສັນຊາດຝລັ່ງ. ຢູ່ທີ່ພາກສ່ວນນີ້ຂອງ ປະເທດລາວ ແມ່ນບໍ່ໄດ້ມີການປ່ຽນແປງການຈັດຕັ້ງອົງການ ປົກຄອງຂັ້ນລຸ່ມຂອງທ້ອງຖິ່ນ ເຊິ່ງຍັງເປັນປະໂຫຍດໃຫ້ແກ່ການ ປົກຄອງລ່າເມືອງຂຶ້ນຝລັ່ງນັ້ນເອງ. ເພື່ອຄວາມສະດວກ ໃນການ ປົກຄອງຝລັ່ງໄດ້ແບ່ງແຂວງເປັນເມືອງ, ແບ່ງເມືອງເປັນກອງ, ແບ່ງກອງເປັນຕາແສງ ແລະ ແບ່ງຕາແສງເປັນບ້ານ. ບັນດາຕາ ແສງແລະນາຍບ້ານ ແມ່ນຖືກເລືອກຕັ້ງໂດຍພົນລະເມືອງລາວ



ພວກລ່າເມືອງ ຂົ້ນ ຝະລັ່ງ ໃຊ້ຄົນລາວ ກົດຂີ່ຂົ່ມເຫັ່ງຄົນລາວດ້ວຍກັນ

ທ້ອງຖິ່ນ ອີງຕາມຮີດຄອງເກົ່າ. ສ່ວນ ເຈົ້າແຂວງ, ເຈົ້າເມືອງ ແລະ ນາຍກອງນັ້ນ ກໍ່ແມ່ນພົນລະເມືອງລາວ ທີ່ຖືກ ແຕ່ງຕັ້ງ ຈາກຂ້າໜ່ວງໃຫຍ່ຂອງຝລັ່ງ.

ອີງຕາມຄຳລັດ ຂອງຜູ້ສຳເລັດລາດຊະການຝລັ່ງຢູ່ອິນດູ ຈີນ ສະບັບລົງວັນທີ 5 ກໍລະກົດ 1935, ຂ້າລາດຊະການຂອງ ອົງການປົກຄອງຫົວເມືອງຂຶ້ນ ຂອງຝລັ່ງແມ່ນໄດ້ຮັບການແບ່ງ ເປັນຂັ້ນສຳຄັນຄື : ຂັ້ນສູງ, ຂັ້ນກາງ ແລະ ຂັ້ນພິເສດ. ບັນດາ ຂ້າລາດຊະການຕາມລຳດັບຂັ້ນທີ່ບົ່ງໄວ້ ແມ່ນມີໜ້າທີ່ເຄື່ອນໄຫວ ວຽກງານ ຂອງອົງການປົກຄອງ ແລະ ອົງການສານຢູ່ຕາມ ແຂວງຕ່າງໆ.

ສຳລັບຜູ້ທີ່ຖືກຈັດຢູ່ໃນຂັ້ນສູງມີຄື : ເຈົ້າແຂວງ ແລະ ເຈົ້າ ເມືອງ. ເຈົ້າແຂວງແມ່ນໄດ້ຮັບມອບໝາຍ ໃຫ້ປະຕິບັດໜ້າທີ່ການ ປົກຄອງທ້ອງຖິ່ນໃນແຂວງ ແລະ ທັງເຮັດໜ້າທີ່ເປັນຮອງກອມ ມິແຊຝລັ່ງ ຫຼື ຂ້າໜ່ວງຝລັ່ງ. ເຈົ້າເມືອງ ແມ່ນ ເຮັດໜ້າທີ່ຮອງ ເຈົ້າແຂວງ ຫຼື ເປັນທັງຫົວໜ້າສານ ເຊິ່ງກໍ່ມີການຮັບຜິດຊອບຕໍ່ ກອມມິແຊຝລັ່ງເຊັ່ນດຽວກັບເຈົ້າແຂວງ. ສຳລັບຜູ້ທີ່ຈັດຢູ່ໃນຂັ້ນ ກາງມີຄື : ອຸປະ ຣາດເອກ, ອຸປະຣາດ (ມີຖານະທຽບ ເທົ່າຮອງ ເຈົ້າເມືອງ), ຜູ້ຊ່ວຍເອກ, ຜູ້ຊ່ວຍ (ເຮັດໜ້າທີ່ຊ່ວຍອຸປະຣາດ). ແລະສະໝຽນ (ເລຂາ). ອຸປະຣາດ ເຮັດໜ້າທີ່ເປັນຮອງ ເຈົ້າ

ເມືອງ ຫຼື ທັ້ງເປັນຫົວໜ້າສາມຊັ້ນຕົ້ນ. ຜູ້ຊ່ວຍແລະສະໜຮມ ແມ່ນ ຊ່ວຍວຽກງານທົ່ວໄປ ໃນອົງການປົກຄອງ ແຂວງ, ເມືອງ ແລະ ຊ່ວຍການດຳເນີນຄະດີຢູ່ຕາມສານ.

ສຳລັບຜູ້ທີ່ຖືກຈັດຢູ່ໃນຊັ້ນພິເສດມີຄື: ນາຍກອງທີ່ເປັນ ຫົວໜ້າເຂດ ເຊິ່ງປະກອບມີບັນດາຊົນເຜົ່າອາໄສຢູ່. ພວກນາຍ ກອງແມ່ນຂຶ້ນກັບເຈົ້າເມືອງ ຫຼືເຈົ້າ ແຂວງ.


ໃນສະໄໝການປົກຄອງຂອງຝລັ່ງ, ອົງການປົກຄອງ ແຂວງແມ່ນຕັ້ງຢູ່ເຂດທົ່ງພຽງເປັນສ່ວນໃຫຍ່ ແລະບໍ່ໄດ້ຄວບຄຸມ ປະຊາຊົນຢູ່ແຖບປ່າແລະພູເຂົາ ເຊິ່ງມີໜ່ວຍຊົນເຜົ່າ ທີ່ມີພາສາ ປາກເວົ້າ ແລະຮີດຄອງປະເພນີແຕກຕ່າງກັນ. ສະນັ້ນ ຢູ່ໃນອົງ ການປົກຄອງແຂວງ ພາຍໃຕ້ການຄຸ້ມຄອງຂອງ ເຈົ້າໜ້າທີ່ຝລັ່ງ ຈຶ່ງປະກອບມີແຕ່ຂ້າລາດຊະການລາວ ເຊິ່ງບໍ່ໄດ້ຂຶ້ນຂວາຍເອົາ ຜູ້ຕາງໜ້າຊົນເຜົ່າເຂົ້າມາຮັບໃຊ້ລາດຊະການ. ອີງຕາມຂໍ້ຕົກລົງ ຂອງຜູ້ສຳເລັດລາດຊະການຝລັ່ງຢູ່ອິນດູຈີນ ສະບັບລົງວັນທີ 13 ຕຸລາ 1920 ແລະສະບັບລົງວັນ ທີ 27 ເມສາ 1923, ຢູ່ທຸກໆ ແຂວງໄດ້ມີການຕັ້ງຄະນະມົນຕີຊັ້ນແຂວງ. ສ່ວນຢູ່ວຽງຈັນແມ່ນ ໄດ້ມີການຕັ້ງສະພາທີ່ປຶກສາ ເຊິ່ງຢູ່ໃຕ້ການດູແລຂອງ ຂ້າຫຼວງ ໃຫຍ່ຝລັ່ງ. ບັນດາສະມາຊິກຄະນະມົນຕີຊັ້ນແຂວງນັ້ນ ປະກອບ ດ້ວຍບັນດາເຈົ້າເມືອງ ແລະຜູ້ຮອງ. ຜູ້ທີ່ເປັນປະທານຄະນະມົນຕີ ຊັ້ນແຂວງແມ່ນຂ້າຫຼວງໃຫຍ່ຝລັ່ງນັ້ນເອງ. ວຽກ ງານຕົ້ນຕໍຂອງ

ຄະນະມົນຕີນັ້ນແມ່ນ ການປຶກສາຫາລືກ່ຽວກັບບັນຫາຄວາມສະຫງົບພາຍໃນ, ການປຶກຄອງທົ່ວໄປ, ການເກັບຊ່ວຍສາອາກອນ ແລະ ບັນຫາເສດ ຖະກິດແລະສັງຄົມຂອງແຂວງ.

ສ່ວນສະພາທີ່ປຶກສານັ້ນ ແມ່ນປະກອບດ້ວຍບັນດາຜູ້ຕາງໜ້າຂອງຄະນະມົນຕີຂັ້ນແຂວງ ນອກນັ້ນກໍ່ຍັງມີພາກສ່ວນນຶ່ງຖືກແຕ່ງຕັ້ງໂດຍ ຂ້າຫຼວງໃຫຍ່ຝລັ່ງ ແລະອີກພາກສ່ວນນຶ່ງແມ່ນຖືກເລືອກເອົາຈາກເຈົ້ານາຍໃຫຍ່. ສະມາຊິກທີ່ປຶກສາ ແມ່ນມີການຮຽກໂຮມປະຊຸມກັນໃນທຸກໆປີ ອີງຕາມຂໍ້ຕົກລົງຂອງຂ້າຫຼວງໃຫຍ່ຝລັ່ງ. ຂ້າຫຼວງໃຫຍ່ຝລັ່ງເປັນຜູ້ທີ່ມີສິດອຳນາດຢ່າງກ້ວາງຂວາງ ຕໍ່ການດຳເນີນງານຕົວຈິງຂອງ ສະພາທີ່ປຶກສາ, ເປັນຜູ້ນຳພາກອງປະຊຸມ ແລະ ມີສິດຍຸບສະພາແລ້ວແຕ່ສະພາບການ. ສະພາທີ່ປຶກສາເຊັ່ນດຽວກັບຄະນະມົນຕີຂັ້ນແຂວງ ໄດ້ເປັນອົງການຜູ້ຕາງໜ້າຂອງລາວໃນເວລານັ້ນ ເຊິ່ງບໍ່ໄດ້ມີຕົວແທນຂອງບັນດາຊົນເຜົ່າ. ອົງການຜູ້ຕາງໜ້າດັ່ງກ່າວທີ່ໄດ້ຖືກສ້າງຕັ້ງຂຶ້ນໂດຍພວກ ຝລັ່ງນັ້ນ ເປັນພຽງຮູບການເພື່ອແຈ້ງຂ່າວກ່ຽວກັບຮ່າງງົບປະມານ, ເວົ້າເຖິງລາຍຮັບແລະລາຍຈ່າຍອັນຈຳເປັນໃນການພັດທະນາເສດຖະກິດແລະສັງຄົມ. ນອກນັ້ນກໍ່ຍັງເວົ້າເຖິງໂຄງການກໍ່ສ້າງ, ການປັບປຸງການຈັດຕັ້ງ ແລະການປະຕິຮູບອຽງງານຂອງຫົວເມືອງຂຶ້ນ. ການອະນຸຍາດໃຫ້ມີອົງການຈັດຕັ້ງດັ່ງກ່າວຢູ່ລາວໃນສະໄໝນັ້ນ ກໍ່ສະແດງໃຫ້ເຫັນເຖິງ ເຈດຈຳນົງທີ່ຈະໃຫ້ມີການພັດທະນາ ດ້ວຍລັດຖະທຳມະນູນຢູ່ລາວ.

3. ສານ ແລະກົດໝາຍໃນຫົວເມືອງຂຶ້ນຂອງຝລັ່ງຢູ່ລາວ.

ໂດຍທົ່ວໄປແລ້ວຢູ່ຫົວເມືອງຂຶ້ນຂອງຝລັ່ງ ອຳນາດທາງ ກົດໝາຍກໍ່ແມ່ນ ຢູ່ໃນກຳມືຂອງອົງການປົກຄອງຂອງຝລັ່ງນັ້ນ ເອງ. ກ່ອນໜ້າການປົກຄອງຂອງຝຣັ່ງ ກົດໝາຍຢູ່ລາວກໍ່ບໍ່ໄດ້ ແຍກອອກຈາກອົງການປົກຄອງ. ໃນໄລຍະອານາຈັກລ້ານຊ້າງ ໄດ້ມີການຮຸ່ງເຮືອງ ອັນເນື່ອງມາຈາກອິດທິພົນຂອງວັດທະນະ ທຳອິນເດຍ ພວກສັກດິນາລາວ ກໍ່ໄດ້ພະຍາຍາມສ້າງກົດໝາຍ ລາວ. ໄດ້ມີການຮ່າງກົດໝາຍບົນພື້ນຖານພຸດທະສາດສະໜາ. ໃນປຶ້ມກົດໝາຍທຳມະສາດລາວ ແມ່ນໄດ້ມີການຂຽນໄວ້ບັນດາ ມາດຕາກ່ຽວກັບກົດໝາຍແພ່ງ ແລະ ກົດໝາຍອາຍາ ຍ້ອນວ່າ ປະມວນກົດໝາຍດັ່ງກ່າວທີ່ໄດ້ຖືກຂຽນໄວ້ຢູ່ໃບລານ, ແຕ່ຫາກ ບໍ່ໄດ້ຖືກນຳມາປະຕິບັດ. ດ້ວຍເຫດນີ້ ຢູ່ລາວໃນເມື່ອກ່ອນຈຶ່ງບໍ່ມີ ລະບົບກົດໝາຍເອກະພາບ. ໃນຂົງເຂດຕ່າງໆຢູ່ລາວ ໄດ້ມີການ ໝູນໃຊ້ກົດໝາຍຮີດຄອງຂອງທ້ອງຖິ່ນ ແລະ ບ່ອນທີ່ມີການສ້າງ ເປັນປະມວນກົດໝາຍນັ້ນ ກໍ່ມີແຕ່ຢູ່ໝວງພະບາງແລະ ວຽງຈັນ. ຕົວຢ່າງຢູ່ທີ່ອານາຈັກໝວງພະບາງ ການໃສ່ໂທດຕໍ່ການກະທຳ ຜິດ ສ່ວນໜາຍຈະແມ່ນການປັບໃໝ. ບາງຄັ້ງການປັບໃໝກໍ່ອາດ ຖືກປ່ຽນເປັນການລົງໂທດແນວອື່ນ ໃນນັ້ນກໍ່ມີຮອດໂທດປະ ຫານຊີວິດ ໃນກໍລະນີທີ່ຮ້າຍແຮງ. ໂທດທີ່ໜັກກ່ວາໝູ່ນັ້ນກໍ່ຄື ເນຍ



ນອກໃຈຜິວ. ພ້ອມກັນນັ້ນກໍ່ຍັງມີຂໍ້ກຳນົດທີ່ວາງອອກໄວ້ລະ ຫວ່າງເຈົ້າທາດ ແລະ ຂ້າທາດ (ຂ້ອຍ ຫຼື ຂ້າ).

ເລີ່ມແຕ່ປີ 1908 ເປັນຕົ້ນມາ, ພວກລ່າເມືອງຂຶ້ນຝລັ່ງ ໄດ້ອອກຂໍ້ກຳນົດ ວ່າດ້ວຍການຈັດຕັ້ງສານທ້ອງຖິ່ນຢູ່ລາວ ເພື່ອ ໃຊ້ເປັນເຄື່ອງມືໃນການປົກຄອງປະເທດ ໃຕ້ອຳນາດທາງກົດ ໝາຍທີ່ພວກຕົນໄດ້ສ້າງຂຶ້ນ. ໃນວັນທີ 20 ພະຈິກ 1922, ຜູ້ສຳ ເລັດລາດຊະການຝລັ່ງຢູ່ອິນດູຈີນ ໄດ້ປະກາດດຳລັດໃຫ້ໃຊ້ກົດ ໝາຍທີ່ຂ້າລາດຊະການຝລັ່ງໄດ້ແຕ່ງໄວ້ ສຳລັບຫົວເມືອງຂຶ້ນ ຂອງຕົນຢູ່ອິນດູຈີນ. ສ່ວນ ຢູ່ລາວ ແມ່ນໄດ້ມີການປະກາດ ໃຊ້ປະ ມວນກົດໝາຍໃໝ່ ເລີ່ມແຕ່ວັນທີ 1 ມັງກອນ 1923 ເປັນຕົ້ນໄປ ຢູ່ຕາມສານທ້ອງຖິ່ນ. ກົດໝາຍທີ່ໄດ້ຮັບການປະກາດໃຊ້ຢູ່ ລາວ ມີຄື : ພະທຳມະນູນສານຍຸດຕິທຳ, ປະມວນກົດໝາຍແພ່ງ ແລະ ຄ້າຂາຍ, ປະມວນກົດໝາຍອາຍາ, ປະມວນກົດໝາຍດຳ ເນີນຄະ ດີແພ່ງແລະອາຍາ. ປະມວນກົດໝາຍດັ່ງກ່າວ ໄດ້ຮັບການພິຈາ ລະນາແລະດັດແກ້ໃໝ່ໃນປີ 1927 ແລະປະກາດໃຊ້ ເລີ່ມແຕ່ວັນທີ 1 ມີຖຸນາ 1928, ແຕ່ວ່າອີງຕາມຂໍ້ດຳລັດວັນທີ 5 ກັນຍາ 1927 ຂອງຜູ້ສຳເລັດລາດຊະການຝລັ່ງຢູ່ອິນດູຈີນ ປະມວນກົດໝາຍ ດັ່ງກ່າວນັ້ນ ບໍ່ມີຜົນບັງຄັບໃຊ້ກັບຊົນຊາດມົ້ງ, ລໍ້ ແລະ ລາວເທິ່ງ ຍ້ອນຝລັ່ງ ຖືວ່າຊົນເຜົ່າດັ່ງກ່າວຍັງບໍ່ທັນຢູ່ໃນ ລະດັບທີ່ຈະປະ ຕິບັດກົດໝາຍໄດ້ເທື່ອ ຍ້ອນລະດັບວັດທະນະທຳຕ່ຳ, ບໍ່ເຂົ້າໃຈ ພາສາແລະອື່ນໆ. ຫາກວ່າມີການກະທຳຜິດພວກຝລັ່ງ ແມ່ນໄດ້

ລົງໂທດຕາມທີ່ຈະເຫັນຄວນ. ໃນໄລຍະຫົວທີ ປະມວນກົດໝາຍ ດັ່ງກ່າວບໍ່ໄດ້ຖືກນຳໃຊ້ທຸກພາກສ່ວນ ຂອງປະເທດລາວ. ແຕ່ໃນ ໄລຍະຕໍ່ມາໄດ້ຮັບ ການຟື້ນຂະຫຍາຍໃຫ້ປະຕິບັດຢູ່ທົ່ວດິນແດນ ລາວລວມທັງຢູ່ອານາຈັກຫຼວງພະບາງ. ໃນ ບັນດາປະມວນກົດ ໝາຍດັ່ງກ່າວນັ້ນ ອົງການປົກຄອງຝລັ່ງໄດ້ ນຳໃຊ້ຂໍ້ກຳນົດກົດ ໝາຍຂອງຝລັ່ງມາປະສົມກັບຮີດຄອງ ປະເພນີທ້ອງຖິ່ນ. ຕົວຢ່າງ ອີງ ຕາມປະມວນກົດໝາຍແພ່ງດັ່ງກ່າວ ໄດ້ ມີມາດຕາທີ່ເວົ້າເຖິງ ການອະນຸຍາດໃຫ້ຜູ້ຊາຍອາຍຸ 18 ປີແຕ່ງ ງານກັບເດັກອາຍຸ 15 ປີ, ຫຼືວ່າ ຖ້າຫາກມີເດັກຍິງຖື ພາກ່ອນກຳນົດ, ສານແມ່ນສາ ມາດອະນຸຍາດໃຫ້ແຕ່ງດອງກ່ອນເຖິງອາຍຸກະສຽນ (ມາດ ຕາ-4). ຜູ້ຊາຍທີ່ມີເມຍ ແລ້ວ ຍັງສາມາດ ແຕ່ງ ງານກັບຍິງອື່ນອີກ ເຊິ່ງຈະຖືວ່າແມ່ນພັນລະຍາຊັ້ນສອງ (ມາດ ຕາ-8). ການແຕ່ງ ງານຈະຕ້ອງປະຕິບັດຕາມປະເພນີຂອງລາວ ເຊິ່ງຝ່າຍຊາຍ ຈະຕ້ອງມອບຄ່າດອງໃຫ້ຝ່າຍຍິງ ໂດຍຊ້ອງໜ້າພະຍານທັງ ຊາຍ ແລະ ຍິງຈຳນວນສີ່ຄົນ (ມາດຕາ-11). ສ່ວນການຢ່າ ຮ້າງລະຫວ່າງຜົວເມຍ ແມ່ນມີຂຶ້ນໃນກໍລະນີທີ່ເມຍຫຼົ້ມຊູ ຈາກ ຜົວ; ຜົວຫຼົ້ມຊູຈາກເມຍໃນເຮືອນຂອງຕົນເອງ; ຜົວ ຫລີ ເມຍ ຜິດ ຖຽງແລະຕີກັນ ທັງໃຊ້ຄວາມຫຍາບຄາຍປ້ອຍດ່າກັນ; ຜົວຫຼົ້ເມຍ ຂົ່ມຂູ່ຫຼົ້ຕີພໍ່ແມ່ ຫຼື ຍາດຕິພີ່ນ້ອງຂອງແຕ່ລະຝ່າຍ; ໃນກໍລະນີ ທີ່ຜົວຫຼົ້ເມຍບໍ່ເຄົາລົບນັບຖືຕໍ່ສາຍພົວພັນ ໃນຄອບຄົວ ແລະ ລູກເຕົ້າ; ໃນເມື່ອວ່າຜົວ ໄດ້ຈາກເມຍໄປໂດຍບໍ່ສົ່ງຂ່າວຄາວຫາ ທັງບໍ່ໄດ້ ສົ່ງເສຍເຜື່ອຄ້ຳຊູຄອບຄົວ ແລະ ອື່ນໆ (ມາດຕາ-23).

ສຳລັບປະມວນກົດໝາຍອາຍານັ້ນ ພວກລ່າເມືອງຂົ້ນຝລັ່ງໄດ້ນຳໃຊ້ຂໍ້ກຳໜົດກົດໝາຍຂອງຝລັ່ງ ເຊິ່ງກ່ອນອື່ນໝົດ ຈະເນັ້ນໃສ່ອາດສະຍາກຳ ແລະ ການໃສ່ໂທດ. ໃນປະມວນກົດໝາຍຂອງລາວ ເຊິ່ງຢູ່ມາດຕາ 2 ແລະ 3 ໄດ້ເວົ້າ ວ່າການລະເມີດຂໍ້ກຳໜົດກົດໝາຍທີ່ບັນຍັດໄວ້ນັ້ນ ຄືການກະທຳຜິດຕໍ່ກົດໝາຍ; ສິ່ງໃດທີ່ບໍ່ມີການບັນຍັດໄວ້ທາງກົດໝາຍໃນປະມວນກົດໝາຍນີ້ ຈະບໍ່ມີການລົງໂທດ. ອາດສະຍາກຳ ໄດ້ແບ່ງເປັນສາມລະດັບ : ລະຫຸໂທດ; ໂທສານຸໂທດ; ຄະຣຸໂທດ (ມາດຕາ-5). ຜູ້ໃດທີ່ຖືກຕັດສິນລົງໂທດປະຫານຊີວິດ ຈະຕ້ອງ ຕັດຫົວຫຼືຍິງເປົ້າຕໍ່ໜ້າປະຊາຊົນ (ມາດຕາ-10). ໃນປະມວນກົດໝາຍອາຍານີ້ຍັງໄດ້ມີພາກອື່ນໆທີ່ ເວົ້າຖືງການກ່ຽວອາດສະຍາກຳຕາມສະພາບ ແລະເງື່ອນໄຂຂອງລາວເຊັ່ນ ການກະທຳຜິດຂອງພະສົງກໍ່ຄືການ ທໍລະຍົດຕໍ່ໜ້າທີ່ວຽກງານ. ໃນພາກດັ່ງກ່າວນີ້ ພວກຝລັ່ງ ກໍ່ຄືອຳນາດການປົກຄອງທ້ອງຖິ່ນແມ່ນຄຳນຶງເຖິງ ຜູ້ ຄິດ ຄິດທໍລະຍົດຕ້ານລັດຖະບານຂອງຕົນ. ໃນປະມວນກົດໝາຍ ອາຍາສະບັບນີ້ ໄດ້ມີການກ່າວເຖິງອາດສະຍາກຳທີ່ມີຕໍ່ເຈົ້າຊີວິດ ກໍ່ຄືຂ້າລາຊະການຊັ້ນຜູ້ໃຫຍ່. ການສ້າງຕັ້ງສະມາຄົມປິດລັບ ເຊັ່ນ ກ່ຽວກັບການກະທຳຜິດຕໍ່ສາດສະໜາ. ການກະທຳຜິດຕໍ່ອາດສະຍາກຳດັ່ງກ່າວນັ້ນ ຈະຕ້ອງຖືກຕັດສິນໃສ່ໂທດຈຳຄຸກແຕ່ 1 ປີ ເຖິງ 25 ປີ ຫຼືກໍ່ປະຫານຊີວິດ. ເວົ້າລວມແລ້ວ ໃນຕະຫຼອດໄລຍະການປົກຄອງຫົວເມືອງຂົ້ນຢູ່ລາວ ພວກຝລັ່ງ ແມ່ນໄດ້ມີການດັດ

ແກ້ແລະເພີ່ມເຕີມຕໍ່ປະມວນກົດໝາຍດັ່ງກ່າວ. ດ້ວຍຈຸດປະສົງ ເພື່ອຈະເຮັດໃຫ້ ລະບົບການປົກຄອງຫົວເມືອງຂຶ້ນ ເປັນອັນດຽວ ກັນ, ພວກຝລັ່ງໄດ້ຄ່ອຍໆປະຕິບັດແຜນການຈັດວາງລະບົບ ສານໃຫ້ເປັນເອກະພາບກັນ. ຂ້າໜວງໃຫຍ່ຂອງຝລັ່ງຢູ່ລາວ ຖືວ່າ ແມ່ຫົວໜ້າສູງສຸດຂອງອົງການຍຸດຕິທຳທັງໝົດຢູ່ທ້ອງຖິ່ນ. ສ່ວນ ສານຢູ່ທ້ອງຖິ່ນນັ້ນ ແມ່ນນຳພາໂດຍຂ້າລາດຊະການລາວ ໃຕ້ ການຄວບຄຸມກວດກາ ຂອງຂ້າລາດຊະ ການຝລັ່ງ.


ໃນສະໄໝການປົກຄອງຝລັ່ງຍັງໄດ້ມີການຈັດຕັ້ງສານປະ ນອມ ເພື່ອພິຈາລະນາການກະທຳຜິດສະຖານເບົາຂອງຄະດີ ແພ່ງ ແລະ ອາຍາ. ຜູ້ທີ່ເປັນຫົວໜ້າສານປະນອມດັ່ງກ່າວນັ້ນແມ່ນ ນາຍບ້ານທີ່ຖືກຂັດເລືອກໂດຍປະຊາຊົນທ້ອງຖິ່ນ ອີງຕາມຮີດ ຄອງປະເພນີ. ກ່ຽວກັບຄະດີສະຖານໜັກແມ່ນໄດ້ຖືກສົ່ງໄປ ຍັງ ສານແຂວງທີ່ມີສານຊັ້ນຕົ້ນ ແລະສານອຸທອນ ເຊິ່ງຂຶ້ນກັບວ່າ ແຂວງໃຫຍ່ຫຼື ແຂວງນ້ອຍທີ່ດຳເນີນວຽກງານສານຊັ້ນຕົ້ນ. ສານ ດັ່ງກ່າວຈະດຳເນີນການຢູ່ ໃຕ້ການເປັນປະທານ ຂອງຂ້າໜວງ ຝລັ່ງປະຈຳແຂວງ. ສ່ວນສານສູງ ສຸດແມ່ນ ຕັ້ງຢູ່ວຽງຈັນ ເຊິ່ງ ດຳເນີນການພາຍໃຕ້ການເປັນປະທານ ຂອງຂ້າໜວງໃຫຍ່ຝລັ່ງ ຢູ່ລາວ. ສຳລັບບັນດາແຂວງຍັງມີສານອຸທອນ ແລະ ສານລົບ ລ້າງ. ສານສູງ ສຸດນັ້ນແມ່ນມີໜ້າທີ່ພິຈາລະນາການອຸທອນຄະດີ ແພ່ງ ແລະອາຍາ ແລະ ການຮ້ອງທຸກຕໍ່ການຕັດສິນຂອງສານ ລົບລ້າງທີ່ສານຊັ້ນຕົ້ນເປັນຜູ້ສະເໜີຂຶ້ນມາ.

ອົງການສານ ແມ່ນປະກອບມີ ຂ້າລາດຊະການຊັ້ນສູງ ຂອງຝລັ່ງຈາກທ້ອງການຂອງຂ້າໜ່ວງໃຫຍ່ ແລະ ຂ້າລາດຊະ ການຊັ້ນສູງແລະຊັ້ນກາງຂອງລາວ ເຊິ່ງຖືກແຕ່ງຕັ້ງໂດຍຂ້າ ໜ່ວງໃຫຍ່ຝລັ່ງ. ລະຫວ່າງຄົນລາວແລະຄົນຝລັ່ງແມ່ນໄດ້ມີ ການ ຈຳແນກ ຢ່າງຈະແຈ້ງຄືເມື່ອຄົນລາວມີການກະທຳຜິດຄະດີນັ້ນ ຈະຖືກພິຈາລະນາຢູ່ສານທ້ອງຖິ່ນ.ສ່ວນຄະດີຂອງຄົນຝລັ່ງ ແມ່ນ ຈະຖືກພິຈາລະນາຢູ່ສານພິເສດຂອງຝລັ່ງ.

4. <u>ສະພາບຂອງພົນລະເມືອງລາວ</u> .

ຕະຫຼອດໄລຍະການປົກຄອງຂອງຝລັ່ງຢູ່ລາວ, ປະຊາຊົນ ລາວໄດ້ຕົກເປັນ ເປົ້າໝາຍຂູດຮີດດັ່ງດຽວ ກັນກັບປະຊາຊົນ ປະເທດອື່ນໆໃນອິນດູຈີນ. ຊັບພະຍາກອນທຳມະຊາດ ກໍ່ຄືຊັບ ໃນ ດິນສິນໃນນ້ຳຂອງລາວ ແມ່ນໄດ້ຖືກພວກລ່າເມືອງ ຂົ້ນຝລັ່ງ ກອບໂກຍເອົາ. ນອກຈາກນັ້ນ ປະເທດລາວກໍ່ເປັນຕະຫຼາດຈຳ ໜ່າຍສິນຄ້າຂອງຝລັ່ງ, ເປັນແຫ່ງວັດຖຸດິບທີ່ບໍ່ໄດ້ຊື້ ທັ້ງເປັນ ແຫ່ງແຮງງານທີ່ໃຊ້ໄດ້ຕາມ ໃຈ.

ໃນປະຫວັດສາດຂອງໂລກແຫ່ງສັດຕະວັດທີ່ XIX, ມີ ພຽງສອງປະເທດຄື ຝລັ່ງ ແລະອັງກິດໄດ້ເປັນ ເຈົ້າອຳນາດນິຄົມ ທີ່ມີອິດທິພົນແລະຫົວເມືອງຂົ້ນໜ່າຍກ່ວາໝູ່. ແຕ່ສອງປະເທດນີ້



ພວກລ່າເມືອງຂົ້ນ ຝະລັ່ງ ອອກໜ້າ ອອກຕາ ໃນລາວ

ໄດ້ດຳເນີນການປົກຄອງທ້ອເມືອງຂຶ້ນຂອງຕົນດ້ວຍ ວິທີແຕກ ຕ່າງກັນ ເຊິ່ງຄວາມແຕກຕ່າງກັນນັ້ນຄືວ່າ ປະເທດອັງກິດແມ່ນ ປົກຄອງທ້ອເມືອງຂຶ້ນຂອງຕົນ ໂດຍໃຊ້ວິທີທາງອ້ອມ ເຊັ່ນໄດ້ໃຊ້ ຄົນທ້ອງຖິ່ນຟາຍກ່ວາ ທັງໄດ້ໃຫ້ເປັນອິດສະລະໃນການ ແກ້ໄຂ ວຽກງານທ້ອໄປ. ສ່ວນວ່າຝລັ່ງນັ້ນ ແມ່ນປົກຄອງທ້ອເມືອງຂຶ້ນ ຂອງຕົນດ້ວຍວິທີທາງໂດຍກົງ ເຊັ່ນໄດ້ໃຊ້ຂ້າລາດຊະການ ທີ່ມີ ເຊື້ອສາຍຂອງຝລັ່ງເອງ. ດ້ວຍເຫດນີ້ ຈຶ່ງເປັນທີ່ສັງເກດເຫັນ ໄດ້ ວ່າບັນດາທ້ອເມືອງຂຶ້ນ ເກົ່າຂອງອັງກິດສ່ວນຟາຍແມ່ນຈະໄດ້ ຮັບການພັດທະນາດີກ່ວາ.

ເວົ້າເຖິງລະບອບລ່າເມືອງຂຶ້ນຂອງຝລັ່ງແລ້ວ ຈະເຫັນ ໄດ້ເຖິງການໃຊ້ ຄວາມຮຸນແຮງ, ການກົດຂີ່, ຂູດຮີດ ເຊິ່ງປະຊາ ຊົນໃນທ້ອເມືອງຂຶ້ນນັ້ນ ຈະຂາດສິດທິຟື້ນຖານ, ກົງຈັກການ ປົກຄອງໄດ້ຮັບການຈັດຕັ້ງ ແບບລອມສູນ, ແບບອຳນາດສິດ. ໂດຍທ່ວໄປແລ້ວ, ລະບອບການປົກຄອງທ້ອເມືອງຂຶ້ນຂອງ ຝລັ່ງ ແມ່ນໄດ້ ມີການກຳນົດແຈ້ງຖານະທາງກົດໝາຍຂອງພົນລະ ເມືອງໃນທ້ອເມືອງຂຶ້ນໂດຍ ອີງຕາມສັນຊາດຫຼືເຊື້ອຊາດ. ການ ບົ່ງບອກເຖິງສັນຊາດຫຼື ເຊື້ອຊາດນັ້ນ ແມ່ນ ເປັນການຮັບຮູ້ສິດທິ ຂອງບຸກຄົນ ໃນການຮັບໃຊ້ວຽກງານ ແລະມີນະໂຍບາຍຕ່າງໆ. ເພື່ອຈຸດປະສົງທາງການເມືອງນັ້ນເອງ, ພົນລະເມືອງຢູ່ລາວ ກ່ໍຄື ໃນອິນດູຈີນ ໄດ້ຖືກຈັດແບ່ງເປັນ 5 ປະເພດຄື : ພົນລະເມືອງ

ຝລັ່ງ; ຜູ້ຖືສັນຊາດຝລັ່ງ; ຜູ້ທີ່ໄດ້ຮັບສິດປົກປ້ອງຈາກຝລັ່ງ; ຄົນອາຊີຕ່າງດ້າວແລະຜູ້ທີ່ຖືສັນຊາດອື່ນ.

ສຳລັບພົນລະເມືອງຝລັ່ງ ແມ່ນຈຳພວກທີ່ເກີດຢູ່ປະເທດຝລັ່ງ ຫຼືພວກທີ່ເກີດຢູ່ຕາມຫົວເມືອງຂຶ້ນ ເຊິ່ງພໍ່ແມ່ແມ່ນຄົນຝລັ່ງ.

ສຳລັບຜູ້ທີ່ຖືສັນຊາດຝລັ່ງ ແມ່ນຈຳພວກທີ່ເກີດຢູ່ຕາມຫົວເມືອງຂຶ້ນລະດັບຕ່ຳ.

ສຳລັບຜູ້ທີ່ໄດ້ຮັບສິດ ປົກປ້ອງຈາກຝລັ່ງ ແມ່ນພົນລະເມືອງທີ່ຢູ່ໃນອາລັກຂາຂອງຝລັ່ງ.

ກ່ຽວກັບພົນລະເມືອງຝລັ່ງ ທີ່ດຳລົງຊີວິດຢູ່ລາວແມ່ນຈະຢູ່ໃຕ້ກົດໝາຍຝລັ່ງ. ສ່ວນຜູ້ທີ່ຖືສັນຊາດຝລັ່ງນັ້ນແມ່ນຈະຢູ່ໃຕ້ກົດໝາຍພິເສດວາງອອກ ໂດຍພວກຝລັ່ງສຳລັບຄົນເຊື້ອຊາດລາວ.

ດ້ວຍຄວາມພະຍາຍາມ ເພື່ອຮັກສາອຳນາດຂອງຕົນ ໃຫ້ໝັ້ນຄົງ, ພວກຝລັ່ງໄດ້ວາງກົດໝາຍຫຼາຍຢ່າງອອກ ແນໃສ່ເຮັດໃຫ້ພົນລະເມືອງທ້ອງຖິ່ນ ຢູ່ໃນຖານະບໍ່ມີສິດ. ກົດໝາຍດັ່ງກ່າວໄດ້ຫ້າມຄົນລາວບໍ່ໃຫ້ຮ້ອນໂຮມກັນເປັນອົງ ການຈັດຕັ້ງຫຼື ສະມາຄົມ. ຄົນລາວແມ່ນບໍ່ມີສິດເສລີພາບໃນການໂຮມຊຸມນຸມ, ບໍ່ມີສິດປາກເວົ້າ, ຂີດຂຽນ ແລະ ອິດສະລະພາບໃນການໄປມາຫາສູ່ກັນ ໂດຍບໍ່ໄດ້ຮັບອະນຸຍາດ. ຢູ່ຕາມຫົວເມືອງຂຶ້ນຂອງຕົນ, ຝລັ່ງມັກ

ສວຍໃຊ້ພົນລະເມືອງ ຫົວເມືອງຂຶ້ນນຶ່ງເປັນເຄື່ອງມືໄປເປັນນາຍ ແລະ ກົດຂີ່ຂົ່ມເຫັງພົນລະເມືອງຫົວເມືອງຂຶ້ນອື່ນ. ເຊັ່ນວ່າຢູ່ ລາວ, ພວກຝລັ່ງແມ່ນນຳໃຊ້ຄົນຫວຽດນາມຜູ້ບອກໄດ້ໃຊ້ຟ້ງ ມາ ເປັນຜູ້ຊ່ວຍຂອງຕົນໃນການຂູດຮີດພົນລະເມືອງລາວ. ພົນລະ ເມືອງລາວ ຍັງໄດ້ຖືກບັງຄັບໃຫ້ເສຍຊ່ວຍສາອາກອນ. ການເສຍ ຊ່ວຍນັ້ນແມ່ນມີຫັ້ງ ການເສຍຊ່ວຍຫົວຄົນ, ຄ່າເຮືອນ, ຄ່າດິນ ດອນຕອນໜ້າ, ຄ່າລາຍໄດ້, ຄ່າສັດສາວາສີ່ງ ແລະອື່ນໆອີກ ໜ້າຍແນວ. ນອກຈາກການເສັຍຊ່ວຍໂດຍກົງແລ້ວ, ພົນລະ ເມືອງ ລາວ ຍັງໄດ້ທົນທຸກຕໍ່ການ ເສຍຊ່ວຍທາງອ້ອມອີກ ເຊັ່ນ : ເສຍຊ່ວຍຄ່າປູກຢາຝິ່ນ ຫຼື ຄ້າຂາຍ, ຄ່າຜະລິດເຫຼົ້າຢາ, ການຜະລິດ ສິ່ງຂອງອື່ນໆ ລວມທັ້ງການຄ້າເກືອ, ກາເຟ.

ນອກຈາກການເສຍຊ່ວຍໂດຍກົງ ແລະ ໂດຍທາງອ້ອມ ແລ້ວ ພົນລະເມືອງລາວຍັງໄດ້ຖືກບັງຄັບໃຫ້ ໄປເຮັດວຽກໜັກ ອີກຄື : ຖືກເກນໄປສ້າງຫົນທາງ, ສະໜາມບິນ, ສ້າງເຮືອນຊານ, ໂຮງການ, ສຳນັກງານ, ສ້າງປ້ອມຄ້າຍທະຫານ. ນອກນັ້ນ ຍັງ ຕ້ອງໄດ້ແບກຫາບເຄື່ອງຂອງໄປສົ່ງແຫ່ງຕ່າງໆຕາມຄຳສັ່ງ.

ເວົ້າລວມແລ້ວ ພົນລະເມືອງທ້ອງຖິ່ນຈຳຕ້ອງ ໄດ້ເຮັດ ວຽກ ເພື່ອຮັບໃຊ້ອຳນາດຂອງພວກລ່າເມືອງຂຶ້ນຝລັ່ງ 60 ມື້ຕໍ່ປີ. ພ້ອມ ດຽວກັນນັ້ນ ພົນລະເມືອງລາວຍັງຖືກ ບັງຄັບໃຫ້ ຈ່າຍ ຄ່າພັກ ວຽກງານອີກ 40 ມື້. ສ່ວນຄົນຕ່າງດ້າວ ທີ່ທຳ ມາຫາກິນ ຢູ່ລາວ ແມ່ນຕ້ອງໄດ້ເສຍພາສີອາກອນຕາມ ການກຳໜົດໂດຍ

ຂ້າໜອງ ໃຫຍ່ຝລັ່ງຢູ່ລາວ ຖ້າບໍ່ຢາກເຮັດພັນທະດັ່ງກ່າວ. ຖ້າຫາກມີການ ຝ່າຝືນປະຕິບັດພັນທະດັ່ງກ່າວ ພົນລະເມືອງລາວ ທ້ອງຖິ່ນແມ່ນ ຈະຖືກລົງໂທດຢ່າງໜັກ. ພົນລະເມືອງລາວ ບໍ່ ພຽງແຕ່ຖືກທຶນທຸກ ທໍລະມານ ຈາກການ ຂູດຮີດ ຂອງອົງການ ປົກຄອງຂອງຝລັ່ງ ເທົ່ານັ້ນ ແຕ່ຫາກໄດ້ຖືກ ກົດຂີ່ຂົ່ມເຫັງ ອີກຕໍ່ ນຶ່ງຢ່າງໜັກໜ່ວງຈາກ ເຈົ້າເມືອງ ແລະ ຕາແສງ ເຊິ່ງໄດ້ສວຍ ໂອກາດເກັບຄ່າເສຍຊ່ວຍ ເພີ່ມເອົາເອງ ຈາກຊາວໄຮ່ ນາໃນ ຂອບເຂດທີ່ຕົນຮັບຜິດຊອບ, ພ້ອມນັ້ນກໍ່ ຍັງໄດ້ໃຊ້ແຮງງານ ຂອງ ເຂົາເຈົ້າ ເພື່ອກິດຈະການ ສ່ວນ ຕົວຂອງພວກຕົນ.

ໃນໄລຍະການປົກຄອງຂອງຝລັ່ງຢູ່ລາວ ແມ່ນມີພຽງແຕ່ ໂຮງຮຽນຂັ້ນປະຖົມ ແລະ ມັດທະຍົມ. ການສຶກສາທີ່ໄດ້ຮັບການ ສິດສອນ ເປັນພາສາລາວນັ້ນ ແມ່ນມີຢູ່ແຕ່ 3 ຫ້ອງທຳອິດຂອງ ຊັ້ນປະຖົມຫຼັງຈາກນັ້ນທຸກ ວິຊາແມ່ນໄດ້ ສິດສອນເປັນ ພາສາ ຝລັ່ງ. ຄົນລາວທີ່ຢາກຮຽນຕໍ່ຂັ້ນອຸດົມ ແລະຊັ້ນສູງຈຳຕ້ອງ ໄປ ຮຽນຕໍ່ທີ່ຮ່າໂນຍ, ໄຊ່ງ່ອນ, ພະນົມເປັນ ຫຼື ປະເທດຝລັ່ງ. ມີພຽງ ແຕ່ລູກໜານ ຂອງຂ້າລາດຊະການຊັ້ນຜູ້ໃຫຍ່ທີ່ໄດ້ມີໂອ ກາດຜ່ານ ການສຶກສາຢູ່ຕ່າງປະເທດ ແລະກໍ່ແມ່ນເຈົ້າໜ້າທີ່ຝລັ່ງເອງ ເປັນ ຜູ້ຄັດເລືອກ ແລະໃຫ້ການສະໜັບສະໜູນ ຈຶ່ງຈະສາມາດໄດ້ໄປ ສຶກສາຕໍ່ຊັ້ນສູງ. ໃນເວລານັ້ນ, ຄົນລາວທີ່ບໍ່ຮູ້ໜັງສືແມ່ນກວມ ເຖິງ 96%. ດ້ານສາທາລະນະສຸກຢູ່ລາວໃນເວລານັ້ນກໍ່ບໍ່ໄດ້ຮັບ ການພັດທະນາ, ໂຮງໝໍກໍ່ໄດ້ຮັບການກໍ່ສ້າງພຽງແຕ່ຢູ່ບາງຫົວ

ເມືອງເທົ່ານັ້ນ ແລະກໍ່ໃຫ້ການປົ່ນປົວແຕ່ຄົນຝລັ່ງແລະຂ້າລາດຊະການລາວ, ສ່ວນພົນລະເມືອງທ້ອງຖິ່ນ ແມ່ນບໍ່ມີໂອກາດ ທີ່ຈະໄດ້ຮັບການປົ່ນປົວຕາມໂຮງໝໍດັ່ງກ່າວ. ສະພາບຂອງປະຊາຊົນລາວສ່ວນໜ້ວງໜາຍ ໃນຕະໜອດໄລຍະການປົກຄອງ ລ່າເມືອງຂຶ້ນຂອງຝລັ່ງກໍ່ເປັນໄປດັ່ງນັ້ນເອງ.

5. <u>ການຕໍ່ສູ້ຂອງປະຊາຊົນລາວຕ້ານລະບອບລ່າເມືອງຂຶ້ນ</u>.

ນັບແຕ່ປະເທດລາວ ໄດ້ກາຍເປັນຫົວເມືອງຂຶ້ນຂອງຝລັ່ງ, ປະຊາຊົນລາວ ບັນດາເຜົ່າລ້ວນແລ້ວແຕ່ໄດ້ ຂາດຄວາມເປັນອິດສະລະພາບ ໃນປະເທດຂອງຕົນເອງ. ເຖິງຢ່າງໃດກໍ່ຕາມ ປະຊາຊົນລາວ ແມ່ນບໍ່ໄດ້ຍິນຍອມຢ່າງງ່າຍດາຍໃນ ການເປັນຂ້ອຍຂ້າຂອງຊາວຕ່າງດ້າວ. ຕະໜອດໄລຍະການຄອບຄອງຂອງຝລັ່ງ, ປະຊາຊົນລາວບັນດາເຜົ່າ ບໍ່ໄດ້ລົດລະໃນການຕໍ່ສູ້ເພື່ອອິດສະລະພາບ ແລະ ຄວາມເປັນເອກະລາດແຫ່ງຊາດ. ການຕໍ່ສູ້ຕ້ານລະບອບລ່າເມືອງຂຶ້ນ ໄດ້ກຳເນີດເກີດຂຶ້ນເລີ່ມແຕ່ຝລັ່ງ ໄດ້ຍຶດຄອງດິນແດນລາວ. ທ່ານໄກສອນ ພົມວິຫານ, ປະທານຄະນະບໍລິຫານງານສູນກາງພັກ, ປະທານປະເທດ ສປປລາວ ທີ່ໄດ້ລ່ວງລັບໄປແລ້ວນັ້ນໄດ້ຊີ້ແຈງຢ່າງແຈ່ມແຈ້ງ ການກຳເນີດເກີດຂຶ້ນຂອງຂະບວນການຕໍ່ສູ້ຂອງປະຊາຊົນລາວ ຕ້ານພວກລ່າເມືອງຂຶ້ນຝລັ່ງໃນປຶ້ມຂຽນຂອງເພິ່ນ "ປະເທດລາວພວມກ້າວເດີນບົນເສັ້ນທາງອັນສະຫງ່າງາມຂອງຍຸກສະໄໝ ພົມອອກໃນປີ

1975" ແລະ ໃນປຶ້ມຂຽນຂອງເພິ່ນ "ບາງບົດຮຽນຕົ້ນຕໍ ແລະ ທິດທາງໜ້າທີ່ຂອງການປະຕິວັດ ລາວ" ທີ່ ພິມອອກໃນປີ 1980. ສ່ວນທ່ານພູມີ ວົງວິຈິດ, ກຳມະການກົມການເມືອງສູນກາງພັກ, ຜູ້ວ່າການແທນ ປະທານປະເທດທີ່ໄດ້ ລ່ວງລັບໄປແລ້ວນັ້ນ ກໍ່ໄດ້ ຂຽນໄວ້ຢ່າງລະອຽດໃນປຶ້ມຂຽນຂອງເພິ່ນ "ປະເທດລາວ ແລະ ການຕໍ່ສູ້ມີໄຊຂອງປະຊາຊົນລາວ" ທີ່ໄດ້ພິມອອກໃນປີ 1968. ໃນປີ 1901-1902 ຢູ່ເຂດນຶ່ງຂອງ ແຂວງສະຫວັນນະເຂດ ໄດ້ມີຂະບວນການຂອງ ປະຊາຊົນລຸກຮືຂຶ້ນຕ້ານພວກລ່າເມືອງ ຂຶ້ນຝລັ່ງ ພາຍໃຕ້ການນຳພາຂອງພໍ່ກະດວດ ທີ່ດຳເນີນໄປເປັນ ເວລາ 3 ປີ. ຂະບວນການນີ້ໄດ້ເຕີບໂຕຂຶ້ນຫຼັງຈາກ 8 ປີ ທີ່ຝລັ່ງ ໄດ້ເຂົ້າມາຍຶດຄອງລາວ. ຈຸດປະສົງຂອງຂະບວນການນີ້ແມ່ນ ເພື່ອຕໍ່ສູ້ ຕ້ານລະບົບການເສຍຊ່ວຍຂອງຝລັ່ງ. ແຕ່ປີ 1910 ເຖິງ 1937 ໄດ້ເກີດມີການລຸກ ຮືຂຶ້ນຂອງຂະບວນການຊົນຊາດລາວ ເທິງ ເຊິ່ງນຳພາໂດຍ ອ້ວງແກ້ວ-ກົມມະດຳ ຢູ່ທາງພາກໃຕ້ຂອງ ປະເທດ. ຂະບວນການນີ້ ກໍ່ໄດ້ຕໍ່ສູ້ກັບການຂູດຮີດຂອງຝລັ່ງ ແລະ ທວງເອົາສິດທິອັນຊອບທຳຂອງຕົນ ຍືດເຍື້ອເຖິງ 26 ປີ. ສ່ວນຢູ່ ທາງພາກເໜືອ, ຢູ່ແຂວງຊຽງຂວາງ, ຊຳເໜືອ, ຫຼວງພະບາງໃນ ໄລຍະແຕ່ປີ 1918 ເຖິງ 1922, ໄດ້ມີຂະບວນການປະຊາຊົນ ລາວສູງນຳພາໂດຍ ເຈົ້າຟ້າປັດໄຈ, ໄດ້ພາ ກັນຕໍ່ສູ້ ຕ້ານອຳນາດ ການປົກຄອງລ່າເມືອງຂຶ້ນຝລັ່ງ ທີ່ບັງຄັບປະຊາຊົນ ເສຍຊ່ວຍສາ ອາກອນ. ແຕ່ຍ້ອນວ່າກຳລັງຂອງປະຊາຊົນໃນເວລານັ້ນຍັງອ່ອນ ແລະ ບໍ່ມີການຈັດຕັ້ງດີເທົ່າທີ່ຄວນ, ດັ່ງນັ້ນ ການລຸກຮືຂຶ້ນຂອງ

ປະຊາຊົນລາວ ບັນດາເຜົ່າ ຕ້ານລະບອບລ່າເມືອງຂຶ້ນຂອງ ຝລັ່ງ ຈຶ່ງຖືກປາບປາມໃຫ້ປະ ລາໄຊໄປ. ເຖິງວ່າຂະບວນການດັ່ງກ່າວ ໄດ້ຖືກປາບປາມຢ່າງຮຸນແຮງ, ແຕ່ມັນຊໍ້າໄດ້ຝັງ ຄວາມຄຽດ ແຄ້ນ ໄວ້ໃນໃຈຂອງປະຊາຊົນ, ທັງປຸກລຸກຈິດໃຈຂອງປະຊາຊົນ ໃຫ້ມີມູນເຊື້ອຕໍ່ສູ້ອັນພິລະອາດຫານ ແລະ ໄດ້ສົ່ງຜົນສະທ້ອນອັນ ດີໃຫ້ແກ່ການ ສ້າງກຳລັງໃໝ່ເຂົ້າຢູ່ໃນແນວໂຮມຕໍ່ຕ້ານຝລັ່ງ ໃນ ໄລຍະຕໍ່ມາ.

ໄຊຊະນະຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລາ ຢູ່ ລັດເຊຍໃນປີ 1917 ນັ້ນໄດ້ປຸກລະດົມຢ່າງ ໃຫຍ່ໜວງໃຫ້ແກ່ຂະ ບວນການຕໍ່ສູ້ປົດປ່ອຍຊາດ ໃນທຸກໆປະເທດທາງຕາເວັນອອກ ລວມທັງຢູ່ສາມປະເທດໃນ ອິນດູຈີນ. ພາຍໃຕ້ແສງສະຫວ່າງ ຂອງການປະຕິວັດ ເດືອນຕຸລາ ແລະກະແສແນວຄິດຂອງ ທ່ານ ເລນິນຜູ້ຍິ່ງໃຫຍ່, ຂະບວນການປະຕິວັດຢູ່ຈີນແລະຫວຽດນາມ ໄດ້ຮັບການຂະຫຍາຍຕົວ ທັງສົ່ງຜົນສະທ້ອນມາເຖິງຂະບວນ ການຕໍ່ສູ້ຂອງປະຊາຊົນລາວ. ໃນວັນທີ 3 ກຸມພາ ປີ 1930 ຢູ່ທີ່ ຫວຽດນາມ ໄດ້ມີການສ້າງຕັ້ງພັກກອມມູນິດອິນດູຈີນ ໂດຍທ່ານ ປະທານໂຮຈິມິນ, ນັກກອມມູນິດຜູ້ກ້າແກ່ນ, ນັກປະຕິວັດສາກົນ ກຳມາຊີບຜູ້ດີເດັ່ນ, ຜູ້ນຳພາຂະບວນການຕໍ່ສູ້ປົດປ່ອຍຊາດຢູ່ອິນ ດູຈີນ. ພັກກອມມູນິດອິນດູຈີນໄດ້ນຳພາໂດຍກົງຂະບວນການ ຕໍ່ສູ້ຂອງປະຊາຊົນລາວ, ຫວຽດນາມ ແລະ ກຳປູເຈຍ ຍ້ອນວ່າ ທັງ 3 ປະເທດນີ້ ໄດ້ຕົກເປັນຫົວເມືອງຂຶ້ນຂອງ ຝລັ່ງເຊິ່ງເປັນ

ເຈົ້າອານານິຄົມຂອງອິນດູຈີນຝລັ່ງເສດ. ດ້ວຍເຫດນີ້ເອງ ພັກ ກອມມູນິດອິນດູຈີນ ອັນປະກອບດ້ວຍ ຕົວແທນຂອງປະຊາຊົນ ທັງ 3 ປະເທດໄດ້ວາງ ໂຄງການເພື່ອເຕົ້າໂຮມທຸກໆກຳລັງ ທີ່ ກ້າວໜ້າຂອງຫວຽດນາມ, ລາວ ແລະ ກຳປູເຈຍເຂົ້າໃນແນວ ໂຮມອັນດຽວກັນ ຕ້ານພວກລ່າເມືອງຂຶ້ນຝລັ່ງ. ນັບແຕ່ນັ້ນມາ, ພາຍໃຕ້ຄັນທຸງຊາດປະຊາທິປະໄຕ, ນ້ຳໃຈຕໍ່ສູ້ຕ້ານພວກລ່າ ເມືອງຂຶ້ນນັ້ນ ແມ່ນຍິ່ງໄດ້ຮັບການປຸກລະດົມຢ່າງ ກ້ວາງຂວາງ ໃນທົ່ວປະເທດລາວ. ໃນປີ 1934 ຄະນະພັກແຄ້ວນລາວໄດ້ຮັບ ການສ້າງຕັ້ງຂຶ້ນໃນພັກກອມມູນິດອິນດູຈີນ ເຊິ່ງເປັນ ອົງຄະນະ ນຳພາຂະບວນການຕໍ່ສູ້ປະຕິວັດຂອງປະຊາຊົນລາວ. ຢູ່ຫ້ວຍຕົວ ເມືອງ ເຊໂນ ຢູ່ວຽງຈັນ, ທ່າແຂກ ແລະສະຫວັນນະເຂດ ໄດ້ມີ ການຈັດຕັ້ງເຄື່ອນຂະບວນ, ຢຸດງານແລະປະທ້ວງຕ້ານລະບອບ ລ່າເມືອງຂຶ້ນ ເຊິ່ງມີການເຂົ້າຮ່ວມ ຂອງພວກນັກຮຽນ, ຄູ, ກຳ ມະກອນ, ຊາວນາ ແລະ ພໍ່ຄ້າເພື່ອທວງເອົາສິດ ແລະອິດສະ ລະ ພາບ, ທວງໃຫ້ລົບລ້າງການເສຍຊ່ວຍສາອາກອນ ແລະ ຫລຸດ ຜ່ອນໂມງເຮັດວຽກ. ເຖິງວ່າຂະບວນການດັ່ງກ່າວຈະຖືກ ກຳ ລັງປະກອບອາວຸດຂອງ ຝລັ່ງ ປາບປາມຢ່າງຕໍ່ເນື່ອງແຕ່ພວກຮັກ ຊາດລາວທັງໝາຍກໍ່ຍັງສືບຕໍ່ເສຍສະຫຼະ ເພື່ອເປົ້າໝາຍອັນສູງ ສົ່ງຂອງຕົນບໍ່ວ່າ ຜ່ານການເຄື່ອນຂະບວນ ຢ່າງເປີດເຜີຍແລະ ເຄື່ອນໄຫວຢ່າງປິດລັບໂຄສະນາຊວນຊວາຍປະຊາຊົນສ້າງກຳລັງ.

ປະຫວັດສາດ

ໃນຊຸມປີສົງຄາມໂລກຄັ້ງທີ 2, ສະພາບການຢູ່ອິນດູຈີນ ໄດ້ມີການຜັນແປໄປແນວໃໝ່, ເນື່ອງຈາກວ່າ ໃນເດືອນ ມິຖຸນາ 1940, ຝລັ່ງຍອມຈຳນົນຕໍ່ພວກ ຣິດແລ-ເຢຍລະມັນ. ສະພາບການດັ່ງກ່າວໄດ້ເຮັດໃຫ້ພວກຊຸນເສິກຍີ່ປຸ່ນເຂົ້າຍຶດຄອງ ອິນດູຈີນ ຝລັ່ງເສດຢ່າງງ່າຍດາຍ. ໃນຊຸມປີດັ່ງກ່າວ ພວກລ່າເມືອງຂຶ້ນ ຝລັ່ງໄດ້ຕົກຢູ່ໃນສະພາບຫຍຸ້ງຍາກ, ຈິດໃຈຊາດຂອງພົນລະ ເມືອງລາວກໍ່ໄດ້ເພີ່ມທະວີຂຶ້ນ ເພື່ອຍາດເອົາຄວາມເປັນອິດ ສະ ລະພາບຈາກຝລັ່ງ. ແຕ່ວ່າປະເທດລາວຊ້ຳ ໄດ້ຖືກຜົນກະທົບຈາກ ການຂະຫຍາຍອານາເຂດຂອງຍີ່ປຸ່ນ ແລະ ປະເທດໄທເຊິ່ງ ໄດ້ ຕົກລົງກັນເຊັນສົນທິສັນຍາມິດຕະພາບໃນເດືອນ ມິຖຸນາ ປີ 1940. ລັດຖະບານໄທໄດ້ສວຍໂອກາດ ເລັ່ງຫວງເອົາດິນດອນ ສ່ວນນຶ່ງ ຈາກລັດຖະບານຝລັ່ງເຊິ່ງ ກ່ອນໜ້າຝລັ່ງເຂົ້າມາ ປະເທດລາວ ເຄີຍເປັນປະເທດລາດຂອງໄທ. ຝລັ່ງໄດ້ປະຕິເສດຕໍ່ຂໍ້ ຮຽກຮ້ອງ ດັ່ງກ່າວອັນໄດ້ພາໃຫ້ ເກີດມີການປະທະກັນ ທາງທະຫານລະ ຫວ່າງໄທແລະຝລັ່ງເຊິ່ງເວລານັ້ນ ຕົກຢູ່ໃນສະພາບອ່ອນເພຍຈາກ ສົງຄາມໂລກຄັ້ງທີ2. ຈາກນັ້ນຝລັ່ງຈຶ່ງໄດ້ຍິນຍອມ ເຈລະຈາ ສັນຕິພາບກັບໄທ ແລະຕົກລົງເຊັນ ສັນຍາລະ ຫວ່າງຝລັ່ງ-ໄທ ຢູ່ໂຕກຽວ ໃນວັນທີ 11 ມີນາ 1941. ໃນ ເວ ລານັ້ນ ຍີ່ປຸ່ນໄດ້ຟື້ນບົດບາດເປັນຄົນກາງລະຫວ່າງຝລັ່ງແລະໄທ. ສັນຍາ ທີ່ໄດ້ເຊັນກັນລະຫວ່າງຝລັ່ງແລະໄທນັ້ນໄດ້ມີການຕົກລົງ ກັນແບ່ງ ປັນດິນແດນທີ່ປົກຄອງ ໂດຍຝລັ່ງໃຫ້ໄທສ່ວນຫນຶ່ງຄືຝລັ່ງຍິນ ຍອມມອບດິນແດນເບື້ອງຕາ ເວັນຕົກຂອງແມ່ນ້ຳຂອງໃຫ້ໄທເຊິ່ງ

ກວມເອົາແຂວງໄຊຍະບູລີທີ່ຂຶ້ນກັບອານາຈັກຫຼວງ ພະບາງ ແລະ ພາກສ່ວນນຶ່ງຂອງແຂວງຈຳປາສັກ ເຊິ່ງມີເນື້ອທີ່ ທັງໝົດ 53.000 ຕາຕະລາງ ກິໂລແມັດ.

ໃນຕົວຈິງ, ການຕົກລົງດັ່ງກ່າວແມ່ນບໍ່ໄດ້ຮັບການເຫັນດີຈາກເຈົ້າຊີວິດຫຼວງພະບາງ, ດ້ວຍເຫດນີ້ ຜູ້ສຳເລັດລາດຊະການຝລັ່ງປະຈຳອິນດູຈີນຈຶ່ງໄດ້ເຊັນ ສົນທິສັນຍາວ່າດ້ວຍການອາລັກຂາສະບັບໃໝ່ກັບເຈົ້າຊີວິດຫຼວງພະບາງ. ເພື່ອທົດແທນດິນແດນເບື້ອງຕາເວັນຕົກທີ່ເສຍໄປໃຫ້ໄທ, ຝລັ່ງຈຶ່ງໄດ້ໂອນເອົາ 3 ແຂວງພາກເໜືອເຂົ້າໃນອານາຈັກຫຼວງພະບາງ.

ການປະລາໄຊຂອງຝລັ່ງໃນໄລຍະສົງຄາມໂລກຄັ້ງທີ 2 ໄດ້ພາໃຫ້ຂະບວນການຕໍ່ສູ້ປົດປ່ອຍຊາດຢູ່ ອິນດູຈີນຍິ່ງຂະຫຍາຍຕົວກ້ວາງອອກ. ໃນຂະນະນັ້ນຢູ່ລາວ, ການຕໍ່ສູ້ປົດປ່ອຍຊາດກໍ່ໄດ້ຮັບການຂະຫຍາຍຕົວຂຶ້ນຕື່ມ ອັນໄດ້ສົ່ງ ຜົນສະທ້ອນອັນດີໃຫ້ແກ່ຈິດໃຈຊາດແລະແນວຄິດອິດສະລະພາບ ແຜ່ລາມເຂົ້າໃນໝູ່ປະຊາຊົນ, ວົງການສັກດິນາ, ນາຍທຶນນ້ອຍ ແລະ ຊັ້ນຄົນອື່ນໆ. ໃນໄລຍະນັ້ນ ອິນດູຈີນຝລັ່ງເສດ ໄດ້ຖືກກອງທັບຍີ່ປຸ່ນເຂົ້າຄອບຄອງ. ກອງທັບຍີ່ປຸ່ນໄດ້ເຂົ້າ ມາຕີນແດນລາວທາງພາກໃຕ້ໃນປີ 1941. ສ່ວນກອງທະຫານຂອງຍີ່ປຸ່ນ ທີ່ຖືກສົ່ງໄປທາງ ພາກເໜືອນັ້ນແມ່ນໃນປີ1945. ໃນຂະນະດຽວກັນ ກອງທະຫານຂອງຝລັ່ງໄດ້ຖອຍອອກໄປຢູ່ຕາມປ່າ. ດ້ວຍສະພາບການ

ດັ່ງກ່າວ ປະຊາຊົນ ລາວ ໄດ້ຖືກກົດຂີ່ຂົ່ມເຫັງ 2 ຕໍ່ຄືຈາກ ທາງພວກຝລັ່ງ ແລະ ພວກຍີ່ປຸ່ນ. ໃນກາງປີ 1945 ຢູ່ລາວ ໄດ້ເລີ່ມມີການເຕົ້າ ໂຮມກຳລັງຕ້ານຈັກກະພັດຢ່າງ ກ້ວາງຂວາງ ແລະໄດ້ກະກຽມການລຸກຮືຂຶ້ນ ດ້ວຍກຳລັງອາວຸດ. ໄຊຊະນະ ຂອງກອງທັບແດງ ໂຊວຽດຕໍ່ກອງ ທັບຍີ່ປຸ່ນ ໃນເວລາ ນັ້ນໄດ້ເຮັດໃຫ້ກົງຈັກການທະການ ຂອງຍີ່ປຸ່ນຢູ່ທົ່ວໄປນັບທັງ ຢູ່ອິນດູຈີນຖືກເພພັງລົງ ອັນໄດ້ສ້າງເງື່ອນໄຂ ໃຫ້ປະຊາຊົນ ຫວຽດນາມໄດ້ຮັບຜົນ ສຳເລັດໃນການ ປະຕິວັດເດືອນ ສິງຫາ 1945ແລະກ້າວໄປເຖິງໄຊຊະນະໃນການສະຖາປະນາ ສາທາລະ ນະລັດ ສັງຄົມ ນິຍົມຫວຽດນາມ ໃນວັນທີ 2 ກັນຍາ 1945. ໄຊ ຊະນະດັ່ງກ່າວຂອງປະຊາຊົນຫວຽດນາມ ໄດ້ສ້າງການລະ ໂອກາດ ທີ່ເອື້ອອຳນວຍໃຫ້ ແກ່ປະຊາຊົນລາວ ຜູ້ຮັກຊາດເພີ່ມທະວີການ ຕໍ່ສູ້ຕ້ານການຄອບຄອງ ຂອງຝລັ່ງແລະຍີ່ປຸ່ນຢູ່ລາວເພື່ອຄວາມ ເປັນເອກະພາບ ແລະ ເອກະລາດແຫ່ງຊາດ.

II.

ການປະກາດ ຄວາມເປັນເອກະລາດຂອງ ລັດ-ລາວ .

1. ການປະກາດ ເອກະລາດຂອງລາວອິດສະຫລະ.

ໃນໄລຍະການຄອບຄອງຂອງຍີ່ປຸ່ນຢູ່ລາວ, ພວກຂຸນ ເສິກຍີ່ປຸ່ນໄດ້ປ່ຽນແປງ ແລະ ປະຕິຮູບກົງຈັກຂອງຝລັ່ງ. ດ້ານ ນຶ່ງ, ໄດ້ສະແດງໃຫ້ເຫັນວ່າ ພວກຕົນໄດ້ເປັນຜູ້ປົດປ່ອຍປະຊາຊົນ ລາວອອກຈາກການເປັນຫົວເມືອງຂຶ້ນຂອງຝລັ່ງ, ໄດ້ຖະແຫຼງວ່າ ຈະບໍ່ແຊກແຊງເຂົ້າວຽກງານພາຍໃນຂອງລາວ, ຈະເຄົາລົບນັບຖື ຮິດຄອງປະເພນີ ແລະຄວາມມຸ້ງຫວັງຂອງປະຊາຊົນລາວ. ຕົວ ຢ່າງໄດ້ມີກໍລະນີທີ່ທະຫານຍີ່ປຸ່ນຂົ່ມເຫັງປະຊາຊົນ ເຊິ່ງທະຫານຜູ້ ນັ້ນກໍ່ໄດ້ຖືກລົງໂທດຕໍ່ໜ້າປະຊາຊົນລາວ. ດ້ານສອງ, ຂຸນເສິກຍີ່ ປຸ່ນ ຍັງໄດ້ແຕ່ງຕັ້ງຂ້າລາດຊະການລາວຂອງອົງການປົກຄອງ ຝລັ່ງໃນໜ້າທີ່ຕຳແໜ່ງສຳຄັນ ແລະ ພ້ອມນັ້ນຍັງໄດ້ຊຸກຍູ້ໃຫ້ ເຈົ້າຊີວິດຫຼວງພະບາງ ແລະ ເຈົ້ານາຍຜູ້ຊົງອິດທິພົນປະກາດ ຄວາມ ເປັນເອກະລາດ ທັງໄດ້ສະເໜີໃຫ້ເຈົ້າສີສະຫວ່າງວົງເປັນ ເຈົ້າຊີ ວິດສຳລັບທົ່ວປະເທດລາວ. ໃນຂະນະດຽວກັນນັ້ນ ພາກສ່ວນນຶ່ງ ຂອງກຳລັງປະກອບອາວຸດຂອງຝລັ່ງ ຢູ່ໃນປ່າ ແລະໄດ້ສ້າງ ຕັ້ງ ກຳລັງຕໍ່ຕ້ານຂອງຕົນຂຶ້ນ ພ້ອມທັງກະກຽມ ທີ່ຈະຍຶດຄອງເອົາ ລາວຄືນໃໝ່. ພວກເຂົາ ໄດ້ຂົນຂວາຍເອົາ

ພວກທີ່ນິຍົມຝລັ່ງເຂົ້າ ໃນຂະບວນການຂອງຕົນ ແລະໃຊ້ເປັນ ນັກສຶບສອດແນມ ເພື່ອຈະກໍ່ກວນອຳນາດການປົກຄອງຂອງ ຍີ່ປຸ່ນ.

ຈາກສະພາບການດັ່ງກ່າວ ປະຊາຊົນລາວບັນດາເຜົ່າ ສ່ວນໜ້ວງໜ້າຍ ແມ່ນບໍ່ເຊື່ອໝັ້ນຕໍ່ນະໂຍບາຍຂອງຝລັ່ງ ແລະ ພວກຍີ່ປຸ່ນ. ດ້ວຍເຫດນີ້ຢູ່ໃນໝູ່ປະຊາຊົນລາວໄດ້ມີການເຄື່ອນ ໄຫວປິດລັບຂອງອົງການຈັດຕັ້ງທີ່ກ້າວໜ້າ ແລະ ກອງ ກຳລັງ ປະກອບອາວຸດ ພາຍໃຕ້ການນຳພາຂອງຄະນະພັກແຄ້ວນລາວ ຂອງພັກ ກອມມູນິດອິນດູຈີນ. ສະນັ້ນເວລາຄອງຄອຍຂອງປະຊາ ຊົນລາວກໍ່ໄດ້ມາເຖິງ, ແລະຍ້ອນປະຊາຊົນບັນດາ ເຜົ່າລາວ ໄດ້ເຂົ້າ ໃຈວ່າພວກລ່າເມືອງຂຶ້ນ ເຊັ່ນດຽວກັບ ຂຸນເສິກ ຍີ່ປຸ່ນແມ່ນບໍ່ໄດ້ນຳເອົາຄວາມ ສີວິໄລມາສູ່ປະເທດຊາດຂອງ ຕົນແຕ່ກົງກັນຂ້າມຫາກ ໄດ້ມາປຸ້ນສະດົມແລະກອບໂກຍເອົາ ຊັບພະຍາກອນຂອງລາວ.

ໃນໄລຍະຕົ້ນປີ 1945, ຢູ່ວຽງຈັນ ພວກຂ້າລາດຊະການ ແລະປັນຍາຊົນລາວ ເຊິ່ງໄດ້ຮັບຜົນສະທ້ອນ ຈາກສະພາບການ ດັ່ງກ່າວ ໄດ້ພາກັນສ້າງຕັ້ງອົງການຈັດຕັ້ງຊາດນິຍົມຂຶ້ນຄື ຂະ ບວນການ "ລາວເປັນລາວ". ອົງການຈັດຕັ້ງດັ່ງ ກ່າວໄດ້ມີການ ພົວພັນຢ່າງໃກ້ສິດກັບຂະບວນການ "ເສລີໄທ" ທີ່ໄດ້ເຕົ້າໂຮມກຳ ລັງທີ່ກ້າວໜ້າ ແລະຊາດນິຍົມຢູ່ໄທຕໍ່ສູ້ເພື່ອຄວາມເປັນອິດສະລະ

ພາບ ແລະ ອະທິປະໄຕຂອງໄທ. ຂະບວນການ "ລາວເປັນລາວ ແລະ "ເສລີໄທ" ໄດ້ຮັບການສະ ໜັບສະໜູນຊ່ວຍເຫຼືອຈາກ ເຈົ້າ ໜ້າທີ່ຂອງອາເມລິກາ ທີ່ໄດ້ພະຍາຍາມ ສ້າງເງື່ອນ ໄຂເພື່ອເຂົ້າ ມາຍັງປະເທດລາວແລະໄທ. ໃນຕໍ່ມາຂະບວນການ "ລາວເປັນ ລາວ" ໄດ້ເສື່ອມຕົວເຂົ້າ ໃນແນວໂຮມຕ້ານຈັກກະພັດ ເຊິ່ງໄດ້ ກາຍເປັນຄະນະກຳມະການ "ລາວອິດສະຫລະ".

ພາຍຫຼັງການປະລາໄຊຂອງ ຝາດສິດເຢຍລະມັນ ແລະ ພວກຂຸນເສິກຍີ່ປຸ່ນ ຈາກສົງຄາມໂລກຄັ້ງທີ 2 ເຊິ່ງພາໃຫ້ພວກ ຍີ່ປຸ່ນຈຳຕ້ອງຖອນກຳລັງກັບຄືນປະເທດຂອງຕົນ, ພວກລ່າເມືອງ ຂຶ້ນຝລັ່ງທີ່ໄດ້ຊ້ອນກຳລັງຢູ່ ໃນປ່າໄລຍະນຶ່ງກໍ່ໄດ້ ຈັບເອົາໂອ ກາດທະຍອຍເຂົ້າຕົວເມືອງຄືນ ໂດຍອີງໃສ່ພວກຄົນລາວທີ່ນິຍົມ ຝລັ່ງ ເປັນຜູ້ໃຫ້ຄວາມຮ່ວມມື ເພື່ອຟື້ນຟູອົງການຂອງຕົນ. ໃນທີ ສຸດພວກເຂົາກໍ່ໄດ້ຮັບຄວາມຍິນຍອມຈາກເຈົ້າຊີວິດ ໝວງພະບາງ ວາ ການອາລັກຂາຂອງຝລັ່ງ ຕ່ອາມາຈັກໝວງພະບາງ ແມ່ນຈະ ສືບຕໍ່ໄປ ແລະ ວ່າການປະກາດເອກະລາດຂອງຍີ່ປຸ່ນໃຫ້ລາວ ນັ້ນແມ່ນໂມຄະ. ໃນໄລຍະດຽວກັນນັ້ນ, ກອງທະຫານຈີນ ໂກມິນ ຕັ໋ງ ເຊິ່ງໄດ້ສວຍໂອກາດຈາກສະພາບການໜຸ້ງຍາກຂອງຝລັ່ງ ກໍ່ໄດ້ເຂົ້າມາຍັງພາກເໜືອຂອງລາວ ເພື່ອຮັບເອົາການ ຍອມຈຳ ນົນຂອງກອງທັບຍີ່ປຸ່ນ ພ້ອມນັ້ນກໍ່ສະແດງເຈດຈຳນົງຍຶດຄອງ ເອົາດິນແດນສອງແຂວງພາກເໜືອຂອງລາວ ຄື ໝວງນ້ຳທາ

ຊອບຈາກ ເຈົ້າຊີວິດສີສະຫວ່າງວົງ ເພື່ອຈະປະກາດໃຫ້ຄວາມ
ເປັນເອກະລາດຂອງອານາຈັກຫຼວງພະບາງ. ຕໍ່ໜ້າສະພາບການ
ດັ່ງກ່າວ ພວກຜູ້ນຳຂະບວນ "ລາວອິດສະຫຼະ" ໄດ້ຮ່ວມກັບເຈົ້າ
ເພັດສະລາດ ເຊິ່ງເປັນມະຫາອຸດປະຫຼາດແລະ ນາຍົກລັດຖະມົນຕີ
ຫຼວງພະບາງ ໄດ້ຄຳນຶງເຖິງສະພາບການອັນສັບສົນດັ່ງກ່າວ ຈຶ່ງ
ບໍ່ເຫັນດີ ແລະ ໄດ້ມີຄວາມເຫັນວ່າ ບັນຫາຄວາມເປັນເອກະລາດ
ແລະ ທ້ອນໂຮມປະເທດຊາດນັ້ນ ຈະຕ້ອງແກ້ໄຂກັບປະເທດມະ
ຫາອຳນາດ. ສະນັ້ນຂະບວນການ "ລາວອິດສະຫລະ" ເຊິ່ງເປັນ
ກຳລັງການເມືອງຕົ້ນຕໍໃນໄລຍະນັ້ນ ໄດ້ເຮັດຂໍ້ສະເໜີຕໍ່ເຈົ້າຊີວິດ
ຫຼວງພະບາງ ໃຫ້ປະກາດຄວາມເປັນເອກະລາດແລະເຕົ້າໂຮມ
ປະເທດຊາດຕໍ່ຊາວໂລກ ແຕ່ວ່າເຈົ້າຊີວິດສີສະຫວ່າງວົງບໍ່ຕົກລົງ
ທັງໄດ້ຖະແຫຼງວ່າ ອານາຈັກຫຼວງພະບາງ ຍັງຮັກສາຖານະ
ຄວາມເປັນອາລັກຂາຂອງຝລັ່ງ. ໃນເມື່ອຜູ້ນຳ "ລາວອິດສະຫຼະ"
ໄດ້ຊາບຂ່າວຄຳຕອບປະຕິເສດຂອງເຈົ້າຊີວິດ, ຈາກນັ້ນຈຶ່ງໄດ້
ສະເໜີຕໍ່ເຈົ້າເພັດສະລາດ ເຊິ່ງເວລາ ນັ້ນຢູ່ວຽງຈັນ ປະກາດການ
ເຕົ້າໂຮມລາວ ໃນວັນທີ 15 ກັນຍາ 1945 ໃນນາມປະຊາຊົນ
ລາວ ໂດຍບໍ່ຮັບຮູ້ສິດທິໃດໆຂອງພວກຝລັ່ງຢູ່ລາວ, ພ້ອມນັ້ນກໍ່
ໄດ້ແຈ້ງການອອກວ່າ ປະເທດລາວແມ່ນເປັນອິດສະລະຈາກ
ທຸກໆພັນທະຕໍ່ຝລັ່ງ. ຕໍ່ພຶດຕິກຳດັ່ງກ່າວນັ້ນ ພວກຝລັ່ງໄດ້ສະເໜີ
ແນະຕໍ່ເຈົ້າຊີວິດ ສີສະຫວ່າງວົງ ຮຽກໃຫ້ເຈົ້າ ເພັດສະລາດ ກັບ
ຈາກວຽງຈັນໄປຫຼວງພະບາງ ເພື່ອຄຸມຕົວໄວ້. ໃນເວລາດຽວກັນ
ພວກລ່າເມືອງຂຶ້ນກໍ່ໄດ້ຖະແຫຼງການພ້ອມຮັບ ຮູ້ອະທິປະໄຕ ຂອງ

ເຈົ້າຊີວິດຕໍ່ທົ່ວປະເທດລາວ. ດ້ວຍການໜີບຮັດຂອງຝລັ່ງ ເຈົ້າຊີ
ວິດ ຈຶ່ງໄດ້ວາງມາດຕາການຕໍ່ເຈົ້າເພັດສະລາດ ໂດຍປະກາດປົດ
ເພີ່ນອອກຈາກຕຳແໜ່ງມະຫາອຸປະຫຼາດ ແລະ ນາຍົກລັດຖະມົນ
ຕີ. ສ່ວນຢູ່ວຽງຈັນກໍ່ໄດ້ມີການ ຂຸ້ນຂ້ອງຟ້າວສ້າງຕັ້ງ ຄະນະກຳ
ມະການລາດຊະດອນ ໂດຍມີການເລືອກເອົາຕົວແທນຂອງປະຊາ
ຊົນເຂົ້າຮ່ວມ ເປັນຕົ້ນແມ່ນເອົາຈາກຂ້າລາດຊະການຊັ້ນຜູ້ໃຫຍ່ທີ່
ມີທ່າອ່ຽງຮັກຊາດ, ນາຍທຶນແຫ່ງຊາດ, ປັນຍາຊົນແລະອື່ນໆ.
ຄະນະກຳມະການ ລາດຊະດອນໄດ້ພ້ອມກັນພິຈາລະນາ ບັນຫາ
ການສ້າງຕັ້ງລັດຖະບານ ແລະ ກະກຽມຮ່າງລັດຖະທຳມະນູນ.

ໃນວັນທີ 10 ຕຸລາ 1945, ຄະນະກຳມະການລາດຊະ
ດອນໄດ້ສົ່ງສານໄປຍັງເຈົ້າຊີວິດຫຼວງພະບາງ ແລະຂໍຮ້ອງໃຫ້ມີ
ການຮັບຮູ້ສະພາບການປ່ຽນແປງທີ່ຜ່ານມາ, ຂໍໃຫ້ຮັບເອົາຮ່າງ
ລັດຖະທຳມະນູນ, ຍຸບລັດຖະບານເກົ່າ ແລະຮັບຮອງ ລັດຖະບານ
ໃໝ່ທີ່ຈະໄດ້ຮັບການສ້າງຕັ້ງໂດຍສອດຄ່ອງກັບລັດຖະທຳມະນູນ.
ເມື່ອງຈາກວ່າບໍ່ໄດ້ຮັບຄຳຕອບ, ຄະນະກຳມະການລາດຊະດອນ
ຊຶ່ງໄດ້ຕັດສິນ ໃຈປະກາດຄວາມເປັນ ເອກະລາດຂອງລັດ-ລາວ.

ຢູ່ທີ່ວຽງຈັນ ໃນວັນທີ 12 ຕຸລາ 1945, ຄະນະກຳມະ
ການລາດຊະດອນ ໄດ້ຈັດຕັ້ງພິທີປະກາດ ຄວາມເປັນເອກະລາດ
ຂອງລາວຢ່າງເປັນທາງການ ຕໍ່ໜ້າປະຊາຊົນລາວ ແລະ ຊາວ
ໂລກ. ໃນໂອກາດດຽວ ກັນນັ້ນໄດ້ມີການຊັກທຸງຊາດ ຜືນໃໝ່ຂຶ້ນ

ເສົາຢູ່ຕໍ່ໜ້າເຮືອນຕີກຂ້າໜວງໃຫຍ່ຝລັ່ງຢູ່ລາວ ທຸງດັ່ງກ່າວປະ ກອບມີສາມສີ : ສີແດງຢູ່ຂ້າງເທິງຂ້າງລຸ່ມ, ສີຟ້າຢູ່ລະຫວ່າງ ກາງສີແດງ, ສີຂາວຮູບ ວົງເດືອນແມ່ນຢູ່ໃຈກາງຂອງທຸງ ເຊິ່ງ ຕໍ່ມາກໍ່ໄດ້ກາຍເປັນ ທຸງຂອງແນວລາວຮັກຊາດ, ອັນເປັນສັນຍາ ລັກ ໃນການເຕົ້າໂຮມປະຊາຊົນລາວ ບັນດາເຜົ່າ ຕະຫລອດໄລຍະ ການຕໍ່ສູ້ເພື່ອປົດປ່ອຍຊາດ. ພາຍຫຼັງໄຊຊະນະຢ່າງສົມບູນແຫ່ງ ການປົດປ່ອຍຊາດ ແລະສະຖາປະນາເປັນ ສປປລາວ ໃນວັນທີ 2 ທັນວາ ປີ 1975 ທຸງດັ່ງກ່າວກໍ່ໄດ້ຖືກປະກາດຮັບຮອງເອົາ ເປັນ ທຸງຊາດຂອງລາວ.

ການປະກາດເອກະລາດໃນວັນທີ 12 ຕຸລາ 1945 ໄດ້ ກາຍເປັນເຫດການ ສຳຄັນອັນນຶ່ງ ໃນປະຫວັດສາດຂອງ ປະຊາ ຊົນລາວ ເຊິ່ງໄດ້ຮັບການສະໜັບສະໜູນຈາກປະຊາຊົນລາວທົ່ວ ທັງປະເທດ. ໃຜໆກໍ່ມີຄວາມດີໃຈຕໍ່ຄວາມເປັນເອກະລາດຂອງ ລາວອອກຈາກການເປັນຫົວເມືອງຂຶ້ນຂອງຝລັ່ງ ເຊິ່ງເປັນເວລາ ນານເຖິງ 60 ກ່ວາປີ. ໃນມື້ດຽວກັນນັ້ນ ຄະນະກຳມະການ ລາດ ຊະດອນ ກໍ່ໄດ້ຮັບຮອງເອົາລັດຖະທຳມະນູນຊົ່ວຄາວຂອງປະເທດ ລາວ ອັນເຮັດໃຫ້ມີການປ່ຽນແປງ ໃນລະບອບການປົກຄອງຢູ່ ລາວ. ພ້ອມກັນນັ້ນ ຄະນະກຳມະການລາດຊະດອນ ກໍ່ໄດ້ເຊີນ ບັນດາຜູ້ຕາງໜ້າຂອງປະຊາຊົນ, ຂ້າລາດຊະການ, ທະຫານ, ຕຳຫຼວດ, ພໍ່ຄ້າຊາວຂາຍ, ຜູ້ຊົງຄຸນວຸດທິແລະອື່ນໆ ເຂົ້າຮ່ວມ ກອງປະຊຸມສະພາຜູ້ຕາງໜ້າມວນຊົນເຊິ່ງກອງປະຊຸມຄັ້ງປະຫວັດ

ສາດນັ້ນ ໄດ້ມີການຄັດເລືອກເອົາຜູ້ຕາງໜ້າຂອງປະຊາຊົນຈຳ ນວນ 45 ຄົນ ປະກອບເປັນສະພາແຫ່ງຊາດ. ພາຍຫຼັງການສ້າງ ຕັ້ງ ສະພາແຫ່ງຊາດແລະໄດ້ມີການປະກອບລັດຖະບານລາວ ບິນ ຟື້ນຖານລັດຖະທຳມະນູນຊົ່ວຄາວປີ 1945 ແລ້ວນັ້ນ, ເພື່ອຮັດ ແໜ້ນຄວາມເປັນເອກະລາດຂອງປະເທດ, ລັດຖະບານໄດ້ຈັດຕັ້ງ ອົງການປົກຄອງໃໝ່, ໄດ້ສ້າງຕັ້ງກອງທະຫານ ແລະ ຕຳຫຼວດ, ໄດ້ຕັ້ງບັນຫາ ເພື່ອພິຈາລະນາເສັ້ນທາງເດີນຂອງປະເທດຊາດໃນ ຂັ້ນຕໍ່ໄປ. ແຕ່ວ່າລັດຖະບາລາວອິດສະຫຼະບໍ່ໄດ້ວາງໂຄງການ ດຳ ເນີນງານອອກຢ່າງລະອຽດ ເພື່ອການພັດທະນາ ລະບົບກົງຈັກ ການປົກຄອງຂອງລັດ. ນັບແຕ່ມີປະເທດຊາດ ໄດ້ຮັບການປົດ ປ່ອຍອອກຈາກແອກຄອບຄອງຂອງຕ່າງດ້າວ, ສະພາບພາຍໃນ ປະເທດກໍ່ມີຄວາມຫຍຸ້ງຍາກສັບສົນ ເນື່ອງຈາກວ່າບໍ່ມີເງິນແລະ ພາຫານະ ເພື່ອຄ້ຳຊູກົງຈັກຂອງລັດ. ໃນຂະນະດຽວກັນ ບາງຂະ ແໜງການຂອງກົງຈັກປົກຄອງເກົ່າ ກໍ່ຍັງຖືກຮັກສາໄວ້ຄືເກົ່າ. ໃນເວລານັ້ນ ມີພຽງແຕ່ປະເທດດຽວຄື ສາທາລະນະລັດ ປະຊາ ທິປະໄຕ ຫວຽດນາມຮັບຮູ້ຄວາມເປັນ ເອກະລາດຂອງລາວ. ການຕິດຕໍ່ພົວພັນ ລະຫວ່າງສອງປະເທດ ຍັງບໍ່ໄດ້ຮັບການປັບປຸງ ເພາະວ່າກຳລັງປະກອບອາວຸດຂອງຝລັ່ງຍັງຂົ່ມຂູ່ ສອງປະເທດ ນັ້ນຢູ່.

ໃນເດືອນພະຈິກ ປີ 1945, ລັດຖະບານລາວອິດສະຫຼະໄດ້ ໝົບໃຫ້ເຈົ້າຊີວິດຫຼວງພະບາງສະຫຼະບັນລັງ. ຈາກນັ້ນຈຶ່ງເປັນ

ອັນວ່າຢູ່ໃນປະເທດລາວໄດ້ມີລັດຖະບານດຽວ ຄືລັດຖະບານ ລາວອິດສະຫຼະ ເຊິ່ງເປັນອົງການສູງສຸດທົ່ວປະເທດ. ເຫດການ ໃນປີ 1945 ໄດ້ໝາຍເຖິງໄຊຊະນະອັນຍິ່ງໃຫຍ່ຂອງປະຊາຊົນ ລາວຜູ້ຮັກຊາດທີ່ໄດ້ຕັດສິນໃຈລຸກຮືຂຶ້ນ ຕ້ານອຳນາດລ່າເມືອງ ຂຶ້ນຂອງຕ່າງປະເທດ. ປະຊາຊົນລາວບັນດາເຜົ່າເຊິ່ງໄດ້ຈົມເລິກ ແລະຂົມຂື່ນໃນລະບອບລ່າເມືອງຂຶ້ນຂອງຝລັ່ງ ເປັນເວລານານ ສົມຄວນນັ້ນ ໄດ້ມີຄວາມຕື່ນຕົວຂຶ້ນ ແລະ ໄດ້ສ້າງສະຕິເປັນເຈົ້າ ຕົນເອງ ນັບແຕ່ໄດ້ຮັບແສງສະຫວ່າງຂອງການປະຕິວັດຈາກບັນ ດາປະເທດໃກ້ຄຽງ ແລະ ມີພັກການເມືອງທີ່ກ້າວໜ້າຊີ້ນຳ ນຳ ພາເສັ້ນທາງກ້າວເດີນ.

2. <u>ລັດຖະທຳມະນູນ 1945</u> .

ລັດຖະທຳມະນູນ ທີ່ໄດ້ຮັບຮອງເອົາໂດຍ ຄະນະກຳມະ ການລາດຊະດອນໃນປີ 1945 ແມ່ນລັດຖະທຳມະນູນສະບັບທຳ ອິດໃນປະຫວັດສາດຂອງລາວ ແລະ ກໍ່ແມ່ນລັດຖະບານລາວອິດ ສະຫຼະໄດ້ເປັນຜູ້ຈັດຕັ້ງປະຕິບັດຕັ້ງແຕ່ຫົວທີໂລດ. ກົດໝາຍພື້ນ ຖານຂອງລັດລາວໃນເວລານັ້ນ ແມ່ນໄດ້ບັນຍັດໄວ້ກ່ອນອື່ນໝົດ ຄວາມເປັນເອກະລາດຂອງລາວ. ເຖິງວ່າການຍຶດອຳນາດ ຂອງ ຂະບວນການລາວອິດສະຫຼະ ໄດ້ເປັນການຕ້ານຕໍ່ ແນວຄິດຈິດໃຈ ຂອງເຈົ້າຊີວິດ ແຕ່ບັນດາຜູ້ນຳລາວອິດສະຫຼະ ໂດຍສະເພາະຜູ້ທີ່ ເປັນຕົວແທນໃຫ້ແກ່ຊົນຊັ້ນສັກດິນາ ແລະ ນາຍທຶນແຫ່ງຊາດ

ແມ່ນໄດ້ພະຍາຍາມຮັກສາລະບອບການປົກຄອງ ແບບລາຊາທິ ປະໄຕ ດ້ວຍການມີລັດຖະທຳມະນູນ ເໝືອນດັ່ງລັດສັກດິນາທິນ ນິຍົມອື່ນໆ. ດ້ວຍເຫດນີ້ ລັດຖະທຳມະນູນປີ 1945 ເຊິ່ງປະກອບ ມີອາລຳພະບົດ, 6 ພາກ ແລະ 41 ມາດຕາ ຈຶ່ງໄດ້ປະກາດກ່ຽວ ກັບອະທິປະໄຕ ແລະ ຮູບການປົກຄອງ ໂດຍລັດຖະທຳມະນຸນ ຢູ່ລາວ.

ໃນໝວດທີ່ໜຶ່ງ ແຕ່ມາດຕາ 1 ເຖິງ 3 ໄດ້ມີການເວົ້າ ເຖິງການຈັດຕັ້ງຂອງລັດ. ປະເທດລາວເປັນອັນນຶ່ງອັນດຽວ ແບ່ງແຍກອອກຈາກກັນບໍ່ໄດ້. ແຜ່ນດິນຂອງລາວໄດ້ແບ່ງອອກ ເປັນ 11 ແຂວງ. ສິ່ງສຳຄັນໃນນີ້ ການປະກາດຄວາມເປັນອັນ ນຶ່ງອັນດຽວຂອງ ປະຊາຊົນລາວນັ້ນແມ່ນມີຄວາມໝາຍສຳຄັນທີ່ ສຸດສຳລັບຊີວິດການເມືອງຂອງຊາດລາວ ເຊິ່ງກ່ອນໜ້າຝລັ່ງ ເຂົ້າມາໄດ້ແຕກເປັນ 3 ອານາຈັກ. ເວລາຝລັ່ງມາປົກຄອງກໍ່ ແບ່ງເປັນສອງພາກສ່ວນ. ສະນັ້ນໃນໝວດທີ່ 2 ເຖິງວ່າພວກຜູ້ ນຳລາວອິດສະຫຼະຈຳນວນນຶ່ງຍັງເຫັນຄວາມ ຈຳເປັນທີ່ຮັກສາ ລະບອບພະມະຫາກະສັດ ແຕ່ກໍ່ຫາກໄດ້ຄຳນຶງເຖິງການຈຳກັດ ອຳນາດຂອງເຈົ້າຊີວິດໄວ້ ໃນລັດຖະທຳມະນູນ. ໃນມາດຕາ 4 ໄດ້ເວົ້າວ່າ ອຳນາດອະທິປະໄຕແມ່ນ ມາຈາກປະຊາຊົນລາວທັງ ໝົດ. ເຈົ້າຊີວິດແມ່ນປະມຸກລັດ ເຊິ່ງປະຕິບັດສິດອຳນາດຂອງ ຕົນ ໂດຍອີງຕາມລັດຖະທຳມະນຸນ. ເຈົ້າຊີວິດແມ່ນໃຊ້ອຳນາດ ຂອງຕົນ ໂດຍອີງຕາມການເຫັນດີຂອງສະພາແຫ່ງຊາດ (ມາດ

ຕາ-5). ບັນຫາທີ່ຕ້ອງສັນລະເສີນ ສຳລັບລັດຖະທຳມະນຸນປີ 1945 ແມ່ນການເວົ້າເຖິງສິດ ແລະ ໜ້າທີ່ຂອງ ປະຊາຊົນລາວ (ມາດຕາ 11-13) ໃນ ໝວດທີ 3 ໃນມາດຕາ 11 ໄດ້ມີການ ບັນຍັດໄວ້ວ່າ ພົນລະເມືອງລາວທຸກຄົນແມ່ນສະເໝີພາບຕໍ່ໜ້າ ກົດໝາຍ. ພົນລະເມືອງແຕ່ລະຄົນແມ່ນມີສິດເສລີພາບ ສ່ວນບຸກ ຄົນ, ມີສິດຕໍ່ຊັບສິນ, ເຮັດວຽກງານ, ໄດ້ຮັບການສຶກສາຮ່ຳ ຮຽນ. ພ້ອມນັ້ນໃນມາດຕາ 12 ຍັງໄດ້ເວົ້າເຖິງ ສິດໃນການປາກ ເວົ້າ, ຂີດຂຽນ, ໂຮມຊຸມນຸມ ແລະ ຈັດຕັ້ງ ສະມາຄົມ. ນັບວ່າເປັນ ເທື່ອທຳອິດ ໃນປະຫວັດສາດຂອງລາວ ທີ່ໄດ້ມີການປະກາດກ່ຽວ ກັບສິດທີ່ຂອງ ປະຊາຊົນລາວ ເຊິ່ງມີຄວາມໝາຍອັນໃຫຍ່ຫຼວງ ທີ່ ສຸດເພາະວ່າ ປະຊາຊົນລາວ ບໍ່ເຄີຍຮູ້ເລີຍຕະຫຼອດໄລຍະປະຫວັດ ສາດທີ່ຜ່ານມາ ໂດຍສະເພາະໃນໄລຍະການປົກ ຄອງຂອງຝລັ່ງ.

ໝວດທີ 4 ຂອງລັດຖະທຳມະນູນ ໄດ້ເວົ້າກ່ຽວກັບສະພາ ແຫ່ງຊາດ (ມາດຕາ 14-30). ມີຫຼາຍມາດຕາໄດ້ເວົ້າ ເຖິງໜ້າທີ່, ຫຼັກການ ແລະການຈັດຕັ້ງຂອງສະພາ. ມາດຕາ 25 ໄດ້ເວົ້າວ່າ ທຸກກົດໝາຍຈະມີຜົນບັງຄັບໃຊ້ ໄດ້ກໍ່ຕໍ່ເມື່ອ ໄດ້ຖືກຮັບ ຮອງເອົາໂດຍສະພາແຫ່ງຊາດ. ສະພາແຫ່ງຊາດແມ່ນ ເປັນອົງ ການນິຕິບັນຍັດຂອງປະເທດ (ມາດຕາ-27). ໃນມາດຕາ 29 ຂອງລັດຖະທຳມະນູນໄດ້ບັນຍັດໄວ້ວ່າ ສະພາແຫ່ງຊາດ ໃຊ້ສິດ ອຳນາດໃນການກວດກາ ວຽກງານຂອງຜູ້ແທນຜ່ານຄະນະກຳ ມະການປະຈຳ. ໃນມາດຕາ 17 ໄດ້ຂຽນໄວ້ວ່າ ຜູ້ແທນແມ່ນຜູ້

ຕາງໜ້າຂອງປະຊາຊົນທົ່ວທັງປະເທດ ເຊິ່ງຕ້ອງປະຕິບັດໜ້າທີ່ ຢ່າງມີອິດສະລະ ແລະ ສັດຊື່ສຸດຈະລິດ. ແຕ່ວ່າ ໃນລັດຖະທຳມະ ນູນບໍ່ໄດ້ມີການເວົ້າເຖິງຄວາມຮັບຜິດຊອບຂອງ ຜູ້ແທນຕໍ່ໜ້າປະ ຊາຊົນ. ໃນດ້ານຟື້ນຖານ ສະພາແຫ່ງຊາດທີ່ຖືກສ້າງຕັ້ງຂຶ້ນໃນ ເດືອນຕຸລາປີ 1945 ໄດ້ປຽບເໝືອນອົງການ ອຳນາດສູງສຸດເຊິ່ງ ປະຕິບັດພາລະບົດບາດຄືກັບສະພາປະຕິວັດ ເພາະວ່າພວກຜູ້ແທນ ໃນໄລຍະນັ້ນ ແມ່ນໄດ້ຖືກຄັດເລືອກແຕ່ງຕັ້ງໂດຍບັນດາອາດີດ ຜູ້ນຳລາວ ອິດສະຫຼະຈາກບາງແຂວງ ແລະບໍ່ໄດ້ຖືກເລືອກຕັ້ງ ຈາກປະຊາຊົນ.ໃນລັດຖະທຳມະນູນບໍ່ໄດ້ເວົ້າຮອດກົດໝາຍເລືອກ ຕັ້ງ, ການເຂົ້າຮ່ວມຂອງປະຊາຊົນໃນການ ເລືອກເອົາຜູ້ແທນ ຂອງຕົນເຂົ້າໃນອົງການອຳນາດລັດ. ໃນໄລຍະເດືອນໄຫວອຽກ ງານສະພາແຫ່ງຊາດ ໄດ້ມີການແກ້ໄຂອຽກ ງານສຳຄັນຈຳນວນ ໜຶ່ງເປັນຕົ້ນແມ່ນໄດ້ຊ່ວຍເຫຼືອລັດຖະບານ ໃນວຽກງານໃນການ ເຕົ້າໂຮມປະເທດຊາດ.

ກ່ຽວກັບ ລັດຖະບານ ນັ້ນ ໄດ້ເວົ້າອອກ ໃນໝວດທີ 5 (ມາດຕາ 31-38) ໃນນັ້ນໄດ້ມີການກຳນົດບັນ ດາຫຼັກການຈັດ ຕັ້ງ, ສິດໜ້າທີ່ຂອງລັດຖະບານ. ສ່ວນ ໝວດທີ 6 ນັ້ນ (ມາດຕາ 39-41) ແມ່ນໄດ້ເວົ້າເຖິງ ການຈັດຕັ້ງສານ ເຊິ່ງ ປະຕິບັດ ໜ້າ ທີ່ວຽກງານອີງຕາມກົດໝາຍ.

ເວົ້າລວມແລ້ວ ລັດຖະທຳມະນູນປີ 1945 ໄດ້ມີຂໍ້ຂາດຕົກບົກພ່ອງຫຼາຍຢ່າງ ຍ້ອນວ່າໃນການຮ່າງລັດຖະທຳມະນູນ ດັ່ງກ່າວນັ້ນ ແມ່ນມີການເຂົ້າຮ່ວມ ພຽງແຕ່ຜູ້ຕາງໜ້າ ຊົນຊັ້ນປົນຍາ ຊົນສັກດິນາ ແລະ ນາຍທຶນນ້ອຍ. ສ່ວນຜູ້ຕາງໜ້າຂອງກຳ ລັງທີ່ກ້າວໜ້ານັ້ນແມ່ນມີຈຳນວນນ້ອຍ ເພາະວ່າສ່ວນຫຼາຍນັ້ນ ແມ່ນ ນຳພາກຳລັງປະກອບອາວຸດຢູ່ຕ່າງແຂວງ. ດ້ວຍເຫດນີ້, ລັດຖະ ທຳມະນູນສະບັບດັ່ງກ່າວ ຈຶ່ງປະກອບມີແນວຄວາມຄິດປະຊາ ທິປະໄຕແບບທຶນນິຍົມ, ໃນເວລາດຽວກັນນັ້ນ ກໍຊີ້ໃຫ້ເຫັນເຖິງ ຜົນງານອັນສຳຄັນ ເຊິ່ງສະແດງອອກ ໃນໄຊຊະນະຂອງ ປະຊາ ຊົນລາວ ໃນການຕໍ່ສູ້ຕ້ານແອກປົກຄອງຂອງພວກລ່າເມືອງຂຶ້ນ ຂອງຝລັ່ງ. ສິ່ງສຳຄັນອີກອັນນຶ່ງນັ້ນກໍຄືວ່າ ລັດຖະທຳທະມູນປີ 1945 ນັ້ນໄດ້ ເນັ້ນເຖິງຄວາມມຸ້ງໝັ້ນ ແລະ ຜົນປະໂຫຍດຂອງ ປະຊາຊົນລາວທັງມວນ ໃນລະດັບອັນແມ່ນອນ ໂດຍສະເພາະ ໄດ້ມີການປະກາດເຖິງສິດແລະໜ້າທີ່ຂອງພົນລະເມືອງລາວ.

ສ້າງມຈຳໜ່າຍ

ບົນພື້ນຖານຂອງລັດຖະທຳມະນູນດັ່ງກ່າວ, ລັດຖະບານ ລາວອິດສະຫຼະ ໄດ້ດຳເນີນການປ່ຽນແປງ ບາງຢ່າງໃນຊີວິດ ການເມືອງຂອງປະເທດ ໃນນັ້ນໄດ້ມີການປັບປຸງອົງການຈັດຕັ້ງ ອົງການປົກຄອງຄືນໃໝ່, ໄດ້ມີການແຕ່ງຕັ້ງຄົນລາວ ເຂົ້າແທນ ບ່ອນເຮັດວຽກຂອງຂ້າລາດຊະການຝລັ່ງ. ລັດຖະບານຍັງໄດ້ ເອົາໃຈໃສ່ໃນການກໍ່ສ້າງພະນັກງານ ການທະຫານ ແລະ ສ້າງ ຕັ້ງກອງທັບແຫ່ງຊາດ ແນໃສ່ຕ້ານການຄຸກຄາມຂອງ ຕ່າງຊາດ

ເຖິງວ່າ ໄດ້ແກ້ໄຂບາງບັນຫາຢ່າງມີຄວາມກ້າວໜ້າໃນໄລຍະອັນ ສັ້ນກໍ່ຕາມ, ແຕ່ປະຊາຊົນລາວຍັງ ໄດ້ປະເຊີນໜ້າ ກັບໜາຍບັນ ຫາທີ່ຫຍຸ້ງຍາກ ເພາະວ່າການຕໍ່ສູ້ຂອງປະຊາຊົນລາວ ບໍ່ໄດ້ສິ້ນ ສຸດພຽງເທົ່ານັ້ນຍ້ອນເອກະລາດ ແຫ່ງຊາດຂອງລາວຍັງຖືກຂົ່ມຂູ່ ໃນຕະຫຼອດໄລຍະຄອງອຳນາດຂອງລັດຖະບານລາວອິດສະຫຼະ.

3. <u>ການກັບຄືນຂອງຝລັ່ງສູ່ອຳນາດການປົກຄອງຢູ່ລາວ ຄັ້ງທີ 2</u> .

ໃນຕົ້ນປີ 1946, ພວກລ່າເມືອງຂຶ້ນຝລັ່ງ ໄດ້ເຕົ້າໂຮມກຳ ລັງຄືນໃໝ່ຢູ່ທີ່ພາກໃຕ້ຫວຽດນາມ ແລະກຳປູເຈຍ ດັ່ງດຽວກັບ ຕອນທຳອິດ ທີ່ໄດ້ເຂົ້າມາຍຶດຄອງເອົາອິນດູຈີນ ເຊັ່ນວ່າໃນຄັ້ງ ທີ່ສອງນີ້ ພວກລ່າເມືອງຂຶ້ນກໍ່ບໍ່ໄດ້ແຕະຕ້ອງ ລາວເທື່ອ ຈົນກ່ວາ ຈະສ້າງທ່າກຳລັງຢູ່ຫວຽດນາມ ແລະ ກຳປູເຈຍໃຫ້ແໜ້ນໜາ ກ່ອນ. ໃນເທື່ອໃໝ່ນີ້ ພວກຝລັ່ງໄດ້ທ່ວງດຶງເວລາໄວ້ຢູ່ພາກເໜືອ ຫວຽດນາມ ດ້ວຍການເຊັນສັນຍາກັບທ່ານປະທານໂຮຈິມິນ ໃນ ເດືອນມີນາ 1946 ໃຫ້ການຮັບຮູ້ສາທາລະນະລັດ ປະຊາທິປະໄຕ ຫວຽດນາມ. ຫຼັງຈາກນັ້ນ ພວກຝລັ່ງກໍ່ໄດ້ບຸກຕີເຂົ້າລາວຈາກ 3 ທິດໃນເວລາດຽກັນຄື : ຈາກຈີນ, ກຳປູເຈຍ ແລະ ພາກກາງ ຫວຽດນາມ. ເຖິງວ່າລັດຖະບານລາວອິດສະຫຼະ ຈະໄດ້ມີການກະ ກຽມຕ້ານທານການຮຸກຮານຂອງຝລັ່ງ ໂດຍມີການປຸກລະດົມ ປະຊາຊົນບັນດາເຜົ່າເຂົ້າໃນ ບັນດາກຳລັງປະກອບອາວຸດ ຢ່າງ ແຂ່ງຂັນ, ແຕ່ວ່າໃນເວລານັ້ນ ກໍ່ຍັງມີຜູ້ຄົນທີ່ບໍ່ ທັນມີຄວາມຕື່ນ

ຕົວທາງການເມືອງ ຮອດວ່າຢູ່ພາຍໃນຂະບວນຂອງລາວອິດສະ ຫຼະ ກໍ່ບໍ່ມີຄວາມເປັນເອກະພາບກັນ ໃນການແກ້ໄຂບັນຫາສຳຄັນ ໃນການນຳພາປະເທດຊາດ. ລະຫວ່າງຕົວເມືອງຕ່າງໆຂອງ ລາວກໍ່ ຂາດການຕິດຕໍ່ປະສານງານກັນ. ເຖິງວ່າຈະມີການເສຍ ສະຫຼະຢ່າງຫຼວງຫຼາຍ ໃນການຕ້ານພວກລ່າເມືອງຂຶ້ນຝລັ່ງ, ກຳ ລັງປະກອບອາວຸດຂອງລາວ ແມ່ນບໍ່ສາມາດເອົາຊະນະກອງທັບ ຂອງຝລັ່ງ ເຊິ່ງມີທັງຍົນສູ້ຮົບຖິ້ມລະເບີດ, ມີລົດຕັງແລະອາວຸດ ທັນສະໄໝກ່ວາ.ການຕໍ່ສູ້ຢ່າງພິລະອາດຫານ ຂອງກອງທັບປະຊາ ຊົນລາວ ພາຍໃຕ້ການນຳພາຂອງສະເດັດເຈົ້າສຸພານຸວົງ ໃນບັນ ຮົບທ່າແຂກນັ້ນ ໄດ້ຖືກຈາລຶກໄວ້ໃນປະຫວັດສາດຂອງຊາດລາວ ຕະຫຼອດການ. ສະເດັດເຈົ້າສຸພານຸວົງ ເຊິ່ງດຳລົງຕຳແໜ່ງລັດ ຖະມົນຕີກະຊວງປ້ອງກັນປະເທດໃນເວລານັ້ນ ໄດ້ເດັດດ່ຽວ ນຳ ພາກຳລັງທະຫານຕໍ່ສູ້ຕ້ານ ພວກຮຸກຮານຈົນເຖິງທີ່ສຸດ ແລະໄດ້ ຮັບບາດເຈັບສາຫັດຈາກລູກປືນ ຂອງຍົນສູ້ຮົບຂອງຝລັ່ງເວລາທີ່ ພະຍາຍາມຖອນກຳລັງຂ້າມນ້ຳຂອງ ໄປຍັງປະເທດໄທ.

ໃນເວລາທີ່ຝລັ່ງ ໄດ້ຍຶດເອົາຕົວເມືອງໃຫຍ່ . ເກືອບໝົດ ແລ້ວ, ໄດ້ມີຜູ້ນຳຂະບວນການລາວອິດສະຫຼະ ຈຳນວນນຶ່ງໄດ້ ໄປຮ້ອງຂໍ ແລະສະເໜີໃຫ້ເຈົ້າສີສະ ຫວ່າງວົງ ຂຶ້ນນັ່ງບັນລັງເປັນ ເຈົ້າຊີວິດຄົນໃໝ່. ດ້ວຍຈຸດປະສົງເພື່ອ ປົກປັກຮັກສາບັນລັງ, ດັ່ງນັ້ນ ເຈົ້າຊີວິດຫຼວງພະບາງຈຶ່ງໄດ້ຕົກລົງເຫັນດີເປັນເຈົ້າຊີວິດ ສຳລັບທົ່ວທັງປະເທດລາວ ແລະຮັບຮອງເອົາລັດຖະທຳມະນູນປີ

1945 ເພື່ອຈະເປັນເງື່ອນໄຂໃຫ້ຝລັ່ງຮັບຮູ້ລະບອບ ພະມະຫາກະ ສັດ ດ້ວຍການມີລັດຖະທຳມະນູນ ໃນການບໍລິຫານປະເທດ.

ອີງໃສ່ສະພາບການສັບສົນ ແລະ ເພື່ອຄວາມປອດໄພ ບັນດາຜູ້ນຳຄະນະລັດຖະບານລາວອິດສະຫຼະ ຕ້ອງໄດ້ເດີນທາງ ເຂົ້າປະເທດໄທ ພ້ອມດ້ວຍກຳລັງປະກອບອາວຸດຈຳນວນນຶ່ງໃນ ເດືອນພຶດສະພາປີ 1946, ອີກພາກສ່ວນນຶ່ງຂອງ ກຳລັງປະກອບ ອາວຸດ ໄດ້ຖອນຕົວເຂົ້າປ່າແລະສືບຕໍ່ດຳເນີນການຕໍ່ສູ້ແບບກອງ ຫຼອນ. ລັດຖະບານລາວອິດສະຫຼະຢູ່ໄດ້ພຽງແຕ່ 7 ເດືອນໃນການ ບໍລິຫານປະເທດຊາດ, ແຕ່ພາລະກິດປະຕິວັດ ຂອງຂະບວນການ ລາວອິດສະຫຼະ ໄດ້ກາຍເປັນມູນເຊື້ອຕໍ່ສູ້ຂອງ ປະຊາຊົນລາວ ບັນ ດາເຜົ່າໃນຂັ້ນຕໍ່ມາ ເພື່ອການປົດປ່ອຍປະເທດຊາດ.

ພວກຝລັ່ງ ໄດ້ຟື້ນຟູການຄອບຄອງປະເທດລາວ ໃນທ້າຍ ເດືອນ ພຶດສະພາ ປີ 1946, ແຕ່ໃນຄັ້ງນີ້ແມ່ນ ບໍ່ສາມາດທັບມ້າງ ຄວາມມຸ້ງຫວັງຂອງ ປະຊາຊົນລາວ ໃນການຕໍ່ສູ້ເພື່ອອິດສະລະ ພາບ, ຢູ່ໃນຫຼາຍທ້ອງຖິ່ນ ຂອງປະເທດໄດ້ມີການເຄື່ອນໄຫວ ຂອງກອງຫຼອນຕໍ່ຕ້ານຝລັ່ງ. ຈາກນັ້ນ ຝລັ່ງຈຶ່ງເຂົ້າໃຈວ່າຕົນ ຈະ ພົບກັບຄວາມຫຍຸ້ງຍາກ ຖ້າຫາກຈະປົກຄອງໂດຍກົງ ຄືຜ່ານມາ. ດ້ວຍເຫດນີ້ຝລັ່ງ ຈຶ່ງໄດ້ເຊັນສົນທິສັນຍາຊົ່ວຄາວ ເພື່ອກຳນົດ ຫຼັກການພົວພັນກັນລະຫວ່າງ ສາທາລະນະລັດຝລັ່ງແລະລາດຊະ ອານາຈັກລາວ ຢູ່ທີ່ວຽງຈັນໃນ ວັນທີ 27 ສິງຫາ ປີ 1946.

ນອກຈາກນັ້ນ ຝລັ່ງຍັງໄດ້ເຊັນສັນຍາເອກະສານອື່ນໆ ກ່ຽວກັບ ການທະຫານ, ການເງິນ ແລະການປົກຄອງ ເພື່ອໃຫ້ສອດຄ່ອງ ກັບຄວາມເປັນອັນນຶ່ງອັນດຽວຂອງລາດຊະອານາຈັກລາວ.
ດັ່ງນັ້ນເອງ ປະເທດລາວ ຈຶ່ງໄດ້ຮັບສິດປົກຄອງຕົນເອງສ່ວນ ໃດສ່ວນນຶ່ງໃນຂອບເຂດສະຫະພາບຝລັ່ງເສດ ເຊັ່ນໃຫ້ມີລັດຖະ ທຳມະນູນ, ລັດຖະບານ, ສະພາ ເພື່ອປົກປິດສະພາບການ ຂຶ້ນກັບ ຝລັ່ງ. ເຖິງຢ່າງໃດກໍ່ຕາມ ອຳນາດທີ່ແທ້ຈິງກໍ່ຍັງຂຶ້ນກັບ ກອມມິ ແຊໃຫຍ່ ເຊິ່ງປ່ຽນແທນຂ້າໜ່ວງໃຫຍ່ ໃນການຄວບຄຸມການ ເຄື່ອນໄຫວຂອງເຈົ້າຊີວິດ, ລັດຖະບານ ແລະ ອົງການປົກຄອງ ທັງໝົດ. ຂໍ້ກຳນົດກົດໝາຍແລະເອກະສານທາງການຈະມີຜົນ ບັງຄັບໃຊ້ກໍ່ຕໍ່ເມື່ອໄດ້ຮັບການເຫັນດີຈາກ ກອມມິແຊໃຫຍ່ ເຊິ່ງມີ ທັງ ສິດໃນການອອກຂໍ້ຕົກລົງ ກ່ຽວກັບຖານະຂອງພົນລະ ເມືອງ ຝລັ່ງ ກໍ່ຄືພົນລະເມືອງປະເທດອື່ນໆໃນອິນດູຈີນ.

ສິ່ງທີ່ແຕກຕ່າງກັບສະພາບໃນເມື່ອກ່ອນນັ້ນ ໃນໄລຍະ ໃໝ່ ຢູ່ທີ່ ລາດຊະອານາຈັກລາວ ໄດ້ມີການຈັດແບ່ງ ພະນັກງານ ເປັນສອງປະເພດຄື ພະນັກງານສະຫະພັນ ແລະ ພະນັກງານລາວ. ສຳລັບພາກສ່ວນສະຫະພັນແມ່ນມີ : ອົງການຍຸດຕິທຳ, ຄັງເງິນ, ພາສີ, ໂຍທາທິການ (ການສ້າງທາງ, ຂົນສົ່ງທາງນ້ຳ, ລະ ບົບ ພະລັງງານ, ການຂົນສົ່ງທາງອາກາດ), ໄປສະນີ, ການສຶກສາ ຊັ້ນກາງ ແລະ ຊັ້ນສູງ, ອົງການຮັກສາຄວາມປອດໄພຂອງ ສະ ຫະພັນ. ລາຍຮັບຈາກການຮັບໃຊ້ ດັ່ງກ່າວແມ່ນຖືກສົ່ງມອບເຂົ້າ

ງົບປະມານສະຫະພັນ. ສຳລັບພາກສ່ວນຄົນລາວທີ່ເປັນພະນັກ ງານນັ້ນ ແມ່ນມີກອງທະຫານຮັກສາພະອົງ ແລະກອງທັບແຫ່ງ ຊາດ, ຕຳຫຼວດ, ອົງການຍຸດຕິທຳຂອງລາວ, ການຖະແຫຼງຂ່າວ, ການສຶກສາແຫ່ງຊາດ ແລະພະນັກງານຈາກກະຊວງ ທະບວງກົມ ຂອງລັດຖະບານ ລາດຊະອານາຈັກລາວ. ການໃຊ້ຈ່າຍສຳລັບ ລ້ຽງເກືອພະນັກງານດັ່ງກ່າວ ແມ່ນອີງໃສ່ງົບປະມານແຫ່ງຊາດ.

ຢູ່ຕາມກະຊວງຕ່າງໆແລະອົງການປົກຄອງຂັ້ນສູງ, ໄດ້ມີ ການແຕ່ງຕັ້ງທີ່ປຶກສາຝລັ່ງ ເພື່ອຄວບຄຸມການເຄື່ອນໄຫວວຽກ ງານຂອງນັກປົກຄອງລາວ.

ໃນທ້າຍປີ 1946, ຝລັ່ງໄດ້ເຈລະຈາທວງເອົາດິນແດນ ສອງແຂວງຄື ໄຊຍະບູລີ ແລະ ຈຳປາສັກ ທີ່ເສຍໃຫ້ແກ່ໄທໃນປີ 1941 ກັບຄືນມາສູ່ຄວາມເປັນອັນນຶ່ງອັນດຽວຂອງລາດຊະອາ ນາຈັກລາວ.

4. ລັດຖະທຳມະນູນປີ 1947 ແລະການຂະຫຍາຍຕົວ ທາງການ ເມືອງຢູ່ລາວ .

ອີງຕາມລັດຖະດຳລັດຂອງ ເຈົ້າສີສະຫວ່າງວົງ ໃນວັນທີ 11 ຕຸລາ 1946, ໃນເດືອນທັນວາ 1946 ໄດ້ມີການ ເລືອກຕັ້ງ ເອົາຜູ້ແທນເຂົ້າໃນສະພາ ຮ່າງລັດຖະທຳມະນູນ ຈຳນວນທັງໝົດ

44 ຄົນ. ຕໍ່ມາໃນວັນທີ 15 ມີຖຸນາ 1947, ລັດຖະບານໃໝ່ແຫ່ງ ລາດຊະອານາຈັກລາວ ກໍ່ໄດ້ຮັບການສ້າງຕັ້ງໂດຍສະພາຮ່າງລັດ ຖະທຳມະນູນ.

ໃນວັນທີ 11 ພຶດສະພາ ປີ 1947 ໄດ້ມີການຮັບຮອງເອົາ ລັດຖະທຳມະນູນໃໝ່ ເຊິ່ງໄດ້ຮ່າງຂຶ້ນໂດຍມີ ການເຂົ້າຮ່ວມຂອງ ຊ່ຽວຊານຝລັ່ງ.

ຕາມຄວາມເປັນຈິງແລ້ວ ເນື້ອແທ້ຂອງລັດຖະທຳມະນູນປີ 1947 ນັ້ນ ແມ່ນລັດຖະທຳມະນູນຫົວເມືອງຂຶ້ນ ເພາະວ່າໃນນັ້ນ ໄດ້ມີການເນັ້ນເຖິງ ການເຂົ້າເປັນສະມາຊິກຂອງ ສະຫະພາບ ຝລັ່ງເສດຂອງປະເທດລາວ ແລະການຍັງຮັກສາສະຖາບັນທີ່ປຶກ ສາ ແລະ ຊ່ຽວຊານຝລັ່ງ.

ລັດຖະທຳມະນູນປີ 1947 ປະກອບມີຄຳນຳ ແລະ 7 ໝວດ ລວມມີ 44 ມາດຕາ. ເປັນທີ່ເຂົ້າໃຈແຈ້ງວ່າຜູ້ທີ່ໄດ້ຮ່າງ ລັດຖະທຳມະນູນນັ້ນ ແມ່ນໄດ້ພະຍາຍາມສ້າງປະຊາທິປະໄຕສຳ ລັບສັງຄົມລາວ ເຊິ່ງບໍ່ແຕກຕ່າງຫຍັງກັບປະຊາທິປະໄຕແບບ ນາຍທຶນ. ຕົວຢ່າງຢູ່ທີ່ຄຳນຳຂອງລັດຖະທຳມະນູນປີ 1947 ນັ້ນ ໄດ້ມີການປະກາດຄວາມເປັນເອກະລາດ ແລະ ອະທິປະໄຕຂອງ ລາວ ຢູ່ໃຕ້ເງື່ອນໄຂການເຂົ້າຮ່ວມ ໃນສະຫະພາບຝລັ່ງເສດ, ການຢືນຢັນເຖິງການປົກຄອງຕາມລະບອບພະມະຫາກະສັດ.

ໃນນັ້ນໄດ້ມີການຮັບຮູ້ສິດເສລີພາບຂອງ ພົນລະເມືອງ

ລາວ, ສະເໝີພາບຕໍ່ໜ້າກົດໝາຍ, ສິດໄດ້ຮັບການຄຸ້ມກັນ ໃນການຫີນຢູ່, ສິດເສລີພາບ ປະຊາທິປະໄຕ ແລະອື່ນໆ. ພ້ອມນັ້ນ ລັດຖະທຳມະນູນ ຍັງໄດ້ເວົ້າເຖິງພັນທະຂອງພົນລະເມືອງລາວ ໃນການຮັບໃຊ້ປະເທດຊາດ, ການນັບຖືຄວາມເຊື່ອຖື, ຄວາມສາ ມັກຄີ, ປະຕິບັດໜ້າທີ່ໃນຄອບຄົວ, ພາກພຽນຕໍ່ການງານ, ການ ສຶກສາ, ການຮ່ຳສັດສຸດຈະລິດ ແລະການເຄົາລົບນັບຖືກົດໝາຍ.

ໃນໝວດທີ່ນຶ່ງຂອງລັດຖະທຳມະນູນ (ມາດຕາ 1-7) ໄດ້ເວົ້າເຖິງຫຼັກການລວມ, ການຈັດຕັ້ງລັດ, ທຸງຊາດພື້ນສີແດງ, ຢູ່ໃຈກາງ ມີຮູບຊ້າງເຜືອກສາມຫົວ, ສີຂາວ, ເພງຊາດ, ສັນຊາດ ແລະອື່ນໆ. ໃນລັດຖະທຳມະນູນສະບັບນີ້ ໄດ້ເວົ້າເຖິງປະເທດ ລາວ ເປັນລາດຊະອານາຈັກອັນນຶ່ງອັນດຽວ ແບ່ງແຍກອອກ ຈາກກັນບໍ່ໄດ້. ໃນນັ້ນອົງການປົກຄອງຝລັ່ງໄດ້ສາມາດເອົາ ພາ ສາຝລັ່ງ ເປັນພາສາລາດຊະການບົ່ງໄວ້ໃນລັດຖະທຳມະນູນຍ້ອນ ເຫັນວ່າ ພົນລະເມືອງລາວສ່ວນໜ້ອຍແມ່ນບໍ່ຮູ້ໜັງສື. ແຕ່ວ່າ ຝລັ່ງ ກໍ່ບໍ່ສາມາດທຳລາຍ ພາສາລາວ ເໝືອນດັ່ງທີ່ໄດ້ມີການກະ ທຳຢູ່ຫວຽດນາມ ໂດຍເອົາຕົວໜັງສືລາແຕັງເຂົ້າໄປປ່ຽນແທນ ຕົວໜັງສືຫວຽດນາມ ເນື່ອງຈາກວ່າບັນດາຜູ້ຮັກຊາດລາວ ແມ່ນ ໄດ້ສູ້ຊົນເພື່ອປົກປັກຮັກສາໂຕໜັງສືລາວນັ້ນໄວ້ໄດ້.

ໝວດທີ່ສອງຂອງລັດຖະທຳມະນູນສະບັບນີ້ ແມ່ນເວົ້າ ເຖິງສິດອຳນາດ ຂອງເຈົ້າຊີວິດ ເຊິ່ງໃນນັ້ນຈະ ເຫັນໄດ້ການຍົກ ສູງ ບົດບາດຂອງ ເຈົ້າຊີວິດ ໃນຖານະເປັນປະມຸກສູງສຸດຂອງປະ ເທດ, ເປັນທີ່ເຄົາລົບສັກກາລະທີ່ຜູ້ໃດຈະລ່ວງເກີນບໍ່ໄດ້, ເປັນ

ພຸດທະມາມະກະຢ່າງແທ້ຈິງ (ມາດຕາ-8). ເຈົ້າຊີວິດເປັນຜູ້ ອອກພະລາດຊະອົງການ, ປະກາດໃຫ້ໃຊ້ບັນດາກົດໝາຍ ເຊິ່ງສະ ພາແຫ່ງຊາດໄດ້ລົງມະຕິຮັບຮອງເອົາ, ມີສິດເຊັນສັນຍາກັບ ຕ່າງປະເທດ ແລະ ປະກາດໃຫ້ສັດຕະຍາບັນ ໃນເມື່ອສະພາ ແຫ່ງຊາດເຫັນພ້ອມນຳ (ມາດຕາ-13). ເຈົ້າຊີວິດໄດ້ມີຕຳ ແໜ່ງເປັນຈອມທັບລາວ, ຈະປະກາດສົງຄາມໄດ້ ຫາກສະພາ ແຫ່ງຊາດເຫັນດີເຫັນຊອບດ້ວຍການ ລົງຄະແນນສຽງຮັບຮອງ ເປັນຈຳນວນສອງສ່ວນສາມ ຂອງຈຳນວນທັງໝົດ (ມາດຕາ-14). ນອກຈາກນັ້ນ ເຈົ້າຊີວິດຍັງມີສິດອຳນາດອື່ນໆທີ່ບັນຍັດ ໄວ້ໃນລັດຖະທຳມະນູນ.

ໝວດສາມຂອງລັດຖະທຳມະນູນ (ມາດຕາ19-23) ໄດ້ເວົ້າເຖິງອຳນາດບໍລິຫານຂອງລັດຖະບານ ກ່ຽວກັບການຈັດ ຕັ້ງ ແລະສິດໜ້າທີ່ຂອງອົງການດັ່ງກ່າວ. ຕາມມາດຕາ 19, ເຈົ້າຊີວິດເປັນຜູ້ເລືອກຕັ້ງນາຍົກລັດຖະມົນຕີ, ຈັດຕັ້ງລັດຖະ ບານແລ້ວກໍ່ສະເໜີໃຫ້ສະພາແຫ່ງຊາດຮັບຮອງເອົາ. ແຕ່ວ່າ ນາ ຍົກລັດຖະມົນຕີ ແລະບັນດາລັດຖະມົນຕີຈະໄດ້ຮັບການແຕ່ງຕັ້ງ ຢ່າງສົມບູນໄດ້ກໍ່ຕໍ່ເມື່ອ ສະພາແຫ່ງຊາດ ລົງມະຕິໄວ້ວາງໃຈ ໂດຍມີສຽງກ່ວາເຄິ່ງຈຳນວນສະມາຊິກ ທີ່ ມາປະຊຸມ. ໃນມາດ ຕາ 22 ໄດ້ບັນຍັດໄວ້ວ່າ ເມື່ອສະພາບໍ່ໃຫ້ ຄວາມໄວ້ວາງໃຈ ແກ່ລັດຖະບານ ຫຼືວ່າໄດ້ລົງຄະແນນຕິຕຽນລັດຖະບານແລ້ວ ລັດ ຖະບານຕ້ອງໄດ້ ລາອອກທັງໝົດຄະນະ. ອັນນີ້ກໍ່ສາມາດເວົ້າ ໄດ້

ວ່າ ຄະນະລັດຖະມົນຕີ ແລະ ຜູ້ແທນສະພາ ແມ່ນຂຶ້ນກັບອິດທິພົນ ຂອງຊົນຊັ້ນປົກຄອງທີ່ຮັ່ງມີ ເຊິ່ງດຳເນີນການຊີ້ສຽງ ປ່ຽນທ່າທີ ການເມືອງຂອງພວກຕົນໃນແຕ່ລະໄລຍະ. ບັນດາລັດຖະມົນຕີ ຈະ ແມ່ນຜູ້ແທນສະພາຫຼືບໍ່ກໍ່ໄດ້. ແຕ່ຜູ້ແທນສະພາທີ່ເປັນລັດຖະມົນຕີ ທີ່ນັ່ງຢູ່ສະພາແມ່ນ ບໍ່ມີສິດເຂົ້າຮ່ວມໃນການລົງຄະແນນສຽງ.

ກ່ຽວກັບສະພາແຫ່ງຊາດນັ້ນ ໄດ້ມີການກຳໜົດໄວ້ໃນ ໝວດສີ່ຂອງລັດຖະທຳມະນູນ (ມາດຕາ 24-36) . ສະພາແຫ່ງ ຊາດມີອຳນາດໃນຕຳແໜ່ງຊຸດລະ 4 ປີ, ດັ່ງທີ່ໄດ້ບັນຍັດໄວ້ໃນ ກົດໝາຍເລືອກຕັ້ງ. ສະພາແຫ່ງຊາດຊຸດທຳອິດໄດ້ຮັບການເລືອກ ຕັ້ງຂຶ້ນ ບົນພື້ນຖານກົດໝາຍເລືອກຕັ້ງຊົ່ວຄາວ ລົງວັນທີ 15 ສິງຫາ 1947. ປະຊາຊົນລາວ ທີ່ນິຍົມຊົມຊອບຝລັ່ງ ແລະ ພວກ ຊາດນິຍົມ ໃນເວລານັ້ນໄດ້ສະແດງຄວາມຫວັງໃນການນຳໃຊ້ ປະຊາທິປະໄຕໃຫ້ເປັນຈິງໃນຊີວິດການເມືອງຂອງປະເທດ. ແຕ່ ວ່າໃນເວລານັ້ນ ພົນລະເມືອງລາວ ຈຳນວນຫຼວງຫຼາຍບໍ່ໄດ້ ເຂົ້າ ຮ່ວມໃນການເລືອກຕັ້ງ. ຜູ້ທີ່ເຂົ້າຮ່ວມໃນການເລືອກຕັ້ງນັ້ນ ແມ່ນ ມີພຽງແຕ່ ບັນດາຜູ້ຕາງໜ້າຂອງຊົນຊັ້ນອັນມະທີ່ດີໃນສັງຄົມ. ໃນ ປີ 1947 ໄດ້ມີການເລືອກ ເອົາຜູ້ແທນສະພາ 44 ຄົນຈາກ 11 ແຂວງ. ບັນດາຜູ້ແທນທີ່ໄດ້ຮັບການ ເລືອກຕັ້ງໃນຄັ້ງນັ້ນ ສ່ວນ ໃຫຍ່ແມ່ນຜູ້ຄົ້ນຊັ້ນສູງ, ປັນຍາຊົນແລະ ນາຍທຶນແຫ່ງຊາດ. ຕາມ ມາດຕາ 25 ຂອງລັດຖະທຳມະນູນສະມາຊິກສະພາແຫ່ງຊາດ ແມ່ນ ເປັນຜູ້ແທນປວງຊົນຊາວລາວທົ່ວປະເທດ ບໍ່ແມ່ນແຕ່ຕາງ ໜ້າໃຫ້ ສະເພາະແຕ່ແຂວງ ທີ່ເລືອກຕັ້ງຕົນມາເທົ່ານັ້ນ. ກ່ຽວກັບ

ອາຍຸອຳນາດຂອງສະພານັ້ນ, ໃນຕໍ່ມາໄດ້ມີ ການດັດແກ້ແລະ ເພີ່ມຂຶ້ນ ຈາກ 4 ປີມາເປັນ 5 ປີ ເມື່ອປີ 1956 (ມາດຕາ-25). ອີງຕາມ ລັດຖະທຳມະນູນ (ມາດຕາ-28) ສະພາແຫ່ງຊາດ ເປັນຜູ້ ລົງມະຕິຮັບຮອງເອົາກົດໝາຍທັງໝົດອອກໃຊ້, ກົດໝາຍ ກ່ຽວກັບງົບປະມານ, ການເຫັນດີໃຫ້ລັດຖະບານກູ້ເງິນ, ໃຫ້ ຄວາມເຫັນ ຊອບຕໍ່ລາຍຈ່າຍຂອງ ລັດຖະບານໃນປີຜ່ານໄປ, ສິດຂອງ ບຸກຄົນ, ການແກ້ໄຂປ່ຽນແປງກົດໝາຍລາວ, ການປຶກ ຄອງລາດຊະອານາຈັກ, ການໃຫ້ນິລະໂທດກຳ, ໃຫ້ສັດຕະ ຍາບັນຕໍ່ສັນຍາທຸກສະບັບ, ນອກຈາກນັ້ນ, ສະພາແຫ່ງຊາດຍັງ ໃຫ້ກຳມະການຂອງ ຕົນພິຈາລະນາຮ່າງ ກົດໝາຍຕ່າງໆ. ໃນ ມາດຕາ 29 ໄດ້ເວົ້າວ່າ ຜູ້ແທນລາດຊະດອນມີສິດສະເໜີຮ່າງ ກົດໝາຍຕ່າງໆ. ນອກຈາກນັ້ນ ສະພາແຫ່ງຊາດຍັງມີສິດ ຈັດ ຕັ້ງກຳມາທິການພິເສດ ເພື່ອສືບສວນກວດຂັ້ນ ແລະຮັກສາການ ດຳເນີນລາດຊະການແລະ ຕຳແໜ່ງການທຸກພະແນກ.

ສິດຈຳກັດ

ລັດຖະທຳມະນູນ 1947 ໄດ້ມີການຍົກບົດບາດຂອງສະ ພາແຫ່ງຊາດ ບໍ່ພຽງແຕ່ໃນດ້ານນິຕິບັນຍັດ ແຕ່ຍັງໄດ້ກຳນົດ ເຖິງສິດກວດກາການບໍລິຫານງານຂອງລັດຖະບານ. ຖ້າຫາກ ວ່າລັດຖະທຳມະນູນ ໄດ້ໃຫ້ສິດດັ່ງກ່າວແກ່ສະພາແຫ່ງຊາດ ແຕ່ ໃນເວລາດຽວກັນນັ້ນ ກໍ່ໄດ້ມີການບົ່ງໄວ້ ກ່ຽວກັບສິດຂອງເຈົ້າ ຊີວິດ ໃນການຍຸບສະພາ ອີງຕາມການສະເໜີຂອງລັດຖະບານ ເມື່ອກອງປະຊຸມລາດຊະມົນຕີເຫັນດີນຳ (ມາດຕາ- 23). ສິດ

ຂອງເຈົ້າຊີວິດກໍ່ປຽບເໝືອນເດ່ືອງ ມີອັນນຶ່ງສຳລັບຊົ່ນຊັ້ນປົກ ຄອງເພ່ືອສົ່ງອິດທິພົນເຂົ້າໃສ່ສະພາແຫ່ງຊາດ.

ໝວດທີ 5 ຂອງລັດຖະທຳມະນູນ (ມາດຕາ 37-38) ໄດ້ບົ່ງໄວ້ກ່ຽວ ກັບສະພາລາດຊະມົນຕີ ເຊ່ິງໄດ້ຮັບສິດ ແລະອຳ ນາດເໝືອນກັບຜູ້ແທນລາດຊະດອນ, ມີສິດພິຈາລະນາກົດໝາຍ ທ່ີ ສະພາແຫ່ງຊາດ ໄດ້ລົງມະຕິເຫັນດີໃນຂ້າງຕົ້ນນັ້ນແລ້ວ, ໃຫ້ ຄຳເຫັນ ໃນບັນດາຮ່າງກົດໝາຍແລະຂໍ້ສະເໜີຕ່າງໆທ່ີ ພະມະ ຫາກະສັດ ຫຼື ລັດຖະບານໄດ້ມອບໝາຍໃຫ້ພິຈາລະນາ, ມີສິດສະ ເໜີຮ່າງກົດໝາຍ ແລະສົ່ງໃຫ້ສະພາແຫ່ງຊາດພິຈາລະນາ. ສະພາ ລາດຊະມົນຕີ ສາມາດຕັ້ງຂຶ້ນເປັນສານສູງສຸດໃນຖານພິເສດ ກໍ່ໄດ້. ສະພາລາດຊະມົນຕີນ້ີ ແມ່ນຖືກສ້າງຕັ້ງຂຶ້ນໃນຖານະ ເປັນ ຂົວຕໍ່ລະຫວ່າງເຈົ້າຊີວິດແລະສະພາແຫ່ງຊາດ ເຊ່ິງປະກອບ ດ້ວຍສະມາຊິກ 9 ຄົນ, 6 ຄົນແມ່ນຖືກແຕ່ງຕັ້ງໂດຍເຈົ້າຊີວິດ ແລະ 3 ຄົນແມ່ນ ສະເໜີໂດຍສະພາແຫ່ງຊາດ. ພາຍລຸນມາເຈົ້າຊີ ວິດ ໄດ້ເຫັນດີຮັບເອົາຂໍ້ສະເໜີຂອງສະພາແຫ່ງຊາດທ່ີສາມາດ ຄັດເລືອກສະມາຊິກລາດຊະມົນຕີ ເພ່ີມຈາກ 3 ຄົນເປັນ 6 ຄົນ ເທົ່າທຽມຈຳນວນທ່ີເຈົ້າຊີວິດແຕ່ງຕັ້ງເອງ.

ໝວດທ່ີ 6 ຂອງລັດຖະທຳມະນູນ (ມາດຕາ 39-42) ໄດ້ເວົ້າເຖິງ ການຈັດຕັ້ງລະບຽບການປົກຄອງ ແລະການຍຸດຕິ ທຳ ເຊ່ິງໃນນັ້ນໄດ້ກຳນົດເຖິງສິດ, ໜ້າທ່ີຂອງແຂວງ, ລະບຽບ ການແລະສິດອຳນາດຂອງສານ. ໝວດທ່ີ 7 ເຊ່ິງ ແມ່ນໝວດສຸດ ທ້າຍຂອງລັດຖະທຳມະນູນ (ມາດຕາ 43-44) ໄດ້ກ່າວເຖິງຫຼັກ

ການແກ້ໄຂປ່ຽນແປງລັດຖະທຳມະນູນ ໂດຍການໂຮມກັນ ລະ ຫວ່າງສະພາແຫ່ງຊາດ ແລະສະພາລາດຊະມົນຕີ ເປັນສະພາ ໜ່ວງຕາມການໝາຍຮຽກຂອງພະມະຫາກະສັດ ເພື່ອພິຈາລະນາ ກວດຮ່າງການປ່ຽນແປງ ຫຼື ການເພີ່ມເຕີມເຊິ່ງຈະໃຊ້ໄດ້ກໍ່ຕໍ່ເມື່ອ ມີສຽງສອງສ່ວນສາມຂອງສະພາໜ່ວງແຫ່ງຊາດ. ຫຼັກການດັ່ງ ກ່າວນັ້ນ ໄດ້ສະແດງໃຫ້ເຫັນເຖິງແນວຄິດຂອງເຈົ້ານາຍສັກດິນາ ທີ່ມີຄວາມຈົງຮັກພັກດີຕໍ່ ລະບອບພະມະຫາກະສັດ.

ເມື່ອສົມທຽບລະຫວ່າງລັດຖະທຳມະນູນປີ 1945 ແລະ ລັດຖະທຳມະນູນ ປີ 1947 ແລ້ວ ຈະເຫັນໄດ້ ຄວາມແຕກຕ່າງ ທີ່ ມີຄວາມໝາຍສຳຄັນນັ້ນກໍ່ຄືວ່າ ລັດຖະທຳມະນູນປີ 1947 ແມ່ນ ບໍ່ໄດ້ບັນຍັດສິດແລະໜ້າທີ່ ຂອງພົນລະເມືອງລາວ ໄວ້ໃນມາດ ຕາສະເພາະ. ລັດຖະທຳມະນູນປີ 1947 ທີ່ຮ່າງຂຶ້ນໂດຍການເຂົ້າ ຮ່ວມຂອງຂ້າລາດຊະການລາວ, ທີ່ປຶກສາແລະຊ່ຽວຊານຝລັ່ງ ນັ້ນແມ່ນມີຈຸດປະສົງສະເພາະ ເພື່ອດູດດຶງເອົາປະຊາຊົນລາວ ໃຫ້ ຮ່ວມມືກັບລັດຖະບານ ຫຼື ຝັງຄວາມອຳນາດການປົກຄອງຂອງ ຝລັ່ງ. ເວົ້າລວມແລ້ວລັດຖະທຳມະນູນປີ 1945 ແມ່ນມີຄວາມ ກ້າວໜ້າກ່ວາລັດຖະທຳມະນູນປີ 1947. ເຖິງວ່າຈະມີຂໍ້ບົກຜ່ອງ ບາງຢ່າງເຊັ່ນ ການກຳນົດອຳນາດຂອງເຈົ້າຊີວິດໄວ້ໃນລະດັບ ອັນແນ່ນອນ ແຕ່ລັດຖະທຳມະນູນສະບັບດັ່ງກ່າວ ແມ່ນໄດ້ສະ ແດງອອກເຖິງຜົນປະໂຫຍດ ຂອງປະຊາຊົນລາວທົ່ວທັງປະເທດ ດັ່ງທີ່ໄດ້ບັນຍັດສິດແລະໜ້າທີ່ຂອງພົນລະ ເມືອງລາວໄວ້ໃນໝວດ ນຶ່ງສະເພາະ. ສິ່ງສຳຄັນໃນນັ້ນກໍ່ຄືວ່າ ລັດຖະທຳມະນູນ 1945

ແມ່ນໄດ້ປະກາດ ຄວາມເປັນເອກະລາດຂອງລາວອອກຈາກຝລັ່ງເຊິ່ງ ແຕກຕ່າງກັບລັດຖະທຳມະນູນ 1947 ທີ່ໄດ້ປະກາດວ່າ ປະເທດລາວແມ່ນເຂົ້າຢູ່ ໃນສະຫະພາບຝລັ່ງເສດ.

ການປະກາດໃຊ້ລັດຖະທຳມະນູນປີ 1947 ພາຍຫຼັງທີ່ຝລັ່ງໄດ້ກັບຄືນມາປົກຄອງປະເທດລາວອີກເທື່ອໃໝ່ນັ້ນ ໄດ້ເຮັດໃຫ້ມີການປ່ຽນແປງຢູ່ໃນຊີວິດການເມືອງຂອງລາວ. ເປັນຄັ້ງທຳອິດ ທີ່ຢູ່ລາວໄດ້ເກີດມີບັນດາພັກການເມືອງ ຢ່າງເປີດເຜີຍ ເຊັ່ນ: ພັກປະຊາທິປະໄຕ, ພັກລາວຮ່ວມລາວ, ພັກເສລີ. ບັນດາອົງການຈັດຕັ້ງ ການເມືອງດັ່ງກ່າວທີ່ໄດ້ຮັບການສ້າງຕັ້ງຂຶ້ນນັ້ນແມ່ນ ບໍ່ມີໂຄງການການເມືອງລະອຽດ, ເພາະວ່ານັກການເມືອງດັ່ງກ່າວໄດ້ເຕົ້າໂຮມພຽງແຕ່ຜູ້ຕາງໜ້າຂອງນາຍທຶນແຫ່ງຊາດ ແລະ ນາຍທຶນນ້ອຍ, ຂ້າລາດຊະການ, ປັນຍາຊົນ, ທະຫານ, ພໍ່ຄ້າ ແລະອື່ນໆ. ສ່ວນບັນດາຜູ້ຕາງໜ້າຂອງ ຊົນຊັ້ນກຳມະກອນ ແລະຊາວນາແມ່ນບໍ່ໄດ້ ຖືກເອົາເຂົ້າເປັນສະມາຊິກ.

ດ້ວຍການຟື້ນຟູອຳນາດການປົກຄອງ ລ່າເມືອງຂຶ້ນຂອງຕົນຢູ່ລາວ, ຝລັ່ງໄດ້ວາງໜ້າທີ່ຕົ້ນຕໍ່ກ່ອນອື່ນໝົດ ເພື່ອຈະລົບລ້າງຂະບວນການລາວອິດສະຫຼະ ແລະປາບປາມຂະບວນການປົດປ່ອຍຊາດ ເຊິ່ງໃນເວລານັ້ນຍັງສືບຕໍ່ການຕໍ່ສູ້ ແບບກອງໝອນຢູ່ຕາມຂົງເຂດຕ່າງໆ. ດ້ວຍເຫດນີ້ ປະຫານາທິບໍດີຝລັ່ງ ຈຶ່ງໄດ້

ເຊີນ ເຈົ້າຊີວິດສີສະຫວ່າງວົງ ໄປເຊັນສົນທິສັນຍາຝລັ່ງເສດ-ລາວ ຢູ່ທີ່ປາຣີ ໃນວັນທີ 19 ກໍລະກົດ 1949. ນອກນັ້ນຍັງ ໄດ້ມີການເຊັນສັນຍາອື່ນໆ ໃນການມອບ ອຳນາດຂອງຝລັ່ງໃຫ້ ເຈົ້າໜ້າທີ່ລາວ. ສົນທິສັນຍາຝລັ່ງ-ລາວ ສະບັບດັ່ງກ່າວ ໄດ້ຮັບ ຮູ້ຄວາມເປັນເອກະລາດຂອງລາວໃນດ້ານຮູບການ. ແຕ່ຝລັ່ງຍັງ ຮັກສາສິດຕັດສົນບັນຫາ ທີ່ກ່ຽວກັບດິນແດນຂອງ ປະເທດລາວ ລວມທັງສິດ ໃນການຈັດວາງກຳລັງປະກອບອາວຸດຂອງ ຝລັ່ງ ແລະ ສ້າງຕັ້ງຖານທັບທາງທະຫານ ກໍ່ຄືການປ້ອງກັນຊາຍແດນ ຂອງລາວ. ພ້ອມນັ້ນ ລາດຊະອານາຈັກລາວແມ່ນໄດ້ຮັບ ສິດສົ່ງ ບັນດາຜູ້ຕາງໜ້າຂອງ ຕົນເຂົ້າຮ່ວມສະພາຂອງ ສະຫະພາບຝລັ່ງ ເສດ.

ສົນທິສັນຍາ ຝລັ່ງ-ລາວ ທີ່ໄດ້ຮັບການເຊັນກັນຢູ່ປາຣີນັ້ນ ໄດ້ສົ່ງຜົນສະທ້ອນກະທົບ ເຂົ້າໃສ່ຂະບວນການ ລາວອິດສະຫຼະ ທີ່ໜີໄປຢູ່ປະເທດໄທ, ເຮັດໃຫ້ຂະບວນການນີ້ຖືກຜັນແຍກ. ໃນ ນັ້ນຂັ້ນນຳຂອງຂະບວນ ການລາວອິດສະຫຼະ ຈຳນວນນຶ່ງ ລວມ ທັງພະຍາຄຳມ້າວ ວິໄລ, ນາຍົກລັດຖະມົນຕີ ລັດຖະບານລາວ ອິດສະຫຼະໄດ້ຕົກລົງໃຈກັບຄືນລາດຊະອານາຈັກລາວ ແລະ ຮ່ວມ ມືກັບຝລັ່ງ ຍ້ອນຄິດວ່າສົນທິນສັນຍາ 1949 ນັ້ນໄດ້ຮັບຮູ້ຄວາມ ເປັນເອກະລາດຂອງລາວຢ່າງສົມບູນແລ້ວ. ອຳນາດການປົກ ຄອງຝລັ່ງໄດ້ໃຫ້ການຮັບປະກັນຕໍ່ຄວາມປອດໄພ ທັງບໍ່ເອົາໂທດ ເອົາໂພຍ, ເກືອບທຸກຄົນທີ່ກັບຄືນໃນເວລານັ້ນແມ່ນໄດ້ຮັບຕຳ ແໜ່ງສູງໃນກົງຈັກຂອງລັດຖະບານລາດຊະອານາຈັກ. ສ່ວນສະ

ເດັດເຈົ້າສຸພານຸວົງ ແລະຜູ້ນຳລາວອິດສະຫຼະອີກຈຳນວນນຶ່ງເຊິ່ງ ເຫັນກ້ວາງມວງໄກໄດ້ເຂົ້າໃຈວ່າ ການປະກາດຂອງຝລັ່ງໃຫ້ ເອກະລາດແກ່ລາວໃນເວລານັ້ນແມ່ນຈອມປອມ ເພາະ ຝລັ່ງຍັງມີ ສິດຫຼາຍດ້ານຢູ່ລາວ. ດັ່ງນັ້ນຈຶ່ງເຫັນວ່າເອກະລາດດັ່ງກ່າວນັ້ນ ແມ່ນ ເປັນພຽງການຫຼອກລວງເພື່ອແນໃສ່ເຮັດໃຫ້ຂະບວນການຕໍ່ ສູ້ຂອງ ປວງຊົນລາວສະຫຼາຍຕົວລົງ. ດ້ວຍເຫດນີ້ບັນດາຜູ້ນຳ ລາວອິດສະຫຼະທີ່ຮັກຊາດດັ່ງກ່າວ ຈຶ່ງໄດ້ຕັດສິນໃຈອອກຈາກ ປະເທດໄທ ກັບໄປສົມທົບຮ່ວມກັບ ບັນດາຜູ້ນຳຂະບວນການປະ ຕິວັດຜູ້ອື່ນໆ ທີ່ໄດ້ສືບຕໍ່ນຳພາປະຊາຊົນສ້າງຕັ້ງກຳລັງຕໍ່ຕ້ານ ຢູ່ ໃນປ່າ ເພື່ອພາລະກິດອັນເປັນທຳ, ເພື່ອອິດສະລະພາບອັນແທ້ຈິງ ແລະ ເອກະລາດຢ່າງສົມບູນ.

5. <u>ການເຕີບໃຫຍ່ຂອງຂະບວນການຕໍ່ສູ້ປົດປ່ອຍຊາດ ຂອງປະຊາຊົນລາວ</u> .

ນະໂຍບາຍຂອງ ອຳນາດການປົກຄອງຝລັ່ງ ໄດ້ສາມາດ ເຮັດໃຫ້ ຜູ້ນຳລາວອິດສະຫຼະຈຳນວນນຶ່ງ ປະລະແນວຄິດທີ່ກ້າວ ໜ້າ, ໄດ້ຜັນແຍກແລະລຶບລ້າງຂະບວນການລາວອິດສະຫຼະ ແຕ່ ວ່າບໍ່ສາມາດລຶບລ້າງຂະບວນການຕໍ່ສູ້ປົດປ່ອຍຊາດ ຂອງປະຊາ ຊົນລາວ. ຢູ່ຕາມເຂດແຂວງຕ່າງໆໄດ້ມີການປັບປຸງຟື້ນຖານ ການຕໍ່ສູ້ ແບບກວ້ວງຂວາງ. ກ່ອນໜ້ານັ້ນ, ໃນວັນທີ 20 ມັງກອນ 1949, ທ່ານໄກສອນ ພົມວິຫານ ໄດ້ສ້າງຕັ້ງກອງທັບ ປົດປ່ອຍ

ປະຊາຊົນລາວ ຈາກພື້ນຖານຂອງ ກອງໜອນຢູ່ຕາແສງຊຽງຮຸ່ງ ເມືອງຊຽງຄໍ້ ແຂວງຫົວພັນ. ກອງທະຫານດັ່ງກ່າວທີ່ຊື່ ວ່າກອງ ລາດຊະວົງ ໄດ້ມີຈຳນວນຄົນພຽງແຕ່ 25 ຄົນໃນເບື້ອງຕົ້ນນັ້ນ ໄດ້ເຕີບໃຫຍ່ຂຶ້ນ ເປັນກອງທັບປົດປ່ອຍປະຊາຊົນລາວໃນເວລາ ຕໍ່ມາ.

ພາຍຫຼັງທີ່ສະເດັດເຈົ້າສຸພານຸວົງ ແລະຜູ້ນຳຄົນອື່ນໆ ໄດ້ ໄປເຖິງຖານທີ່ໝັ້ນຂອງການປະຕິວັດຢູ່ທີ່ຊຳເໜືອ, ຂະບວນການ ຕໍ່ສູ້ກູ້ຊາດຂອງປະຊາຊົນລາວຍິ່ງໄດ້ເພີ່ມກຳລັງແຮງອັນໃໝ່.

ຈາກນັ້ນ ທ່ານໄກສອນ ພົມວິຫານ, ສະເດັດເຈົ້າ ສຸພານຸວົງ, ທ່ານໝູຮັກ ພູມສະຫວັນ, ທ່ານພູມີ ວົງວິຈິດ, ທ່ານສີທົນ ກົມມະດຳ, ທ່ານ ໄຟດ່າງ ລໍບະເລັຍຢາວ ແລະ ອີກຫຼາຍທ່ານ ໄດ້ປຶກສາຫາລືກັນ ແລ້ວໄດ້ຈັດຕັ້ງ ຮຽກໂຮມ ໃຫ້ມີ ກອງປະຊຸມໃຫຍ່ຂອງ ກຳລັງປົດປ່ອຍຊາດ ຂຶ້ນ ໃນ ວັນທີ 13 ສິງຫາ ປີ 1950. ກອງປະຊຸມໃຫຍ່ດັ່ງກ່າວ ໄດ້ມີການເຂົ້າຮ່ວມຂອງຜູ້ແທນ 150 ຄົນ ເຊິ່ງຕາງໜ້າໃຫ້ແກ່ທຸກ ຊັ້ນຄົນ ແລະ ບັນດາເຜົ່າຈາກເຂດ ແຂວງຕ່າງໆຂອງລາວ. ກອງປະຊຸມໃຫຍ່ຄັ້ງທຳອິດນັ້ນ ໄດ້ຕົກລົງສ້າງຕັ້ງແນວໂຮມປົດ ປ່ອຍຊາດທີ່ໃສ່ຊື່ວ່າ "ແນວລາວອິດ ສະຫຼະ" ແລະ ພ້ອມກັນນັ້ນ ກໍ່ໄດ້ເລືອກຕັ້ງເອົາ ສະເດັດ ເຈົ້າສຸພານຸວົງ ເປັນປະທານ, ທ່ານ ໄກສອນ ພົມວິຫານ, ທ່ານໝູຮັກ ພູມສະຫວັນ ເປັນຮອງ ປະທານ, ທ່ານພູມີ ວົງວິຈິດ ເປັນຮອງປະທານ ທັງເປັນ ເລຂາທິການໃຫຍ່. ກອງປະຊຸມໃຫຍ່ຍັງໄດ້ຮັບຮອງ ເອົາໂຄງ

ການ ການເມືອງຂອງແນວລາວອິດສະຫຼະທີ່ໄດ້ມີແນວ ທາງເຕົ້າ ໂຮມປະຊາຊົນໃນການຕໍ່ສູ້ເພື່ອບັນລຸໃຫ້ໄດ້ເອກະລາດ ອັນແທ້ຈິງ, ລົບລ້າງຮ່ອງຮອຍຂອງສັກດິນາ, ຂັບໄລ່ພວກລ່າ ເມືອງຂຶ້ນ ອອກຈາກປະເທດ, ພັດທະນາເສດຖະກິດແຫ່ງຊາດ ແລະ ເສີມ ຂະຫຍາຍສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ. ໃນໂອກາດດຽວກັນນັ້ນ ກອງປະຊຸມໃຫຍ່ຍັງໄດ້ປະກາດ ສ້າງຕັ້ງ ລັດຖະບານລາວຕໍ່ຕ້ານອັນ ປະກອບມີສະເດັດເຈົ້າສຸພານຸວົງ ເປັນ ນາຍົກລັດຖະມົນຕີ, ທ່ານໄກສອນ ພົມວິຫານ ເປັນລັດຖະມົນ ຕີກະຊວງປ້ອງກັນປະເທດ. ໃນເວລານັ້ນ ທ່ານໄກສອນ ພົມວິ ຫານ ແມ່ນເປັນຜູ້ນຳຂອງພັກ ແຕ່ຫາກບໍ່ໄດ້ເປີດເຜີຍຖານະຕໍ່ ພາຍນອກເທື່ອ. ການສ້າງຕັ້ງແນວລາວອິດສະຫຼະ ແລະ ລັດຖະ ບານລາວຕໍ່ຕ້ານ ໄດ້ກາຍເປັນຂີດໝາຍອັນສຳຄັນ ໃນການເພີ່ມ ທະວີການຕໍ່ສູ້ປົດປ່ອຍຊາດ ເພື່ອອິດສະລະພາບ ແລະ ເອກະລາດ ແຫ່ງຊາດ ເຊິ່ງພັກໄດ້ຊີ້ນຳ ນຳພາຕະຫຼອດທຸກໄລຍະ. ໃນການ ຟື້ນຟູອຳນາດການປົກຄອງຂອງຕົນໃນອິນດູຈີນ, ພວກລ່າເມືອງ ຂຶ້ນໄດ້ປະປ່ອຍໃຫ້ນາຍທຶນແຫ່ງຊາດຂະຫຍາຍຕົວ ແລະ ພ້ອມ ກັນຂູດຮີດປະຊາຊົນທົ່ວສາມປະເທດໃນອິນດູຈີນ. ດ້ວຍເຫດນີ້ ປະຊາຊົນລາວ, ຫວຽດນາມ ແລະ ກຳປູເຈຍ ເຊິ່ງມີສັດຕູໂຕ ດຽວກັນ ຈຶ່ງເຫັນຄວາມຈຳເປັນໃນການເຕົ້າໂຮມກັນເຂົ້າເປັນ ແນວໂຮມເອກະພາບ ບົນພື້ນຖານຄວາມສະເໝີພາບ, ຊ່ວຍເຫຼືອ ແລະນັບຖືອະທິປະໄຕຂອງກັນແລະກັນ. ຍ້ອນເຫັນກຳລັງແຮງ ຂອງປະຊາຊົນ 3 ຊາດທີ່ໄດ້ສາມັກຄີກັນຕໍ່ສູ້ຢ່າງບໍ່ລົດລະ, ດັ່ງ

ນັ້ນອຳນາດການປົກຄອງລ່າເມືອງຂຶ້ນຢູ່ລາວ ແລະ ເຈົ້າໜ້າທີ່ ຂອງລັດຖະບານລາດຊະອານາຈັກ ໄດ້ເພີ່ມທະວີການປາບປາມ ແລະ ກົດຂີ່ຂົ່ມເຫັງປະຊາຊົນທີ່ໃຫ້ການສະໜັບສະໜູນແນວລາວ ອິດສະຫຼະ. ໃນຂະນະດຽວກັນ, ລັດຖະບານລາດຊະອານາຈັກໄດ້ ຮັບຮອງເອົາກົດໝາຍສະບັບລົງວັນທີ 21 ເມສາ 1951 ຫ້າມບໍ່ໃຫ້ຂ້າລາດຊະການກົງຈັກການປົກຄອງທຸກຄົນ, ທະຫານ ແລະ ສາລະວັດທະຫານເຂົ້າເປັນສະມາຊິກຂອງພັກການເມືອງ. ໃນປີດຽວກັນນັ້ນ ກໍ່ໄດ້ມີການຮັບຮອງເອົາກົດໝາຍເລືອກຕັ້ງສະ ບັບໃໝ່ດ້ວຍການຈັດວາງຖານະການເງິນໃຫ້ສູງຂຶ້ນ ສຳລັບຜູ້ທີ່ ສະໝັກເປັນຜູ້ແທນລາດຊະດອນ. ຕາມກົດໝາຍດັ່ງກ່າວ ແມ່ຍິງ ແມ່ນບໍ່ມີສິດເລືອກຕັ້ງ. ເນື່ອງຈາກວ່າ ກົດໝາຍສະບັບນີ້ ແມ່ນໄດ້ ຖືກກະກຽມຮ່າງຂຶ້ນ ໂດຍການເຂົ້າຮ່ວມຂອງ ຊຸຣວຊານຝລັ່ງ ສະນັ້ນ ຈຶ່ງສະແດງອອກເຖິງການຈຳກັດຄວາມອາດສາມາດ ຂອງພົນລະເມືອງທົ່ວປະເທດເຂົ້າຮ່ວມ ໃນການເຄື່ອນໄຫວຂອງ ສັງຄົມ. ສະນັ້ນບົນພື້ນຖານຂອງກົດໝາຍເລືອກຕັ້ງໃໝ່ນີ້ໄດ້ມີພົນ ລະເມືອງລາວພຽງແຕ່ 10% ເທົ່ານັ້ນໄດ້ເຂົ້າຮ່ວມໃນການ ປ່ອນ ບັດຄັດເລືອກເອົາຜູ້ແທນລາດຊະດອນ. ກົນອຸບາຍຂອງ ພວກລ່າ ເມືອງຂຶ້ນດັ່ງກ່າວນັ້ນ ບໍ່ສາມາດຈະເຮັດໃຫ້ກຳລັງປະຊາຊົນທີ່ ຮັກຊາດອ່ອນເພຍ, ແຕ່ກົງກັນຂ້າມ ຂະ ບວນການຕໍ່ຕ້ານ ໄດ້ສືບ ຕໍ່ເພີ່ມທະວີຂຶ້ນ ຢ່າງບໍ່ຢຸດຢັ້ງ. ຍິ່ງກ່ວານັ້ນ ກອງທັບປົດປ່ອຍປະ

ຊາຊົນລາວ ທີ່ໄດ້ຮັບການ ສ້າງຕັ້ງຂຶ້ນມາ ແມ່ນໄດ້ດຳເນີນການ ຕໍ່ສູ້ຢ່າງມີໄຊ ໃນການຕ້ານການຈອງທະຫານຂອງຝລັ່ງ ແລະໄດ້ຮັບ ຜົນສຳເລັດໃນການປົດປ່ອຍດິນແດນລາວເທື່ອລະກ້າວ.

ດ້ວຍຄວາມພະຍາຍາມ ຮັກສາອຳນາດຂອງຕົນຢູ່ລາວ ແລະສະກັດກັ້ນ ການເຕີບໃຫຍ່ຂະຫຍາຍຕົວ ຂອງຂະບວນການ ຕໍ່ຕ້ານ, ອົງການປົກຄອງຝລັ່ງ ໄດ້ວາງກົນອຸບາຍໃໝ່ອອກດ້ວຍ ການເຊັນສົນທິສັນຍາ ມິດຕະພາບ ແລະ ສຳພັນທະພາບລະຫວ່າງ ຝລັ່ງ-ລາວ ໃນເດືອນຕຸລາ 1953. ສົນທິສັນຍາສະບັບນີ້ ໄດ້ຮັບຮູ ລາດຊະອານາຈັກລາວວ່າ ເປັນລັດເອກະລາດແລະອະທິປະໄຕ ຢ່າງສົມບູນ. ໃນຕົວຈິງ, ສົນທິນສັນຍາດັ່ງກ່າວໃນດ້ານ ເນື້ອແທ້ ແລ້ວ ແມ່ນບໍ່ມີຫຍັງແຕກຕ່າງກັນກັບສົນທິສັນຍາຝລັ່ງ-ລາວ ປີ 1949.

ເມື່ອງຈາກວ່າ, ຂະບວນການປົດປ່ອຍຊາດຢູ່ລາວໄດ້ ເຕີບໃຫຍ່ຂຶ້ນ, ສະນັ້ນໃນທ້າຍປີ 1953 ແລະຕົ້ນປີ 1954, ກອງ ທັບປົດປ່ອຍປະຊາຊົນລາວ ກໍ່ໄດ້ດຳເນີນການສູ້ລົບ ຢ່າງໜັກ ຕ້ານກອງທັບຂອງຝລັ່ງ. ໃນໄລຍະ ດຽວກັນນັ້ນ, ຢູ່ ຫວຽດນາມ, ການຕໍ່ສູ້ຂອງ ປະຊາຊົນຫວຽດນາມ ເພື່ອຄວາມເປັນອິດສະລະ ພາບ ແລະເອກະລາດແຫ່ງຊາດກໍ່ຂະຫຍາຍຕົວອອກຢ່າງ ກ້ວາງ ຂວາງ ໂດຍສະເພາະໄຊຊະນະອັນຍິ່ງໃຫຍ່ຂອງກອງທັບ ແລະ ປະຊາຊົນຫວຽດນາມ ຕໍ່ກອງທັບຝລັ່ງ ຢູ່ບັ້ນລົບດຽນບຽນຟູນັ້ນ ໄດ້ໝາຍເຖິງການປະລາໄຊຂອງອົງການປົກຄອງຂອງຝລັ່ງ ຢູ່

ອິນດູຈີນຢ່າງສິ້ນເຊີງ. ດ້ວຍເຫດນີ້ເອງ ປະເທດຝລັ່ງຈຶ່ງຈຳ ຕ້ອງ ໄດ້ເຊັນສັນຍາຢູ່ເຊີແນວ ກ່ຽວກັບອິນດູຈີນໃນວັນທີ 21 ກໍລະກົດ 1954. ສັນຍາເຊີແນວ ສະບັບນີ້ ໄດ້ຮັບຮູ້ເອກະລາດ, ອະທິປະ ໄຕແລະຜືນແຜ່ນດິນອັນຄົບຖ້ວນຂອງທັງ 3 ປະເທດຄື ລາວ, ຫວຽດນາມ ແລະກຳປູເຈຍ. ພ້ອມດຽວກັນນັ້ນ, ສັນຍາເຊີແນວ ຍັງໄດ້ກຳນົດອອກວິທີການແກ້ໄຂບັນຫາທາງການເມືອງຢູ່ລາວ.

ກ່ອນໜ້າການເຊັນສັນຍາເຊີແນວ 1954, ໃນຕົວຈິງ ຢູ່ ລາວໄດ້ມີສອງລັດຖະບານຄື ລັດຖະບານລາດຊະອານາຈັກ ແລະ ລັດຖະບານລາວຕໍ່ຕ້ານທີ່ໃນເວລານັ້ນ ໄດ້ຄວບຄຸມດິນແດນ ຂອງປະເທດສ່ວນນຶ່ງ. ແຕ່ປະເທດຝລັ່ງ ແລະ ລາດຊະອານາ ຈັກລາວ ແມ່ນບໍ່ເຫັນດີແລະຮັບຮູ້ວ່າມີລັດຖະບານລາວຕໍ່ຕ້ານ, ທັງຢາກເອີ້ນວ່າຝ່າຍກະບົດ. ໃນທີ່ສຸດຜ່ານການຕໍ່ສູ້ກັນເທິງໂຕະ ເຈລະຈາ, ກອງປະຊຸມສາກົນ ຢູ່ເຊີແນວຈຶ່ງໄດ້ຕົກລົງ ໃຫ້ຮັບເອົາ ການໃສ່ຊື່ວ່າຝ່າຍປະເທດລາວ. ຕາມສົນທິສັນຍາເຊີແນວ 1954, ກຳລັງປະກອບອາວຸດຂອງ ລັດຖະບານລາວຕໍ່ຕ້ານທີ່ເຄື່ອນໄຫວ ຢູ່ຕາມແຂວງຕ່າງໆ ໄດ້ຖືກໃຫ້ຈັດໄປເຕົ້າໂຮມກັນຢູ່ ສອງແຂວງ ພາກເໜືອຄືຜົ້ງສາລີ ແລະ ຊຳເໜືອ ໃນໄລຍະລໍຖ້າການແກ້ ໄຂ ບັນຫາທາງການເມືອງ. ລັດຖະບານລາດຊະອານາຈັກ ບໍ່ພຽງ ແຕ່ຈະຕ້ອງຢຸດເຊົາການດຳເນີນປາບປາມ ກຳລັງຂອງຝ່າຍປະ ເທດລາວ ຫາກຍັງຕ້ອງເຈລະຈາກັບຝ່າຍປະເທດລາວ ເພື່ອຈຸດ ປະສົງຈັດການເລືອກຕັ້ງຢ່າງມີປະຊາທິປະໄຕຢູ່ລາວ ໃນໄລຍະປີ

1955 ດ້ວຍ ການເຂົ້າຮ່ວມຂອງພົນລະເມືອງລາວທົ່ວໄປ ລວມ ທັງກຳລັງຂອງປະເທດ ລາວ.


ສັນຍາເຊີແນວປີ 1954 ນັ້ນແມ່ນໝາກຜົນແຫ່ງການຕໍ່ສູ້ ອັນຍືດເຍື້ອຍາວນານຂອງປະຊາຊົນທັງ 3 ປະເທດລາວ, ຫວຽດ ນາມ ແລະກຳປູເຈຍ, ເຊິ່ງໄດ້ເປັນການຮັບຮູ້ທາງສາກົນຕໍ່ຄວາມ ເປັນເອກະລາດຂອງ ແຕ່ລະປະເທດໃນອິນດູຈີນ. ພ້ອມດຽວກັນ ນັ້ນ, ສັນຍາເຊີແນວປີ 1954 ກໍ່ໄດ້ໝາຍເຖິງການປະລາໄຊ ຢ່າງສິ້ນເຊີງຂອງພວກລ່າເມືອງຂຶ້ນແບບເກົ່າຢູ່ໃນອິນດູຈີນ.

6. <u>ການຂະຫຍາຍຕົວຂອງລັດຖະທຳມະນູນ ແລະ ການ ກຳເນີດເກີດຂຶ້ນຂອງບັນດາພັກການເມືອງ</u> .

ກ່ອນໜ້າປີ 1954, ລັດຖະທຳມະນູນ ລາດຊະອານາຈັກ ລາວປີ 1947 ໄດ້ຮັບການດັດແປງໃນວັນທີ 14 ກັນຍາ 1949 ແລະວັນທີ 22 ມີນາ 1952. ການດັດແປງລັດຖະທຳມະນູນໃນ ໄລຍະດັ່ງກ່າວນັ້ນ ແມ່ນກ່ຽວກັບການ ປະກາດຄວາມເປັນ ເອກະລາດຂອງລາວ ໃນຖານະເປັນ ສະມາຊິກສະຫະພາບຝລັ່ງ ເສດ. ໃນລັດຖະທຳມະນູນປີ 1952 ກໍ່ຢ້ຳເຖິງຄວາມເປັນເອກະ ລາດຂອງລາວ ເຊິ່ງກໍ່ ເໝືອນກັນກັບເທື່ອກ່ອນ ຄືລັດລາວຍັງ ສືບຕໍ່ເປັນສະມາຊິກສະຫະພາບຝລັ່ງເສດ ເພາະບໍ່ໄດ້ຮັບຖານະ ທາງການເມືອງແຫ່ງຄວາມເປັນລັດເອກະລາດ. ສະຫະພາບ

ຝລັ່ງເສດ ເຊິ່ງປະກອບມີປະເທດຝລັ່ງແລະບັນດາອະດີດຫົວ
ເມືອງຂຶ້ນຕ່າງໆແມ່ນ ອີງໃສ່ພື້ນຖານລັດຖະທຳມະນູນ ຂອງ
ຝລັ່ງປີ 1946 ເຊິ່ງໃນນັ້ນໄດ້ກຳນົດເຖິງ ນະໂຍບາຍຕ່າງປະເທດ
ຂອງອາດີດ ຫົວເມືອງຂຶ້ນຝລັ່ງກໍ່ຄືບັນຫາທີ່ກ່ຽວຂ້ອງ ກັບການ
ປ້ອງກັນດິນແດນຂອງປະເທດທີ່ຢູ່ໃນສະຫະພາບ. ນອກຈາກນັ້ນ
ລັດຖະທຳມະນູນ 1952 ແມ່ນໄດ້ມີການປ່ຽນແປງພຽງເລັກ ນ້ອຍ
ເຊັ່ນວ່າໃນມາດຕາ 25 ໄດ້ມີການ ເວົ້າເຖິງກຳນົດປະຊຸມ
ຂອງສະພາແຫ່ງຊາດ.

ພາຍຫຼັງການເຊັນສັນຍາເຊີແນວ 1954, ຊີວິດການ
ເມືອງຢູ່ລາວໄດ້ມີການປ່ຽນແປງດ້ານພື້ນຖານ. ການດັດແປງ
ລັດຖະທຳມະນູນກໍ່ໄດ້ມີຂຶ້ນອີກໃນວັນທີ 29 ກັນຍາ 1956. ການ
ດັດແປງແລະແກ້ໄຂລັດຖະທຳມະນູນນັ້ນ ແມ່ນໄດ້ແນໃສ່ຖອດ
ເອົາເນື້ອໃນໃຈຄວາມຂອງການຂຶ້ນກັບຝລັ່ງນັ້ນອອກ ໂດຍເນັ້ນ
ເຖິງການເປັນອະທິປະໄຕຂອງລາວ. ຄຽງຄູ່ກັນນັ້ນຍັງໄດ້ມີ
ການເພີ່ມເຕີມ ແລະ ລະບຸວ່າພາສາລາວເປັນພາສາທາງການ
(ມາດຕາ-6). ໃນນັ້ນໄດ້ມີການຕໍ່ອາຍຸການຂອງສະພາແຫ່ງຊາດ
ຈາກ 4 ປີເປັນ 5 ປີ (ມາດຕາ-25). ໃນການດັດແປງລັດ
ຖະທຳມະນູນກໍ່ໄດ້ມີຂຶ້ນອີກໃນເດືອນສິງຫາ ປີ 1957 ພາຍຫຼັງ
ຜົນສຳເລັດຂອງການເຈລະຈາ ທາງການເມືອງລະຫວ່າງກຳລັງ
ຂອງຝ່າຍປະເທດລາວ ແລະ ລັດຖະບານລາດຊະອານາຈັກ ເຊັ່ນ
ວ່າໃນມາດຕາ 5 ໄດ້ມີການປະກາດ ອອກວ່າ " ຜູ້ມີສິດເລືອກ



ກອງ ທະຫານ ລາວອິດສະຫລະ ຂັ້ນເຕົ້າໂຮມ 2 ແຂວງ ປີ 1954

ຕ້ອງຕາມຂອບເຂດຂອງກົດໝາຍນັ້ນ ຄືບັນດາຊົນຊາວລາວ ຜົ້ນ ກະສຽນອາຍຸຫົ້ງຊາຍແລະຍິງທີ່ຍັງມີສິດພົນລະເມືອງແລະ ໜ້າ ທີ່ການເມືອງ". ເມື່ອກ່ອນສິດເລືອກຕັ້ງແມ່ນມີແຕ່ພົນລະເມືອງ ເພດຊາຍເທົ່ານັ້ນໄດ້ຊົມໃຊ້. ການເພີ່ມເຕີມຕໍ່ມາດຕາ 8-10 ນັ້ນ ໄດ້ເວົ້າເຖິງລະບຽບການແຕ່ງຕັ້ງລາດຊະທາຍາດ ຄືລາດຊະບັນ ລັງ ແມ່ນສືບທອດໂດຍ ອົງມົງກຸດ ຫຼື ພະບໍລົມມະລາຊະວົງຝ່າຍ ຊາຍຂອງເຈົ້າສີສະຫວ່າງວົງ ຕາມລຳດັບຖານະ ແລະ ຕາມກົດ ມົນທຽນບານທີ່ກ່າວໄວ້ສະເພາະ. ໃນກໍລະນີທີ່ບໍ່ມີລາດຊະທາ ຍາດ ຫຼືວ່າໃນເມື່ອວ່າ ພະມະຫາກະສັດບໍ່ສາມາດບໍລິຫານງານ ໄດ້ ເນື່ອງຈາກບໍ່ຖືກຕ້ອງຕາມກົດໝາຍຫຼື ເນື່ອງຈາກມີສຸຂະພາບ ບໍ່ສົມບູນ ຜູ້ສຳເລັດລາດຊະການແທນ ຈະຕ້ອງແມ່ນພະບໍລົມ ລາດຊະວົງອົງໃດ-ນຶ່ງ ເຊິ່ງສະພາລາດຊະມົນຕີເປັນຜູ້ເລືອກຕັ້ງ ໂດຍຄວາມເຫັນດີເຫັນຊອບຂອງສະພາແຫ່ງຊາດ. ນອກຈາກ ນັ້ນ ໃນລັດຖະທຳມະນູນ ຍັງໄດ້ມີການປ່ຽນແປງ ບາງຫຼັກການ ຈັດຕັ້ງລັດຖະບານ, ສະພາແຫ່ງຊາດ ແລະ ສະພາ ລາດຊະມົນຕີ ແຕ່ໃນດ້ານເນື້ອແທ້ແລ້ວກໍ່ບໍ່ໄດ້ປ່ຽນແປງຫຍັງຫຼາຍ. ໃນວັນທີ 30 ກໍລະກົດ 1961 ໄດ້ມີການດັດແກ້ໃນບາງມາດຕາຂອງລັດ ຖະທຳມະນູນຕື່ມ ເຊັ່ນ ວ່າໃນມາດຕາ 17 ແລະ 19 ແມ່ນໄດ້ເວົ້າ ເຖິງລະບຽບການປະຕິບັດອຳນາດ ຂອງເຈົ້າຊີວິດ ຜ່ານລັດຖະ ມົນຕີແລະລັດຖະບານ. ເປັນທີ່ສັງເກດເຫັນວ່າ ໃນໄລ ຍະການຂະ ຫຍາຍຕົວທາງການເມືອງດັ່ງກ່າວນັ້ນ ມັກມີວິກິດການ ຂອງລັດ ຖະບານເລື້ອຍໆ ດ້ວຍເຫດນີ້ ການລົງຍັດຕິບໍ່ໄວ້ວາງໃຈຕໍ່ລັດຖະ

ບານ ແມ່ນສາມາດ ຮັບຮອງເອົາໄດ້ດ້ວຍຄະແນນສຽງສ່ວນຫຼາຍ ຂອງຜູ້ແທນລາດຊະດອນທີ່ມີໜ້າ ເຂົ້າຮ່ວມປະຊຸມ ເຊິ່ງກ່ອນໜ້ານັ້ນ ຍັດຕິບໍ່ໄວ້ວາງໃຈ ຈະສາມາດຮັບຮອງເອົາໄດ້ກໍ່ຕໍ່ເມື່ອມີສຽງ 2/3 ຂອງບັນດາຜູ້ແທນທີ່ເຂົ້າຮ່ວມປະຊຸມ.

ໃນວັນທີ 1 ເມສາ 1965, ມາດຕາຂອງລັດຖະທຳມະນູນ ໄດ້ຮັບການດັດແປງແລະເພີ່ມເຕີມ, ຕົວຢ່າງຄືມາດຕາ 33 ໄດ້ເວົ້າເຖິງສິດອຳນາດຂອງເຈົ້າຊີວິດ ໃນການຍຸບສະພາຕາມ ການສະເໜີຄະນະລັດຖະມົນຕີ ດ້ວຍການເຫັນດີຂອງສະພາ ແຫ່ງຊາດ. ໃນນັ້ນຍັງໄດ້ເວົ້າວ່າ ໃນກໍລະນີເກີດມີສົງຄາມຫຼືໃນ ສະພາວະການພິເສດ ທີ່ບໍ່ອຳນວຍໃຫ້ແກ່ ການດຳເນີນການ ເລືອກຕັ້ງໃໝ່ ເມື່ອອາຍຸການຂອງ ອົງການອຳນາດນິຕິບັນຍັດ ສິ້ນສຸດລົງ, ເຈົ້າຊີວິດສາມາດຕັດສິນໃນການຍືດ ເວລາຕໍ່ສິດອຳ ນາດ ຂອງສະພາແຫ່ງຊາດແລະໃຊ້ມາດຕະການ ອັນຈຳເປັນ ເພື່ອຮັບປະກັນ ການດຳເນີນງານເຄື່ອນໄຫວຂອງ ສະພາກໍ່ຄືບັນ ດາຜູ້ແທນຫຼືວ່າ ພາຍຫຼັງການປຶກສາຫາລືກັບຄະນະລັດຖະມົນຕີ ແລະ ປະທານຂອງທັງສອງສະພາຄື ສະພາແຫ່ງຊາດແລະປະ ທານ ສະພາລາດຊະມົນຕີແລ້ວ ກໍ່ສາມາດບົ່ງຕົວເອົາຜູ້ແທນ ປະກອບເປັນສະພາແຫ່ງຊາດຊຸດໃໝ່ປ່ຽນແທນສະພາທີ່ອາຍຸການ ໄດ້ສິ້ນສຸດລົງ. ໃນກໍລະນີນີ້ຈະມີລະບຽບການໃນການບົ່ງຕົວເອົາ ຜູ້ແທນທີ່ຈະກຳໝົດອອກໃນ ພະລາຊະດຳລັດ ໂດຍການຮັບຮອງ ຂອງຄະນະລັດຖະມົນຕີ.

ການທີ່ລັດຖະບານລາດຊະອານາຈັກ ໄດ້ເພີ່ມເຕີມເນື້ອໃນຈິດໃຈດັ່ງກ່າວ ເຂົ້າໃສ່ລັດຖະທຳມະນູນ ໃນໄລຍະນັ້ນ ກໍ່ຍ້ອນວ່າໄດ້ມີການແຕກແຍກລະຫວ່າງ ກຳລັງການເມືອງ. ດັ່ງນັ້ນ ຈຶ່ງປະຕິບັດນະໂຍບາຍປະຕິການ ຕໍ່ກຳລັງຮັກຊາດ ແລະ ປະຊາທິປະໄຕ.

ຈາກສະພາບການທາງການເມືອງໃນເວລານັ້ນ, ຝ່າຍລັດຖະບານລາດຊະ ອານາຈັກ ໄດ້ຈັດການ ເລືອກຕັ້ງຕ່າງຫາກໃນປີ 1965, 1967 ແລະ 1972 ໃນ ເຂດຄວບຄຸມຂອງຕົນ ເພື່ອເລືອກເອົາຜູ້ແທນເຂົ້າໃນ ສະພາແຫ່ງຊາດ. ໃນການເລືອກຕັ້ງດັ່ງກ່າວ ບໍ່ໄດ້ມີການເຂົ້າຮ່ວມຂອງ ບັນດາຜູ້ຕາງໜ້າແນວລາວຮັກຊາດ. ການດັດແກ້ແລະເພີ່ມເຕີມໃສ່ລັດຖະທຳມະນູນ 1965 ນັ້ນໄດ້ມີຜົນບັງຄັບໃຊ້ສະເພາະຢູ່ເຂດຂອງຝ່າຍອຽງຈັນ ຈົນເຖິງໄລຍະການປອງດອງຊາດ. ນັບແຕ່ໄດ້ເລີ່ມມີການດັດແປງ ແລະ ເພີ່ມເຕີມລັດຖະທຳມະນູນຂອງ ລາດຊະອານາຈັກລາວໃນ ຊຸມປີ 1950 ເປັນຕົ້ນມາ, ລະບົບການເມືອງຢູ່ລາວກໍ່ໄດ້ມີການປ່ຽນແປງ ອັນພາໃຫ້ເກີດມີໜ້າຍອົງການຈັດຕັ້ງແລະພັກການເມືອງ.

- ວັນທີ 22 ມີນາ 1955, ໄດ້ມີການສ້າງຕັ້ງ "ພັກປະຊາຊົນລາວ" (ໃນກອງປະຊຸມໃຫຍ່ຂອງພັກ ເດືອນກຸມພາ1972 ພັກປະຊາຊົນລາວ ໄດ້ປ່ຽນຊື່ມາເປັນ ພັກປະຊາຊົນປະຕິວັດ

ລາວ). ພັກປະຊາຊົນປະຕິວັດລາວ ໄດ້ເປັນຜູ້ສືບທອດພາລະກິດ ອັນມີກຽດສະຫງ່າຂອງພັກກອມມູນິດອິນດູຈີນ, ເປັນພັກມາກ-ເລນິນ ທີ່ຕາງໜ້າໃຫ້ແກ່ຜົນປະໂຫຍດຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານຢູ່ລາວ. ນັບແຕ່ມີໄດ້ຮັບການສ້າງ ຕັ້ງມາຈົນເຖິງປີ 1975, ພັກປະຊາຊົນປະຕິວັດລາວໄດ້ເຄື່ອນ ໄຫວ ແລະ ນຳພາການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າຢ່າງ ປິດລັບ ເຊິ່ງການຊີ້ນຳນຳພານັ້ນແມ່ນປະຕິບັດຜ່ານສູນກາງແນວ ລາວຮັກຊາດ.

- ວັນທີ 6 ມັງກອນ 1956, "ແນວລາວຮັກຊາດ" ເຊິ່ງ ເປັນແນວໂຮມທີ່ກ້ວາງໃຫຍ່ ຕາງໜ້າໃຫ້ແກ່ຜົນປະໂຫຍດ ຂອງ ທຸກໆຊັ້ນຄົນ, ຊົນຊາດຊົນເຜົ່າ ແລະ ຊາວຜູ້ອອກແຮງງານທົ່ວ ປະເທດ ໄດ້ຮັບການສ້າງຕັ້ງຂຶ້ນ ບົນພື້ນຖານຂອງ "ແນວລາວ ອິດສະຫຼະ". ແນວລາວຮັກຊາດທີ່ໄດ້ປ່ຽນແທນໃຫ້ແກ່ແນວລາວ ອິດ ສະຫຼະ ໃນໄລຍະໃໝ່ໄດ້ວາງເປົ້າໝາຍຕໍ່ສູ້ຂອງຕົນ ເພື່ອສັນຕິ ພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ. ເລີ່ມແຕ່ປີ 1957 ເປັນຕົ້ນມາ, ພາຍຫຼັງການ ເຊັນສັນຍາວຽງຈັນ ແນວລາວຮັກຊາດໄດ້ເຄື່ອນໄຫວ ຢ່າງເປີດ ເຜີຍ ແລະຖືກຕ້ອງຕາມກົດໝາຍ ແລະກໍ່ມີສຳນັກງານຕາງໜ້າ ຂອງຕົນຢູ່ວຽງຈັນ. ໃນປີ 1958, ແນວລາວຮັກຊາດໄດ້ເຂົ້າຮ່ວມ ການເລືອກຕັ້ງເຂົ້າຮ່ວມ ໃນສະພາແຫ່ງຊາດຂອງ ລັດຖະບານ ລາດຊະອານາຈັກເປັນຄັ້ງທຳອິດ. ລັດຖະບານປະສົມທີ່ໄດ້ຮັບ ການສ້າງຕັ້ງຂຶ້ນໃນປີ 1957 ກໍ່ໄດ້ມີຕົວແທນຂັ້ນສູງຂອງ ແນວ

ລາວຮັກຊາດ. ແນວລາວຮັກຊາດໄດ້ຍຶດໝັ້ນແນວທາງອັນ ສະເໝີ ຕົ້ນສະເໝີປາຍຂອງຕົນ ນຳພາການຕໍ່ສູ້ຂອງ ປະຊາຊົນລາວ ບັນ ດາເຜົ່າ ຕ້ານການຮຸກຮານຂອງ ຕ່າງປະເທດ ເພື່ອຄວາມເປັນອິດ ສະລະພາບ, ເອກະລາດແລະຄວາມເປັນ ເອກະພາບແຫ່ງຊາດ.

- ພັກສັນຕິພາບ ຫຼື ຄະນະກຳມະການສັນຕິພາບ ແລະ ຄວາມເປັນກາງ ໄດ້ຖືກສ້າງຕັ້ງຂຶ້ນໃນເດືອນ ກໍລະກົດ 1956. ອົງການຈັດຕັ້ງນ ້ ໄດ້ຕາງໜ້າຜົນປະໂຫຍດໃຫ້ແກ່ນາຍທຶນນ້ອຍ, ນາຍທຶນປານກາງ ແລະປັນຍາຊົນ ເຊິ່ງເຕົ້າໂຮມ ກຳລັງຮັກຊາດ ຂອງປະເທດ ໃນການຕໍ່ສູ້ຕ້ານການຮຸກຮານຂອງ ຕ່າງປະເທດ ເພື່ອສັນຕິພາບ, ເອກະລາດ ແລະຄວາມເປັນກາງຂອງລາວ. ໃນ ຊຸມປີ 1960, ບັນດາຜູ້ນຳຂອງອົງການຈັດຕັ້ງດັ່ງກ່າວ ໄດ້ຮ່ວມ ສຳພັນກັບແນວລາວຮັກຊາດ ຢູ່ທີ່ເຂດປົດປ່ອຍ ເພື່ອພາລະກິດ ລວມຂອງຊາດ.

- ພັກລາວຮ່ວມສຳພັນ ໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນ ກໍລະກົດ 1958 ບົນພື້ນຖານການເຊື່ອມ ເຂົ້າກັນລະຫວ່າງພັກ ກ້າວໜ້າ ແລະ ພັກເສລີ. ພັກດັ່ງ ກ່າວໄດ້ຕາງໜ້າໃຫ້ແກ່ຜົນ ປະ ໂຫຍດຂອງເຈົ້ານາຍຊັ້ນສູງ, ນາຍທຶນແຫ່ງຊາດແລະ ພວກພໍ່ຄ້າ ໃຫຍ່. ພັກລາວຮ່ວມສຳພັນ ໄດ້ເຫັນດີຕໍ່ການພັດທະນາປະເທດ ແບບທຶນນິຍົມ ແລະໄດ້ວາງແນວທາງທີ່ນິຍົມອາເມລິກາ.



ຄະນະ ລັດຖະບານ ປະສົມ 2 ຝ່າຍ ປີ 1957

- ອົງການຈັດຕັ້ງການເມືອງຂວາຈັດ ທີ່ມີທ່າອ່ຽງນິຍົມອາເມລິກາ ນັ້ນຄື : ຄະນະກຳມະການປ້ອງກັນຜົນປະໂຫຍດຂອງຊາດ ເຊິ່ງໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ 1958. ເຂົ້າຮ່ວມໃນອົງການຈັດຕັ້ງດັ່ງກ່າວໄດ້ ມີບັນດາຜູ້ຕາງໜ້າຂອງ ນາຍທະຫານຊັ້ນສູງ ຂ້າລາດຊະການ ແລະ ປັນຍາຊົນ. ຄະນະກຳມະການນີ້ ໄດ້ດຳເນີນແນວທາງອ່ຽງທາງອາເມລິກາ ໃນການຕໍ່ສູ້ຕ້ານ ກຳລັງຮັກຊາດເພື່ອການ ພັດທະນາທີ່ນິຍົມ. ໃນປີ 1960, ພາຍຫຼັງ ຄະນະກຳມະການປ້ອງກັນຜົນປະໂຫຍດຂອງຊາດໄດ້ມີການສ້າງຕັ້ງ "ພັກປະຊາສັງຄົມ" ເຊິ່ງແມ່ນກຸ່ມລັດຖະສະພາຂອງຄະນະກຳມະການດັ່ງກ່າວ. ໃນໄລຍະຕໍ່ມາ ຄະນະກຳມະການປ້ອງກັນຜົນປະໂຫຍດ ຂອງຊາດໄດ້ສະຫຼາຍຕົວໄປ. ສ່ວນບັນດາສະມາຊິກເກົ່າຂອງຄະນະກຳມະການນີ້ ໄດ້ເຕົ້າໂຮມກັນເປັນ ກຸ່ມ ແລະຂຶ້ນກັບພັກການເມືອງໃຫຍ່ອື່ນໆ.

- "ພັກເປັນກາງ" ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1961, ໄດ້ເຕົ້າໂຮມ ບັນດາຜູ້ຕາງໜ້າຂອງ ນາຍທຶນແຫ່ງຊາດ, ປັນຍາຊົນ ແລະ ຂ້າລາດຊະການຊັ້ນຜູ້ນ້ອຍ ພ້ອມນັ້ນກໍ່ໄດ້ປະກາດ ນະໂຍບາຍເປັນກາງ, ສັນຕິພາບ ແລະຄວາມເປັນ ເອກະພາບ ແຫ່ງຊາດ. ພາຍຫຼັງປີ 1963, ພັກດັ່ງກ່າວໄດ້ຖືກແບ່ງອອກເປັນສອງກຸ່ມ. ກຸ່ມທີ່ນຶ່ງໄດ້ເຕົ້າໂຮມສະມາຊິກເກົ່າ ແລະ ເຄື່ອນໄຫວຢູ່ວຽງຈັນ. ສ່ວນກຸ່ມທີ່ສອງ ນັ້ນແມ່ນກຸ່ມໃຫຍ່ ທີ່ເຕົ້າໂຮມກັນພາຍໃຕ້ຊື່ໃໝ່ຄື " ຄະນະຮ່ວມສຳພັນກຳລັງເປັນກາງ ຮັກຊາດ "

ຊຶ່ງໄດ້ເຄື່ອນໄຫວຮ່ວມກັບແນວລາວ ຮັກຊາດຢູ່ເຂດປົດປ່ອຍ.


ນອກຈາກບັນດາພັກ ແລະ ອົງການຈັດຕັ້ງການເມືອງດັ່ງກ່າວມານັ້ນຍັງໄດ້ມີພັກອື່ນໆອີກ ເຊິ່ງເມື່ອຕັ້ງຂຶ້ນມາແລ້ວ ກໍ່ສູນຫາຍໄປ ຫຼື ບໍ່ກໍ່ປ່ຽນຊື່ໃໝ່. ເປັນທີ່ສັງເກດເຫັນໄດ້ວ່າ ຝ່າຍພັກ ແລະອົງການຈັດຕັ້ງການເມືອງໄດ້ກຳເນີດເກີດຂຶ້ນມາ ແລະ ເຄື່ອນໄຫວເປັນເວລາສັ້ນນັ້ນກໍ່ຍ້ອນວ່າ ບໍ່ມີຄວາມໝັ້ນຄົງອັນເນື່ອງມາຈາກສະຖານະການທາງການເມືອງ ແລະ ຜົນປະໂຫຍດສ່ວນຕົວຂອງນັກການເມືອງນັ້ນເອງ. ດັ່ງຕົວຢ່າງຄະນະກຳມະການປ້ອງກັນຜົນປະໂຫຍດຂອງຊາດ, ພັກປະຊາສັງຄົມ, ພັກເປັນກາງ ແລະອື່ນໆ.

ສາຍເຫດທາງປະຫວັດສາດຂອງ ການມີຝ່າຍພັກການເມືອງຢູ່ລາວໃນເວລານັ້ນມີຄື :

- ການປຸກລຸກທາງການເມືອງແລະສະຕິຊາດຂອງປະຊາຊົນລາວ ອັນເນື່ອງມາຈາກປັດໃຈ ແຫ່ງຄວາມພະຍາຍາມຕໍ່ສູ້ເພື່ອເອກະລາດແຫ່ງຊາດ.

- ທ່າອ່ຽງແຍກຕົວເປັນເອກຂອງບັນດາພັກ ແລະ ອົງການຈັດຕັ້ງການເມືອງ ເຊິ່ງເຫັນແກ່ຜົນປະໂຫຍດຂອງກຸ່ມຄົນໃນອົງການປົກຄອງ.

- ຍ້ອນວ່າຂ້າລາດຊະການກົງຈັກການປົກຄອງ ກໍ່ຄືປັນຍາຊົນ ເຊິ່ງສັ່ງກັດພັກແລະອົງການຈັດຕັ້ງການເມືອງນັ້ນ ແມ່ນຈະມີພວກທີ່ນິຍົມຊົມຊອບຝລັ່ງ ແລະ ພວກທີ່ນິຍົມຊົມຊອບອາເມລິກາ ເຊິ່ງໃນເວລານັ້ນ ຈະເຫັນໄດ້ວ່າທັ້ງສອງປະເທດນີ້ ລ້ວນແຕ່ໄດ້ພະຍາຍາມສ້າງອິດທິພົນທາງການເມືອງພໍໃຜພໍລາວ.



ກອງປະຊຸມ ເຈລະຈາ 3 ຝ່າຍ ທີ່ບ້ານ ນາໝອນ ວັງວຽງ 1961

III

ການຕໍ່ສູ້ຂອງປະຊາຊົນລາວ
ເພື່ອຄວາມເປັນເອກະພາບ ແຫ່ງຊາດ

1. <u>ການເຈລະຈາ ເພື່ອຄວາມປອງດອງຊາດ</u> .

ສັນຍາເຊີແນວປີ 1954 ໄດ້ໃຫ້ການຮັບຮອງທາງສາກົນ ຕໍ່ອະທິປະໄຕ, ຄວາມເປັນເອກະລາດແລະຜືນແຜ່ນດິນອັນຄົບ ຖ້ວນຂອງລາວຢ່າງເຕັມສ່ວນ ເຊິ່ງໃນເວລາດຽວກັນນັ້ນ ກໍ່ໝາຍ ເຖິງການສິ້ນສຸດຂອງລັດທິລ່າເມືອງຂຶ້ນແບບເກົ່າຢູ່ທັງ 3 ປະ ເທດໃນອິນດູຈີນ. ໃນທ້າຍປີ 1954 ບັນດາຜູ້ຕາງໜ້າຂອງຝ່າຍ ປະເທດລາວ ແລະລັດຖະບານລາດຊະອານາຈັກ ໄດ້ດຳເນີນການ ເຈລະຈາ ເພື່ອຄວາມ ປອງດອງກັນ, ໄດ້ສ້າງຕັ້ງ ອົງການປະສົມ ເພື່ອແກ້ໄຂບັນຫາຄວາມເປັນເອກະພາບຂອງປະເທດ ໃນນັ້ນ ໄດ້ປຶກສາຫາລືກ່ຽວກັບການ ຈັດຕັ້ງການເລືອກຕັ້ງທົ່ວໄປຢ່າງມີ ປະຊາທິປະໄຕ ເຊິ່ງຈະຕ້ອງໄດ້ມີການເຂົ້າຮ່ວມຂອງຝ່າຍປະ ເທດລາວ ແລະ ຜູ້ທີ່ເຄີຍຮ່ວມໃນຂະບວນການຕໍ່ຕ້ານໃນເມື່ອ ກ່ອນ. ໃນຕົວຈິງລັດຖະບານ ລາດຊະອານາຈັກ ໄດ້ລະເມີດ ຕໍ່ເນື້ອໃນໃຈຄວາມທີ່ລະບຸໄວ້ໃນສັນຍາເຊີແນວ ຄືຕ້ອງດຳເນີນ ການເລືອກຕັ້ງ ໂດຍໃຫ້ການເຄົາລົບ ຕໍ່ສິດຝຶ້ນຖານຂອງ ພົນລະ ເມືອງ, ແຕ່ແລ້ວລັດຖະບານລາດຊະອານາຈັກ ໄດ້ຕົກລົງຈັດ

ການ ເລືອກຕັ້ງຂຶ້ນບິນຟົ້ນ ຖານຂອງກົດໝາຍເລືອກຕັ້ງປີ 1951 ທີ່ໄດ້ຮ່າງຂຶ້ນໃນໄລຍະການປົກຄອງຂອງຝລັ່ງ ໂດຍບໍ່ໄດ້ແຈ້ງ ການເຕືອນ · ຄະນະນຳຂອງຝ່າຍປະເທດລາວ. ກົດໝາຍເລືອກ ຕັ້ງດັ່ງກ່າວ ໄດ້ກຳນົດເງື່ອນໄຂໜ້າຍອັນ ສຳລັບຜູ້ສະໝັກເປັນຜູ້ ແທນ. ວັນທີ 25 ເດືອນທັນວາ ປີ 1955, ລັດຖະບານລາດຊະ ອານາຈັກໄດ້ຈັດການ ເລືອກຕັ້ງຕ່າງຫາກ ໂດຍບໍ່ໄດ້ຮັບເອົາກຳ ລັງຂອງຝ່າຍປະເທດລາວ ແລະຜູ້ທີ່ເຄີຍເຄື່ອນໄຫວໃນຂະບວນ ການຕໍ່ຕ້ານເຂົ້າຮ່ວມໃນ ການເລືອກຕັ້ງ.

ລັດຖະບານລາດຊະອານາຈັກ ໄດ້ແກ່ຍາວການເຈລະຈາ ກັບຝ່າຍປະເທດລາວ ພ້ອມນັ້ນກໍ່ຫວງໃຫ້ ກຳລັງດັ່ງກ່າວຍອມ ຈຳນົນ ເຊິ່ງເປັນການລະເມີດຕໍ່ສັນ ຍາເຊີແນວ 1954. ໃນໄລຍະ ດັ່ງກ່າວນັ້ນ ໄດ້ເກີດມີວິກິດການຂອງລັດຖະບານເລື້ອຍໆ ຍ້ອນ ການຕໍ່ສູ້ຊິງດີຊິງເດັ່ນກັນຂອງໜ່າຍພັກການເມືອງ. ບັນດາພັກດັ່ງ ກ່າວນັ້ນ ໄດ້ພະຍາຍາມສ້າງອິດທິພົນ ເພື່ອການປະກອບລັດຖະ ບານຕາມແນວທາງການເມືອງຂອງຝ່າຍຕົນ. ໃນນັ້ນໄດ້ມີພັກ ສັນຕິພາບ ແລະ ເປັນກາງທີ່ໄດ້ວາງແຜນຂອງຕົນອອກເພື່ອ ແກ້ໄຂບັນຫາເຕົ້າໂຮມຂອງປະເທດຊາດ ໂດຍເຫັນດີເຫັນພ້ອມ ໃຫ້ມີການເຂົ້າຮ່ວມຂອງທຸກພັກຝ່າຍ ລວມທັງຝ່າຍປະເທດລາວ. ພ້ອມດຽວກັນນັ້ນ ຍັງມີກຳລັງຝ່າຍປະຕິການທີ່ບໍ່ຢາກໃຫ້ການ ຮັບຮູ້ຖານະຖືກກົດໝາຍຂອງຝ່າຍປະເທດລາວ ເພື່ອການເຈລະ ຈາຢ່າງສະເໝີພາບກັບລັດຖະບານລາດຊະອານາຈັກ. ດ້ວຍເຫດ

ນີ, ລັດຖະບານທີ່ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍບັນດາພັກການເມືອງດັ່ງກ່າວ ມີຫຼາຍເທື່ອແມ່ນບໍ່ໄດ້ຮັບການໄວ້ວາງໃຈຈາກສະພາຜູ້ແທນລາດຊະດອນ. ໃນໄລຍະແຕ່ປີ 1954 ເຖິງປີ 1960 ໄດ້ປະກອບມີ 9 ລັດຖະບານ ທີ່ສັບປ່ຽນກັນບໍລິຫານໃນເວລາອັນສັ້ນ ໂດຍບໍ່ນັບລັດຖະບານທີ່ບໍ່ໄດ້ຮັບຜ່ານຈາກການ ລົງຄະແນນສຽງຮອບທຳອິດ ຂອງສະພາຜູ້ແທນລາດຊະດອນ. ສ່ວນນາຍົກລັດຖະມົນຕີໃນໄລຍະດັ່ງກ່າວນັ້ນ ກໍ່ລ້ວນແຕ່ແມ່ນບຸກຄົນເກົ່າ ຄືເຈົ້າສຸວັນນະພູມາ, ກະຕ່າຍ ສະໂສລິດ ແລະຜຸຍ ຊະນະນິກອນ ເຊິ່ງເຈົ້າຊີວິດໄດ້ແຕ່ງຕັ້ງ ແລະ ສັບປ່ຽນໃນເມື່ອລັດຖະບານບໍ່ໄດ້ຮັບການໄວ້ວາງໃຈຈາກສະພາ. ສຳລັບລັດຖະມົນຕີນັ້ນ ສ່ວນຫຼາຍກໍ່ແມ່ນໜ້າເກົ່າຄືກັນ ເຊິ່ງພຽງແຕ່ຍົກຍ້າຍ ຈາກກະຊວງນີ້ໄປ ກຳກະຊວງນັ້ນ. ໃນຈຳນວນຜູ້ທີ່ໄດ້ເປັນນາຍົກລັດຖະມົນຕີຂອງລັດຖະບານລາດຊະອານາຈັກໃນເວລານັ້ນ, ເຈົ້າສຸວັນນະພູມາ ໄດ້ເປັນຜູ້ປະຕິບັດນະໂຍບາຍຕໍ່ກຳລັງຂອງຝ່າຍປະເທດລາວແບບອ່ອນໂຍນກ່ວາຜູ້ອື່ນ.

ໃນເດືອນກໍລະກົດ ປີ 1956, ເຈົ້າສຸພານຸວົງ, ຜູ້ຕາງໜ້າຂອງຝ່າຍປະເທດລາວ ແລະ ເຈົ້າສຸວັນນະພູມາ, ນາຍົກລັດຖະມົນຕີ ລາດຊະອານາຈັກລາວ ໄດ້ຟື້ນຟູການເຈລະຈາຄືນໃໝ່ ຫຼັງຈາກທີ່ໄດ້ຖືກໂຈະຊົ່ວຄາວ. ໃນເດືອນສິງຫາ ປີ 1956 ໄດ້ບັນລຸເຖິງການເຊັນຖະແຫຼງການຮ່ວມທີ່ເປັນພື້ນຖານໃຫ້ແກ່ ການເຈລະຈາ ເພື່ອແກ້ໄຂບັນຫາຄວາມເປັນເອກະລາດຂອງຊາດ, ໃນ

ນັ້ນໄດ້ເວົ້າເຖິງການຢຸດຕິທຸກການເຄື່ອນໄຫວ ທີ່ຈະນຳໄປສູ່ການ ສູ້ລົບຕີບຕີກັນ, ການມອບໃຫ້ລັດຖະບານລາດຊະອານາຈັກປັບ ປຸງອົງການຈັດຕັ້ງການປົກຄອງໃນສອງແຂວງຄື: ຜົ້ງສາລີ ແລະ ຊຳເໜືອ, ໃຫ້ໂອກາດແກ່ຝ່າຍປະເທດລາວໃນການເຂົ້າຮ່ວມກັບ ຝ່າຍ ລາດຊະອານາຈັກ. ອີງຕາມຖະແຫຼງການຮ່ວມດັ່ງກ່າວ, ທັງສອງຝ່າຍຈະ ຕ້ອງດຳເນີນນະໂຍບາຍຢ່າງມີປະ ຊາທິປະໄຕ, ຈະບໍ່ເຮັດໃຫ້ຝ່າຍໃດຝ່າຍໜຶ່ງ ໄດ້ຮັບຄວາມເສຍຫາຍ. ທັງຈະບໍ່ ແກ້ແຄ້ນຕໍ່ກັນແລະກັນ ພ້ອມນັ້ນກໍ່ດຳເນີນນະໂຍບາຍສັນຕິພາບ ແລະ ເປັນກາງ.

ບົນພື້ນຖານຖະແຫຼງການຮ່ວມສະບັບນັ້ນ, ສອງຝ່າຍໄດ້ ບັນລຸ ຂໍ້ຕົກລົງ ໃນການສ້າງຕັ້ງ ສອງຄະນະກຳມະການຮ່ວມຄື: ຄະນະກຳມາທິການຮ່ວມດ້ານການເມືອງ ແລະ ຄະນະກຳມາທິ ການຮ່ວມດ້ານການທະຫານ. ຕໍ່ມາໃນວັນທີ 31 ຕຸລາ 1956, ສອງຝ່າຍໄດ້ເຊັນອະນຸສັນຍາ ວ່າດ້ວຍການຢຸດຕິທຸກການເຄື່ອນ ໄຫວທາງທະຫານ ແລະ ສ້າງຕັ້ງອານຸກຳມະການເຄື່ອນທີ່ຢູ່ ແຂວງຜົ້ງສາລີ ແລະ ຊຳເໜືອ. ໃນວັນທີ 2 ພະຈິກ 1956 ທັງສອງຝ່າຍຍັງໄດ້ບັນລຸຂໍ້ຕົກລົງກ່ຽວກັບ ນະໂຍບາຍສັນຕິພາບ ແລະເປັນກາງຂອງລາວ. ຜ່ານການ ເຮັດວຽກແລະປຶກສາ ຫາລື ກັນ, ຄະນະກຳມາທິການຮ່ວມດ້ານການເມືອງໄດ້ຕົກລົງກັນເຊັນ ອະນຸສັນຍາ ວ່າດ້ວຍການຮັບປະກັນສິດທິພົນລະເມືອງຂອງຝ່າຍ ປະເທດລາວ ເຊິ່ງໄດ້ເນັ້ນວ່າ ແນວລາວຮັກຊາດ ແລະອົງ

ການຈັດຕັ້ງອື່ນໆ ທີ່ກ່ຽວພັນກັບແນວລາວຮັກຊາດ ແມ່ນມີສິດ ເຄື່ອນໄຫວໂດຍຖືກຕ້ອງຕາມກົດໝາຍ ຄືກັບພັກການເມືອງອື່ນໆ. ພ້ອມນັ້ນ ບັນດາຜູ້ນຳຂອງຝ່າຍປະເທດລາວ ຍັງໄດ້ຮັບການຢືນຢັນໃຫ້ເຂົ້າຮ່ວມເຮັດວຽກ ໃນອົງການປົກຄອງແລະອົງການ ຈັດຕັ້ງຕ່າງໆ ໃນຖານະຕຳແໜ່ງທີ່ເໝາະສົມ. ໃນວັນທີ 28 ທັນວາ 1956, ເຈົ້າສຸພານຸວົງ, ຜູ້ຕາງໜ້າຂອງຝ່າຍປະເທດລາວ ແລະ ເຈົ້າສຸວັນນະພູມາ, ນາຍົກລັດຖະມົນຕີ ລາດຊະອານາຈັກ ໄດ້ ສາມາດຕົກລົງກັນດ້ວຍການເຊັນອະນຸສັນຍາ ໃນການສ້າງຕັ້ງ ລັດຖະບານປະສົມ ໂດຍການເຂົ້າຮ່ວມ ຂອງຝ່າຍປະເທດລາວ ກ່ອນໜ້າການເລືອກຕັ້ງເພີ້ມ. ໃນນັ້ນໄດ້ມີ ການເນັ້ນວ່າຫຼັງຈາກ ການສ້າງຕັ້ງລັດຖະບານປະສົມສຳເລັດແລ້ວ ໃຫ້ຫັນປ່ຽນຝ່າຍ ປະເທດລາວເປັນພັກການເມືອງໃຫ້ສອດຄ່ອງກັບກົດໝາຍ ແລະ ມອບ ອຳນາດການປົກຄອງ ແລະການທະຫານຂອງສອງແຂວງ ໃຫ້ເຂົ້າຢູ່ໃນການບໍລິ ຫານ ຂອງລັດຖະບານລາດຊະອານາຈັກ.

ເພື່ອເຮັດໃຫ້ຂໍ້ຕົກລົງດັ່ງກ່າວໄດ້ຮັບການປະຕິບັດ, ສະ ພາແຫ່ງຊາດ ໄດ້ຮັບຮອງເອົາກົດໝາຍເລືອກຕັ້ງສະບັບໃໝ່ ທີ່ມີ ລັກສະນະປະຊາທິປະໄຕກວ່າເກົ່າ ເມື່ອວັນທີ 1 ມີນາ 1957, ໃນນັ້ນເປັນຄັ້ງທຳອິດທີ່ແມ່ຍິງລາວໄດ້ຮັບສິດ ໃຫ້ ເຂົ້າຮ່ວມ ການເລືອກຕັ້ງແລະໄດ້ຮັບການເລືອກຕັ້ງ. ພ້ອມກັນນັ້ນ ສະພາ ແຫ່ງຊາດ ຍັງໄດ້ຮັບຮອງເອົາກົດໝາຍວ່າດ້ວຍສິດປະຊາທິປະ

ໄຕຂອງປະຊາຊົນລາວໃນ ວັນທີ 1 ຕຸລາ 1957 ເຊິ່ງໃນກົດໝາຍນີ້ ໄດ້ມີການກຳນົດອອກ ເຖິງສິດປະຊາທິປະໄຕ ຂອງປະຊາຊົນລາວ. ຕໍ່ມາໃນວັນທີ 18 ຕຸລາ 1957, ສະພາແຫ່ງຊາດ ຍັງໄດ້ຮັບຜ່ານເອົາກົດໝາຍ ທີ່ຮັບປະກັນສິດທິຂອງ ພົນລະເມືອງ ລາວທຸກຄົນທີ່ໄດ້ເຄີຍເຂົ້າຮ່ວມຫຼືຮ່ວມມື ກັບຂະບວນການຕໍ່ຕ້ານ ຂອງຝ່າຍປະເທດລາວ.

ເຖິງວ່າຈະມີການກີດຂວາງຂອງອົດທີກຳລັງປະຕິການກໍ່ຕາມ, ການເຈລະຈາລະຫວ່າງກຳລັງຂອງຝ່າຍປະເທດລາວ ແລະ ລັດຖະບານລາດຊະອານາຈັກກໍ່ໄດ້ຮັບຜົນສຳເລັດເປັນ ຢ່າງດີ. ຈາກນັ້ນ ຈຶ່ງໄດ້ມີການສ້າງຕັ້ງລັດຖະບານປະສົມ ໂດຍມີການເຂົ້າຮ່ວມຂອງຜູ້ຕາງໜ້າຂອງແນວລາວຮັກຊາດ 2 ທ່ານ. ອີງຕາມການຕົກລົງກັນ, ສອງຝ່າຍໄດ້ກຳໜົດການເລືອກຕັ້ງ ເພີ່ມເອົາຜູ້ແທນລາດຊະດອນເຂົ້າໃນສະພາແຫ່ງຊາດ ໃນເດືອນ ພຶດສະພາ 1958.

ໃນວັນທີ 4 ພຶດສະພາ 1958, ທັງສອງຝ່າຍໄດ້ຮ່ວມກັນ ດຳເນີນການ ເລືອກຕັ້ງເພີ່ມ ເອົາຜູ້ແທນລາດຊະດອນ 21 ທ່ານ. ແນວລາວຮັກຊາດໄດ້ສິ່ງ ຜູ້ແທນຂອງຕົນລົງສະໝັກຈຳນວນນຶ່ງ ໂດຍການຮ່ວມສຳພັນ ກັບພັກສັນຕິພາບ ແລະເປັນກາງ. ຜ່ານ ການເລືອກຕັ້ງດັ່ງກ່າວ, ຕົວແທນຂອງແນວລາວຮັກຊາດ ໄດ້ຮັບ ການ ເລືອກຕັ້ງເປັນຜູ້ແທນລາດຊະດອນ 9 ທ່ານ ຈາກຈຳນວນ

10 ທ່ານ ທີ່ໄດ້ລົງສະໝັກ ສ່ວນ 1 ທ່ານທີ່ບໍ່ໄດ້ຮັບການເລືອກ ຕັ້ງນັ້ນ ກໍ່ຄືທ່ານໄກສອນ ພົມວິຫານ ທີ່ລົງສະໝັກຢູ່ແຂວງ ອັດ ຕະປື ເຊິ່ງຖືກປັດເຂ່ຍດ້ວຍການປ່ຽນຫີບບັດ ຕາມໜ່ວຍເລືອກ ຕັ້ງຕ່າງໆ ໂດຍກຸ່ມທະຫານຂອງຝ່າຍຂວາ. ສ່ວນຕົວແທນຂອງ ພັກສັນຕິພາບແມ່ນໄດ້ຮັບການເລືອກຕັ້ງ 4 ທ່ານ. ຜົນການເລືອກ ຕັ້ງນັ້ນໄດ້ຊີ້ ໃຫ້ເຫັນ ໄຊຊະນະອັນຍິ່ງໃຫຍ່ຂອງ ກຳລັງປະຊາທິ ປະໄຕ ເຖິງວ່າລັດຖະບານ ລາດຊະອານາຈັກໄດ້ຈຳແນກ ແລະ ກໍ່ກວນການເລືອກຕັ້ງກໍ່ຕາມ.

ການທີ່ ລັດຖະບານລາດຊະອານາຈັກ ໄດ້ບັນລຸຂໍ້ຕົກລົງ ຕ່າງໆກັບ ຝ່າຍປະເທດລາວ ຈົນເຖິງການສ້າງຕັ້ງລັດຖະບານ ປະສົມແລະຈັດການເລືອກຕັ້ງເພີ່ມນັ້ນ ກໍ່ເກີດມາຈາກເຈດຈຳນົງ ຂອງ ກຸ່ມປະຕິການ ຂອງ ລັດຖະບານ ທີ່ຫວັງດູດດຶງກຳລັງ ຂອງ ແນວລາວຮັກຊາດ ອອກຈາກພົ້ນຖານຂອງ ການປະຕິວັດ ເພື່ອມ້າງເພທຳລາຍ. ສ່ວນຝ່າຍແນວລາວຮັກຊາດນັ້ນໄດ້ຮູ້ດີກ່ຽວ ກັບກົນອຸບາຍດັ່ງກ່າວ ແລະໄດ້ຕັດສິນໃຈສວຍໃຊ້ສະຖານະການ ໃນຂະນະທີ່ ປະຊາຊົນ ຮຽກຮ້ອງເຖິງຄວາມມີ ເອກະພາບ ແຫ່ງ ຊາດ ເພື່ອດຳເນີນການຕໍ່ສູ້ທາງການເມືອງ ແລະເສີມຂະຫຍາຍ ຈິດໃຈຮັກຊາດຢູ່ທົ່ວປະເທດ ເຊິ່ງແມ່ນໄລຍະທີ່ສຳຄັນແຫ່ງການ ຕໍ່ສູ້ຂອງ ປະຊາຊົນລາວ ຜູ້ຮັກຊາດພາຍໃຕ້ການນຳພາຂອງ ພັກ ປະຊາຊົນລາວ, ແນວລາວຮັກຊາດ ແລະ ກຳລັງປະກອບອາວຸດ ແຫ່ງກອງທັບປົດປ່ອຍປະຊາຊົນລາວ.

2. ການແຊກແຊງຂອງ ສະຫະລັດອາເມລິກາ ເຂົ້າວຽກງານ ພາຍໃນຂອງລາວ .

ໃນໄລຍະຕົ້ນຂອງຊຸມປີ 1950, ອຳນາດການປົກຄອງ ຝລັ່ງໄດ້ປະເຊີນໜ້າກັບຄວາມຫຍຸ້ງຍາກໃນ ການຈະສືບຕໍ່ຄອບ ຄອງປະເທດລາວເໝືອນແຕ່ກ່ອນ. ດ້ານໜຶ່ງ, ສົງຄາມໂລກຄັ້ງທີ 2 ໄດ້ສົ່ງຜົນສະທ້ອນ ໂດຍກົງຢ່າງໜັກຕໍ່ປະເທດ ຝລັ່ງອັນໄດ້ພາ ໃຫ້ມີຄວາມອ່ອນເພຍ ແລະ ບໍ່ມີກຳລັງແຮງທີ່ຈະປະຕິບັດນະໂຍ ບາຍລ່າເມືອງຂຶ້ນແບບເກົ່າໄດ້. ດ້ານສອງກໍ່ຍ້ອນວ່າກຳລັງຕໍ່ສູ້ ກູ້ຊາດ ເພື່ອຄວາມເປັນເອກະລາດແຫ່ງຊາດ ອັນແທ້ຈິງນັ້ນ ໄດ້ ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ລົດລະ. ດ້ວຍເຫດນີ້, ໃນໄລຍະເຄິ່ງ ທຳອິດຂອງປີ 1950, ສະຫະລັດອາເມລິກາ ຈຶ່ງໄດ້ຖະແຫຼງອອກ ໂດຍການ ສະເໜີປະຕິບັດໂຄງການ ຊ່ວຍເຫຼືອທາງດ້ານເສດຖະ ກິດ ໃຫ້ແກ່ຫວຽດນາມ, ລາວ ແລະກຳປູເຈຍ. ໃນວັນທີ 23 ທັນ ວາ ປີ 1950 ລະຫວ່າງສະຫະລັດອາເມລິກາ, ຝລັ່ງ, ກຳປູເຈຍ, ລາວ ແລະ ຫວຽດນາມ ໄດ້ມີການ ຕົກລົງເຖິງການເຊັນສັນຍາ ວ່າດ້ວຍການຊ່ວຍເຫຼືອຊຶ່ງກັນ ແລະ ກັນໃນການປ້ອງກັນອິນດູ ຈີນ. ສັນຍາດັ່ງກ່າວໄດ້ເປັນການສ້າງເງື່ອນໄຂໃຫ້ສະຫະລັດ ອາ ເມລິກາ ມາມີບົດບາດຢູ່ອິນດູຈີນ ກໍ່ຄືຢູ່ລາວໂດຍສາມາດຄວບ ຄຸມການຊ່ວຍເຫຼືອທຸກຢ່າງໃຫ້ແກ່ 3 ປະເທດໃນອິນດູຈີນ. ພາຍ ຫຼັງເຊັນສັນຍາເຊີແນວ 1954 ກ່ຽວກັບ ອິນດູຈີນ, ສະຫະລັດ



ບັນດາ ນາຍ ທະຫານ ແລະ ທີ່ປຶກສາອາເມລິກາ ເລີ່ມເຂົ້າ
ແຊກແຊງລາວ

ອາເມລິກາ ຍິ່ງໄດ້ເພີ່ມທະວີການເຄື່ອນໄຫວແລະ ໃຊ້ອິດທິພົນ ຂອງຕົນຕໍ່ລັດຖະບານລາດຊະອານາຈັກ. ນອກຈາກປະເທດ ດັ່ງ ກ່າວແລ້ວ ກໍ່ຍັງມີປະເທດອື່ນໆໄດ້ ແຊກແຊງເຂົ້າວຽກງານ ພາຍ ໃນຂອງລາວ ເຊິ່ງແນໃສ່ມ້າງ ເພການເຈລະຈາລະຫວ່າງບັນດາ ຜູ້ຕາງໜ້າຂອງຝ່າຍປະເທດລາວ ແລະ ລັດຖະບານລາດຊະອາ ນາຈັກ ກ່ຽວກັບການແກ້ໄຂບັນຫາທາງການເມືອງຢູ່ລາວ ໃນປີ 1956-1957. ອິດທິກຳລັງປະຕິການໄດ້ໃຊ້ຫຼາຍວິທີການ ເພື່ອ ທຳລາຍກຳລັງປະກອບອາວຸດຂອງຝ່າຍປະເທດລາວ ເຊັ່ນວ່າໄດ້ ປິບຮັດທາງດ້ານເສດຖະກິດ, ນາບຂູ່ຈະໃຊ້ກຳລັງທະຫານ, ພ້ອມ ນັ້ນ ກໍ່ໄດ້ທ່ວງໃຫ້ຝ່າຍຂວາຈັດຫາທາງປັດເຂ່ຍ ຜູ້ ຕາງໜ້າແນວ ລາວຮັກຊາດອອກຈາກລັດຖະບານປະສົມ.

ໃນເດືອນກໍລະກົດ 1958, ຫຼັງຈາກ ທີ່ສະພາຜູ້ແທນລາດ ຊະດອນໄດ້ຮັບຮອງເອົາຜົນການເລືອກຕັ້ງເພີ່ມນັ້ນແລ້ວ, ລັດຖະ ບານປະສົມອັນມີເຈົ້າ ສຸວັນນະພູມາ ເປັນນາຍົກ ກໍ່ໄດ້ລາອອກ ເພື່ອຈະໃຫ້ມີການປະກອບລັດຖະບານໃໝ່ ອີງຕາມລັດຖະທຳ ມະນູນ.ຈາກສະພາບການ ດັ່ງກ່າວນັ້ນ ກຸ່ມປະຕິການ ຝ່າຍຂວາ ເຊິ່ງມີການໜູນຫຼັງຈາກ ຕ່າງປະເທດແມ່ນ ໄດ້ສະກັດກັ້ນ ບໍ່ໃຫ້ ເອົາບັນດາຜູ້ຕາງໜ້າຂອງ ແນວລາວຮັກຊາດເຂົ້າຮ່ວມ ລັດຖະ ບານໃໝ່ ອັນໄດ້ພາໃຫ້ມີການແກ່ຍາວວິກິດການທາງການ ເມືອງ. ໃນທີ່ສຸດ ກຸ່ມປະຕິການຈາກ ພັກລາວລອມລາວ ກໍ່ໄດ້ປະ ກອບລັດຖະບານ ໃນເດືອນ ສິງຫາ 1958 ໂດຍການສະໜັບສະ

ໝູນ ຂອງຕ່າງປະເທດ ແລະກໍ່ດຳເນີນນະໂຍບາຍປາບປາມກຳ ລັງຮັກຊາດ, ໄດ້ຈັບກຸມແລະ ຄາດຕະກຳພະນັກງານຂັ້ນສູງຂອງ ແນວລາວຮັກຊາດ. ການເຄື່ອນໄຫວຂອງລັດຖະບານປະຕິການ ໃນ ເວລານັ້ນແມ່ນເປັນການລະເມີດຕໍ່ລັດຖະທຳມະນູນແລະ ກົດ ໝາຍທີ່ໄດ້ປະກາດອອກໃນວັນທີ 18 ຕຸລາ 1957 ທີ່ໄດ້ຮັບປະກັນ ສິດທິທາງການເມືອງຂອງ ອະດີດພະນັກງານ ທີ່ໄດ້ເຂົ້າຮ່ວມໃນ ຂະບວນການຂອງຝ່າຍປະເທດລາວ. ໃນຂະນະດຽວກັນ, ສະຖາ ນະການພາຍໃນປະເທດ ໄດ້ຮຸດໂຊມລົງ ອັນເນື່ອງມາຈາກການ ລະເມີດສັນຍາເຊີແນວ ແລະສັນຍາວຽງຈັນ ໂດຍກຸ່ມຝ່າຍຂວາ. ໃນປີ 1959, ລັດຖະບານອ່ຽງຂວາໄດ້ດຳເນີນການຈັບ ແລະ ກັກຂັງ ສະເດັດເຈົ້າສຸພານຸວົງ ແລະ ຜູ້ນຳຄົນອື່ນໆ ຂອງແນວ ລາວຮັກຊາດ ດ້ວຍການໃສ່ຮ້າຍວ່າ ເປັນຜູ້ກະບົດແລະທໍລະຍົດ ຕໍ່ປະເທດຊາດ ພ້ອມນັ້ນກໍ່ໄດ້ອອກຄຳສັ່ງ ປິດລ້ອມສອງກອງພັນ ຂອງກຳລັງຝ່າຍປະເທດລາວ ທີ່ໄດ້ລໍຖ້າຊັບຊ້ອນເຂົ້າໃນ ກອງ ທັບລາດຊະອານາຈັກ ອີງຕາມສັນຍາເຊີແນວ ແລະ ສັນຍາວຽງ ຈັນ. ຕໍ່ໜ້າສະພາບການດັ່ງກ່າວ ກຳລັງຮັກຊາດລາວໄດ້ ຈຳ ຕ້ອງກຳອາວຸດຄືນ ແລະ ດຳເນີນການຕໍ່ສູ້ເພື່ອປ້ອງກັນສິດທິ ອັນຊອບທຳ ແລະຜົນປະໂຫຍດຂອງຕົນ ໂດຍໄດ້ ຮຽກຮ້ອງໃຫ້ ມີການປະຕິບັດຕາມສັນຍາເຊີແນວ ແລະ ສັນຍາວຽງຈັນ. ຈາກ ສະພາບການດັ່ງກ່າວ ຢູ່ລາວໄດ້ເກີດມີຂະບວນການ ທາງການ ເມືອງທີ່ຮັກຊາດ, ກ້າວໜ້າ ຕ້ານຢັນກັບກຳລັງຂອງຝ່າຍຂວາ ອັນໄດ້ເຮັດໃຫ້ພາຍໃນກຳລັງຝ່າຍ ຂວາຍາດຊິງອຳນາດກັນ ເຊິ່ງ

ໃນທີ່ສຸດ ກຸ່ມນຶ່ງຈາກ ຄະນະກຳມະການ ປ້ອງກັນຜົນປະໂຫຍດ ຂອງຊາດ ທີ່ມີການສະໜັບສະໜູນຂອງຕ່າງປະເທດ ໄດ້ເຂົ້າກຳ ອຳນາດ, ໄດ້ລົບລ້າງກົດໝາຍເລືອກຕັ້ງປີ 1957 ແລະໄດ້ສ້າງ ກົດໝາຍເລືອກຕັ້ງ ໃໝ່ເພື່ອດຳເນີນການເລືອກຕັ້ງເຂົ້າໃນ ສະພາ ຜູ້ແທນລາດຊະດອນທີ່ໝົດອາຍຸລົງ ໃນປີ 1960. ກົດໝາຍເລືອກ ຕັ້ງທີ່ໄດ້ຖືກຮັບຮອງເອົາໃໝ່ນັ້ນໄດ້ແນໃສ່ຕ້ານກຳ ລັງທີ່ກ້າວໜ້າ ໂດຍສະເພາະ ແນວລາວຮັກຊາດ. ອີງຕາມກົດໝາຍດັ່ງກ່າວ ການເລືອກຕັ້ງໄດ້ຖືກຈັດໃຫ້ເປັນສອງຮອບ. ສຳລັບຜູ້ສະໝັກຮັບ ເລືອກຕັ້ງນັ້ນໄດ້ມີການວາງເງື່ອນໄຂໃໝ່ຄື ໃຫ້ມີການສຶກສາໃນ ລະດັບອັນແນ່ນອນ, ມີການວາງເງິນມັດຈຳກ່ອນ. ບັນດາຜູ້ຕາງ ໜ້າຂອງແນວລາວຮັກຊາດ ບໍ່ໄດ້ເຂົ້າຮ່ວມ ໃນການເລືອກຕັ້ງດັ່ງ ກ່າວ. ການເລືອກຕັ້ງຄັ້ງນັ້ນ ໄດ້ສິ້ນສຸດລົງດ້ວຍໄຊຊະນະຂອງ ຄະນະກຳມະການປ້ອງກັນຜົນປະໂຫຍດຂອງຊາດ ຈາກຜົນການ ໂຄສະນາຫາສຽງ ໃນເງື່ອນໄຂຂົ່ມຂູ່ກຳລັງທີ່ກ້າວໜ້າ, ຊໍ້ສຽງ ແລະປ່ຽນຫີບບັດໃນບ່ອນທີ່ເຮັດໄດ້, ໃນນັ້ນ ຜູ້ແທນຂອງຄະນະ ກຳມະການດັ່ງກ່າວໄດ້ຮັບ 32 ບ່ອນນັ່ງຈາກຈຳນວນ ທັງໝົດ 59 ບ່ອນນັ່ງຂອງສະພາຜູ້ແທນລາດຊະດອນ. ຕໍ່ຈາກນັ້ນ ຄະນະ ກຳມະການປ້ອງກັນຜົນປະໂຫຍດຂອງຊາດ ໄດ້ປະກາດສ້າງ ຕັ້ງ ເປັນພັກປະຊາສັງຄົມ. ເນື່ອງຈາກວ່າໄດ້ຮັບບ່ອນນັ່ງເປັນຈຳ ນວນໜ້ອຍໃນສະພາ, ພັກປະຊາສັງຄົມ ຈຶ່ງໄດ້ເປັນຜູ້ປະກອບລັດ ຖະບານອັນມີ ເຈົ້າສົມສະນິດ ເປັນນາຍົກ. ລັດຖະບານໃໝ່ ທີ່ ໄດ້ຮັບການສ້າງຕັ້ງຂຶ້ນນັ້ນ ໄດ້ຮັບການສະໜັບສະໜູນ ແລະຊ່ວຍ

ເຫຼືອຈາກຕ່າງປະເທດ ແລະໄດ້ດຳເນີນນະໂຍບາຍ ຕ້ານປະ ຊາ ທິປະໄຕ ໂດຍປາບປາມປະຊາຊົນ ຜູ້ທີ່ມີແນວຄິດກ້າວໜ້າ ສະ ໜັບສະໜູນກຳລັງຮັກຊາດ. ໃນໄລຍະນັ້ນ ປະຊາຊົນ ໄດ້ມີຄວາມ ຕື່ນຕົວ ຍ້ອນເຫັນການແຊກແຊງຂອງຕ່າງປະເທດເຂົ້າວຽກ ງານຂອງລາວ ອັນໄດ້ພາໃຫ້ສະພາບການທາງດ້ານການເມືອງ ມີຄວາມສັບສົນ. ດ້ວຍເຫດນີ້, ເຈົ້າໜ້າທີ່ສາລະວັດທະຫານຈາກ ກອງກຳລັງຂອງຝ່າຍລັດຖະບານລາດຊະອານາຈັກ ທີ່ໄດ້ເຫັນ ອົກເຫັນໃຈ ແລະ ເຂົ້າໃຈຕໍ່ພາລະກິດການຕໍ່ສູ້ອັນເປັນທຳຂອງ ບັນດາຜູ້ນຳຂອງແນວລາວຮັກຊາດ ດັ່ງນັ້ນ ຈຶ່ງຮ່ວມມືກັບແນວ ລາວຮັກຊາດຈັດຕັ້ງຊ່ວຍເຫຼືອພາ ສະເດັດເຈົ້າສຸພານຸວົງ ແລະ ຜູ້ນຳແນວລາວຮັກຊາດອື່ນໆ ໂຕນໜີອອກຈາກຄຸກໂພນເຄັງ ໃນ ວັນທີ 23 ພຶດສະພາ 1960. ພາຍຫຼັງທີ່ບັນດາຜູ້ນຳ ແນວລາວຮັກ ຊາດໄດ້ໂຕນອອກຈາກຄຸກຢ່າງສຳເລັດຜົນແລ້ວ, ສູນກາງພັກ ປະຊາຊົນລາວໄດ້ວາງຍຸດໂທບາຍໃໝ່ອອກ ຄື ເພີ່ມທະວີການ ຕໍ່ ສູ້ທາງດ້ານການທະຫານ ໂດຍສົມທົບການຕໍ່ສູ້ທາງດ້ານການ ເມືອງ.

ໃນໄລຍະນັ້ນ, ຕ່າງປະເທດ ໂດຍສະເພາະ ສະຫະລັດອາ ເມລິກາ ໄດ້ສືບຕໍ່ເພີ່ມທະວີການຊ່ວຍເຫຼືອ ກຸ່ມປະຕິການກໍ່ຕີກອງ ທັບລາດຊະອານາຈັກ ເພື່ອຕິດ ຕາມແລະປາບປາມກຳລັງປະຕິ ວັດຂອງແນວລາວຮັກຊາດ ເນື່ອງຈາກວ່າບໍ່ຢາກໃຫ້ແນວລາວ ຮັກຊາດມີອິດທິພົນໃນໝູ່ມະຫາຊົນ.ໃນທີ່ແທ້ຈິງ, ອິດທິພົນຂອງ

ແນວລາວຮັກຊາດ ບໍ່ພຽງແຕ່ບໍ່ຫລຸດຜ່ອນລົງ ແຕ່ຫາກຍັງສືບຕໍ່ເຕີບໃຫຍ່ຂະຫຍາຍຕົວ ໃນບັນດາຊັ້ນຄົນ ລວມທັງພາຍໃນຖັນແຖວຂອງກອງທັບລາດຊະອານາຈັກ.

ວັນທີ 9 ສິງຫາ ປີ 1960, ລັດຖະບານລາດຊະອານາຈັກທີ່ຖືກອັ້ນຊູ ໂດຍຕ່າງປະເທດໄດ້ຖືກໂຄ່ນລົ້ມ ດ້ວຍການລັດຖະປະຫານຂອງກອງພັນທະຫານລາບທີ 2 ຂອງກອງທັບລາດຊະອານາຈັກ ເຊິ່ງຖືກປຸກລຸກນ້ຳໃຈຮັກຊາດ. ສາຍເຫດຕົ້ນຕໍທີ່ພາໃຫ້ມີການລັດຖະປະຫານນັ້ນ ກໍ່ຍ້ອນວ່າກອງທະຫານດັ່ງກ່າວ ບໍ່ພໍໃຈ ຕໍ່ການແຊກແຊງຂອງ ຕ່າງປະເທດ ເຂົ້າວຽກງານພາຍໃນຂອງລາວ ແລະ ເປື່ອໜ່າຍຕໍ່ການຮັບໃຊ້ກົນອຸບາຍຂອງ ຕ່າງປະເທດໃຫ້ໄປສູ້ລົບຕົບຕີແລະເຂັ່ນຂ້າປະຊາຊົນລາວດ້ວຍກັນ. ເນື່ອງຈາກວ່າ ກອງກຳລັງທີ່ເຮັດລັດຖະປະຫານນັ້ນ ບໍ່ມີແນວທາງການເມືອງສະເພາະ ດັ່ງນັ້ນຈຶ່ງໄດ້ໄປຮ້ອງຮຽນຕໍ່ສະເດັດ ເຈົ້າສຸວັນນະພູມາ ແລະ ກຸ່ມຜູ້ແທນຂອງຄະນະກຳມະການສັນຕິພາບ ແລະເປັນກາງ ເພື່ອປະກອບລັດຖະບານໃໝ່. ໃນຂະນະດຽວກັນນັ້ນ, ບັນດາຜູ້ຕາງໜ້າຂອງແນວລາວຮັກຊາດ ແລະ ລັດຖະບານ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃໝ່ນັ້ນ ໄດ້ຕິດຕໍ່ພົວພັນກັນ . ເພື່ອຊອກຊ່ອງທາງປ່ອງດອງຊາດດ້ວຍກັນ. ແຕ່ວ່າສະພາບການຢູ່ລາວໃນເວລານັ້ນໄດ້ມີຄວາມສັບສົນ, ລັດຖະບານ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຕາມການສະເໜີ ຂອງຄະນະລັດຖະປະຫານ ເຊິ່ງໄດ້ຮັບການຮັບຮອງໂດຍເຈົ້າ ຊີວິດນັ້ນ ໄດ້ດຳເນີນນະໂຍບາຍສັນ

ຕິພາບ ແລະ ເປັນກາງພ້ອມທັງໄດ້ປະກາດສ້າງຕັ້ງສາຍພົວພັນ ການທູດກັບທຸກໆປະເທດ ໂດຍບໍ່ຈຳແນກ ລະບອບການເມືອງ ລວມທັງສະຫະ ພາບໂຊວຽດ, ສ.ປ.ຈີນ ແລະ ບັນດາປະເທດສັງ ຄົມນິຍົມ. ນະໂຍບາຍດັ່ງກ່າວ ໄດ້ພາໃຫ້ສະຫະລັດອເມລິກາ ຖະ ແຫຼງຢຸດຕິການຊ່ວຍເຫຼືອໃຫ້ແກ່ລັດຖະບານທີ່ມີເຈົ້າສຸວັນນະພູມາ ເປັນນາຍົກລັດຖະມົນຕີ. ການຂັດແຍ້ງກັນທາງການເມືອງ ອັນ ເກີດມາຈາກການແຊກແຊງຂອງຕ່າງປະເທດນັ້ນ ໄດ້ເຮັດໃຫ້ສະ ມາຊິກລັດຖະບານ ແລະ ສະມາຊິກສະພາຜູ້ແທນລາດຊະດອນ ແຕກແຍກກັນ ເຊິ່ງສ່ວນໜຶ່ງ ໄດ້ໜີຈາກນະຄອນວຽງຈັນໄປສູ່ ແຂວງສະຫວັນນະເຂດ ແລະໄດ້ພາກັນປະກາດ ບໍ່ຮັບຮູ້ລັດຖະ ບານ ທີ່ນຳພາໂດຍເຈົ້າສຸວັນນະພູມາ. ສ່ວນເຈົ້າບຸນອູ້ມ ນະຈຳ ປາສັກ ເຊິ່ງເປັນຜູ້ກວດກາລາດຊະການແຜ່ນດິນຂອງລາດຊະ ອານາຈັກລາວ ໄດ້ຖືກຂົນຂວາຍຈາກກຳລັງຝ່າຍຂວາໃຫ້ໄປ ເປັນຜູ້ນຳຂອງກຸ່ມ ສະຫວັນນະເຂດ. ກຸ່ມສະຫວັນນະເຂດເຊິ່ງໄດ້ ຮັບການຊ່ວຍເຫຼືອຂອງຕ່າງປະເທດ ທີ່ລະເມີດກົດໝາຍສາກົນ, ອະທິປະໄຕ, ເອກະລາດ ແລະ ຜືນແຜ່ນດິນອັນຄົບຖ້ວນ ທີ່ໄດ້ ຖືກຮັບປະກັນ ໂດຍສັນຍາເຊີແນວປີ 1954 ນັ້ນ ໄດ້ຈັດຕັ້ງກຳລັງ ຕໍ່ຕ້ານລັດຖະບານທີ່ຖືກຕ້ອງຕາມກົດໝາຍ ອັນມີເຈົ້າສຸວັນນະພູ ມາ ເປັນນາຍົກ. ໃນທ້າຍປີ 1960, ສະຫະລັດອາເມລິກາ ໄດ້ນຳ ໃຊ້ອົງການ "ຊີອາໂຕ" ເຊິ່ງແມ່ນອົງການຈັດຕັ້ງພາຄີສົນທິ ສັນ ຍາອາຊີອາຄະເນ ເພື່ອສົ່ງກອງທະຫານຂອງໄທ, ຟີລິບປິນ ແລະ ຫວຽດນາມ ໃຕ້ເຂົ້າຮ່ວມການສູ້ລົບຕີຕ້ານກຳລັງຮ່ວມສຳພັນ

ລະຫວ່າງແນວລາວຮັກຊາດ ແລະ ລັດຖະບານທີ່ຖືກຕ້ອງຕາມ ກົດໝາຍຂອງເຈົ້າສຸວັນນະພູມາ. ການເຄື່ອນໄຫວທາງທະຫານ ຂອງອົງການ "ຊີອາໂຕ" ຕ້ານລາວໃນເວລານັ້ນ ໄດ້ເຮັດ ໃຫ້ທາງສຽງ ທີ່ກ້າວໜ້າ ແລະ ຮັກຫອມສັນຕິພາບໃນໂລກກ່າວ ປະນາມຢ່າງຮຸນແຮງ. ການສູ້ລົບຢ່າງໜັກຢູ່ວຽງຈັນ ໄດ້ຈຳໃຫ້ ກຳລັງປະກອບອາວຸດຂອງ ແນວລາວຮັກຊາດ ແລະ ລັດຖະບານ ຕ້ອງໄດ້ຖອນຕົວອອກຈາກນະຄອນຫຼວງວຽງຈັນ ເພື່ອຫຼີກເວັ້ນ ການນອງເລືອດແລະທຳລາຍຕົວເມືອງ. ຈາກເຫດການດັ່ງກ່າວ, ກຳລັງປະກອບອາວຸດຂອງແນວລາວຮັກຊາດ ແລະ ລັດຖະບານ ຂອງເຈົ້າສຸວັນນະພູມາ ໄດ້ປ່ຽນຍຸດທະວິທີສູ້ລົບດ້ວຍການໜັ້ນໄປ ປົດປ່ອຍເອົາທົ່ງໄຫຫີນ ເຊິ່ງແມ່ນຈຸດຍຸດທະສາດທີ່ສຳຄັນຢູ່ ແຂວງຊຽງຂວາງ ແລະ ຍຶດຖືເປັນທີ່ຕັ້ງສຳລັບລັດຖະບານ ທີ່ຖືກ ຕ້ອງຕາມກົດໝາຍ. ສ່ວນຢູ່ວຽງຈັນນັ້ນ, ຝ່າຍຂວາເຊິ່ງໄດ້ຍຶດ ເອົາວຽງຈັນຍ້ອນການຊ່ວຍເຫຼືອຂອງອົງການ ຊີອາໂຕ ແລ້ວ ໄດ້ ສ້າງຕັ້ງລັດຖະບານຂຶ້ນໃໝ່ ໂດຍເອົາເຈົ້າບຸນອູ້ມ ນະຈຳປາສັກ ເປັນນາຍົກ. ດັ່ງນັ້ນໃນປີ 1961, ຢູ່ລາວຈຶ່ງມີສອງລັດຖະບານ ລາດຊະອານາຈັກ ເພາະວ່າທັງເຈົ້າສຸວັນນະພູມາແລະ ເຈົ້າບຸນ ອູ້ມ ແມ່ນລ້ວນແລ້ວແຕ່ໄດ້ຖະແຫຼງອອກເຖິງຄວາມຈົງຮັກພັກດີ ແລະເຄົາລົບນັບຖືພະມະຫາກະສັດ. ແຕ່ວ່າ ລັດຖະບານທີ່ຕັ້ງຢູ່ ວຽງຈັນອັນມີ ເຈົ້າບຸນອູ້ມ ນະຈຳປາສັກ ເປັນນາຍົກນັ້ນ ໄດ້ຖືກ ຮັບຮອງເອົາໂດຍ ລາດຊະດຳລັດຂອງເຈົ້າຊີວິດໃນປີ 1961 ແລະໄດ້ຮັບການສະໜັບສະໜູນຈາກສະຫະລັດອາເມລິກາ. ເມື່ອງ

ຈາກວ່າ ກຳລັງການເມືອງຢູ່ພາຍໃນປະເທດບໍ່ໄດ້ຢຸດເຊົາໃນການ ສູ້ລົບຕົບຕີກັນ ຍ້ອນການແຊກແຊງຈາກພາຍນອກ, ດັ່ງນັ້ນ ຈຶ່ງ ໄດ້ມີບາງປະເທດທີ່ຮັກໃຄ່ສັນຕິພາບ ແລະ ຄວາມເປັນທຳ ທວງໃຫ້ມີການຮຽກໂຮມ ກອງປະຊຸມສາກົນ ເພື່ອ ແກ້ໄຂບັນຫາ ລາວ. ດ້ວຍເຫດນີ້, ກອງປະຊຸມສາກົນກ່ຽວກັບບັນຫາລາວໄດ້ໄຂ ຂຶ້ນຢູ່ ເຊີແນວໃນເດືອນ ພຶດສະພາ 1961 ໂດຍມີການເຂົ້າຮ່ວມ ຂອງ 14 ປະເທດ ທີ່ໃຫ້ຄວາມສົນໃຈໃນການແກ້ໄຂ ບັນຫາລາວ.

3. <u>ການປອງດອງລະຫວ່າງ 3 ເຈົ້າລາວ ແລະ ສົນຍາເຊີ ແນວ 1962 ກ່ຽວກັບລາວ</u> .

ສະພາບການຕົວຈິງຢູ່ລາວໃນປີ 1961 ແມ່ນມີສາມກຳ ລັງຕົ້ນຕໍທາງການເມືອງ ເຊິ່ງລ້ວນແລ້ວແຕ່ ມີກຳລັງປະກອບອາ ວຸດຂອງຕົນເອງ ຄື : ແນວລາວຮັກຊາດ, ກຳລັງເປັນກາງ (ລັດ ຖະບານນຳໂດຍ ເຈົ້າສຸວັນນະພູມາ), ກຳລັງຝ່າຍຂວາ (ລັດ ຖະບານນຳໂດຍ ເຈົ້າບຸນອູ້ມ). ສາມກຳລັງທາງການ ເມືອງ ດັ່ງກ່າວ ເຊິ່ງຕາງໜ້າໂດຍ ເຈົ້າສຸພານຸວົງ, ເຈົ້າສຸວັນນະພູມາ ແລະ ເຈົ້າບຸນອູ້ມ ໄດ້ດຳເນີນການພົບປະເຈລະຈາກັນ ເພື່ອແກ້ ໄຂບັນຫາຂອງປະເທດ ອີງຕາມຄຳຮຽກຮ້ອງຂອງປະຊາຊົນ ລາວກໍ່ຄືທາງສຽງຂອງສາກົນ. ຜ່ານການພົບປະເຈລະຈາຢູ່ຫີນ ເຫີບ, ນາມອນ ແລະ ທົ່ງໄຫຫີນ, ສາມເຈົ້າລາວໄດ້ບັນລຸຂໍ້ຕົກ ລົງຢຸດຍິງ, ສ້າງຕັ້ງລັດຖະບານປະສົມເພື່ອຄວາມປອງດອງຊາດ



ກອງ ປະຊຸມ ເຊີແນວ ກ່ຽວກັບ ລາວ ປີ 1962

ໂດຍໄດ້ຮ່ວມກັນລົງນາມໃນຖະແຫຼງການຮ່ວມໃນວັນທີ
ມີຖຸນາ 1961 ຢູ່ທີ່ເມືອງຊູຣິກ ປະເທດຊະວິດສ໌. ໃນຖະແຫຼງການ
ຮ່ວມວ່າດ້ວຍຄວາມປອງດອງຊາດ ແລະສ້າງຕັ້ງລັດຖະບານປະ
ສົມແຫ່ງຊາດນັ້ນໄດ້ມີການກຳນົດໄວ້ວ່າລາດຊະອານາຈັກ ລາວ
ໄດ້ຕັດສິນໃຈເດີນຕາມເສັ້ນທາງສັນຕິພາບ ແລະເປັນກາງໂດຍ
ສອດຄ່ອງກັບຜົນປະໂຫຍດ ແລະຄວາມມຸ້ງມາດປາຖະໜາຂອງ
ປະຊາຊົນລາວ ແລະສັນຍາເຊີແນວປີ 1954 ເພື່ອເຮັດໃຫ້ ປະເທດ
ລາວມີສັນຕິພາບ, ເປັນກາງ, ເອກະລາດ, ປະຊາທິປະໄຕ, ເອກະ
ພາບແລະວັດທະນາຖາວອນ. ສາມຝ່າຍໄດ້ຕົກລົງກັນປະຕິບັດສິດ
ປະຊາທິປະໄຕຂອງປະຊາຊົນໃຫ້ເປັນຈິງ, ລົບລ້າງທຸກກົດໝາຍທີ່
ມີລັກສະນະຕ້ານປະຊາທິປະໄຕ, ຟື້ນຟູກົດໝາຍຮັບປະກັນສິດປະ
ຊາທິປະໄຕຂອງພົນລະເມືອງແລະ ກົດ ໝາຍເລືອກ ຕັ້ງປີ 1957.
ສາມຝ່າຍຍັງໄດ້ເຫັນດີເຫັນພ້ອມໃນການດຳເນີນນະໂຍບາຍ ຕ່າງ
ປະເທດໃຫ້ສອດຄ່ອງກັບ 5 ຫຼັກ ການແຫ່ງການ ຢູ່ຮ່ວມກັນໂດຍ
ສັນຕິ.ຖະແຫຼງການຮ່ວມໄດ້ເວົ້າ ວ່າລາດຊະອາ ນາຈັກລາວຈະບໍ່
ເຂົ້າຮ່ວມທາງທະຫານ, ບໍ່ອະນຸຍາດໃຫ້ມີການແຊກແຊງ ຂອງ
ຕ່າງປະເທດເຂົ້າພາຍໃນລາວ. ພ້ອມກັນນັ້ນ ໃນຖະແຫຼງການຍັງ
ໄດ້ມີການກຳໜົດໜ້າທີ່ ຂອງລັດຖະບານປະສົມ ໃຫ້ຈັດການ
ເລືອກ ຕັ້ງທົ່ວທັງປະເທດ ເພື່ອປະຕິບັດການຖືກ ຕ້ອງປອງດອງ
ຊາດ. ໃນໄລຍະລໍຖ້າການປ່ຽນແປງ ອີງຕາມການຕົກລົງກັນ,
ບັນດາ ອົງການຈັດຕັ້ງທີ່ໄດ້ຮັບການ ສ້າງຕັ້ງຂຶ້ນ ໃນໄລຍະ
ທີ່ມີການຂັດແຍ້ງກັນ ນັ້ນຈະຖືກຮັກສາໄວ້ຊົ່ວຄາວ. ລັດຖະບານ

ປະສົມ ແມ່ນປະກອບດ້ວຍບັນດາຜູ້ ຕາງໜ້າຂອງທັງ 3 ຝ່າຍ ແລະມີລັກສະນະຊົ່ວຄາວ. ສະນັ້ນ ລັດຖະບານປະສົມຊົ່ວຄາວ ຈຶ່ງໄດ້ຮັບການສ້າງຕັ້ງໃນລັກສະນະ ພິເສດ. ເຈົ້າຊີວິດ ເປັນຜູ້ ແຕ່ງຕັ້ງ ຄະນະລັດຖະມົນຕີ ເຊິ່ງບໍ່ຈຳ ເປັນຕ້ອງເອົາຜ່ານ ສະພາຜູ້ແທນລາດຊະດອນ ເພື່ອການຮັບຮອງ ໄວ້ວາງໃຈ. ຖະແຫຼງການຮ່ວມທີ່ໄດ້ຮັບການເຊັນກັນລະຫວ່າງ 3 ເຈົ້າລາວ ນັ້ນໄດ້ມີຄວາມໝາຍສຳຄັນຢ່າງໃຫຍ່ຫຼວງສຳລັບການ ແກ້ໄຂ ບັນຫາພາຍໃນປະເທດ. ຕໍ່ຈາກນັ້ນເຖິງວັນທີ 12 ປີ 1962, 3 ເຈົ້າລາວໄດ້ບັນລຸເຖິງການເຊັນ ສັນຍາຢູ່ທີ່ທົ່ງໄຫຫີນ ເພື່ອສ້າງ ຕັ້ງລັດຖະບານປະສົມ ຊົ່ວຄາວ. ສັນຍາດັ່ງກ່າວ ໄດ້ຮັບການ ເຊັນກັນກ່ຍ້ອນວ່າ ພາຍຫຼັງທີ່ກຳລັງຝ່າຍຂວາ ໄດ້ຖືກປະ ລາໄຊ ຈາກ . ບັ້ນຮ໊ບຢູ່ແຂວງຫຼວງນ້ຳທາ. ສັນຍາດັ່ງກ່າວໄດ້ກຳນົດ ອອກເຖິງການແບ່ງປັນຕຳແໜ່ງໃນລັດຖະບານປະສົມ. ໃນນັ້ນ ກຳລັງເປັນກາງແມ່ນໄດ້ 8 ຕຳແໜ່ງລັດຖະມົນຕີ ລວມທັງ ນາຍົກລັດຖະມົນຕີ ແລະລັດຖະມົນຕີຊ່ວຍວ່າການ 3 ຕຳແໜ່ງ, ພ້ອມນັ້ນຍັງລວມເຖິງ 3 ຕຳແໜ່ງລັດຖະມົນຕີ ແລະ 1 ຕຳແໜ່ງ ລັດຖະມົນຕີຊ່ວຍວ່າການ ເຊິ່ງຂັດເລືອກເອົາຈາກບຸກຄົນທີ່ມີ ທ່າອ່ຽງເປັນກາງຢູ່ວຽງຈັນ. ຝ່າຍ ແນວລາວຮັກຊາດແມ່ນໄດ້ 2 ຕຳແໜ່ງ ລັດຖະມົນຕີ ລວມທັງຕຳແໜ່ງ ຮອງນາຍົກລັດຖະມົນຕີ ແລະ 2 ຕຳແໜ່ງລັດຖະມົນຕີຊ່ວຍວ່າການ. ສ່ວນຝ່າຍຂວານັ້ນ ແມ່ນໄດ້ຮັບຕຳແໜ່ງເທົ່າທຽມກັບຝ່າຍແນວລາວຮັກຊາດ. ໃນ ຕົວຈິງສັນຍາທີ່ໄດ້ເຊັນກັນລະຫວ່າງ 3 ຝ່າຍນັ້ນ ໄດ້ໝາຍເຖິງ ໄຊ

ຊະນະອັນຍິ່ງໃຫຍ່ຂອງແນວລາວຮັກຊາດ ແລະ ກຳລັງເປັນ ກາວ ທີ່ໄດ້ເຕົ້າໂຮມກັນໃນການຕໍ່ສູ້ຕ້ານ ການແຊກແຊງຂອງ ຕ່າງ ປະເທດ.

ໃນວັນທີ 23 ກໍລະກົດ 1962, ບັນດາຜູ້ຕາງໜ້າຂອງ 14 ປະເທດ ທີ່ສົນໃຈໃນການແກ້ໄຂ ບັນຫາລາວ ໄດ້ບັນລຸເຖິງການ ເຊັນສັນຍາ ແລະ ຖະແຫຼງການ ວ່າດ້ວຍຄວາມເປັນກາງຂອງ ລາວ ພາຍຫຼັງທີ່ໄດ້ໃຊ້ເວລາໃນການເຈລະຈາມານເຖິງ 14 ເດືອນກ່ວາ. ການເຊັນສັນຍາເຊີແນວ 1962 ກ່ຽວກັບລາວໄດ້ ສ້າງເງື່ອນໄຂໃໝ່ສຳລັບປະເທດລາວ ເພື່ອເດີນຕາມເສັ້ນທາງ ສັນຕິພາບ, ເອກະລາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າ ທາງສັງຄົມ. ເປັນອັນວ່າ ການແຊກແຊງຂອງຕ່າງປະເທດ ເຂົ້າ ວຽກງານພາຍໃນຂອງລາວ ຫຼັງຈາກ ການເຊັນສັນຍາເຊີ ແນວ 1954 ກ່ຽວກັບ ອິນດູຈີນ ໄດ້ຢຸດຕິລົງ ດ້ວຍການເຊັນສັນຍາ ເຊີແນວສະເພາະວ່າດ້ວຍຄວາມເປັນກາງຂອງລາວ. ບັນດາປະ ເທດ ທີ່ໄດ້ຮ່ວມລົງນາມສັນຍາເຊີແນວ ຈຳຕ້ອງໄດ້ໃຫ້ການຮັບ ຮອງວ່າຈະບໍ່ດຳເນີນການເຄື່ອນໄຫວ ຫຼື ເຂົ້າ ຮ່ວມການເຄື່ອນ ໄຫວທີ່ຈະນຳໄປສູ່ຄວາມເສຍຫາຍ ບໍ່ວ່າໂດຍທາງກົງຫຼືທາງ ອ້ອມຕໍ່ອະທິປະໄຕ, ເອກະລາດ, ຄວາມເປັນກາງ ແລະ ຜົນແຜ່ນ ດິນອັນຄົບຖ້ວນ ຂອງລາວ; ຈະບໍ່ໃຊ້ກຳລັງ ຫຼື ການໜາບຂູ່ ດ້ວຍກຳລັງ ຫຼື ວິທີການອື່ນໆ ທີ່ຈະນຳຄວາມເສຍຫາຍ ມາສູ

ສັນຕິພາບຢູ່ລາວ; ຈະຢັບຢັ້ງຕໍ່ການແຊກແຊງໂດຍທາງກົງ ຫຼື ທາງອ້ອມເຂົ້າອຣກງານພາຍໃນຂອງລາວ.

ສັນຍາເຊີແນວ 1962 ໄດ້ຮັບການເຊັນກັນບໍ່ທັນຮອດ 1 ປີ, ແຕ່ບາງປະເທດທີ່ໄດ້ຮ່ວມລົງນາມຊ້ຳໄດ້ ສືບຕໍ່ດຳເນີນການ ແຊກແຊງ ແລະສະກັດກັ້ນຄວາມປອງດອງຊາດຂອງ 3 ກຳລັງ ການເມືອງ. ບາງປະເທດຕາເວັນຕົກໄດ້ໃຫ້ການຊ່ວຍເຫຼືອ ກຳ ລັງຝ່າຍຂວາຢ່າງຫ້າວຫັນ ເພື່ອແກ່ຍາວເວລາໃນການປະຕິບັດ ສັນຍາໃຫ້ປະກົດເປັນຈິງ. ໃນການແກ້ໄຂບັນຫາການເມືອງຢູ່ ລາວໃນໄລຍະນັ້ນ ແມ່ນມີທັງປັດໃຈພາຍໃນ ແລະປັດໄຈພາຍ ນອກ ເຊັ່ນວ່າໄດ້ມີສັນຍາທີ່ເຊັນກັນລະຫວ່າງ ບັນດາຜູ້ຕາງໜ້າ ຂອງ 3 ກຳລັງການເມືອງ ແລະ ສັນຍາເຊີແນວກ່ຽວກັບລາວ. ເອກະສານດັ່ງກ່າວ ຈະຕ້ອງໄດ້ຮັບການປະຕິບັດຢ່າງພ້ອມພຽງ ກັນຈາກ 3 ກຳລັງທາງການເມືອງ ລວມທັງບັນດາປະເທດ ທີ່ໄດ້ລົງນາມໃນສັນຍາເຊີແນວ 1962 ກໍ່ຕ້ອງປະຕິບັດເໝືອນກັນ. ອີງຕາມສັນຍາທີ່ໄດ້ເຊັນກັນນັ້ນ, ລັດຖະບານປະສົມ ຊຶ່ວຄາວ ແມ່ນມີໜ້າທີ່ເຕົ້າໂຮມກອງທະຫານ ແລະອົງການປົກຄອງຂອງ 3 ຝ່າຍເຂົ້າເປັນອັນດຽວ ແລະພາຍຫຼັງການຟື້ນຟູຄວາມເປັນ ເອກະພາບ ຂອງປະເທດຊາດ ແລ້ວກໍ່ຕ້ອງດຳເນີນການເລືອກ ຕັ້ງທົ່ວໄປ, ປ່ອນບັດຄັດເລືອກເອົາຜູ້ແທນເຂົ້າໃນສະພາແຫ່ງຊາດ ແລ້ວສ້າງຕັ້ງລັດຖະບານເອກະພາບແຫ່ງຊາດໃໝ່. ເພື່ອແກ້ໄຂ ບັນຫາການຢຸດຍິງ ແລະ ການຖອນທະຫານຂອງຕ່າງປະເທດ ອອກຈາກລາວ, ສັນຍາ 3 ຝ່າຍກໍ່ຄືສັນຍາເຊີແນວ 1962

ກ່ຽວກັບລາວ ໄດ້ເຫັນດີໃຫ້ມີການເຄື່ອນໄຫວ ຂອງຄະນະກຳ ມະການກວດກາສາກົນ ເຊິ່ງປະກອບດ້ວຍບັນດາຜູ້ຕາງໜ້າຈາກ ໂປໂລຍ, ອິນເດຍ, ແລະ ການາດາ. ແຕ່ຄະນະກຳມະການນີ້ ຈະດຳເນີນງານຂອງຕົນໄດ້ ກໍ່ຕໍ່ເມື່ອໄດ້ຮັບຄຳຕົກລົງເຫັນຊອບ ຈາກລັດຖະບານປະສົມຊື່ວຄາວກ່ອນ.

4. <u>ຄວາມຫລົ້ມເຫລວຂອງການລວມລາວຄັ້ງທີ 2</u> .

ໃນໄລຍະກ່ອນໜ້າການຟື້ນຟູສັນຕິພາບໃນປີ 1962 ກຳ ລັງຮັກຊາດລາວ ໄດ້ປົດປ່ອຍດິນແດນທົ່ວປະເທດແລ້ວ 2/3 ເຊິ່ງ ມີພົນລະເມືອງ 1/3 ຂອງປະຊາ ຊົນລາວທັງໝົດ. ດ້ວຍເຫດນັ້ນ ກຳລັງຂອງຝ່າຍຂວາ ຈຶ່ງຫວັງວ່າຈະສວຍໂອກາດ ຈາກການ ເຊັນສັນຍາ 3 ຝ່າຍ ແລະສັນຍາເຊີແນວ 1962 ເພື່ອປັບປຸງກອງ ທັບຂອງຕົນ ແລະ ໃຊ້ເງື່ອນໄຂສັນຕິພາບນີ້ ເພື່ອວາງກົນ ອຸບາຍ ໃໝ່ ໂດຍອີງໃສ່ການຊ່ວຍເຫຼືອຂອງບັນດາປະເທດຕາເວັນຕົກ ໃນການນ້ຳເພກຳລັງການປະຕິວັດ. ອີງຕາມສັນຍາ 3 ຝ່າຍທີ່ ໄດ້ເຊັນກັນຢູ່ເຊີແນວ ແລະ ທົ່ງໄຫຫີນນັ້ນ ລັດຖະບານປະສົມຊື່ວ ຄາວ ແມ່ນໄດ້ຮັບການສ້າງຕັ້ງຂຶ້ນ ຕາມລະບຽບການພິເສດ. ລັດ ຖະບານປະສົມໄດ້ເປັນຜູ້ສະເໜີ ໂຄງການດຳເນີນງານຕໍ່ ເຈົ້າຊີ ວິດເພື່ອຮັບຮອງເອົາ ເຊິ່ງບໍ່ຈຳເປັນທີ່ຕ້ອງເອົາໄປຜ່ານສະພາຜູ ແທນລາດຊະດອນ. ໃນເວລາ ເຈລະຈາກັນ ຝ່າຍແນວລາວຮັກ

ຊາດ ແລະກຳລັງເປັນກາງໄດ້ ແຈ້ງທັດສະນະຂອງ ຕົນໄວ້ແລ້ວ ວ່າ ລັດຖະບານປະສົມ ຈະບໍ່ດຳເນີນງານພາຍໃຕ້ລັດຖະທຳມະນູນ ແລະ ສະພາຜູ້ແທນລາດຊະດອນຂອງຝ່າຍວຽງຈັນ. ອັນທີ່ເອີ້ນວ່າ ສະພາຜູ້ແທນລາດຊະດອນໃນເວລານັ້ນ ແມ່ນສາມາດຄົງຕົວໄດ້ພຽງແຕ່ສຳລັບກຳລັງຂອງຝ່າຍຂວາເທົ່ານັ້ນ. ຝ່າຍແນວລາວຮັກຊາດ ໄດ້ຖອດຖອນບົດຮຽນ ຈາກການເຂົ້າຮ່ວມໃນລັດຖະບານປະສົມຄັ້ງທຳອິດ ເຊິ່ງຝ່າຍຂວາໄດ້ສວຍໃຊ້ສະພາຜູ້ແທນລາດຊະດອນເປັນເຄື່ອງມື ເພື່ອຄວບຄຸມການເຄື່ອນໄຫວຂອງລັດຖະບານ ເມື່ອບໍ່ພໍໃຈກໍ່ສາມາດລົ້ມລັດຖະບານໄດ້. ໃນເທື່ອນີ້, ສະພາຜູ້ແທນລາດຊະດອນ ໄດ້ສະແດງຄວາມຊຶມເຊີຍຕໍ່ການສ້າງຕັ້ງລັດຖະບານປະສົມຊົ່ວຄາວ ແລະ ໄດ້ຮັບ ຮອງເອົາມະຕິຕົກລົງຮັບຮູ້ສັນຍາທີ່ໄດ້ເຊັນກັນລະຫວ່າງ 3 ເຈົ້າລາວໃນວັນທີ 12 ມີຖຸນາ 1962 ຢູ່ທົ່ງໄຫຫີນຢ່າງບໍ່ມີເງື່ອນໄຂ ໃນນັ້ນມີທັງຂໍ້ຕົກລົງກ່ຽວກັບຮູບການ, ອົງປະກອບ ແລະ ການບໍລິຫານຂອງລັດຖະບານປະສົມຊົ່ວຄາວ. ແຕ່ໃນເວລາດຽວກັນນັ້ນ, ສະພາຜູ້ແທນລາດຊະດອນ ແມ່ນໄດ້ທອງໃຫ້ ລັດຖະບານມີຄວາມຮັບຜິດຊອບຕໍ່ໜ້າສະພາ ເຊິ່ງໃນໄລຍະຕົ້ນໄດ້ມີພຽງແຕ່ສະມາຊິກ ລັດຖະບານຈາກກຳລັງຝ່າຍຂວາ ເທົ່ານັ້ນຈຳຕ້ອງລາຍງານຕໍ່ສະພາຜູ້ແທນລາດຊະດອນ. ດ້ວຍເຫດນີ້ເອງ ລັດຖະມົນຕີຂອງຝ່າຍແນວລາວຮັກຊາດ ແລະ ກຳລັງເປັນກາງຈຶ່ງຖືວ່າການປະຕິຕົວ ຂອງບັນດາລັດຖະມົນຕີຝ່າຍຂວາ ແມ່ນເປັນການລົບກວນການດຳເນີນງານ ຢ່າງເປັນປົກກະຕິຂອງລັດຖະ

ບານປະສົມ ອີງຕາມສັນຍາທີ່ໄດ້ເຊັນກັນ. ສະນັ້ນກຳລັງຝ່າຍ ຂວາ ແລະ ກຳລັງເປັນກາງຈຳນວນນຶ່ງຈຶ່ງໄດ້ມີຂໍ້ສະເໜີລິເລີ້ມ ເພື່ອຂໍເອົາສິດພິເສດຈາກ ສະພາຜູ້ແທນລາດຊະດອນ ໃນການ ເຄື່ອນໄຫວໃນກຳນົດ 1 ປີ, ຖ້າຫາກຈຳເປັນກໍ່ສາມາດຂໍຕໍ່ກຳ ໜົດອອກອີກ. ເຖິງວ່າຜູ້ແທນຈຳນວນນຶ່ງໄດ້ສະແດງຄວາມຄິດ ເຫັນຕ້ານຂໍ້ຮຽກຮ້ອງຂອງລັດຖະບານ, ສະພາແຫ່ງຊາດຈຳຕ້ອງ ລົງຄະແນນສຽງເພື່ອຮັບຮອງເອົາຂໍ້ຮຽກຮ້ອງນີ້ ໂດຍສະແດງ ໃຫ້ເຫັນວ່າ ສະພາກໍ່ມີຄວາມເຫັນພ້ອມເພື່ອພາລະກິດສັນຕິພາບ ແລະຄວາມເປັນກາງ.

ສ່ວນເຈົ້າຊີວິດນັ້ນ ແມ່ນເປັນປະມຸກລັດພຽງແຕ່ໃນນາມ ເຊິ່ງກໍ່ໄດ້ສະແດງຄວາມປິຕິຍິນດີຕໍ່ການ ສ້າງຕັ້ງລັດຖະບານປະ ສົມຈາກ 3 ຝ່າຍກຳລັງທາງການເມືອງ, ສະໜັບສະໜູນນະໂຍ ບາຍສັນຕິພາບ ແລະ ເປັນກາງ. ແຕ່ໃນຕົວຈິງ ເຈົ້າຊີວິດບໍ່ມີອຳ ນາດໃດໆ, ຊາຕາກຳຂອງປະເທດຊາດແມ່ນຂຶ້ນກັບກຳລັງທາງ ການເມືອງ. ເວົ້າລວມແລ້ວ ສະຖານະການອັນເປັນປົກກະຕິຢູ່ ລາວໄດ້ມີຂຶ້ນ ພຽງແຕ່ໃນໄລຍະອັນສັ້ນ. ນອກຈາກນັ້ນ ຄະນະກຳ ມະການດ້ານການທະຫານ ແລະ ດ້ານການເມືອງທີ່ໄດ້ສ້າງຕັ້ງ ຂຶ້ນ ໂດຍອີງຕາມການຕົກລົງຂອງ 3 ຝ່າຍເພື່ອແກ້ ໄຂບັນຫາ ການເຕົ້າໂຮມກອງທັບ ແລະ ອົງການປົກຄອງນັ້ນແມ່ນຍັງບໍ່ ສາມາດປະຕິບັດຕາມແຜນການດຳເນີນງານເທື່ອ. ກຳລັງຂອງ ຝ່າຍຂວາ ເຊິ່ງໄດ້ຮັບການສະໜັບສະໜູນຈາກ ສະຫະລັດອາເມລິ

ກາ ແລະ ພັນທະມິດ ໄດ້ພະຍາຍາມແກ່ ຍາວເວລາໃນການປະຕິບັດສັນຍາ. ດ້ວຍເຫດນີ້ ພວກເຂົາຈຶ່ງໄດ້ ວາງກົນອຸບາຍ ໃໝ່ ເພື່ອຂົ່ມຂວາຍ ແລະ ຊໍ້າຈາງຈອບອອຍຜູ້ຄົ້ນທີ່ກ້າວໜ້າ ໃຫ້ຫັນປ່ຽນຈຸດຢືນ ໂດຍການສົ່ນແຍກກຳລັງເປັນກາງ, ນ້ຳງຄວາມສຳພັນ ລະຫວ່າງ ກຳລັງແນວລາວຮັກຊາດ ກັບ ກຳລັງເປັນກາງ ດ້ວຍຈຸດປະສົງໂດດດ່ຽວ ແນວລາວຮັກຊາດ ໃນລັດຖະບານປະສົມສາມຝ່າຍ.

ເນື່ອງຈາກສະພາບການດັ່ງກ່າວ, ລັດຖະບານປະສົມທີ່ ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1962 ອີງຕາມສັນຍາ 3 ຝ່າຍນັ້ນ ໄດ້ຖືກແຕກແຍກໄປໃນທີ່ສຸດ ພາຍຫຼັງທີ່ທ່ານ ກຶມ ພົມເສນາ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ຈາກກຳລັງເປັນກາງ ໄດ້ຖືກຄາດຕະກຳໃນວັນທີ 1 ເມສາ 1963. ຕໍ່ຈາກນັ້ນ ສະຖານະການຢູ່ລາວ ໄດ້ເກີດມີຄວາມສັບສົນ. ຍ້ອນວ່າບໍ່ມີການຮັບປະກັນຕໍ່ຄວາມປອດໄພໃຫ້ແກ່ຊີວິດຕົນ ບັນດາລັດຖະມົນຕີ ຂອງຝ່າຍແນວລາວຮັກຊາດ ຈຳຕ້ອງໄດ້ໜີອອກຈາກນະຄອນ ຫຼວງວຽງຈັນ ໄປສູ່ຖານທີ່ໝັ້ນເຂດປົດປ່ອຍ. ຢູ່ວຽງຈັນ, ພວກ ຝ່າຍຂວາໄດ້ເລີ່ມກ່າວປະນາມແນວລາວຮັກຊາດ ພ້ອມທັງໂຄສະນາວ່າບັນດາລັດຖະມົນຕີແນວລາວຮັກຊາດ ປະຕິເສດຕໍ່ການ ປົກປ້ອງຊາດ. ນອກຈາກນັ້ນ ໄດ້ມີພວກຜູ້ແທນລາດຊະດອນຈຳ ນວນນຶ່ງທີ່ມີແນວຄິດປະຕິການ ໄດ້ສ້າງຕັ້ງອັນທີ່ເອີ້ນວ່າ "ກຸ່ມຜູ້ ແທນເພື່ອປ້ອງກັນຄວາມເປັນກາງຂອງລາວ" ເຊິ່ງແມ່ໃສ່ຕ້ານ

ການເຄື່ອນໄຫວ ຂອງບັນດາລັດຖະມົນຕີແນວລາວຮັກຊາດ. ຜູ້ແທນບາງຄົນ ຍັງໄດ້ກະກຽມດັດແປງ ແລະ ເພີ່ມເຕີມໃສ ່ລັດຖະທຳມະນູນ ດ້ວຍການບັນຍັດຕື່ມເນື້ອໃນ ວ່າດ້ວຍຄວາມເປັນກາງ ຂອງລາວ.ໃນກາງເດືອນເມສາ 1963, ກຳລັງປະກອບອາວຸດ ຂອງຝ່າຍຂວາ ໄດ້ບຸກໂຈມຕີ ກຳລັງປະກອບອາວຸດ ຂອງແນວລາວຮັກຊາດຄືນໃໝ່. ການສູ້ລົບລະຫວ່າງກຳລັງຮັກຊາດແລະ ກຳລັງຂອງຝ່າຍຂວາໄດ້ແຜ່ລາມອອກອີກ. ໃນວັນທີ 19 ເມສາ, ອົງການ ຊີ-ໄອ-ເອ ໄດ້ໃຊ້ນາຍທະຫານໃນກອງທັບພາກ 5 ດຳເນີນການລັດຖະປະຫານ ແລະ ປົດເຊ ຍບັນດາລັດຖະມົນຕີຈາກ ກຳລັງເປັນກາງອອກຈາກລັດຖະບານປະສົມ. ເຈົ້າສຸວັນນະພູມາ ເຊິ່ງເປັນນາຍົກລັດຖະມົນຕີ ລັດຖະບານປະສົມໃນໄລຍະນັ້ນ ໄດ້ຖືກກັກຕົວໃນບໍລິເວນບ້ານພັກ. ແຕ່ວ່າສະຫະລັດອາເມລິກາແລະ ບັນດາປະເທດຕາເວັນຕົກໄດ້ຄຳນຶງເຖິງຜົນສະທ້ອນອັນບໍ່ດີ, ດັ່ງນັ້ນ ຈຶ່ງໄດ້ແນະນຳໃຫ້ກອງບັນຊາການທະຫານພາກ 5 ໄປຂໍໂທດເຈົ້າສຸວັນນະພູມາ ແລະ ຂໍຮ້ອງໃຫ້ເພິ່ນສືບຕໍ່ນຳພາລັດຖະບານຕໍ່ໄປ ເຊິ່ງນອນໃນແຜນການເພື່ອເຕົ້າໂຮມກຳລັງ ເປັນກາງ ກັບກຳລັງຝ່າຍຂວາຕ້ານແນວລາວຮັກຊາດແບບສອງຕໍ່ນຶ່ງ. ໃນທີ່ສຸດ, ເຈົ້າສຸວັນນະພູມາ ໄດ້ຍອມໃຫ້ມີການປັບປຸງລັດຖະບານປະສົມ ໂດຍຮັບເອົາການແຕ່ງຕັ້ງຂອງລັດຖະມົນຕີຈາກຝ່າຍຂວາປ່ຽນແທນຕຳແໜ່ງລັດຖະມົນຕີຂອງຝ່າຍແນວລາວຮັກຊາດ ທີ່ຖືກອ້າງວ່າ ຮັກສາການແທນໃຫ້ ເມື່ອໃດຝ່າຍແນວລາວຮັກ

ຊາດກັບມາກໍ່ຈະສ້ຽງຄືນ. ແຕ່ໃນຕົວຈິງ ການລັດຖະປະຫານ ນັ້ນ ແມ່ນກົນອຸບາຍຂອງພວກປະຕິການ ເພື່ອປັດເຂ່ຍຄົນຂອງແນວ ລາວຮັກຊາດອອກຈາກລັດຖະບານຢ່າງສິ້ນເຊີງ ຫວັງເຮັດໃຫ້ ການປະກອບລັດຖະບານໃໝ່ຖືກຕ້ອງຕາມກົດໝາຍ ແລະປະກາດ ໃຫ້ແນວລາວຮັກຊາດເປັນຝ່າຍກະບົດ ເພື່ອຈະໃຫ້ກຳລັງທະຫານ ທີ່ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຈາກ ອາເມລິກາ ແລະ ພັນ ທະມິດປາບປາມດ້ວຍກຳລັງ. ເຖິງວ່າຝ່າຍແນວລາວຮັກຊາດ ຈະໃຊ້ຄວາມພະຍາຍາມ ເພື່ອເຈລະຈາຟື້ນຟູຄວາມເປັນເອກະ ພາບຂອງລັດຖະບານປະສົມ ແຕ່ກໍ່ໄດ້ຖືກກຳລັງ ຂອງຝ່າຍຂວາ ປັດປ່າຍຂໍ້ ສະເໜີອັນສົມເຫດສົມຜົນຂອງແນວລາວຮັກຊາດ.

ຈາກນັ້ນເອງ, ສົງຄາມກາງເມືອງຈຶ່ງໄດ້ແຜ່ຂະຫຍາຍ ກ້ວາງໄປທົ່ວປະເທດ, ລັດລາວກໍ່ໄດ້ຖືກແບ່ງອອກເປັນສອງ ພາກສ່ວນຄື: ເຂດປົດປ່ອຍ ເຊິ່ງຢູ່ ໃຕ້ການຄວບຄຸມຂອງແນວ ລາວຮັກຊາດ ແລະ ອົງການປົກຄອງຂອງຝ່າຍວຽງຈັນ ທີ່ຢູ່ ພາຍໃຕ້ການຄວບຄຸມຂອງລັດຖະບານທີ່ມີຍີ່ມຕາເວັນຕົກ.

5. <u>ຖານະການເມືອງຂອງເຂດປົດປ່ອຍລາວ</u> .

ນັບແຕ່ປີ 1962 ເປັນຕົ້ນມາ, ເຂດປົດປ່ອຍລາວ ເຊິ່ງຢູ່ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ໂດຍຜ່ານ ແນວລາວຮັກຊາດນັ້ນ ໄດ້ກວມເອົາດິນແດນ 2/3 ແລະ ແຕ່ປີ 1969 ເຖິງກ່ອນການປົດປ່ອຍ ໄດ້ກວມເອົາ 4/5 ຂອງດິນແດນ

ທົ່ວທັງປະເທດ ເຊິ່ງມີປະຊາຊົນອາໄສຢູ່ປະມານເຄິ່ງນຶ່ງ ຂອງພົນ ລະເມືອງທັງໝົດ.

ອີງຕາມລັກສະນະອຳນາດ ແລະ ການຂະຫຍາຍຕົວຂອງ ເສດຖະກິດ-ສັງຄົມ, ເຂດປົດປ່ອຍໄດ້ປຽບເໝືອນໂຄງປະກອບ ການຈັດຕັ້ງໃໝ່ ທີ່ມີລັກ ສະນະຊາດ ປະຊາທິປະໄຕ ອັນມີປະຊາ ຊົນລາວບັນດາເຜົ່າເປັນເຈົ້າ ລວມໝູ່ຂອງປະເທດ.

ພາຍໃຕ້ການນຳພາຂອງ ຄະນະບໍລິຫານງານສູນກາງແນວ ລາວຮັກຊາດ ປະຊາຊົນຢູ່ເຂດປົດປ່ອຍໄດ້ດຳເນີນການຕໍ່ສູ້ອັນ ເປັນທຳຂອງຕົນ ຕ້ານການຮຸກຮານຂອງ ສະຫະລັດອາເມລິກາ, ໄດ້ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ, ໄດ້ສົ່ງເສີມໃຫ້ຊີວິດການ ເມືອງ-ສັງຄົມທົ່ວໄປມີປະຊາທິປະໄຕ ແນໃສ່ເພື່ອຜັນສຳເລັດ ຂອງພາລະກິດປະຕິວັດ ຕ້ານລັດທິຈັກກະພັດນິຍົມ ແລະ ລັດທິ ສັກດິນາ.


ສະຖານະການພາຍໃນປະເທດໃນໄລຍະນັ້ນ ໄດ້ມີການ ຜັນແປໄປຢ່າງສັບສົນ ອັນເນື່ອງມາຈາກການປະເຊີນໜ້າກັນ ທາງທະຫານ. ສະນັ້ນ ໃນຕົ້ນເດືອນເມສາ 1964, ຄະນະບໍລິ ຫານງານສູນກາງແນວລາວຮັກຊາດ ໄດ້ຮຽກໂຮມກອງປະຊຸມ ໃຫຍ່ຄັ້ງທີ II ທີ່ເມືອງຊຳເໜືອ ເຊິ່ງໃນນັ້ນໄດ້ມີການຮັບຮອງ ເອົາໂຄງການດຳເນີນງານໃໝ່. ໂຄງການດັ່ງກ່າວໄດ້ເນັ້ນເຖິງ

ຄວາມຈຳເປັນໃນການເຕົ້າໂຮມ ຄວາມສາມັກຄີ ຂອງປະຊາຊົນ ບັນດາຊົນເຜົ່າສ່ວນນ້ອຍ ໃນການຕໍ່ສູ້ຕ້ານກົນອຸບາຍຂອງອາ ເມລິກາ ແລະ ລູກມືຂອງເຂົາ. ໂຄງການ ດຳເນີນງານໄດ້ຮຽກ ຮ້ອງເຖິງການຮັດແໜ້ນ ຂອງການຮ່ວມສຳພັນລະຫວ່າງແນວ ລາວຮັກຊາດ ແລະກຳລັງເປັນກາງທີ່ຮັກຊາດ ໃນການຕໍ່ສູ້ເພື່ອ ສັນຕິພາບ, ເປັນກາງ, ເອກະລາດ, ປະຊາທິ ປະໄຕ, ເອກະພາບ ແລະ ຄວາມວັດທະນາຖາວອນ. ໂຄງການດຳເນີນງານໃໝ່ນີ້ ໄດ້ວາງໜ້າທີ່ອອກໂດຍສະແດງຄວາມນັບຖືຕໍ່ບັນລັງ, ເຄົາລົບ ນັບຖືສາດສະໜາ ແລະ ການເຊື່ອຖືຄຸນນະທຳ, ເສີມຂະຫຍາຍ ສິດປະຊາທິປະໄຕຢ່າງເຕັມສ່ວນຂອງ ພົນລະເມືອງລາວທັງໝົດ, ເພື່ອຄວາມສະເໝີພາບລະຫວ່າງຊາຍ-ຍິງ, ສ້າງຕັ້ງ ລັດຖະບານ ເອກະພາບແຫ່ງຊາດ, ຕາມການຮຸກຮານຂອງຕ່າງປະເທດ, ປະ ຕິບັດສັນຍາເຊີແນວປີ 1954 ກ່ຽວກັບອິນດູຈີນ, ສັນຍາເຊີແນວປີ 1962 ກ່ຽວກັບລາວ ແລະ ສັນຍາສາມຝ່າຍ. ໃນໂຄງການດຳ ເນີນງານນີ້ ຍັງໄດ້ຊີ້ແຈງເຖິງທິດທາງ ແລະ ບັນຫາການພັດ ທະນາເສດຖະກິດ-ສັງຄົມຂອງລາວ. ເປັນທີ່ຊາບກັນດີແລ້ວວ່າ ບັນດາຜູ້ຕ່າງໜ້າຂອງ ສາມຝ່າຍໄດ້ດຳເນີນການພົບປະເຈລະຈາ ເພື່ອແກ້ໄຂ ບັນຫາພາຍໃນນຳກັນ ແຕ່ການພົບປະເຈລະຈານັ້ນໄດ້ ຖືກຍົກເລີກໄປ ພາຍຫຼັງທີ່ ສະຫະລັດອາເມລິກາ ໄດ້ເລີ່ມເຮັດສົງ ຄາມພິເສດຢູ່ລາວ. ເລີ່ມແຕ່ກາງປີ 1964 ເປັນຕົ້ນມາ ຍົນສູ້ລົບ ຂອງອາເມລິກາ ເຊິ່ງໄດ້ບິນຈາກຖານທັບເຮືອທີ່ 7, ຈາກຖານ ທັບຢູ່ໄທ ແລະພາກໃຕ້ຫວຽດນາມໄດ້ໂຈມຕີແລະຖິ້ມລະເບີດໃສ່

ເຂດປົດປ່ອຍລາວ. ໄປຄຽງຄູ່ກັບການດຳເນີນສົງຄາມຮຸກຮານ ຕ້ານປະຊາຊົນຫວຽດນາມ, ສະຫະລັດອາເມລິກາ ໄດ້ປົ້ນຂັ້ນໄດ ສົງຄາມອາກາດຕ້ານປະຊາຊົນຢູ່ເຂດປົດປ່ອຍ ລາວທີ່ບໍ່ມີຄວາມ ຜິດຫຍັງ. ລະເບີດ 3 ລ້ານໂຕນຂອງອາເມລິກາໄດ້ເຮັດໃຫ້ປະຊາ ຊົນລາວຫຼາຍໝື່ນຄົນເສຍຊີວິດໄປ, ໄດ້ທຳລາຍເຮືອນຊານ, ໝູ່ ບ້ານ, ທົ່ງນາ, ເຄື່ອງປູກຂອງຝັງແລະອື່ນໆ.

ຕໍ້ໜ້າການຂົ່ມຂູ່ຢ່າງຮ້າຍແຮງຈາກສະຫະລັດອາເມລິກາ ຄະນະບໍລິຫານງານສູນກາງແນວລາວຮັກຊາດໄດ້ຍົກສູງ ຄັນທຸງ ເອກະລາດແຫ່ງຊາດ ແລະ ປະຊາທິປະໄຕ, ໄດ້ນຳພາການ ຕໍ່ສູ້ຕ້ານ ການຮຸກຮານຂອງຕ່າງປະເທດ ເພື່ອກູ້ຊາດ. ເນື່ອງຈາກ ວ່າສົງຄາມຮຸກຮານຂອງອາເມລິກາຕ້ານ ເຂດປົດປ່ອຍໄດ້ເພີ່ມ ທະວີຂຶ້ນ, ຄະນະບໍລິຫານງານສູນກາງແນວລາວຮັກຊາດ ຈຶ່ງໄດ້ ຮຽກ ຮ້ອງໄປຍັງຜູ້ທີ່ຮັກຊາດທຸກຄົນຈົ່ງປຸ້ມລຸມກັນ ຕໍ່ສູ້ທາງດ້ານ ທະຫານແລະການເມືອງຢ່າງເດັດດ່ຽວ, ເພີ່ມທະວີກຳລັງການ ປະຕິວັດ, ປົກປັກຮັກສາ ແລະ ຂະຫຍາຍເຂດປົດປ່ອຍໃຫ້ກວ້າງ ອອກ. ໃນເດືອນຕຸລາ 1965, ແນວລາວຮັກຊາດ ແລະ ກຳລັງ ເປັນກາງທີ່ຮັກຊາດ ໄດ້ຈັດກອງປະຊຸມຮ່ວມກັນ ເຊິ່ງໃນນັ້ນ ໄດ້ ພ້ອມກັນຮັບຮອງເອົາໂຄງການດຳເນີນງານ 4 ຂໍ້ກ່ຽວກັບການ ປະສານງານດ້ານການເມືອງແລະການທະຫານ ໃນທຸກສະໜາມ ລົບ. ເຖິງວ່າສະພາບການຈະສັບສົນຫຍຸ້ງຍາກລຳບາກປານໃດ ກໍ່ຕາມ ແຕ່ປະຊາຊົນລາວບັນດາເຜົ່າ ໄດ້ເສີມຂະຫຍາຍມູນເຊື້ອ

ಗಾಯಕಿ ಲತಾ ಪ್ರಭು ಅವರ ಪಾರ್ಥಿವ ಶರೀರಕ್ಕೆ



ອັນດີງາມ ໄດ້ຕໍ່ສູ້ຄຽງບ່າຄຽງໄລ່ກັບປະຊາຊົນຫວຽດນາມ ແລະ ກຳປູເຈຍ ເຊິ່ງໄດ້ຮັບການຮັດ ແໜ້ນໃນກອງປະຊຸມ 3 ຊາດ ໃນອິນດູຈີນ ໃນປີ 1965 ແລະ 1970 ເພື່ອການຕໍ່ສູ້ຮ່ວມກັນ ຕ້ານສັດຕູລວມ.

ຍ້ອນການນຳພາອັນປີຊາສາມາດຂອງ ພັກປະຊາຊົນປະຕິວັດລາວ ແລະ ແນວລາວຮັກຊາດ, ປະຊາຊົນລາວໄດ້ຕໍ່ສູ້ຢ່າງທໍລະຫົດອົດທົນ ແລະໄດ້ຮັບຜົນສຳເລັດອັນຍິ່ງໃຫຍ່ໃນການປັບປຸງ ແລະພັດທະນາເຂດປົດປ່ອຍ. ໃນໄລຍະດັ່ງກ່າວ, ຄະນະບໍລິຫານງານສູນກາງພັກ ໄດ້ຮັບຮອງເອົາມະຕິໃນການກໍ່ສ້າງເຂດປົດປ່ອຍ ໃຫ້ມີລັກສະນະຄືກັບລັດໜຶ່ງ ເພື່ອໃຫ້ກາຍເປັນແນວໜ້າ ແຫ່ງການຕໍ່ສູ້ຂອງໝົດທັ້ງຊາດ. ແຕ່ເມື່ອງຈາກຍຸດໂຫບາຍ ໂດຍ ອີງໃສ່ສະພາບຄວາມເປັນຈິງຂອງປະເທດ, ສູນກາງພັກຈຶ່ງບໍ່ໄດ້ວາງທິດທາງ ແລະ ແຜນການໃນການສ້າງຕັ້ງ ລັດຖະບານຕ່າງຫາກ. ໃນຕົວຈິງເຂດປົດປ່ອຍໄດ້ເຄື່ອນໄຫວ ແລະ ດຳເນີນງານຄືກັບລັດນຶ່ງທີ່ມີອຳນາດການປົກຄອງ ແລະ ອົງການຈັດຕັ້ງປະຕິວັດເກືອບຄົບຖ້ວນ. ກອງປະຊຸມໃຫຍ່ຂອງແນວລາວຮັກຊາດ ແມ່ນອົງການຕາງໜ້າສູງສຸດແຫ່ງອຳນາດ ປະຊາຊົນອັນມາຈາກການເລືອກຕັ້ງ ເຊິ່ງຈະຮອກໂຮມກອງປະຊຸມ ໂດຍອີງຕາມສະພາບການພິເສດ. ຄະນະບໍລິຫານງານສູນກາງແນວລາວຮັກຊາດ ເຊິ່ງປະກອບມີກຳມະການ 40 ທ່ານ ແມ່ນເປັນອົງການບໍລິຫານສູງສຸດ. ໃນ ລະຫວ່າງ ກອງປະຊຸມຄົບຄະນະຂອງ ສູນກາງ

ນັ້ນ ແມ່ນມີຄະນະກຳມະການປະຈຳຂອງສູນກາງ ເຊິ່ງປະກອບມີ 11 ທ່ານ ແລະໃນນັ້ນໄດ້ມີການເລືອກເອົາປະທານ 1 ທ່ານ ແລະ ຮອງປະທານ 3 ທ່ານ ເຊິ່ງຕາງໜ້າໃຫ້ 3 ຊົນຊາດຕົ້ນຕໍ ຄື ລາວລຸ່ມ, ລາວເທິງ, ລາວສູງ. ຄຽງຂ້າງຄະນະກຳມະການປະຈຳນັ້ນ ຍັງມີຄະນະເລຂາທິການ. ໃນດ້ານເນື້ອແທ້ແລ້ວ ຢູ່ໃນອົງການນຳພາຂອງສູນກາງ ແມ່ນມີການນຳພາໂດຍກົມການເມືອງ ແລະ ຄະນະເລຂາສູນກາງພັກປະຊາຊົນປະຕິວັດລາວ. ຄຽງຂ້າງສູນກາງແນວລາວຮັກຊາດ ຍັງມີສຳນັກງານອົງການ ເຊັ່ນ: ກອງບັນຊາການສູງສຸດ ກອງທັບປົດປ່ອຍປະຊາຊົນລາວ, ບັນດາ ຫ້ອງການຮັບຜິດຊອບຂະແໜງການທີ່ສຳຄັນຄື: ຫ້ອງວ່າການ ສູນກາງແນວລາວຮັກຊາດ, ຫ້ອງການປົກຄອງ, ຫ້ອງການຕ່ໍ ສູ້ການເມືອງ, ຫ້ອງການຕ່າງປະເທດ, ຫ້ອງການໂຄສະນາ, ອົບຮົມ ແລະ ວັດທະນະທຳ, ຫ້ອງການສຶກສາ, ຫ້ອງການເສດ ຖະກິດ ການຜະລິດ ແລະ ອື່ນໆ.

ເຂດປົດປ່ອຍໄດ້ກວມເອົາ 12 ແຂວງ ເຊິ່ງມີ 60 ເມືອງ, 600 ຕາແສງ ແລະ 10.000 ກ່ວາບ້ານ. ຢູ່ທຸກໆຂັ້ນຂອງອົງ ການແຫ່ງອຳນາດທ້ອງຖິ່ນ ໄດ້ມີ ສອງອົງການນຳພາຄວບຄູ່ ກັນຄື ຄະນະກຳມະການປົກຄອງ ແລະ ຄະນະກຳມະການແນວ ລາວຮັກຊາດ. ຜູ້ນຳພາອົງການປົກຄອງດັ່ງກ່າວ ແມ່ນຕົວແທນ ຂອງປະຊາຊົນ ທີ່ຖືກເລືອກມາຈາກຊົນເຜົ່າຕ່າງໆ. ຄະນະກຳມະ ການປົກຄອງທຸກໆຂັ້ນ ແມ່ນມີສິດອຳນາດແລະໜ້າທີ່ໃນ ການບໍ

ລິຫານງານ, ປະຕິບັດມະຕິຄຳສັ່ງຂອງສູນກາງ ແລະ ແຜນການພັດທະນາເສດຖະກິດ ແລະ ສັງຄົມຢູ່ໃນທ້ອງຖິ່ນ. ສ່ວນຄະນະກຳມະການແນວລາວຮັກຊາດນັ້ນ ແມ່ນມີໜ້າທີ່ຂຶ້ນຂວາຍປຸກລຸກ ແລະ ໂຄສະນາໃນໝູ່ປະຊາຊົນ, ເຕົ້າໂຮມທຸກຊົນຊາດຊົນເຜົ່າ ແລະ ບັນດາຊັ້ນຄົນເຂົ້າ ໃນແນວໂຮມອັນດຽວກັນ ໃນການຕໍ່ສູ້ຕ້ານການຮຸກຮານຂອງອາເມລິກາ ເພື່ອການກູ້ຊາດ. ແມ່ຍິງລາວຢູ່ເຂດປົດປ່ອຍແມ່ນມີສິດສະເໝີພາບເທົ່າທຽມກັບຜູ້ຊາຍ ແລະ ເຂົ້າຮ່ວມໃນວຽກງານປົກຄອງຢູ່ທ້ອງຖິ່ນຢ່າງຫ້າວຫັນ. ນອກຈາກອົງການຈັດຕັ້ງດັ່ງກ່າວມານັ້ນ ຍັງມີບັນດາອົງການຈັດຕັ້ງມະຫາຊົນຄື: ສະຫະພັນກຳມະບານ, ແນວລາວຮັກຊາດ, ຊາວໜຸ່ມລາວຮັກຊາດ ຕໍ່ມາປ່ຽນຊື່ເປັນຊາວໜຸ່ມປະຊາຊົນປະຕິວັດລາວ, ສະມາຄົມຍິງລາວຮັກຊາດ, ສະມາຄົມຊາວນາ.

ເພື່ອສຳເລັດ ການປະຕິວັດຊາດ ປະຊາທິປະໄຕ, ພັກປະຊາຊົນປະຕິວັດລາວໄດ້ກຳນົດຍຸດທະສາດ, ຍຸດໂທບາຍ, ຮູບ ການ ແລະວິທີການຕໍ່ສູ້ປະຕິວັດຢ່າງລະອຽດ ໃນແຕ່ລະໄລຍະ. ທ່ານ ປະທານໄກສອນ ພົມວິຫານ ເຄີຍໄດ້ກ່າວໄວ້ວ່າ ເພື່ອເຮັດ ໃຫ້ແນວທາງນະໂຍບາຍຂອງພັກປະກົດເປັນຈິງ ຈະຕ້ອງຍົກສູງ ຄົນທຸງຊາດ, ປະຊາທິປະໄຕ ພາຍໃຕ້ການນຳພາຂອງຊົນຊັ້ນກຳມະກອນ ເຊິ່ງມີກອງນຳໜ້າຄືພັກມາກ-ເລນິນ.ສ້າງຕັ້ງແນວໂຮມເອກະພາບແຫ່ງຊາດ ອັນກ້ວາງຂວາງ ບົນພື້ນຖານ ພັນທະພາບຊົນຊັ້ນກຳມະກອນ ແລະ ຊາວນາ ພາຍໃຕ້ການນຳພາຂອງພັກ.

ໃນການປະຕິບັດແນວທາງລວມຂອງພັກແລະແນວໂຮມ, ກອງທັບແລະປະຊາຊົນລາວ ໄດ້ດຳເນີນການ ປ່ຽນແປງທາງປະຫວັດສາດຢູ່ທີ່ເຂດປົດປ່ອຍ ເຊັ່ນໄດ້ພາໃຫ້ປະຊາຊົນຜູ້ອອກແຮງງານ ບັນດາເຜົ່າ ໄດ້ລຸດພົ້ນອອກຈາກ ການເປັນຂ້ອຍຂ້າກາຍມາເປັນເຈົ້າຂອງປະເທດຊາດ, ປະຊາຊົນລາວ ເຊິ່ງໃນອະດີດເຄີຍຖືກກົດຂີ່ຂົ່ມເຫັງຈາກລັດທິລ່າເມືອງຂຶ້ນແບບເກົ່າ ໄດ້ພົບເຫັນເສັ້ນທາງໃໝ່ທີ່ຈະກ້າວສູ່ອານາຄົດອັນສົດໃສ.

ຕະຫຼອດໄລຍະ ແຫ່ງການປົກຄອງ ດ້ວຍອຳນາດປະຊາຊົນ, ຢູ່ທີ່ເຂດປົດປ່ອຍໄດ້ເລີ່ມມີການພັດທະນາອຸດສະຫະກຳ: ໄດ້ມີໂຮງງານຕ່ຳແຜ່ນ, ໂຮງງານປຸງແຕ່ງຜະລິດຕະພັນກະສິກຳ, ໂຮງຊ່າງໄມ້, ໂຮງງານປຸງຢາ ແລະ ອື່ນໆ. ສ່ວນດ້ານກະສິກຳ ກໍ່ໄດ້ມີການແລກປ່ຽນແຮງງານ, ເຮັດນາແບບລວມໝູ່, ໄດ້ຂະຫຍາຍເນື້ອທີ່ນາຢູ່ໃນຫຼາຍແຂວງ. ວຽກງານຫັດຖະກຳກໍ່ໄດ້ຮັບການສົ່ງເສີມດ້ວຍການສ້າງອາຊີບຄົງທີ່ໃຫ້ແກ່ປະຊາຊົນ. ໃນປີ 1968 ຢູ່ທີ່ເຂດປົດປ່ອຍໄດ້ມີການນຳໃຊ້ເງິນກີບໃໝ່. ແຕ່ວ່າ ການຈໍລະຈອນຂອງເງິນຢູ່ເຂດປົດປ່ອຍນັ້ນ ແມ່ນຍັງມີລັກສະນະຈຳກັດຍ້ອນວ່າເສດຖະກິດສ່ວນໃຫຍ່ຍັງເປັນແບບທຳມະຊາດຢູ່.

ດ້ານການສຶກສາແລະວັດທະນະທຳ ກໍ່ໄດ້ຮັບຜົນສຳເລັດທີ່ກ້າວໜ້າ. ການສຶກສາສາມັນຂັ້ນມັດທະຍົມ ແລະ ອຸດົມລວມທັງໂຮງຮຽນວິຊາສະເພາະຊັ້ນກາງ ກໍ່ໄດ້ມີການແຜ່ຂະຫຍາຍ.

ລະບົບສານຍຸດຕິທຳ ກໍ່ໄດ້ຮັບການປັບປຸງ ບົນພື້ນຖານ ກົດໝາຍທ້ອງຖິ່ນ, ຮີດຄອງປະເພນີ ແລະນະໂຍບາຍຂອງແນວ ໂຮມ. ຢູ່ເຂດປົດປ່ອຍໄດ້ມີສານປະຊາຊົນ ແລະ ສານລັກສະນະ ໄກ່ເກ່ຍ. ການພິຈາລະນາບັນຫາ ຫຼືຄະດີແພ່ງຂະໜາດນ້ອຍ ແມ່ນ ຈະໃຊ້ວິທີການແບບໄກ່ເກ່ຍສຳໜວດການ, ຕັກເຕືອນແລະ ລົງວິໄນ ຂະໜາດເບົາບົນຫຼືການປາບພະຍ ເດ ກ້ເອົາຄືນ. ສ່ວນ ຄະດີແພ່ງ ແລະອາຍາທີ່ຖື ວ່າໃຫຍ່ ແລະສຳຄັນ ຈະແມ່ນເອົາຂຶ້ນ ສານປະຊາຊົນ. ເພື່ອຊ່ວຍເຫຼືອໃຫ້ແກ່ການພິຈາລະນາຄະດີ ແພ່ງແລະອາຍານັ້ນ ໄດ້ມີການສ້າງລະບຽບການຊົ່ວຄາວ ປະ ກອບດ້ວຍ 80 ມາດຕາ. ລະບຽບການຊົ່ວຄາວ ເພື່ອພິຈາລະນາ ຄະດີນັ້ນແມ່ນ ໄດ້ຄົ້ນຄ້ວາແລະຮ່າງຂຶ້ນ ໂດຍພະນັກງານອາວຸໂສ ທີ່ເຄີຍເປັນນັກກົດໝາຍ ແລະ ນັກປົກຄອງທີ່ສັ່ງກັດຢູ່ຫ້ອງການ ປົກຄອງສູນກາງແນວລາວຮັກຊາດ.

ຢູ່ທີ່ເຂດປົດປ່ອຍ ເຊິ່ງພົນລະເມືອງສ່ວນໃຫຍ່ແມ່ນມີໜ້າຍ ຊົນຊາດຊົນເຜົ່າ ນັ້ນແມ່ນໄດ້ຊົມໃຊ້ສິດສະເໝີພາບ, ໄດ້ຢູ່ຮ່ວມ ກັນຄືຄອບຄົວໃຫຍ່ອັນນຶ່ງອັນດຽວ ແລະ ພ້ອມກັນຕໍ່ສູ້ເພື່ອຄວາມ ເປັນອິດສະລະພາບ, ເອກະລາດແຫ່ງຊາດ ເພື່ອສ້າງສັງຄົມໃໝ່, ສັງຄົມປະຊາທິປະໄຕ.

ເຫດການ ທີ່ມີຄວາມໝາຍສຳຄັນໃນ ຊີວິດການເມືອງ ຂອງປະຊາຊົນລາວ ທົ່ວທັງປະເທດນັ້ນຄື ກອງປະຊຸມໃຫຍ່ຄັ້ງທີ III ຂອງແນວລາວຮັກຊາດ ເຊິ່ງໄດ້ໄຂຂຶ້ນໃນວັນທີ 31 ຕຸລາ

1968 ຢູ່ເຂດປົດປ່ອຍທີ່ ເມືອງວຽງໄຊ. ກອງປະຊຸມໃຫຍ່ຄັ້ງນັ້ນ ໄດ້ຮັບຮອງເອົາໂຄງການ ການເມືອງໃໝ່ຂອງແນວລາວຮັກຊາດ ທີ່ໄດ້ກຳນົດອອກກ່ຽວກັບ ທັດສະນະທາງການເມືອງ, ເສດຖະ ກິດ, ກົດໝາຍ ແລະສັງຄົມ. ດ້ວຍຈຸດປະສົງເພື່ອ ເຕົ້າໂຮມ, ປະ ສານງານແລະ ຂັ້ນຂະຫຍາຍການຕໍ່ສູ້ຂອງປະຊາຊົນລາວຕ້ານ. ພວກຈັກກະພັດ ແລະລູກມືນັ້ນ ໂຄງການການເມືອງໄດ້ ກຳນົດ ໜ້າທີ່ອອກເພື່ອເຕົ້າໂຮມພົນລະເມືອງລາວທຸກຊັ້ນຄົນ, ທຸກສາດ ສະໜາ, ທຸກພັກການເມືອງເພື່ອເອກະລາດແຫ່ງຊາດ, ສັນຕິພາບ, ເປັນກາງ ແລະ ຟື້ນແຜ່ນ ດິນອັນຄົບຖ້ວນຂອງປະເທດ.

ໂຄງການ ການເມືອງຂອງ ແນວລາວຮັກຊາດ ໄດ້ຊີ້ໃຫ້ ເຫັນເຖິງທິດທາງການຂະຫຍາຍຕົວຂອງລັດລາວ. ໃນດ້ານເນື້ອ ແທ້ໂຄງການການເມືອງດັ່ງກ່າວ ໄດ້ໃຫ້ຄວາມສຳຄັນບໍ່ພຽງແຕ່ ລັກສະນະການເມືອງຂອງລັດ ແຕ່ຍັງໄດ້ເນັ້ນເຖິງ ວຽກງານການ ພັດທະນາເສດຖະກິດ-ສັງຄົມໃນໄລຍະໃໝ່.ເປັນທີ່ສັງເກດເຫັນວ່າ ໃນໂຄງການການເມືອງຂອງແນວລາວຮັກຊາດ ແມ່ນໄດ້ມີ ການ ຮັກສາຄຸນຫາດຂອງ ລະບອບສັກດິນາ ຄືການນັບຖືລາດຊະ ບັນລັງ, ສາດສະໜາແລະອື່ນໆ. ເຊິ່ງເນື້ອໃນດັ່ງກ່າວໄດ້ເປັນ ການສ່ອງແສງ ໃຫ້ເຫັນດ້ານຍຸດໂທບາຍ ແຫ່ງການສ້າງແນວ ໂຮມໂດຍອີງຕາມລັກສະນະພາວະວິໄສ ແຫ່ງການຂະຫຍາຍຕົວ ທາງປະຫວັດສາດຂອງລາວ. ໂຄງການການເມືອງ ດັ່ງກ່າວນັ້ນ ແມ່ນໂຄງການ ເພື່ອປະຊາຊົນຢ່າງແທ້ຈິງ ເພາະໄດ້ຕາງໜ້າໃຫ້

ແກ່ຝົ່ນປະໂຫຍດ ຂອງປະຊາຊົນລາວທັງໝົດລວມທັງຜູ້ ທີ່ຢູ່ເຂດ ປົດປ່ອຍກໍ່ຄືຢູ່ເຂດ ວຽງຈັນ.

ພາຍຫຼັງທ່ີ ໄດ້ປະກາດໂຄງການການເມືອງຂອງແນວລາວ ຮັກຊາດ, ອົດທິພົນຂອງແນວລາວຮັກຊາດກໍ່ໄດ້ນັບມ້ືນັບເພ່ີມ ຂ້ຶນ ບ່ວ່າຢູ່ພາຍໃນປະເທດ ກໍ່ຄືຢູ່ເວທີສາກົນ. ຈຳນວນຜູ້ຄົນທ່ີມີ ທ່າອ່ຽງຮັກຊາດໄ ດ້ຕັດສິນໃຈອອກຈາກ ອົງການປົກຄອງຝ່າຍ ວຽງຈັນໄປຢູ່ກັບຝ່າຍແນວລາວຮັກຊາດ ໃນນ້ັນກໍ່ມີທັງປະຊາຊົນ ແລະອະດີດນັກສຶກສາລາວຈາກຕ່າງປະເທດ.

ໃນຂະນະດຽວກັນນ້ັນ ໂຄງການການເມືອງນ້ີຍັງໄດ້ກາຍ ເປັນຝົ່ນຖານ ສຳລັບການແກ້ໄຂບັນຫາລາວ ,ໂດຍສະເພາະໄດ້ ຮຽກຮ້ອງໃຫ້ມີການເລືອກຕ້ັງທ່ົວໄປຢ່າງມີອິດສະລະ ແລະປະຊາ ທິປະໄຕບົນຝົ່ນຖານກົດໝາຍເລືອກຕ້ັງເພ່ີມເຕ່ີມ ໃນປ ີ 1957, ໄດ້ ເວ້ົາເຖິງການປະຕິບັດສັນຍາເຊ່ີແນວປ ີ 1954 ກ່ຽວກັບ ອິນດູຈີນ ແລະ ສັນຍາເຊ່ີແນວປ ີ 1962 ກ່ຽວກັບລາວ.

ເຖິງວ່າສະຫະລັດອາເມລິກາ ແລະ ພວກບໍລິວານໄດ້ສືບ ຕ່ໍປະຕິບັດ ສົງຄາມພິເສດເພ່ີມທະວີຢູ່ລາວ, ແຕ່ອັນນ້ັນກໍ່ບ່ສາ ມາດຈະທຳລາຍຈິດໃຈຂອງປະຊາຊົນລາວໃນການປັບປຸງ ແລະ ປ້ອງກັນເຂດປົດປ່ອຍ. ບ່ວ່າການຊ່ວຍເຫຼ ືອຢ່າງໃຫຍ່ຫຼວງທາງ ດ້ານການທະຫານ - ເສດຖະກິດ ກໍ່ຄືການຖ ້ມລະເບີດຂອງ ຍົນ ອາເມລິກາໃສ່ເຂດປົດປ່ອຍຫຼາຍປານໃດກໍ່ຕາມ, ແຕ່ສ ິ່ງເຫ ົ່ານ ້ັນ

ກໍ່ບໍ່ສາມາດຢຸດ ຕີການຄືບໜ້າ ຂອງກຳລັງຮັກຊາດໄປສູ່ໄຊຊະ ນະໃໝ່.

ໃນຕົ້ນປີ 1972, ກອງປະຊຸມໃຫຍ່ຄັ້ງທີ II ຂອງພັກປະ ຊາຊົນລາວໄດ້ໄຂຂຶ້ນ ແລະ ໄດ້ປ່ຽນຊື່ ມາເປັນພັກປະຊາຊົນປະ ຕິວັດລາວ ເຊິ່ງໃນນັ້ນ ໄດ້ເລືອກເອົາທ່ານໄກສອນ ພົມວິຫານ ເປັນເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກຄົນໃໝ່. ກອງປະຊຸມໃຫຍ່ຄັ້ງທີ II ຂອງພັກໄດ້ມີການພິຈາລະນາ ແລະ ສັງເກດຕີລາຄາ ກ່ຽວກັບຂະບວນການວິວັດແຫ່ງການຂະຫຍາຍ ຕົວຂອງສະຖານະການສາກົນແລະພາຍໃນປະເທດ, ໄດ້ສະຫລຸບ ຄົ້ນໜາກຜົນການຕໍ່ສູ້ໃນໄລຍະຜ່ານມາ ພ້ອມນັ້ນກໍ່ໄດ້ສຳຫຼວດ ຄົ້ນກ່ຽວກັບຈຸດພິເສດແລະລັກສະນະຂອງສັງຄົມລາວ. ກອງປະ ຊຸມໃຫຍ່ຂອງພັກໄດ້ມີການວາງໜ້າທີ່ການເມືອງ, ໄດ້ກຳນົດ ທິດ ທາງ ແລະ ຮູບການຕໍ່ສູ້ໃນໄລຍະໃໝ່ຂອງ ການປະຕິວັດຊາດ ປະຊາທິປະໄຕ ເພື່ອສ້າງໜໍ່ແໜ່ງໃຫ້ແກ່ການກ້າວຂຶ້ນສັງຄົມນິຍົມ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງລັດທິທຶນນິຍົມ.

ເຂດປົດປ່ອຍລາວ ໄດ້ຮັບການສະໜັບສະໜູນແລະຊ່ວຍ ເຫຼືອທາງດ້ານວັດ ຖຸແລະຈິດໃຈຈາກບັນດາປະເທດສັງຄົມນິຍົມ. ບັນດາປະເທດທີ່ຮັກຫອມສັນຕິພາບ ແລະ ກຳລັງທີ່ກ້າວໜ້າໃນ ໂລກ. ຕະຫຼອດໄລຍະການຕໍ່ສູ້ກູ້ຊາດ, ເຂດປົດປ່ອຍ ໄດ້ຮັບການ ຢ້ຽມຢາມຂອງບັນດາຄະນະຜູ້ແທນພັກ, ຄະນະຜູ້ແທນອົງການ ຈັດຕັ້ງມະຫາຊົນຈາກບັນດາປະເທດສັງຄົມນິຍົມ ແລະ ບັນດານັກ



ກອງປະຊຸມໃຫຍ່ຄັ້ງທີ II ຂອງພັກປະຊາຊົນປະຕິວັດລາວ
ທີ່ເຂດປົດປ່ອຍແຂວງຫົວພັນ ປີ 1972

ຂ່າວຈາກປະເທດຕ່າງໆ ທີ່ໄດ້ມາໃຫ້ກຳລັງໃຈທັງ ໄດ້ເກັບກຳສະ ພາບຄວາມເປັນຈິງແຫ່ງການຕໍ່ສູ້ອັນເປັນທຳ ຂອງປະຊາຊົນລາວ ບັນດາເຜົ່າ ເພື່ອນຳໄປເຜີຍແຜ່ໃ ຫ້ຊາວໂລກຮູ້ຈັກ ຢ່າງກ້ວາງ ຂວາງ.

6. <u>ຖານະການເມືອງຂອງເຂດວຽງຈັນ</u> .

ເຂດວຽງຈັນໄດ້ກວມເອົາເນື້ອທີ່ 1/5 ຂອງປະເທດ, ຕັ້ງ ຢູ່ເບື້ອງຕາເວັນຕົກ ແລະ ກໍ່ຢູ່ໃຕ້ການຄວບຄຸມຂອງລັດຖະບານ ຝ່າຍວຽງຈັນ. ເຂດດັ່ງກ່າວໄດ້ຖືກຫັນປ່ຽນເປັນຫົວເມືອງຂຶ້ນ ແບບໃໝ່. ພາຍຫຼັງການລັດຖະປະຫານເມື່ອວັນທີ 19 ເມສາ 1964 ຕ້ານການດຳເນີນງານຂອງລັດຖະບານປະສົມ, ທຸກວຽກ ງານຂອງລັດຖະບານໄດ້ຕົກຢູ່ໃນກຳມືຂອງພວກເຈົ້ານາຍ ແລະ ກຸ່ມນາຍທະຫານເຊິ່ງ ເຄື່ອນໄຫວພາຍໃຕ້ການຄອບງຳທາງດ້ານ ອິດທິພົນຂອງຕ່າງປະເທດ.

ທາງດ້ານຮູບການ, ອົງການປົກຄອງຝ່າຍວຽງຈັນ ໄດ້ ປະກາດ ສະແດງຄວາມເຄົາລົບນັບຖືຕໍ່ ລັດຖະທຳມະນູນ 1965 ເຊິ່ງ ອີງຕາມລັດຖະທຳມະນູນດັ່ງກ່າວ ເຈົ້າຊີວິດແມ່ນເປັນປະ ມຸກລັດ ແຕ່ໃນຕົວຈິງເຈົ້າຊີວິດ ແມ່ນບໍ່ມີອຳນາດ ບໍລິຫານ. ກຳ ລັງຝ່າຍຂວາແລະກຳລັງເປັນກາງທີ່ມີທ່າອ່ຽງຫາຕາເວັນຕົກ ໄດ້ ຕົກລົງກັນເຕົ້າໂຮມກອງທັບຂອງສອງຝ່າຍ ແລະ ອົງການປົກ

ຄອງເຂົ້າເປັນອັນດຽວ ໂດຍປາສະຈາກກຳລັງຂອງຝ່າຍແນວ ລາວຮັກຊາດ. ສ່ວນຝ່າຍແນວລາວຮັກຊາດແມ່ນໄດ້ສະແດງ ອອກແຈ້ງ ກ່ຽວກັບ ທັດສະນະຫຼັກໝັ້ນຂອງ ຝ່າຍຕົນໃນການພົບ ປະເຈລະຈາລະຫວ່າງ 3 ຝ່າຍຢູ່ທົ່ງໄຫຫີນ ເມື່ອທ້າຍເດືອນ ເມສາ, ແລະ ຢູ່ປາຮີ ເມື່ອເດືອນສິງຫາ 1964. ທັດສະນະຫຼັກ ໝັ້ນຂອງຝ່າຍແນວລາວຮັກຊາດ ແມ່ນຕ້ອງເຕົ້າໂຮມກັນໂດຍ ໃຫ້ ມີຄວາມປອດໄພ ດ້ວຍການສະເໜີໃຫ້ຕົວເມືອງຫຼວງພະບາງ ເປັນກາງ ເພື່ອສ້າງເງື່ອນໄຂໃຫ້ລັດຖະບານປະສົມ ສາມາດ ປະຕິບັດ ໜ້າທີ່ອຽກງານຕາມສັນຍາ 3 ຝ່າຍທີ່ໄດ້ຕົກລົງກັນ. ໃນດ້ານເນື້ອໃນ, ການເຕົ້າໂຮມກຳລັງຂອງສອງຝ່າຍເຂົ້າກັນນັ້ນ ແມ່ນເປັນ ໄປຕາມແຜນນະໂຍບາຍຂອງອາເມລິກາ ຄືເອົາ 2 ຕໍ່ 1. ແຕ່ວ່າ ການເຕົ້າໂຮມດັ່ງກ່າວ ຊ້ຳໄດ້ສ້າງຄວາມບໍ່ພໍໃຈ ໃຫ້ແກ່ຜູ້ນຳຂອງ ກຳລັງຝ່າຍຂວາຈຳນວນຫນຶ່ງ ອັນໄດ້ພາໃຫ້ມີ ການຂັດແຍ້ງພາຍ ໃນເພື່ອຍາດແຍ່ງເອົາຕຳແໜ່ງ ອິດທິພົນຢູ່ ກອງບັນຊາການຂອງ ກອງທັບ. ນາຍພົນພູມີ ໜໍ່ສະຫວັນ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ເຊ ^ງຫວັງຢາກໃຫ້ນາຍພົນຝ່າຍ ຕົນກຳຕຳແໜ່ງສຳຄັນ ໂດຍສະ ເພາະຕຳແໜ່ງຜູ້ບັນຊາການສູງສຸດ ແລະ ຜູ້ບັນຊາການກອງ ທັບພາກ 5, ແຕ່ຫາກບໍ່ປະສົບຜົນສຳເລັດ ຍ້ອນວ່າຜູ້ບັນຊາ ການກອງທັບພາກ 5 ຄືນາຍພົນ ນຸປະສິດ ອາໄພ, ຜູ້ນຳພາການລັດຖະປະຫານວັນທີ 19 ເມສາ 1964 ບໍ່ຍອມຂຶ້ນກັບນາຍພົນພູມີ ໜໍ່ສະຫວັນ. ດ້ວຍເຫດນີ້ ນາຍ ພົນພູມີ

ໜ່ສະຫວັນ ຈຶ່ງບໍ່ພໍໃຈ ສະນັ້ນຈຶ່ງໄດ້ດຳເນີນການເຮັດລັດ ຖະປະຫານໃນຕົ້ນເດືອນ ກຸມພາ 1965. ການລັດຖະປະຫານຄັ້ງ ນັ້ນໄດ້ປະລາໄຊ ຍ້ອນຂາດການສະໜັບສະໜູນຈາກສ່ວນໃຫຍ່ ຂອງກອງທັບ ອັນເປັນເຫດໃຫ້ນາຍພົນພູມີ ໜ່ສະຫວັນຈຳຕ້ອງໜີ ໄປອາໄສຢູ່ປະເທດໄທ.

ຈາກເຫດການດັ່ງກ່າວ ເຈົ້າສຸວັນນະພູມາ ໄດ້ປັບປຸງລັດ ຖະບານດ້ວຍການເອົາລັດຖະມົນຕີ ຈາກກຳລັງຝ່າຍຂວາເຂົ້າ ແທນພວກນາຍພົນພູມີ ໜ່ສະຫວັນ ເມື່ອເດືອນ ກໍລະກົດ 1965. ຕໍ່ມາຢູ່ວຽງຈັນ ໄດ້ມີການເລືອກຕັ້ງຜູ້ແທນລາດຊະດອນເຂົ້າ ໃນສະພາ ເຊິ່ງຖ້າອີງຕາມກົດໝາຍລັດຖະທຳມະນູນແລ້ວກໍ່ໝາຍ ເຖິງການສິ້ນສຸດຂອງລັດຖະບານປະສົມ. ໃນການເລືອກຕັ້ງດັ່ງ ກ່າວ, ບັນດາຜູ້ຕາງໜ້າແນວລາວຮັກຊາດກໍ່ບໍ່ໄດ້ເຂົ້າຮ່ວມເນື່ອງ ຈາກວ່າ ການເລືອກຕັ້ງນັ້ນ ແມ່ນຂັດກັບສັນຍາ 3 ຝ່າຍ ແລະ ສັນຍາເຊີແນວ 1962 ກ່ຽວກັບລາວ. ຜູ້ທີ່ມີສິດເລືອກ ຕັ້ງໃນຂະ ນະນັ້ນໄດ້ມີພຽງແຕ່ ຂ້າລາດຊະການ, ທະຫານ ແລະ ຕຳຫຼວດ. ຝ່າຍຂວາ ໄດ້ດຳເນີນການເລືອກຕັ້ງສະເພາະແຕ່ໃນເຂດປົກຄອງ ຂອງຕົນແບບຈຳກັດ. ສະພາຜູ້ແທນລາດຊະດອນຝ່າຍວຽງຈັນ ໄດ້ພະຍາຍາມເຄື່ອນໄຫວດ້ານການຕ່າງປະເທດ ຢ່າງຫ້າວຫັນ ເພື່ອຍາດເອົາການຊ່ວຍເຫຼືອ ທາງດ້ານເສດຖະກິດແລະການ ເມືອງຈາກບັນດາປະເທດຕາເວັນຕົກ.

ເນື່ອງຈາກວ່າການແຊກແຊງຂອງຕ່າງປະເທດ ເຂົ້າວຽກ
ງານພາຍໃນ ຂອງລາວໄດ້ສືບຕໍ່ເພີ່ມທະວີຂຶ້ນ, ດັ່ງນັ້ນຢູ່ທີ່
ເຂດວຽງຈັນຈຶ່ງໄດ້ເລີ່ມມີຂະບວນການ ຕໍ່ວ່າຕໍ່ຂານຂອງປະຊາ
ຊົນຢ່າງເປີດເຜີຍ. ວິກິດການທາງດ້ານ ເສດຖະກິດຍິ່ງໄດ້ເຮັດໃຫ້
ສະຖານະການ ພາຍໃນປະເທດຮຸດໂຊມລົງ. ສົງຄາມກາງເມືອງ
ໄດ້ແຜ່ລາມອອກໄປ ອັນໄດ້ພາໃຫ້ປະຊາຊົນທວງ ໃຫ້ມີການແກ້
ໄຂຂໍ້ຂັດແຍ້ງພາຍໃນໂດຍສັນຕິ.

ການແຊກແຊງຂອງ ຕ່າງປະເທດ ຍັງໄດ້ເຮັດໃຫ້ນາຍທະ
ຫານກອງທັບຝ່າຍຂວາພາກັນຕໍ່ສູ້ເພື່ອການຊິງດີຊິງເດັ່ນ. ນາຍ
ພົນແຕ່ລະຄົນໄດ້ພະຍາຍາມສ້າງຄວາມ ໄວ້ເນື້ອເຊື່ອໃຈໃຫ້ແກ່
ເຈົ້າໜ້າທີ່ທາງການຂອງອາເມລິກາ. ການສັບປ່ຽນຕຳແໜ່ງບັນ
ຊາ ການຕ່າງໆ ແມ່ນມີຂຶ້ນເລື້ອຍໆ. ການຕົກລົງຍົກຍ້າຍນາຍພົນ
ທ້າວມາຜູ້ບັນຊາການກອງທັບອາກາດໄປຢູ່ເສນາທິການກອງທັບ
ໄດ້ເປັນເຫດໃຫ້ມີການຂັດແຍ້ງພາຍໃນກອງທັບຢ່າງຮຸນແຮງ ອັນ
ພາໃຫ້ນາຍພົນທ້າວມາບໍ່ພໍໃຈ ແລະໄດ້ຊັກຊວນເອົານັກບິນກອງ
ທັບອາກາດຈຳນວນນຶ່ງຂັບຝູງຍົນ ເຕ-28 ໄປຖິ້ມລະເບີດໃສ່
ກອງບັນຊາການກອງທັບ ເມື່ອເດືອນຕຸລາ 1966. ການກະທຳ
ດັ່ງກ່າວບໍ່ປະສົບຜົນສຳເລັດ ດັ່ງນັ້ນນາຍພົນທ້າວມາ ພ້ອມດ້ວຍ
ລູກນ້ອງຂອງຕົນ ຈຶ່ງໄດ້ພ້ອມກັນປົບໜີໄປປະເທດໄທ.

ໃນທ້າຍປີ 1966, ສະພາຜູ້ແທນລາດຊະດອນໄດ້ຍື່ນຍັດຕິ ບໍ່ໄວ້ວາງໃຈລັດຖະບານວຽງຈັນ ດ້ວຍວ່າບໍ່ເຫັນດີນຳຮ່າງງົບ ປະມານ. ອີງຕາມລັດຖະທຳມະນູນມາດຕາ 22, ລັດຖະບານຈຳ ຕ້ອງລາອອກຈາກໜ້າທີ່ ຖ້າຫາກວ່າບໍ່ໄດ້ຮັບການໄວ້ວາງໃຈ. ແຕ່ວ່າລັດຖະບານນີ້ຍັງສືບຕໍ່ເອີ້ນຕົນເອງເປັນລັດຖະບານປະສົມຢູ່ ແລະ ໃຊ້ສິດພິເສດເຄື່ອນໄຫວ ໂດຍບໍ່ຂຶ້ນກັບການຮຽກຮ້ອງ ຂອງສະພາຜູ້ແທນ. ດ້ວຍເຫດນີ້ ອີງຕາມການສະເໜີຂອງລັດ ຖະບານໂດຍມີການເຫັນດີເຫັນພ້ອມ ຂອງສະພາລາດຊະມົນຕີ, ເຈົ້າຊີວິດຈຶ່ງໄດ້ປະກາດ ຍຸບສະພາຜູ້ແທນລາດຊະດອນອີງຕາມ ມາດຕາ 33 ຂອງລັດຖະທຳມະນູນ ຈາກນັ້ນ ລັດຖະບານ ວຽງຈັນ ຈຶ່ງໄດ້ກຳນົດການເລືອກຕັ້ງທົ່ວໄປ ເພື່ອເລືອກເອົາຜູ້ ແທນລາດຊະດອນຊຸດໃໝ່ ໃນວັນທີ 1 ມັງກອນ 1967 ໂດຍ ໃຫ້ຕຳໜວດ ແລະທະຫານເປັນຜູ້ຄວບຄຸມການໂຄສະນາຫາສຽງ ເລືອກຕັ້ງ. ໃນເທື່ອນີ້ ບັນດາຜູ້ແທນລາດຊະດອນໄດ້ ຖືກຄັດ ເລືອກໄວ້ກ່ອນລ່ວງໜ້າ ໂດຍກຸ່ມຝ່າຍຂວາ ເຊິ່ງສ່ວນໜາຍ ແມ່ນ ນັກການເມືອງ ແລະນາຍທະຫານທີ່ນິຍົມອາເມລິກາ. ນັບແຕ່ນັ້ນ ມາກຸ່ມທະຫານໄດ້ແຊກແຊງໂດຍກົງ ເຂົ້າໃນຊີວິດການເມືອງ ຂອງປະເທດ. ໃນໂອກາດດຽວກັນນີ້ ສະຫະລັດອາເມລິກາ ກໍ່ໄດ້ ດຳເນີນນະໂຍບາຍແຜ່ຂະຫຍາຍສົງຄາມ ກາງເມືອງຢູ່ລາວຢ່າງ ເປີດເຜີຍ ທັງບໍ່ໄດ້ຈຳກັດການຈັດສົ່ງອາວຸດໃຫ້ແກ່ກອງທັບຝ່າຍ ຂວາ. ຢູ່ວຽງຈັນໄດ້ມີການດຳເນີນງານ ຂອງສອງອົງການຕົ້ນຕໍ ຂອງອາເມລິກາ ຄື ອົງການຊ່ວຍເຫຼືອ "ຢູເຊດ" ແລະ ອົງການ

ສິບລາດຊະການລັບ ຂອງອາເມລິກາ "ຊີໄອເອ". ອົງການຈັດຕັ້ງດັ່ງກ່າວນັ້ນ ໄດ້ປະສານສົມທົບກັນໃນການເຮັດວຽກ ແລະ ຕິດຕໍ່ພົວພັນ ເປັນປະຈຳກັບ ສະຖານທູດອາເມລິກາ ຢູ່ວຽງຈັນ. ໃນການຊ່ວຍເຫຼືອທາງ ດ້ານການທະຫານ ແລະ ເສດຖະກິດໃຫ້ ແກ່ອົງການປົກຄອງຝ່າຍວຽງຈັນນັ້ນ, ອາເມລິກາ ໄດ້ກາຍເປັນ ຜູ້ທີ່ມີອິດທິພົນຕໍ່ການເມືອງພາຍໃນ ທັງສາມາດກົດດັນໃຫ້ລັດ ຖະບານວຽງຈັນປະຕິບັດຕາມເຈດຈຳນົງຂອງຕົນ. ນອກຈາກ ການທີ່ອົງການປົກຄອງວຽງຈັນ ຂຶ້ນກັບການຊ່ວຍເຫຼືອດ້ານເສດ ຖະກິດແລະການທະຫານແລ້ວ, ດ້ານການເງິນ, ການຄ້າ, ການ ກໍ່ສ້າງໂຄງລ່າງ ແລະ ການເຄື່ອນໄຫວອື່ນໆກໍ່ລ້ວນແລ້ວແຕ່ຢູ່ ໃຕ້ອຳນາດຂອງເງິນໂດລາ ບໍ່ວ່າການປະກອບອາວຸດ, ການເບີກ ຈ່າຍເງິນເດືອນໃຫ້ແກ່ກອງທະຫານ ກໍ່ຄືຂ້າລັດຖະການກໍ່ລ້ວນ ແຕ່ ຂຶ້ນກັບການຊ່ວຍເຫຼືອ ຂອງສະຫະລັດອາເມລິກາ.

ເຖິງວ່າ ອົງການປົກຄອງຝ່າຍວຽງຈັນ ຈະຄວບຄຸມດິນ ແດນຂອງປະເທດພຽງແຕ 1/5 ກໍ່ຕາມ ແຕ່ກໍ່ໄດ້ເອົາໃຈໃສ່ໃນ ການປັບປຸງອົງການອຳນາດສູນກາງ ກໍ່ຄືທ້ອງຖິ່ນ. ໃນນັ້ນ ໄດ້ມີ ການແບ່ງໃຫ້ມີ 16 ແຂວງຄືເກົ່າ ທັງໆທີ່ບັນດາແຂວງ ຈຳນວນ ໜຶ່ງ ໄດ້ຖືກປົດປ່ອຍໂດຍ ແນວລາວຮັກຊາດໄປແລ້ວ. ໃນເວລາທີ່ ກຳລັງຝ່າຍຂວາໄດ້ຖອຍທັບຈາກການສູ້ລົບກັນ, ພວກເຂົາ ກໍ່ໄດ້ ກວາດຕ້ອນເອົາ ປະຊາຊົນ ໄປຢູ່ເຂດທີ່ຝ່າຍຕົນ ປົກຄອງຢ່າງໜວງໜາຍ. ເພື່ອຄວບຄຸມປະຊາຊົນທີ່ຖືກກວາດ

ຕ້ອນໄປນັ້ນ,ລັດຖະບານວຽງຈັນໄດ້ສ້າງຕັ້ງອົງການປົກຄອງໃຫ້ ສຳລັບພົນລະ ເມືອງທີ່ເອີ້ນວ່າອົບພະຍົບມາຈາກແຕ່ລະແຂວງ. ໃນຈຳນວນ16ແຂວງຂອງອົງການປົກຄອງຝ່າຍວຽງຈັນກໍ່ມີບັນ ດາແຂວງທີ່ສົບ ຕໍ່ໃສ່ຊື່ ກ່ຽວກັບບັນດາແຂວງທີ່ປົກຄອງ ໂດຍແນວລາວຮັກຊາດ ເຊັ່ນວ່າ : ແຂວງຜົ້ງສາລີ, ຊຳເໜືອ, ສາລະວັນ, ອັດຕະປື ແລະອື່ນໆ. ໃນເນື້ອແທ້ແລ້ວ ກໍ່ເປັນຄື ແຂວງຢູ່ໃນແຂວງດັ່ງຕົວຢ່າງ ແຂວງຜົ້ງສາລີຕັ້ງຢູ່ແຂວງຫຼວງ ພະບາງເຊິ່ງມີພົນລະເມືອງພຽງແຕ່ບໍ່ເທົ່າໃດພັນຄົນ. ນອກນັ້ນ ແຂວງໄຊຍະບູລີຊ້ຳຖືກແບ່ງເປັນ3ແຂວງຄື: ໄຊຍະບູລີ, ປາກ ລາຍ,ຫົ້ວສາ.ອັນນີ້ກໍ່ເປັນທີ່ອະທິບາຍ ໄດ້ວ່າກຳລັງຝ່າຍຂວາໄດ້ ຈຳຕ້ອງແກ້ໄຂບັນຫາທີ່ມີໃນເຂດຂອງຕົນ, ດ້ານນຶ່ງ ແມ່ນ ເພື່ອສ້າງວຽກເຮັດງານທຳໃຫ້ແກ່ຂ້າລາດຊະການທີ່ຫວ່າງງານ. ດ້ານສອງແມ່ນເພື່ອຍາດແຍ່ງເອົາການຊ່ວຍເຫຼືອຂອງອາເມລິກາ ແລະ ຕາເວັນຕົກ ໃຫ້ຫຼາຍເອົາໄວ້ອຸດໜູນ ແລະລ້ຽງເກືອ ອັນທີ່ເອີ້ນວ່າ ພວກອົບ ພະຍົບ. ລັດຖະບານວຽງຈັນໄດ້ແຕ່ງຕັ້ງ ຜູ້ທີ່ບອກໄດ້ໃຊ້ຝັງ ເຂົ້າຮັບຕຳແໜ່ງນຳພາຢູ່ອົງການ ປົກ ຄອງທ້ອງຖິ່ນແຕ່ກໍ່ບໍ່ສາມາດທີ່ ຈະເຮັດໃຫ້ສະພາບ ການທົ່ວ ໄປມີຄວາມສະຫງົບ ປົກກະຕິໄດ້ຍ້ອນ ຄວາມຂັດແຍ້ງລະ ຫວ່າງກຸ່ມການເມືອງຕ່າງໆ. ຢູ່ທີ່ເຂດປົກຄອງຂອງຝ່າຍວຽງ ຈັນໄດ້ມີການເຮັດວຽກຂອງລະບົບສາມເຊິ່ງດຳເນີນ ມາແຕ່ສະ ໄໝການປົກຄອງຂອງຝລັ່ງ. ສາມຂອງ ອົງການປົກຄອງ ຝ່າຍວຽງຈັນ ກໍ່ແມ່ນຂຶ້ນກັບ ກົດໝາຍຄືກັບຢູ່ປະ ເທດຕ່າງໆ

ແຕ່ໃນຕົວຈິງແລ້ວແມ່ນຢູ່ ໃນກຳມືຂອງຜູ້ທີ່ມີອິດທິພົນແລະ ຄົນຮັ່ງຄົນມີ. ແມ່ນໃຜກໍ່ຕາມທີ່ຢາກນຳເອົາຄະດີຂຶ້ນ ສານຈະ ຕ້ອງຈ່າຍ ຄ່າທຳນຽມໃຫ້ສານ ໃນຈຳນວນທີ່ຄວນແລ້ວແຕ່ ຄວາມສຳຄັນຂອງຄະດີ. ຄະດີແພ່ງ ແລະ ອາຍາຫຼາຍສົມຄວນ ບໍ່ໄດ້ຮັບການ ພິຈາລະນາ ຖ້າຫາກວ່າຜູ້ກ່າວຟ້ອງບໍ່ມີເງິນພຽງພໍ.

ສະນັ້ນຊົນຊັ້ນທຸກຍາກ ຢູ່ເຂດວຽງຈັນ ຈຶ່ງຢູ່ໃນຖານະ ຫຍຸ້ງຍາກ ລຳບາກຈາກຄວາມບໍ່ເປັນທຳດັ່ງກ່າວ, ອັນທີ່ເອີ້ນກັນ ວ່າສານນັ້ນ ແມ່ນມີໄວ້ສຳລັບແຕ່ຜູ້ທີ່ມີເງິນ. ຫົວໜ້າສານນັ້ນ ອາດສາມາດ ຖືກຊື້ຈ້າງ ຫຼື ວ່າຖືກນາບຂູ່ໂດຍກຸ່ມທະຫານ, ຕຳຫຼວດ. ຄະດີ ແພ່ງແລະອາຍາຢູ່ນະຄອນວຽງຈັນໃນເວລານັ້ນ ນັບມື້ນັບເພີ່ມຂຶ້ນອັນເນື່ອງ · ມາຈາກຜົນສະທ້ອນຂອງວັດທະນະ ທຳຕາເວັນຕົກ.

ການພິຈາລະນາຄະດີບາງປະເພດແມ່ນບໍ່ສາມາດຈະເຮັດ ໃຫ້ສຳເລັດໄດ້ ດັ່ງຢູ່ໃນຫຼາຍປະເທດທີ່ຕົກເປັນຫົວເມືອງຂຶ້ນ ແບບ ໃໝ່. ຢູ່ວຽງຈັນໄດ້ມີສະຖາບັນກົດໝາຍ ແລະ ການປົກຄອງ ເຊິ່ງມີການສອນກົດໝາຍຝລັ່ງແລະກົດໝາຍລາວ. ສະຖາບັນ ດັ່ງກ່າວ ໄດ້ສ້າງນັກກົດໝາຍ ແລະນັກປົກຄອງເຊິ່ງໄດ້ຖືກນຳ ໃຊ້ເຂົ້າໃນອົງການປົກຄອງ ແລະ ສາມຕ່າງໆຂອງສູນກາງແລະ ທ້ອງຖິ່ນ.

ສະຖານະການທາງ ດ້ານການເມືອງພາຍໃນລາວ ໄດ້ພາ ໃຫ້ມີການສ້າງຕັ້ງອົງການຈັດຕັ້ງການເມືອງ ແລະ ສະມາຄົມ

ຕ່າງໆ ນອກຈາກ ບັນດາພັກການເມືອງທີ່ມີຢູ່ວຽງຈັນ, ໃນນັ້ນ ມີຄື :

- "ສະຫະພູມິນ" ຫຼືອັນທີ່ເອີ້ນວ່າ ສະໂມສອນຜູ້ຮັກຊາດ ແມ່ນອົງການຈັດຕັ້ງການເມືອງທີ່ເຕົ້າໂຮມ ລັດຖະມົນຕີບາງຄົນ, ຜູ້ແທນສະພາຈຳນວນນຶ່ງ, ນັກການທູດ, ນາຍທະຫານ ແລະ ຜູ້ຕາງໜ້າຊາວໜຸ່ມ ທີ່ປະກາດຕົນເອງວ່າ ເປັນນັກຊາດນິຍົມ, ຜູ້ຮັກຊາດ, ປະຕິບັດຕາມວິທີທາງພຸດທະສາດສະໜາ, ວ່າເດີນຕາມສາຍກາງ. ສະຫະພູມິນ ໄດ້ພະຍາຍາມທີ່ຈະແຜ່ຂະຫຍາຍອິດທິພົນໃນໝູ່ຂ້າລາດຊະການ ແລະຊາວໜຸ່ມ.

- "ແນວທາງໜຸ່ມ" ແມ່ນອົງການຈັດຕັ້ງການເມືອງທີ່ໄດ້ເຕົ້າໂຮມປັນຍາຊົນໜຸ່ມ ເພື່ອສະໜັບສະໜູນນະໂຍບາຍເປັນກາງ ແລະ ສະໜັບສະໜູນໃຫ້ມີການເຈລະຈາກັບແນວລາວຮັກຊາດ ແຕ່ຫາກມີແນວຄິດນິຍົມຕາເວັນຕົກ. ແນວທາງໜຸ່ມ ໄດ້ສະແດງທ່າທີຄັດຄ້ານຕ ່ ບັນດານັກການເມືອງອາວຸໂສ ທີ່ບ່ມີລະດັບການສຶກສາໃນການເຂົ້າຮ່ວມແກ້ໄຂບັນຫາການເມືອງຂອງຊາດ.

- "ມິດຕະສອນ" ແມ່ນອົງການຈັດຕັ້ງທີ່ເອີ້ນວ່າ ມິດອະດີດນັກສຶກສາລາວຈາກຕ່າງປະເທດ. ອົງການຈັດຕັ້ງນີ້ ແມ່ນເຕົ້າໂຮມອະດີດນັກສຶກສາລາວ ຈາກປະເທດຝລັ່ງ ແລະ ອາເມລິກາເປັນຕົ້ນຕໍ. ສະມາຊິກຂອງມິດຕະສອນໄດ້ມີບົດບາດສຳຄັນຢູ່ຕາມບັນດາກະຊວງທະບວງການ ແລະ ອົງການປົກຄອງ ເພາະວ່າ ແມ່ນຜູ້ທີ່ໄດ້ຮັບການສຶກສາສູງ ມາຈາກຕ່າງປະເທດ

ແລະ ເປັນຊ່ຽວຊານດ້ານວິຊາສະເພາະ. ໃນກິດລະບຽບຂອງ ອົງ ການຈັດຕັ້ງນີ້ ໄດ້ເວົ້າວ່າ ມິດຕະສອນ ບໍ່ແມ່ນອົງການຈັດຕັ້ງ ການເມືອງ, ວ່າແມ່ນອົງການທີ່ຕ້ອງການຢາກພັດທະນາ ເສດຖະ ກິດແລະວັດທະນະທຳຂອງປະເທດ. ແຕ່ໃນທີ່ຈິງແລ້ວມິດຕະສອນ ກໍ່ແມ່ນອົງການຈັດຕັ້ງ ການເມືອງໜຶ່ງຄືກັນ ທີ່ມີຄວາມ ພະຍາ ຍາມຢາກໃຫ້ອຳນາດລັດຕົກມາຢູ່ໃນກຳມືຂອງວິຊາການໝຸ່ມ.

ນອກຈາກ 3 ອົງການຈັດຕັ້ງທີ່ມີອິດທິພົນດັ່ງກ່າວແລ້ວ, ຢູ່ເຂດປົກຄອງຝ່າຍອຽງຈັນ ຍັງເກີດມີສະມາຄົມອື່ນໆ ຢູ່ຕາມ ແຂວງຕ່າງໆ. ສະມາຄົມດັ່ງກ່າວ ແມ່ນເຕົ້າໂຮມເອົາພຽງແຕ່ຂ້າ ລາດຊະການ ອົງການປົກຄອງ ແລະນາຍທະຫານ ຂອງແຂວງ ທີ່ຄວບຄຸມໂດຍກຳລັງຝ່າຍຂວາ. ສະມາຄົມດັ່ງກ່າວບໍ່ມີໂຄງ ການອັນລະອຽດ ເພາະຖືກສ້າງຕັ້ງຂຶ້ນມາ ອີງຕາມຄຳແນະນຳ ຂອງອົງການ ຊ.ໄອ.ເອ ເພື່ອຄວບຄຸມ, ກວດກາການເຄື່ອນ ໄຫວຂອງຂ້າລາດຊະການ ແລະ ນາຍທະຫານ ຍ້ອນຢ້ານວ່າ ຈະມີການແຊກຊຶມຂອງບັນດາຜູ້ຄົນ ທີ່ມີຄວາມກ້າວໜ້າເຮັດວຽກ ໃຫ້ແນວລາວຮັກຊາດ. ໃນຕົ້ນຊຸມປີ 1970, ການຂະຫຍາຍຕົວ ທາງການເມືອງຢູ່ພາຍໃນອົງການປົກຄອງອຽງຈັນ ໄດ້ເປັນໄປ ຢ່າງສັບສົນອັນເນື່ອງຈາກ ວ່າກຳລັງຮັກຊາດໄດ້ເຄື່ອນໄຫວບຸກ ໂຈມຕີກຳລັງ ຝ່າຍຂວາຢູ່ທຸກໆສະໜາມຮົບ.

ເພື່ອສະແດງຄວາມຈົງຮັກພັກດີຕໍ່ລາດຊະບັນລັງ ແລະ ເຄົາລົບນັບຖືລັດຖະທຳມະນູນ ເຖິງວ່າອາຍຸການແຫ່ງອຳນາດ ຂອງສະພາຜູ້ແທນລາດຊະດອນຊຸດທີ 6 ຈະສິ້ນສຸດລົງແລ້ວກໍ່

ຕາມແຕ່ກຳລັງຝ່າຍຂວາຍັງໄດ້ສືບຕ່ ຈັດການເລືອກຕັ້ງຕ່າງຫາກ ອີກ ເພື່ອເລືອກເອົາສະພາຜູ້ແທນລາດຊະດອນຊຸດທີ 7 ໂດຍ ບໍ່ ມີການເຂົ້າຮ່ວມຂອງບັນດາຜູ້ຕາງໜ້າແນວລາວຮັກຊາດ. ການ ເລືອກຕັ້ງເອົາສະພາຜູ້ແທນລາດຊະດອນຊຸດທີ 7 ໄດ້ມີຂຶ້ນໃນ ຕົ້ນ ປີ1972. ຄວາມຈິງແລ້ວສະພາຜູ້ແທນຊຸດໃໝ່ກໍ່ຄືລັດຖະບານ ຝ່າຍວຽງຈັນແມ່ນບໍ່ສາມາດທີ ່ ຈະດຳເນີນຕາມແຜນການພັດທະ ນາເສດຖະກິດຂອງຕົນເພາະວ່າ ອົງການແຫ່ງອຳນາດຂອງຝ່າຍ ວຽງຈັນແມ່ນບໍ່ສາມາດຈະດຳລົງຄົງຕົວ ຢູ່ໄດ້ໂດຍບໍ່ມີການຊ່ວຍ ເຫຼືອ ຂອງສະຫະລັດອາເມລິກາ. ຄົນທັ່ງໜ່າຍຢູ່ວຽງ ຈັນໄດ້ ເວົ້າວ່າ ໃນໄລຍະນັ້ນຢູ່ວຽງຈັນໄດ້ມີ 2 ລັດຖະບານ ຄື: ລັດຖະ ບານລາດຊະອານາຈັກລາວ ແລະ ລັດຖະບານສະຫະລັດອາເມ ລິກາ ເຊິ່ງຕາງໜ້າໂດຍເຈົ້າໜ້າທີ່ສະຖານທູດສະຫະລັດອາເມລິ ກາ ແລະ ອົງການຊ່ວຍເຫຼືອ "ຢູເຊດ" ຂອງອາເມລິກາ ຢູ່ວຽງຈັນ.

ການປະລາໄຊຂອງ ສະຫະລັດອາເມລິກາ ຢູ່ຫວຽດນາມ ບວກກັບການບຸກໂຈມຕີຂອງກຳລັງຮັກຊາດ ລາວຢູ່ສະໜາມຮົບ ຕ່າງໆນັ້ນ ໄດ້ເຮັດໃຫ້ການເຄື່ອນໄຫວຂອງ ອາເມລິກາຢູ່ລາວ ອ່ອນເພຍລົງ. ພ້ອມດຽວກັນນັ້ນ ອົງການອຳນາດລັດເຂດວຽງ ຈັນກໍ່ໄດ້ເປັນອຳມະພາດໄປ ອັນຈຳໃຫ້ກຳລັງຝ່າຍຂວາຍິນຍອມ ເຊັນ ສັນຍາກັບບັນດາຜູ້ຕາງໜ້າກຳລັງຮັກຊາດໃນວັນທີ 21 ກຸມ ພາ 1973 ຢູ່ວຽງຈັນ ວ່າດ້ວຍການຟື້ນຟູສັນຕິພາບແລະ ປະຕິບັດ ຄວາມຖືກຕ້ອງປອງດອງຊາດຢູ່ລາວ.

7. <u>ຖານະການເມືອງຂອງເຂດເປັນກາງ</u> .

ເຂດເປັນກາງແມ່ນປະກອບດ້ວຍ 2 ຕົວເມືອງ ຄື: ວຽງຈັນ ແລະ ຫຼວງພະບາງ. ເຂດເປັນກາງດັ່ງກ່າວໄດ້ຮັບ ການສ້າງຕັ້ງຂຶ້ນ ອີງຕາມສັນຍາກ່ຽວກັບການຟື້ນຟູສັນຕິພາບ ແລະ ປະຕິບັດ ຄວາມຖືກຕ້ອງປອງດອງຊາດ ທີ່ໄດ້ເຊັນກັນເມື່ອ ວັນທີ 21 ກຸມພາ 1973 ແລະ ອະນຸສັນຍາຂອງສັນຍາດັ່ງກ່າວ ທີ່ໄດ້ເຊັນກັນເມື່ອວັນທີ 14 ກັນຍາ 1973 ລະຫວ່າງຜູ້ຕາງໜ້າ ຂອງກຳລັງຮັກຊາດ ແລະ ລັດຖະບານວຽງຈັນ. ການສ້າງຕັ້ງ ເຂດເປັນກາງໃນ 2 ຕົວເມືອງໃຫຍ່ຄື ວຽງຈັນ ແລະຫຼວງພະ ບາງນັ້ນ ໄດ້ໝາຍເຖິງໄຊຊະນະອັນຍິ່ງໃຫຍ່ຂອງ ກຳລັງຮັກຊາດ ອັນປະກອບດ້ວຍ ແນວລາວຮັກຊາດ ແລະ ກຳລັງເປັນກາງຮັກ ຊາດ ເພາະວ່າຕະຫຼອດໄລຍະສົງຄາມກາງເມືອງ, 2 ຕົວເມືອງ ໃຫຍ່ດັ່ງກ່າວ ແມ່ນຢູ່ໃຕ້ການຄວບຄຸມຂອງ ລັດຖະບານວຽງຈັນ. ການປ່ຽນແປງ ໄດ້ມີຂຶ້ນ ກ່ຍ້ອນຜົນການເຈລະຈາ ແລະ ການຊັ່ງ ຊາກຳລັງຢູ່ພາຍໃນປະເທດທີ່ໄດ້ເປັນຜົນດີໃຫ້ແກ່ກຳລັງຮັກຊາດ. ການເຈລະຈາລະຫວ່າງສອງກຳລັງຕົ້ນຕໍຢູ່ລາວໃນປີ 1972 ນັ້ນ ໄດ້ສະຫລຸບດ້ວຍການ ອ່ອນຍອມຂອງກຳລັງຝ່າຍຂວາ ທີ່ບໍ່ມີ ທາງສູ້ຢູ່ໃນສະໜາມລົບ ແລະ ກໍ່ບໍ່ມີບ່ອນອີງທີ່ເຄີຍໃຫ້ການຊ່ວຍ ເຫຼືອທຸກດ້ານເໝືອນດັ່ງແຕ່ກ່ອນ. ເບິ່ງແຕ່ໃນການຕໍ່ສູ້ກັນໃນໂຕະ ເຈລະຈາ ບັນດາຜູ້ຕາງໜ້າຂອງກຳລັງຝ່າຍຂວາກໍ່ບໍ່ສາມາດ ອອກໜ້າອອກຕາ ໃນນາມຜູ້ຕາງໜ້າຂອງ ລັດຖະບານລາດຊະ ອານາຈັກ ດັ່ງທີ່ພວກເຂົາຕ້ອງການ. ຈາກນັ້ນກຳລັງຝ່າຍຂວາ ຫຼື

ອົງການປົກຄອງວຽງຈັນ ຈຶ່ງຈຳຕ້ອງໄດ້ໃສ່ຊື່ຄະນະຜູ້ແທນ ຂອງຝ່າຍຕົນ ເປັນຄະນະຜູ້ແທນຂອງລັດຖະບານວຽງຈັນ ແລະ ກໍ່ໄດ້ເຊັນສັນຍາ ແລະ ອະນຸສັນຍາ ໃນນາມຄະນະຜູ້ແທນຂອງລັດ ຖະບານວຽງຈັນ.


ສັນຍາທີ່ໄດ້ເຊັນກັນຢູ່ວຽງຈັນໃນປີ 1973ນັ້ນໄດ້ບົ່ງບອກ ຢ່າງຈະແຈ້ງ ກ່ຽວກັບການຟື້ນຟູສັນຕິພາບ ແລະ ປະຕິບັດຄວາມ ຖືກຕ້ອງປອງດອງຊາດຢູ່ລາວ. ໃນນັ້ນ ໄດ້ເນັ້ນເຖິງການຢຸດຍິງ, ການຖອນທະຫານຂອງຕ່າງປະເທດ, ຫຼັກການທົ່ວໄປໃນການ ແກ້ໄຂບັນຫາພາຍໃນໂດຍທາງການເມືອງ, ການສ້າງຕັ້ງລັດຖະ ບານປະສົມແລະຄະນະປະສົມການເມືອງ, ເຮັດໃຫ້ນະຄອນຫຼວງ ວຽງຈັນ ແລະ ນະຄອນຫຼວງພະບາງເປັນກາງ ໂດຍມີກຳລັງ ປະກອບອາວຸດທີ່ຈຳເປັນແລະ ເທົ່າທຽມກັນລະຫວ່າງສອງຝ່າຍ, ກຳໜົດໃຫ້ປະຊາຊົນມີສິດເສລີພາບ ປະຊາທິປະໄຕ ຢ່າງແທ້ຈິງ. ມາດຕາ 10 ຂອງອະນຸສັນຍາ ໄດ້ບັນຍັດໄວ້ຢ່າງລະອຽດເຖິງ ການເຮັດໃຫ້ນະຄອນຫຼວງວຽງຈັນ ແລະ ນະຄອນຫຼວງພະບາງ ເປັນກາງເຊິ່ງໃນນັ້ນໄດ້ເວົ້າເຖິງ "ການຮັບປະກັນຄວາມປອດໄພ ແລະ ສ້າງຄວາມສະດວກທຸກປະການ ໃຫ້ແກ່ການເຄື່ອນໄຫວ ຂອງລັດຖະບານປະສົມຊົ່ວຄາວແຫ່ງຊາດ ແລະ ຂອງຄະນະມົນ ຕີປະສົມການເມືອງແຫ່ງຊາດຕະຫຼອດຂອງຂ້າລາດຊະການ ແລະ ພະນັກງານທຸກຄົນຂອງສອງຝ່າຍ".

ເປັນທີ່ຊາບກັນຢູ່ທົ່ວໄປແລ້ວວ່າ ການລວມລາວປີ 1957 ແລະ ປີ 1962 ໄດ້ປະສົບກັບຄວາມຫຍຸ້ງເຫຼວ ກໍ່ຍ້ອນບໍ່ມີການຮັບປະກັນ ຄວາມປອດໄພ ໃຫ້ແກ່ບັນ ດາຜູ້ຕາງໜ້າຂອງ ກຳລັງຮັກຊາດ,ຍິ່ງກ່ວານັ້ນຍັງໄດ້ຕົກເປັນເປົ້າໝາຍຄາດຕະກຳ ແລະໝາບຂູ່ ນາໆປະການ. ຈາກບົດຮຽນໃນໄລຍະຜ່ານມານັ້ນ ຈຶ່ງໄດ້ເຮັດ ໃຫ້ກຳລັງຮັກຊາດໃຊ້ເຫດຜົນຈຳ ໃຫ້ລັດຖະບານວຽງຈັນຮັບເອົາ ເງື່ອນໄຂດັ່ງກ່າວ ເພື່ອເຮັດໃຫ້ນະຄອນວຽງຈັນ ແລະ ຫຼວງພະ ບາງເປັນກາງຢ່າງແທ້ຈິງ. ຍ້ອນແນວນັ້ນ ຈຶ່ງໄດ້ມີການເນັ້ນໃນ ມາດຕາ 10 ຂອງອະນຸສັນຍາວ່າ "ອຳນາດການປົກຄອງຂອງ ນະຄອນຫຼວງພະບາງ ແລະ ວຽງຈັນຕ້ອງປະຕິບັດສັນຍາຟື້ນ ຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດ ແລະ ລະບຽບການວ່າດ້ວຍ ການເຮັດໃຫ້ນະຄອນທັ້ງສອງເປັນກາງນີ້ ຢ່າງຖືກຕ້ອງຄົບຖ້ວນ ແລະ ເຂັ້ມງວດ, ປະຕິບັດບັນດາສິດເສລີ ພາບ ປະຊາທິປະໄຕຂອງປະຊາຊົນ ຢ່າງເຄັ່ງຄັດ".

ດັ່ງທີ່ທັ້ງສອງຝ່າຍໄດ້ຕົກລົງກັນ ເຂດເປັນກາງນັ້ນແມ່ນ ໄດ້ກຳໜົດໄວ້ໃຫ້ເປັນທີ່ປະຈຳການຂອງອົງການປະສົມສູນ ກາງ. ນະຄອນຫຼວງວຽງຈັນ ໄດ້ເປັນບ່ອນປະຈຳຂອງ ລັດຖະບານ ປະສົມ ແລະ ນະຄອນຫຼວງພະບາງແມ່ນບ່ອນ ປະຈຳການ ຂອງຄະນະມົນຕີປະສົມການເມືອງ. ເພື່ອເຮັດໃຫ້ເຂດເປັນກາງ ປະກົດເປັນຈິງຝ່າຍກຳລັງຮັກຊາດແລະ ຝ່າຍລັດຖະບານວຽງຈັນ ໄດ້ຕົກລົງສ້າງຕັ້ງ ຄະນະປະສົມສູນກາງ ເຊິ່ງປະກອບດ້ວຍທັງ 2

ພາກສ່ວນ. ເຖິງວ່າຈະມີການຫິດຂວາງຂອງພວກປະຕິການ ຈຳນວນນຶ່ງ, ແຕ່ຜູ້ຕາງໜ້າຂອງທັງສອງຝ່າຍກໍ່ໄດ້ ດຳເນີນງານ ຢ່າງມີໝາກຜົນ. ໃນໄລຍະ 5 ເດືອນທັງສອງຝ່າຍໃນຄະນະ ປະສົມສູນກາງໄດ້ສາມາດຮັບຮອງເອົາລະບຽບການ ຈຳນວນ ໜຶ່ງ ໃນການປະຕິບັດໜ້າທີ່ຮ່ວມກັນ ໃຫ້ບັງເກີດຜົນ, ທັງນີ້ກໍ່ຍ້ອນ ຄວາມເປັນເຈົ້າການ ແລະ ຄວາມພະຍາຍາມຂອງ ບັນດາຜູ້ຕາງ ໜ້າກຳລັງຮັກຊາດ. ໃນການປະຕິບັດສັນຍາ ແລະ ອະນຸສັນຍາ ດັ່ງກ່າວ ຝ່າຍກຳລັງຮັກຊາດ ແລະ ຝ່າຍລັດ ຖະບານວຽງຈັນ ໄດ້ຮັບຮອງເອົາລະບຽບການ 4 ສະບັບເຊັ່ນ: ລະບຽບການກ່ຽວ ກັບວິທີການເຮັດວຽກ, ເຄື່ອງໝາຍ ເຝືອຮັບປະກັນຄວາມປອດໄພ, ການພົວພັນ ລະຫວ່າງ ຄະນະ ປະສົມສູນກາງ ແລະ ໜ່ວຍປະສົມອື່ນໆ ຕາມຕົວເມືອງ ຂອງກຳແພງນະຄອນທັງສອງ; ລະບຽບການກ່ຽວກັບກຳລັງ ປ້ອງກັນຂອງກອງທະຫານຢູ່ນະຄອນ ວຽງຈັນ ແລະ ຫຼວງ ພະບາງ; ລະບຽບກ່ຽວກັບອຳນາດການ ປົກຄອງ ນະຄອນ ວຽງຈັນ ແລະ ຫຼວງພະບາງ; ລະບຽບການ ກ່ຽວກັບການ ຈັດຕັ້ງຕຳຫຼວດປະສົມຢູ່ນະຄອນວຽງຈັນ ແລະ ຫຼວງພະບາງ.

ອີງຕາມລະບຽບການດັ່ງກ່າວ, ທັງສອງຝ່າຍໄດ້ຕັ້ງສຳ ນັກງານເຮັດວຽກຂອງ ພວກຕົນລວມທັງສຳນັກງານຂອງ ຄະ ນະປະສົມສູນກາງ ແລະ ໜ່ວຍປະສົມຕາມຕົວເມືອງອື່ນໆ. ພ້ອມ ນັ້ນກໍ່ໄດ້ມີການຕົກລົງ ໃຊ້ທຸງສະເພາະ ເພື່ອເປັນເຄື່ອງໝາຍໃນ



ສະເດັດເຈົ້າ ສຸພານຸວົງ ໃນສະໜາມ ຕໍ່ສູ້ ກູ້ຊາດ

ການປະຕິບັດໜ້າທີ່. ສຳນັກງານຜູ້ຕາງໜ້າດັ່ງກ່າວ ກໍ່ໄດ້ຮັບອະພິ ສິດທີ່ຝ່າຍໃດຝ່າຍນຶ່ງຈະລ່ວງລ້ຳບໍ່ໄດ້.

ເພື່ອສ້າງເງື່ອນໄຂອັນສະດວກ ແລະ ມີຄວາມທ່ຽງທຳຢູ່ ສອງນະຄອນເປັນກາງນັ້ນ, ຝ່າຍກຳລັງຮັກຊາດ ແລະ ຝ່າຍລັດ ຖະບານວຽງຈັນຍັງໄດ້ຕົກລົງກັນວ່າ "ເຈົ້າຄອງກຳແພງນະຄອນ ແລະ ຮອງເຈົ້າຄອງກຳແພງນະຄອນໝວງພະບາງ ແລະ ນະ ຄອນວຽງຈັນ ແລະບັນດາເຈົ້າເມືອງ ແລະຮອງເຈົ້າເມືອງ ຂອງ ກຳແພງນະຄອນທັ້ງສອງນີ້ ໃຫ້ແມ່ນຜູ້ທີ່ເຫັນດີເຫັນພ້ອມນຳສັນ ຕິພາບ, ເອກະລາດ, ຄວາມເປັນກາງ ແລະປະຊາທິປະໄຕ ເຊິ່ງ ຄະນະປະສົມສູນກາງເຫັນດີ ເຫັນພ້ອມນຳກັນ".

ດ້ວຍຈຸດປະສົງເພື່ອຮັບປະກັນຄວາມປອດໄພສຳລັບການ ເຄື່ອນໄຫວອອກງານ ຢ່າງເປັນປົກກະຕິ ໃຫ້ແກ່ລັດຖະບານປະ ສົມຊົ່ວຄາວແຫ່ງຊາດ ແລະ ຄະນະນິຕິປະສົມການເມືອງແຫ່ງ ຊ າດ, ທັ້ງສອງຝ່າຍໄດ້ເຫັນດີເຫັນພ້ອມກັນຈັດຕັ້ງຕຳໜວດປະ ສົມຢູ່ທີ່ນະຄອນເປັນກາງທັ້ງສອງ ດ້ວຍການມີຈຳນວນພົນ ແລະ ການປະກອບເທົ່າທຽມກັນ. ຢູ່ວຽງຈັນ ກຳລັງຕຳໜວດ ຂອງແຕ່ ລະຝ່າຍແມ່ນ 1.000 ຄົນ ແລະ ໝວງພະບາງແຕ່ລະຝ່າຍແມ່ນ 500 ຄົນ. ສ່ວນກຳລັງທະຫານຂອງແຕ່ລະຝ່າຍນັ້ນກໍ່ໄດ້ມີການ ຕົກລົງດ້ວຍຈຳນວນ ແລະ ການປະກອບອາວຸດສະເໝີພາບກັນ ເຊ ັ່ນວ່າ: ແຕ່ລະຝ່າຍແມ່ນມີກຳລັງທະຫານຢູ່ວຽງຈັນ 1 ກອງ

ພັນທັງໝົດ 1.200 ຄົນ, ໃນນັ້ນ 200 ຄົນແມ່ນປະຈຳຢູ່ກອງບັນ ຊາການ, 200 ເປັນພະນັກງານຊ່ວຍວຽກ, 800 ຄົນເປັນກຳລັງ ປ້ອງກັນ. ຢູ່ ໜ່ວຍພະບາງ ແຕ່ລະຝ່າຍ ມີ ຝ່າຍລະ 2 ກອງຮ້ອຍ ເຊິ່ງມີຈຳນວນພົນທັງໝົດ 600 ຄົນ ໃນນັ້ນ 50 ຄົນປະຈຳຢູ່ກອງ ບັນຊາການ, 100 ຄົນເປັນພະນັກງານຊ່ວຍວຽກ, 450 ຄົນ ແມ່ນກຳລັງປ້ອງກັນ.

ອີງຕາມອະນຸສັນຍາ ແລະ ລະບຽບການກ່ຽວກັບການ ປ້ອງກັນຂອງກຳລັງທະຫານນັ້ນ ທັງສອງຝ່າຍໄດ້ຕົກລົງກັນ ໃຫ້ມີການປະກອບອາວຸດສຳລັບສ່ວນບຸກຄົນທະຫານ, ສຳລັບ ການປ້ອງກັນລັກສະນະລວມໝູ່ແລະ ໃຫ້ມີອາວຸດໜັກຈຳນວນນຶ່ງ. ທັງສອງຝ່າຍຈະຕ້ອງມີຈຳນວນອາວຸດ ທີ່ມີປະສິດທິພາບເທົ່າ ທຽມກັນ.ແຕ່ວ່າກຳລັງປ້ອງກັນທັງສອງຝ່າຍແມ່ນບໍ່ມີສິດທີ່ຈະປະ ກອບລົດຫຸ້ມເກາະແລະປືນໃຫຍ່ໃຫ້ຝ່າຍຕົນເອງ. ຕາມການຕົກ ລົງກັນນັ້ນກຳລັງ ປະກອບອາວຸດອື່ນໆ ລວມມີກອງທະຫານ ໜ່ວງ ສັງກັດທຸກເຫຼົ່າທະຫານຕຳໜ່ວດສະໜາມ ແລະ ອື່ນໆ ແມ່ນໃຫ້ ຖອນອອກຈາກເຂດນະຄອນທັງສອງ. ສະເພາະທະຫານ ປືນໃຫຍ່ ແລະ ທະຫານຍານຍົນກໍ່ໃຫ້ຖອນອອກໄປໄກນະຄອນ ໜ່ວງທັງ ສອງໜ່ວງກ່ວາໝູ່.

ສິ່ງສຳຄັນນັ້ນຄືວ່າ ໄດ້ມີການກຳນົດກ່ຽວກັບສິດໜ້າທີ່ ແລະ ວິທີການເຮັດວຽກຮ່ວມກັນ ລະຫວ່າງກຳລັງປ້ອງກັນ

ຂອງສອງຝ່າຍຢູ່ທີ່ສອງນະຄອນເປັນກາງ. ໃນນັ້ນ ແຕ່ລະຝ່າຍ ແມ່ນມີສິດອອກລາດຕະເວັນ ແລະ ກວດກາເພື່ອສະກັດກັ້ນທຸກ ການເຄື່ອນໄຫວທີ່ແນໃສ່ຕ້ານຄວາມສະຫງົບ ຢູ່ເຂດເປັນກາງດັ່ງ ກ່າວ. ນອກຈາກໜ້າທີ່ຮ່ວມແລ້ວ ທັງສອງຝ່າຍຍັງໄດ້ຕົກລົງ ຫ້າມທຸກໆກໍາລັງ ປະກອບອາວຸດບຸ່ກໃຫ້ລະເມີດເຂດເປັນກາງແລະ ເຂົ້າໄປເຂດປອດໄພໃນໄລຍະຫ່າງຈາກ 2 ນະຄອນ 15 ກິໂລ ແມັດ. ໃນມາດຕາ 10 ຂອງອະນຸສັນຍາຍັງໄດ້ແຈ້ງວ່າ: "ບັນດາ ກໍາລັງປະກອບອາວຸດ ແລະ ເຄື່ອງປະກອບອາວຸດ ທີ່ບໍ່ມີສິດໜ້າ ທີ່ປົກປັກຮັກສາ ແລະປ້ອງກັນນະຄອນຫຼວງພະບາງແລະນະຄອນ ວຽງຈັນນັ້ນ ຫ້າມບໍ່ໃຫ້ເຄື່ອນທີ່ຜ່ານນະຄອນທັງສອງນີ້ ເວັ້ນເສຍ ແຕ່ໃນ ກໍລະນີ ທີ່ມີຄວາມຕ້ອງການຢາກ ໃຫ້ຜ່ານໄປສະໜາມບິນ ຂອງນະຄອນທັງສອງເພື່ອໄປບ່ອນອື່ນ, ແຕ່ກໍ່ຕ້ອງແມ່ນຄະນະ ປະສົມສູນກາງເພື່ອປະຕິບັດສັນຍາເປັນຜູ້ກໍານົດໃຫ້." ໃນນັ້ນຍັງ ໄດ້ມີການ "ຫ້າມບໍ່ໃຫ້ເຮືອບິນສູ້ຮົບ, ບໍ່ວ່າຊະນິດໃດບິນເວົ້ນເຂດ ທ້ອງຟ້າຂອງນະຄອນທັງສອງ..... ເພື່ອຮັບປະກັນການດໍາລົງ ຊີວິດຂອງຕົນຢູ່ໃນ ນະຄອນທັງສອງນີ້ ຝ່າຍບັນດາກໍາລັງຮັກ ຊາດໄດ້ໃຊ້ພາຫານະລໍາ ລຽງຂົນສົ່ງຕ່າງຫາກ ແລະ ມີເສັ້ນທາງ ລໍາລຽງທາງໜ້າດິນແລະທາງອາກາດໂດຍ ແມ່ນຄະນະປະສົມ ສູນກາງກໍາໝົດໃຫ້.....ຢູ່ໃນນະຄອນທັງສອງ, ຝ່າຍບັນດາກໍາ ລັງ ຮັກຊາດມີບໍລິເວນບ້ານພັກ ແລະ ບໍລິເວນທີ່ຕັ້ງກໍາລັງຂອງ ຕົນ ຕ່າງຫາກ. ຢູ່ສະໜາມບິນຂອງນະຄອນທັງສອງ, ໃຫ້ຝ່າຍ

ບັນດາ ກຳລັງຮັກຊາດມີບໍລິເວນສະເພາະເຮືອບິນ ຂອງຝ່າຍຕົນ ທັງເປັນ ບ່ອນຢູ່ຂອງກຳລັງເວນຍາມຂອງເຮືອບິນຂອງຕົນ."

ໃນການປະຕິບັດສັນຍາ ແລະ ອະນຸສັນຍາ ດັ່ງກ່າວນັ້ນ, ອຳນາດການປົກຄອງຂອງ 2 ນະຄອນເປັນກາງ ແມ່ນມີໜ້າທີ່ ປະສານງານ ແລະ ແຈ້ງການກ່ຽວກັບທຸກສະພາບການຕໍ່ຄະນະ ປະສົມສູນກາງ. ເຈົ້າຄອງກຳແພງນະຄອນ ແລະ ຮອງເຈົ້າຄອງ ກຳແພງນະຄອນ ກໍ່ຄືເຈົ້າເມືອງແລະຮອງເຈົ້າເມືອງຂອງສອງ ນະຄອນເປັນກາງ ຍັງມີໜ້າທີ່ເຜີຍແຜ່ສັນຍາ, ອະນຸສັນຍາ ແລະ ທຸກໆລະບຽບການ ເພື່ອເຮັດໃຫ້ 2 ນະຄອນເປັນກາງ ລວມທັງ ເອກະສານກ່ຽວກັບສິດປະຊາທິປະໄຕຂອງປະຊາຊົນ ເພື່ອເຮັດ ໃຫ້ພົນລະເມືອງຂອງນະຄອນວຽງຈັນ ແລະ ຝ່ອງພະບາງເຂົ້າ ໃຈ ແລະພ້ອມພຽງກັນປະຕິບັດໃຫ້ປະກົດເປັນຈິງ.

ໃນຕົວຈິງ, ເນື້ອໃນເອກະສານທີ່ໄດ້ເຊັນກັນລະຫວ່າງ ຝ່າຍກຳລັງຮັກຊາດ ແລະ ຝ່າຍລັດຖະບານວຽງຈັນແມ່ນໄດ້ຮັບ ການປະຕິບັດເກືອບໝົດ ຍ້ອນວ່າ ຝ່າຍກຳລັງຮັກຊາດ ໄດ້ໃຊ້ ຄວາມອົດທົນພະຍາຍາມ ເພື່ອປົກປັກຮັກສາສັນຕິພາບ, ໄດ້ຂົນ ຂວາຍຍາດແຍ່ງ ເພື່ອຊຸກຍູ້ ໃຫ້ຝ່າຍລັດຖະບານວຽງຈັນປະຕິບັດ ທຸກເງື່ອນໄຂທີ່ກຳໜົດໄວ້. ຍິ່ງກ່ວານັ້ນ ປະຊາຊົນຢູ່ພາຍໃນ ປະເທດ ກໍ່ຄືປະຊາຊົນ ບັນດາປະເທດສັງຄົມນິຍົມ ແລະ ບັນດາ ປະເທດທີ່ຮັກໜອມສັນຕິພາບ ແລະ ຄວາມເປັນທຳຢູ່ທົ່ວໂລກ ກໍ່ ລ້ວນແຕ່ໄດ້ໃຫ້ການສະໜັບສະໜູນຢ່າງຕັ້ງໜ້າ. ລັດຖະບານປະ

ສົມແລະຄະນະມົນຕີປະສົມການເມືອງ ກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ເຊິ່ງປະກອບດ້ວຍ ບັນດາຜູ້ຕາງໜ້າຂອງ ທັງສອງຝ່າຍບິນຟື້ນ ຖານຄວາມສະເໝີພາບກັນ. ທັງສອງອົງການປະສົມຂັ້ນສູງເຊິ່ງ ມີທີ່ຕັ້ງປະຈຳຢູ່ 2 ນະຄອນເປັນກາງນັ້ນ ກໍ່ເຄື່ອນໄຫວອຽກງານ ເພື່ອປະຕິບັດໂຄງການການເມືອງອີງຕາມສັນຍາ ແລະ ອະນຸສັນ ຍາທີ່ໄດ້ເຊັນກັນ.

ເມື່ອສົມທຽບໃສ່ສັນຍາວຽງຈັນປີ 1957 ແລະ ສັນຍາເຊ ແນວປີ 1962 ແລ້ວ, ສັນຍາວຽງຈັນສະບັບລົງວັນທີ 21 ກຸມພາ 1973 ໄດ້ກາຍເປັນເອກະສານອັນສຳຄັນທາງປະຫວັດສາດທີ່ໄດ້ ເຮັດໃຫ້ຄວາມປອງດອງຊາດ ບັງເກີດຜົນເປັນຈິງທັງໄດ້ສ້າງ ເງື່ອນໄຂທີ່ເອື້ອອຳນວຍ ໃຫ້ແກ່ການດຳເນີນການປະຕິວັດຊາດ ປະຊາທິປະໄຕຢູ່ລາວ. ສ່ວນສະຫະລັດອາເມລິກາ ທີ່ໄດ້ຮັບການ ປະລາໄຊຈາກສົງຄາມຢູ່ຫວຽດນາມ ກໍ່ຈຳຕ້ອງ ໄດ້ຍິນຍອມໃຫ້ ມີການແກ້ໄຂບັນຫາລາວບິນຟື້ນຖານສັນຍາ ແລະ ອະນຸສັນຍາ ກ່ຽວກັບການຟື້ນຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງ ປອງດອງຊາດຢູ່ລາວ ແລະ ໄດ້ຈຳຕ້ອງຖອນທີ່ປຶກສາຂອງຕົນ ແລະ ທະຫານຮັບຈ້າງຂອງໄທອອກຈາກລາວ. ສັນຍາວຽງຈັນ ດັ່ງກ່າວ ໄດ້ກາຍເປັນ ເອກະສານ ທາງກົດໝາຍ ທີ່ໄຂຊ່ອງທາງ ໃຫ້ກຳລັງຮັກຊາດ ນຳເອົາກຳລັງປະກອບອາວຸດຂອງຕົນເຂົ້າ ມາໃນເຂດຝ່າຍກົງກັນຂ້າມ ເປັນຕົ້ນແມ່ນຢູ່ທີ່ນະຄອນເປັນກາງ: ວຽງຈັນ ແລະ ຫຼວງພະບາງ. ເຂດເປັນກາງທີ່ໄດ້ປະກົດຕົວຂຶ້ນຢູ່

ລາວນັ້ນໄດ້ໝາຍເຖິງໄຊຊະນະ ອັນໃຫຍ່ຫຼວງຂອງບັນດາກຳລັງ ຮັກຊາດໃນການຕໍ່ສູ້ຕ້ານການຮຸກຮານຂອງຕ່າງປະເທດເພື່ອກ້າວ ໄປສູ່ເສັ້ນທາງສັນຕິພາບ,ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ.

IV

ภามสะถาปะมา

สาทาละมะลัด ปะชาทิปะไต ปะชาชีมลาว

1. <u>สะพาอะภามในไลยะข้ามผ่าม</u> .

ตะฑอดไลยะฑายๆปีแห่งภามต่ำสู้ อันยืดเยื้อยาวนาม ของปะชาชีมลาว เพื่ออิดสะละพาบ, เอกะลาด และเอกะพาบแห่งชาดนั้น, ยู่ที่ดินแดนลาอ, นับแต่ฮุมปี 1940 มาเถิงฮุมปี 1970 ได้มีภามร่อมปะสีมละหว่างบันดาก๋ำลังภามเมือง 3 ถั้ง และสิงคามภางเมืองยู่พายใม ปะเทด ก็ได้ดำเมินไปเป้ม 3 ไลยะ, แต่ทัง 3 ไลยะดั่งก่าอนั้ม ก็ล้อมแต่ได้ชี้ให้เห็มเถิงภามป่รมแปง และ วิวัดทะนาภามอันเป้มผีมด[1]ให้แก่ฝ่ายก๋ำลังรักชาดเชิ่งได้ยืดถือความเป้มท๋ำที่มีจุดหมาย และ โคงภามดำเมินงามอันได้สัง ลอมเอิาถอามมุ้งมาดปาถะหนาของ ปะชาชีมลาอ บันดาเผิาเผื่อพาละกิดสันติพาบ, เอกะลาด, ปะชาทิปะไต, เอกะพาบ และ วัดทะนาถาวอม.

สันยา และ อะนุสันยาอรงจัม ก่รอกับภามฟื้มฟูสันติพาบ และปะติบัดถอามถืกต้องปองดองชาดนั้นได้พา ไปเถิงภามส้างตั้งเขดเป้มกาง, จากมั้มจึ่งได้ปะกีดมี 3 เขด

ການປົກຄອງທີ່ມີລະບອບການເມືອງ ແລະ ສັງຄົມແຕກຕ່າງກັນ. ການສ້າງຕັ້ງອົງການ ລັດປະສົມສູງສຸດໃນວັນທີ 5 ເມສາ 1974 ຄືລັດຖະບານປະສົມຊົ່ວຄາວ ແລະ ຄະນະມົນຕີປະສົມການເມືອງ ນັ້ນແມ່ນອົງການປົກຄອງສູງສຸດທີ 3ຊຶ່ງເປັນອົງການທີ່ດຳ ເນີນ ບົດບາດລະຫວ່າງກາງເພື່ອເຕົ້າໂຮມຄວາມເປັນເອກະພາບ ຂອງ ລັດລາວ. ສອງອົງການອຳນາດລັດ ປະສົມສູງສຸດດັ່ງກ່າວໄດ້ຖືກ ຮັບຮູ້ວ່າເປັນອົງການເອກະລາດ. ເຖິງວ່າ ຈະຖືກຮັບຮອງເອົາ ໂດຍເຈົ້າຊີວິດ ແຕ່ກໍ່ບໍ່ຈຳເປັນທີ່ຈະຕ້ອງຜ່ານຄວາມໄວ້ວາງໃຈ ຂອງສະພາຜູ້ແທນລາດຊະດອນຕາມລັດຖະທຳມະນູນ. ຜົນສຳ ເລັດທີ່ມີຄວາມໝາຍປະຫວັດສາດນັ້ນ ບໍ່ພຽງແຕ່ສ່ອງແສງໃຫ້ ເຫັນເຖິງໝາກຜົນແຫ່ງການຕໍ່ສູ້ປະຕິວັດເທົ່ານັ້ນ, ແຕ່ຫາກຍັງ ເປັນຝົ້ນຖານທາງກົດໝາຍ ເພື່ອການຄົ້ງຕົວ ໃນສະພາວະການ ໃໝ່ຂອງການປະຕິວັດ. ສະນັ້ນ, ການສ້າງຕັ້ງອົງການລັດປະສົມ ສູງສຸດ ດັ່ງກ່າວຢູ່ເຂດເປັນກາງຄື ຢູ່ນະຄອນຫຼວງວຽງຈັນ ແລະ ນະຄອນຫຼວງພະບາງນັ້ນ ຍິ່ງໄດ້ເຮັດໃຫ້ກຳລັງຮັກຊາດຢູ່ໃນ ທ່າ ໄດ້ ປຽບຂຶ້ນກຳລັງຝ່າຍວຽງຈັນ. ເປັນອັນແນ່ນອນວ່າ ກຳລັງ ຂອງ ຝ່າຍວຽງຈັນໄດ້ມີຄວາມຂົມຂື່ນທີ່ສຸດ ທີ່ໄດ້ຍິນຍອມຕາມ ເງື່ອນໄຂຂອງຝ່າຍກຳລັງຮັກຊາດ ເພື່ອເຮັດໃຫ້ນະຄອນຫຼວງ ວຽງຈັນ ແລະ ຫຼວງພະບາງເປັນກາງ. ດ້ວຍເຫດນີ້ ກຳລັງຮັກ ຊາດ ທີ່ຢູ່ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ຈຶ່ງ ໄດ້ຈັບເອົາໂອກາດທີ່ເອື້ອອຳນວຍນັ້ນຊຸກຍູ້ການຕໍ່ສູ້ທາງ ການ ເມືອງຂອງບັນດາຊັ້ນຄົນຕ່າງໆຢູ່ເຂດເປັນກາງ ແລະ ເຂດ

ຂອງລັດຖະບານວຽງຈັນ ສົມທົບກັບການຕໍ່ສູ້ ທາງກົດໝາຍຢູ່ອົງ ການປະສົມສູງສຸດ ດ້ວຍຈຸດປະສົງໝັ້ນ ໃຫ້ກຳລັງຝ່າຍຂວາປະ ຕິບັດ ຢ່າງເຂັ້ມງວດ ແລະ ເຄົາລົບນັບຖືສັນຍາທີ່ໄດ້ເຊັນກັນ. ໃນຕົ້ນ ເດືອນເມສາ 1974, ຢູ່ທີ່ວຽງຈັນ, ລັດຖະບານ ປະສົມໄດ້ຮັບ ຮອງເອົາໂຄງການດຳເນີນງານຂອງ ລັດຖະບານ ເຊິ່ງບັນດາຜູ້ ຕາງໜ້າຂອງກຳລັງຮັກຊາດເປັນຜູ້ສະເໜີອອກ. ໂຄງການດຳ ເນີນງານດັ່ງກ່າວ ປະກອບມີ 10 ຂໍ້, ໃນນັ້ນ ໄດ້ບັນຍັດ ບັນດາຂໍ້ຄວາມຂອງ ສັນຍາວຽງຈັນ ທີ່ກ່ຽວຂ້ອງ ກັບໜ້າທາມເຮັດວຽກ ຢ່າງເປັນເອກະພາບພາຍໃນລັດຖະບານ. ເນື້ອໃນສຳຄັນໃນນັ້ນ ແມ່ນໄດ້ເນັ້ນ ເຖິງການເຜີຍແຜ່ ແລະ ອະທິບາຍຈິດໃຈຂອງສັນ ຍາກ່ຽວກັບການຟື້ນຟູສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງ ປອງດອງຊາດໃຫ້ຂາລາດຊະການ, ທະຫານ, ຕຳຫຼວດ ແລະພົນ ລະເມືອງລາວທຸກຊັ້ນຄົນ ເພື່ອໃຫ້ຮູ້ຈັກຊົມໃຊ້ສິດເສລີພາບ, ປະຊາທິປະໄຕ , ແລະ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ ແລະ ສັງຄົມ ຂອງປະເທດ.

ລັດຖະບານປະສົມຊົ່ວຄາວ ແມ່ນປະກອບດ້ວຍລັດຖະມົນ ຕີ ແລະລັດຖະມົນຕີຊ່ວຍ 25 ທ່ານ ອີງຕາມອະນຸສັນຍາຂອງ ສັນຍາວຽງຈັນ. ສະເດັດເຈົ້າ ສຸວັນນະພູມາ ເຊິ່ງຖືກເລືອກຕັ້ງ ເອົາເປັນນາຍົກລັດຖະມົນຕີນັ້ນ ບໍ່ໄດ້ນັບເຂົ້າໃນ ບັນດາຜູ້ຕາງໜ້າ ຂອງທັງ 2 ຝ່າຍ ເຊິ່ງມີຈຳນວນເທົ່າທຽມກັນ. ຝ່າຍກຳລັງຮັກ

ຊາດ ແລະຝ່າຍລັດຖະບານວຽງຈັນ ລ້ວນແລ້ວແຕ່ມີຈຳນວນລັດຖະມົນຕີຝ່າຍລະ 11 ທ່ານແລະລັດຖະມົນຕີຊ່ວຍວ່າການຝ່າຍລະ 12 ທ່ານ. ຍັງມີລັດຖະມົນຕີ 2 ທ່ານເຊິ່ງແຕ່ລະຝ່າຍ ເປັນຜູ້ສະເໜີເອົາຈາກ ບັນດາຜູ້ຊົງຄຸນອຸດທິ ທີ່ເຫັນດີເຫັນພ້ອມຕໍ່ສັນຕິພາບ, ເອກະລາດ, ເປັນກາງ ແລະ ປະຊາທິປະໄຕ.

ຢູ່ທີ່ໝວງພະບາງ, ໃນທ້າຍເດືອນ ເມສາ 1974 ຄະນະມົນຕີປະສົມການເມືອງກໍ່ໄດ້ໄຂກອງປະຊຸມສະໄໝທີ່ຫນຶ່ງ ເຊິ່ງໄດ້ ມີ ການພິຈາລະນາມະໂຍບາຍພາຍໃນ ແລະ ຕ່າງປະເທດຂອງ ລາວລວມທັງລະບຽບການ ເຮັດວຽກຂອງຄະນະມົນຕີປະສົມ ການເມືອງ.ອີງຕາມອະນຸສັນຍາ ຂອງສັນຍາວຽງຈັນຄະນະ ມົນຕີປະສົມການເມືອງ ແມ່ນປະກອບດ້ວຍ 42 ທ່ານ. ສະເດັດເຈົ້າສຸພານຸວົງເຊິ່ງເປັນປະທານຂອງສູນກາງ ແນວລາວ ຮັກຊາດ ໄດ້ຮັບ ເລືອກໃຫ້ເປັນປະທານ, ສ່ວນຮອງ ປະທານນັ້ນ ໄດ້ຕົກລົງກັນໃຫ້ ມີ 2 ທ່ານ ເຊິ່ງຕາງໜ້າໃຫ້ຝ່າຍກຳລັງຮັກຊາດ ແລະຝ່າຍກຳລັງວຽງຈັນ. ສຳລັບສະມາຊິກນັ້ນ ທັງສອງ ຝ່າຍແມ່ນໄດ້ຝ່າຍລະ 16 ທ່ານ. ນອກນັ້ນຍັງມີອີກ 16 ທ່ານ ເຊິ່ງໄດ້ຮັບການຄັດ ເລືອກ ເອົາຈາກບັນດາ ຜູ້ຊົງຄຸນອຸດທິ ທີ່ຕໍ່ສູ້ເພື່ອສັນຕິພາບ, ເອກະລາດ, ຄວາມເປັນກາງ ແລະ ປະຊາ ທິປະໄຕ.

ຄວາມຈິງແລ້ວ ຄະນະນິຕິປະສົມການເມືອງທີ່ໄດ້ຮັບການສ້າງຕັ້ງຂຶ້ນ ນັ້ນແມ່ນ ເຮັດໜ້າທີ່ຊີ້ວຄາວ ແທນສະພາຜູ້ແທນລາດຊະດອນ ໃນໄລຍະລໍຖ້າ ການແກ້ໄຂບັນຫາການເມືອງ ອີງຕາມສັນຍາວຽງຈັນ. ດັ່ງນັ້ນ ການຈັດຕັ້ງຂອງຄະນະນິຕິປະສົມການເມືອງ ຈຶ່ງປະກອບມີ 6 ກຳມາທິການ; ກຳມາທິການເລຂານຸການ; ກຳມາທິການການເມືອງ, ກົດໝາຍ ແລະ ການເລືອກຕັ້ງທົ່ວໄປ; ກຳມາທິການຮັກສາຄວາມສະຫງົບ ແລະປ້ອງກັນປະເທດ; ກຳມາທິການກິດຈະການຕ່າງປະເທດ ແລະ ການຊ່ວຍເຫຼືອຂອງຕ່າງປະເທດ; ກຳມາທິການເສດຖະກິດ ແລະ ການຄັງ; ກຳມາທິການສຶກສາ ແລະ ວັດທະນະທຳ.

ດ້ວຍການເປັນເຈົ້າການເພື່ອຢາກໃຫ້ສັນຍາ ແລະ ອະນຸສັນຍາວຽງຈັນໄດ້ຮັບການປະຕິບັດ ບັນດາຜູ້ຕາງໜ້າກຳລັງຮັກ ຊາດ ຈຶ່ງໄດ້ອອກຂໍ້ສິເສີມອັນ ໄດ້ເຮັດໃຫ້ຄະນະນິຕິປະສົມການເມືອງ ຮັບຮອງເອົາໂຄງການສ້າງສັນຕິພາບ, ເອກະລາດ, ເປັນກາງ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ ພ້ອມກັນນັ້ນກໍ່ຍັງໄດ້ຮັບຮອງເອົາຂໍ້ກຳນົດກ່ຽວກັບສິດເສລີພາບ ປະຊາທິປະໄຕ ຂອງພົນລະເມືອງລາວ. ໃນຕໍ່ມາ ເອກະສານດັ່ງກ່າວກໍ່ໄດ້ຖືກປັບປຸງໃຫ້ເປັນໂຄງການການເມືອງ 18 ຂໍ້ ແລະ ຂໍ້ກຳໜົດຊົ່ວຄາວກ່ຽວກັບສິດເສລີພາບ ປະຊາທິປະໄຕ ຂອງພົນລະເມືອງລາວ ເຊິ່ງໄດ້ຖືກຮັບຮອງເອົາຢ່າງເປັນທາງການ ໃນສະໄໝປະຊຸມເທື່ອທີ 2 ຂອງຄະນະນິຕິປະສົມການເມືອງໃນເດືອນ

ທັນວາ 1974. ບັນດາເອກະສານດັ່ງກ່າວ ໄດ້ສັງລວມ ເອົາຈິດ ໃຈ, ເນື້ອໃນຂອງສັນຍາເຊີແນວ 1962 ກ່ຽວກັບລາວ, ສັນຍາ ວຽງຈັນປີ 1973, ໂຄງການການເມືອງຂອງແນວລາວຮັກຊາດ ປີ 1968 ແລະ ເອກະສານອື່ນໆ ຂອງແນວລາວຮັກຊາດ ເຊິ່ງ ໄດ້ເນັ້ນເຖິງບັນຫາເຊັ່ນ: ຄວາມເປັນເອກະພາບ, ຄວາມປອງ ດອງຊາດ; ການຕໍ່ສູ້ຕ້ານລັດທິລ່າເມືອງຂື້ນແບບເກົ່າ, ລັດທິລ່າ ເມືອງຂື້ນແບບໃໝ່, ຈັກກະພັດອາເມລິກາ; ການປົກປັກຮັກສາ ສັນຕິພາບ, ເອກະລາດ ແລະ ອະທິປະໄຕ; ປະຕິບັດສິດປະຊາ ທິປະໄຕ; ພັດທະນາເສດຖະກິດ-ສັງຄົມ, ວັດທະນະທຳ; ພົວພັນ ກັບທຸກໆປະເທດໂດຍບໍ່ຈຳແນກລະບອບສັງຄົມ; ຍົກລະດັບຊີວິດ ການເປັນຢູ່ຂອງປະຊາຊົນ; ຮັບເອົາການຊ່ວຍເຫຼືອຈາກທຸກໆ ປະ ເທດຢ່າງບໍ່ມີເງື່ອນໄຂ. ສິ່ງດັ່ງກ່າວນັ້ນ ກໍ່ແມ່ນແນໃສ່ເຮັດໃຫ້ປະ ເທດລາວມີສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ.

ໂຄງການການເມືອງ 18 ຂໍ້ແລະຂໍ້ກຳນົດຊີ້ຄາວ່າ ດ້ວຍສິດເສລີພາບ ປະຊາທິປະໄຕຂອງພົນລະເມືອງລາວ ໄດ້ຮັບ ການສະໜັບສະໜູນຢ່າງກ້ວາງຂວາງ ໃນທົ່ວປະເທດ ເພາະວ່າ ຂໍ້ຄວາມທີ່ໄດ້ບັນຍັດໄວ້ກໍ່ ລ້ວນແລ້ວແຕ່ໄດ້ຕອບສະໜອງຄວາມ ມຸ້ງຫວັງ ແລະ ຜົນປະໂຫຍດຂອງທຸກໆຊັ້ນຄົນ. ອີງຕາມມາດຕາ 7 ຂອງອະນຸສັນຍາວຽງຈັນ. ລັດຖະບານປະສົມ ແລະ ຄະນະນິ ຕິປະສົມການເມືອງ ແມ່ນມີໜ້າທີ່ປຶກສາຫາລື ກັນກ່ຽວກັບບັນຫາ

ທີ່ກ່ຽວຂ້ອງກັບນະໂຍບາຍພາຍໃນ ແລະນະໂຍບາຍຕ່າງປະເທດ. ຄະນະມົນຕີປະສົມການເມືອງ ເປັນຜູ້ໃຫ້ການຊ່ວຍເຫຼືອ ລັດຖະ ບານປະສົມ ກໍ່ຄືທັງສອງຝ່າຍໃນການປະຕິບັດສັນຍາທີ່ໄດ້ເຊັນ ກັນ ເພື່ອບັນລຸຄວາມຖືກຕ້ອງປອງດອງຊາດ, ພ້ອມນັ້ນ ກໍ່ຍັງມີ ສິດແກ້ໄຂ ເພີ່ມເຕີມກົດໝາຍ ແລະ ລະບຽບການກ່ຽວກັບການ ເລືອກຕັ້ງທົ່ວໄປເລືອກເອົາຜູ້ແທນລາດຊະດອນ ແລ້ວສ້າງຕັ້ງລັດ ຖະ ບານເອກະພາບແຫ່ງຊາດ.

ຢູ່ສອງນະຄອນເປັນກາງ, ອິດທິພົນຂອງຝ່າຍກຳລັງຮັກ ຊາດນັບມື້ນັບເພີ່ມທະວີຂຶ້ນ ໃນໝູ່ມະຫາຊົນ. ກຳລັງຂອງຝ່າຍ ຂວາ ບໍ່ວ່າຈະຢູ່ພາຍໃນ ຫຼື ນອກປະເທດ ແມ່ນໄດ້ຮັບຮູ້ເຖິງໄຊຊະ ນະຂອງກຳລັງຮັກຊາດ. ຍ້ອນເຫດນີ້, ພວກເຂົາ ຈຶ່ງໄດ້ພະຍາ ຍາມສ້າງຄວາມປັ່ນປ່ວນ ແລະ ຂັດຂວາງການປະຕິບັດສັນຍາ ແລະ ອະນຸສັນຍາວຽງຈັນ. ຄືກັນກັບເມື່ອກ່ອນ, ກຳລັງຝ່າຍຂວາ ໄດ້ໃຊ້ເລ່ລ່ຽມເກົ່າ ຂອງອົງການປົກຄອງວຽງຈັນໂດຍນຳໃຊ້ສະ ພາຜູ້ແທນລາດຊະດອນ ເປັນເວທີໂຄສະນາໃສ່ຮ້າຍປ້າຍສີຕ່ານ ອັນທີ່ເອີ້ນວ່າ ການນາບຂູ່ຂອງລັດທິກອມມູນິດຢູ່ ສປປ ລາວ.

ໃນເດືອນ ພຶດສະພາ 1974. ສະພາຜູ້ແທນລາດຊະດອນ ຝ່າຍວຽງຈັນ ໄດ້ສະແດງອອກເຖິງເຈດຕະນາທີ່ຈະຫວ່ານໃຫ້ສະ ມາຊິກລັດຖະບານປະສົມຂອງ ຝ່າຍວຽງຈັນເຮັດລາຍງານ ແລະ ອະພິປາຍຕໍ່ສະພາຜູ້ແທນລາດຊະດອນ ດັ່ງທີ່ກຳໜົດໄວ້ໃນລັດ

ຖະທຳມະນູນຂອງລາດຊະອານາຈັກລາວ. ເມື່ອງຈາກວ່າ ສະ ມາຊິກລັດຖະບານປະສົມຂອງ ຝ່າຍກຳລັງຮັກຊາດ ໄດ້ສູ້ຊົນຕໍ່ວ່າ ຕ່ຂານ, ເຈົ້າຊີວິດຈຶ່ງໄດ້ລົບລ້າງສະໄໝປະຊຸມນັ້ນ. ແຕ່ເຖິງຢ່າງ ໃດກໍ່ຕາມພວກຜູ້ແທນລາດຊະດອນຂອງສະພາຝ່າຍວຽງຈັນ ບໍ່ ຢຸດເຊົາໃນຄວາມພະຍາຍາມກີດຂວາງແລະລົບກວນ, ດັ່ງນັ້ນ ບັນດາຜູ້ນຳຂອງຝ່າຍກຳລັງຮັກຊາດ ຈຶ່ງໄດ້ຊີ້ແຈງເຫດຜົນໃຫ້ ເຈົ້າຊີວິດ ຈົນໄດ້ເຫັນດີເຫັນພ້ອມ ຍຸບສະພາຜູ້ແທນລາດຊະດອນ ຂອງອົງການປົກ ຄອງວຽງຈັນໃນຕົ້ນປີ 1975.

ຖ້າຫາກວ່າ ອິດທິພົນຂອງ ຝ່າຍກຳລັງຮັກຊາດໄດ້ເຕີບ ໃຫ່ຍຂະຫຍາຍຕົວຢ່າງບໍ່ຢຸດຢັ້ງນັ້ນກໍ່ຍ້ອນວ່າ ແນວທາງການຕໍ່ ສູ້ໃນຕະຫຼອດໄລຍະຜ່ານມາ ແມ່ນຖືກຕ້ອງແລະເປັນທຳ. ເນື້ອໃນ ແລະຈິດໃຈສັນຍາ ແລະ ອະນຸສັນຍາວຽງຈັນ ກໍ່ຄື ໂຄງການການ ເມືອງ 18 ຂໍ້ຂອງຄະນະນິນຕິປະສົມການເມືອງ, ໂຄງການດຳ ເນີນງານຂອງລັດຖະບານປະສົມຊົ່ວຄາວ ແລະ ຂໍ້ກຳນົດຊົ່ວ ຄາວກ່ຽວກັບສິດເສລີພາບ ປະຊາທິປະໄຕ ຂອງພົນລະເມືອງ ລາວນັ້ນ ແມ່ນລ້ວນແລ້ວແຕ່ສອດຄ່ອງ ກັບຜົນປະໂຫຍດຂອງທຸກ ຊັ້ນຄົນ ແລະ ສະພາບຄວາມເປັນຈິງຢູ່ລາວ. ກຳລັງຮັກຊາດ ໄດ້ສ້າງຮາກຖານການເມືອງຢ່າງໜັກແໜ້ນໃນເຂດປົດປ່ອຍ ເຊິ່ງ ປະຊາຊົນໄດ້ຮັບສິດເປັນເຈົ້າ, ໄດ້ປັບປຸງແລະສ້າງກຳລັງໃຫ້ເຂັ້ມ ແຂງໃນແຕ່ລະໄລຍະ, ໄດ້ສ້າງຄວາມສາມັກຄີປອງຊົນທັງຊາດ ໂດຍເອົາໃຈໃສ່ເປັນພິເສດ ໃນການເຕົ້າໂຮມຊົນຊາດ ຊົນເຜົ່າ.

ຈາກນັ້ນຈະເຫັນໄດ້ວ່າ ພະນັກງານ, ນັກລົບ ແລະປະຊາຊົນ ແມ່ນ ເຊື່ອມຊຶມກ່ຽວກັບຈຸດໝາຍການຕໍ່ສູ້, ໄດ້ເສີມຂະຫຍາຍມູນເຊື້ອ ຮັກຊາດ, ສາມັກຄີກັນແໜ້ນ, ຮູ້ຈັກສ້ຽງເສີມຈັດຕັ້ງຄວາມຮຸນແຮງ ຂອງປະຊາຊົນ ຮູ້ເຕົ້າໂຮມກຳລັງ ສຸມໃສ່ສັດຕູຕົວຕົ້ນ. ສ່ວນຢູ່ ເຂດການປົກຄອງຂອງຝ່າຍວ່ຽງຈັນນັ້ນ, ຟື້ນຖານການເມືອງ, ເສດຖະກິດ, ວັດທະນະທຳ, ການທະຫານ ໄດ້ອ່ອນເພຍລົງ ຍ້ອນ ການປະລາໄຊຂອງສະຫະລັດອາເມລິກາຢູ່ຫວຽດນາມ ແລະ ກຳ ປູເຈຍ. ກຳລັງຝ່າຍວຽງຈັນຄອນແຄນ ແລະ ບໍ່ມີຈິດໃຈຢາກຕໍ່ສູ້ ເພາະການຊົ່ງຊາກຳລັງ ຢູ່ພາຍໃນປະເທດ ແມ່ນມີຜົນດີໃຫ້ແກ່ ກຳລັງຮັກຊາດ. ປະຊາຊົນຢູ່ໃນເຂດປົກຄອງ ຂອງຝ່າຍວຽງຈັນ ກໍ່ຄືຢູ່ທີ່ນະຄອນເປັນກາງຄືວຽງຈັນ ແລະ ໜ່ວງພະບາງນັ້ນ ໄດ້ ມີການເປ່ືອໜ່າຍຕໍ່ລະບອບການເມືອງ-ສັງຄົມທີ່ຖືກຄອບງຳໂດຍ ຕ່າງປະເທດ ດັ່ງນັ້ນ ຈ່ຶງບ່ອາດຈະອົດທົນຢູ່ພາຍໃຕ້ການປົກຄອງ ຕາມຮູບແບບເກົ່າເຊ່ິງໃນນັ້ນ ພວກເຈົ້ານາຍຂອງຝ່າຍວຽງຈັນ ກໍ່ບ່ສາມາດຈະຄອບຄຸມສະຖານະການ ແລະ ສືບຕໍ່ປົກຄອງແບບ ເກົ່າໄດ້ອີກ ຍ້ອນວ່າພາຍໃນກຳລັງຂອງຝ່າຍຕົນໄດ້ຖືກຜັນ ແຍກ, ປະຊາຊົນສ່ວນໜ່ວງໜ່າຍໄດ້ຫັນໄປສະໜັບສະໜູນກຳລັງຮັກຊາດ ທີ່ຍຶດໝັ້ນ ໃນເຫດຜົນ ແລະ ຄວາມຈ່ິງໃຈໃນການປະຕິບັດສັນຍາ ແລະ ອະນຸສັນຍາກ່ຽວກັບການຟື້ນຟູສັນຕິພາບ ແລະ ປະຕິບັດ ຄວາມຖືກຕ້ອງ ປ່ອງດອງຊາດ ໃຫ້ປະກົດເປັນຈ່ິງ ເພ່ືອຄວາມ ເປັນເອກະພາບຂອງຊາດ.

๒. ການລຸກຮືຂຶ້ນຂອງປະຊາຊົນແລະການສະຖາປະນາ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ.

ເລີ່ມແຕ່ຕົ້ນປີ 1975 ມາ, ການຕໍ່ສູ້ທາງການເມືອງເພື່ອ ປັບປຸງອົງການອຳນາດລັດປະສົມສູງສຸດ ເພື່ອປະຕິບັດໂຄງການ ການເມືອງ 18 ຂໍ້ ແລະ ຂໍ້ກຳນົດກ່ຽວກັບສິດເສລີພາບປະຊາ ທິປະໄຕຂອງພົນລະເມືອງລາວ ໄດ້ສືບຕໍ່ຂະຫຍາຍຕົວຢ່າງເປັນ ຂະບວນ. ເອກະສານດັ່ງກ່າວໄດ້ກາຍເປັນສິ່ງປະກອບສຳລັບ ປຸກລະດົມມະຫາຊົນ ໃນການເຄື່ອນໄຫວ ທາງການເມືອງຕ້ານ ພວກປະຕິການ, ກຸ່ມອຳນາດສິດຂຸນເສິກ ເພື່ອອິດສະລະພາບ, ຄວາມເປັນເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມ ກ້າວໜ້າທາງສັງຄົມ.

ເຖິງວ່າຝ່າຍອະນຸຈັນ ຈະໃຊ້ຄວາມພະຍາຍາມສະກັດກັ້ນ ປານໃດກໍ່ຕາມ ແຕ່ວ່າຜູ້ຄົນທີ່ກ້າວໜ້າໄດ້ນັບມື້ນັບເພີ່ມທະວີຂຶ້ນ ແລະ ໄດ້ເຂົ້າຂ້າງຝ່າຍກຳລັງ ຮັກຊາດໃນການຕໍ່ສູ້ຮ່ວມກັນ ເພື່ອ ປັບປຸງສັນຕິພາບ ແລະ ປະຕິບັດຄວາມຖືກຕ້ອງປອງດອງຊາດ. ທາງດ້ານພະນັກງານ, ທະຫານ, ຕຳຫຼວດຂອງຝ່າຍກຳລັງຮັກ ຊາດ ທີ່ເຂົ້າຮ່ວມບັນດາອົງການປະສົມ ແມ່ນມີຄວາມໝັ້ນແໜ້ນ ທາງການເມືອງ ແລະ ອອກແຮງຢ່າງເຕັ້ມທີ່ເພື່ອປ້ອງກັນ ລັດຖະ ບານປະສົມ ແລະ ຄະນະນິຕິປະສົມການເມືອງໃຫ້ມີຄວາມ

ປອດໄພ, ພ້ອມນັ້ນກໍ່ໄດ້ອີງໃສ່ພື້ນຖານທາງກົດໝາຍຂອງສັນ ຍາວຽງຈັນໃນການຂົນຂວາຍ, ຊີ້ແຈງໃຫ້ປະຊາຊົນທຸກຊັ້ນຄົນ ມີ ຄວາມເຂົ້າໃຈກ່ຽວກັບທັດສະນະທ່າທີຂອງກຳລັງຮັກຊາດ. ພ້ອມ ດຽວກັນນັ້ນ ຢູ່ວຽງຈັນຍັງໄດ້ມີການພິມຈຳໜ່າຍໜັງສືພິມ "ສຽງປະຊາຊົນ" ເຊິ່ງເປັນປາກກະບອກສຽງຂອງຄະນະບໍລິ ຫານງານສູນກາງພັກປະຊາຊົນປະຕິວັດລາວ. ໜັງສືພິມ "ສຽງ ປະຊາຊົນ" ໄດ້ຖືກແຈກຢາຍໄປທົ່ວເຂດປົກຄອງຂອງຝ່າຍວຽງ ຈັນອັນໄດ້ຮັບຄວາມນິຍົມຈາກປະຊາຊົນຢ່າງກວ້ວງຂວາຍ ເພາະວ່າ ມັນໄດ້ຊ່ວຍໃຫ້ປະຊາຊົນເຫັນໄດ້ສະພາບຄວາມເປັນຈິງທາງການ ເມືອງຢູ່ພາຍໃນປະເທດ. ເນື່ອງຈາກວ່າ ການເຂົ້າໃຈກ່ຽວກັບ ສະພາບບ້ານເມືອງໄດ້ນັບມື້ນັບເພີ່ມທະວີຂຶ້ນ, ປະຊາຊົນຄົນ ງານ, ກຳມະກອນ, ຊາວໜຸ່ມ, ນັກສຶກສາ, ນັກຮຽນ ແລະ ອື່ນໆ ທີ່ມີຄວາມຕື່ນຕົວ ທາງການເມືອງໄດ້ພາກັນສ້າງຕັ້ງອົງການຈັດ ຕັ້ງສັງຄົມ ແລະ ມະຫາຊົນ ເຊິ່ງປະກອບມີ 21 ອົງການ. 21 ອົງການດັ່ງກ່າວ ໄດ້ເຕົ້າໂຮມກັນເຂົ້າ ເປັນຂະບວນການດຽວ ໂດຍໃຊ້ຄຳຂວັນທີ່ກ້າວໜ້າໃນການຕໍ່ສູ້ລວມຕ້ານຈັກກະພັດ ແລະ ຕ້ານພວກປະຕິການລາວ. ພ້ອມດຽວກັນນັ້ນ 21 ອົງການຍັງ ໄດ້ຕໍ່ສູ້ເອົາສິດເສລີພາບ ປະຊາທິປະໄຕຈາກອົງການປົກຄອງ ຝ່າຍວຽງຈັນ ໂດຍອີງໃສ່ໂຄງການການເມືອງ 18 ຂໍ້ ແລະຂໍ້ກຳ ນົດກ່ຽວກັບສິດເສລີພາບ ປະຊາທິປະໄຕຂອງພົນລະເມືອງລາວ, ຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ, ລົງໂທດພວກທີ່ສໍ້ລາດບັງ ໜວງ, ຂັບໄລ່ຂ້າລາດຊະການປະຕິການອອກຈາກອົງການອຳ

ນາດລັດ, ລົບລ້າງກຳລັງພິເສດຂອງ "ຊີ.ໄອ.ເອ", ລົບລ້າງອົງ ການ "ຢູເຊດ" ຂອງອາເມລິກາ ແລະ ທວງໃຫ້ຖອນທີ່ປຶກສາ ແລະຊ່ຽວຊານອາເມລິກາອອກຈາກລາວ. 21 ອົງການດັ່ງກ່າວ ໄດ້ຊຸກຍູ້ປຸກລະດົມການ ເດີນຂະບວນປະທ້ວງຢ່າງແຂງແຮງ ແລະອີງໃສ່ທິດທາງຂອງແນວລາວຮັກຊາດ ເພື່ອເຄື່ອນໄຫວ. ໃນ ໄລຍະດຽວກັນນັ້ນ ອົງການຈັດຕັ້ງມະຫາຊົນຂອງກຳລັງຮັກຊາດ ເຊັ່ນ: ກຳມະບານ, ຊາວໜຸ່ມ, ແມ່ຍິງກໍໄດ້ອອກເຄື່ອນໄຫວ ແລະ ປະສານສົມທົບພ້ອມ ທັງມອບໝາຍໜ້າທີ່ໃໝ່ໃຫ້ແກ່ 21 ອົງການ ສືບຕໍ່ປຸກລະດົມຊັ້ນຄົນຕ່າງໆ ໃນການຮ່ວມມືຍຶດອຳນາດຈາກ ພວກຝ່າຍຂວາມາມີປະຊາຊົນ. ເຫດການທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ຢູ່ນະຄອນຫຼວງວຽງຈັນນັ້ນ ໄດ້ກາຍເປັນຕົວຢ່າງທີ່ພາ ໃຫ້ບັນ ດາຊັ້ນຄົນ ແລະ ປະຊາຊົນລາວຢູ່ແຂວງອື່ນໆໃນເຂດປົກຄອງ ຂອງຝ່າຍວຽງຈັນ ໄດ້ລຸກຮືຂຶ້ນ ຢ່າງເປັນຂະບວນ ແລະ ໄດ້ສືບ ຕໍ່ຕ້ານພວກຜູ້ນຳ ຂອງອຳນາດການປົກຄອງ ທ້ອງຖິ່ນທີ່ເປັນປະ ຕິການເພື່ອຄວາມເປັນທຳ. ການເດີນຂະບວນປະທ້ວງໄດ້ເກີດຂຶ້ນ ໄປທົ່ວເຖິງຖັນແຖວກອງທັບ ແລະ ຕຳໜວດຂອງອົງການປົກ ຄອງວຽງຈັນເຊິ່ງໄດ້ປະຕິເສດ ໃນການປະຕິບັດຄຳສັ່ງຂອງຜູ້ ບັນຊາການຂອງຕົນທີ່ບອກໃຫ້ໃຊ້ກຳລັງປາບປາມ ຂະບວນການ ເມືອງດັ່ງກ່າວ.ຍິ່ງກ່ວານັ້ນທະຫານ ແລະ ຕຳໜວດຍັງ ໄດ້ທວງເອົາ ຄວາມເປັນທຳຈາກ ພວກນາຍທະ ຫານປະຕິການ. ຍ້ອນເຫດການ ທີ່ເກີດຂຶ້ນ ແລະ ແຜ່ລາມອອກໄປຢ່າງ ກ້ວາງຂວາງ, ກຳລັງຂອງຝ່າຍຂວາ ຈຶ່ງບໍ່ມີ ຄວາມສາມາດ

ທີ່ຈະປັບປຸງອົງການປົກຄອງຂອງພວກຕົນ. ຈາກສະພາບດັ່ງກ່າວ, ລັດຖະບານປະ ສົມຈຶ່ງໄດ້ຖືເອົາໂອກາດນີ້ ປົດເຂ່ຍພວກຂ້າລາ ຊະການທີ່ມີທ່າທີປະຕິການ ອອກຈາກ ກະວົງທະບວງກົມຕ່າງໆ.

ໃນໂອກາດວັນສາທິນຂອງຊາວຜູ້ອອກແຮງງານຄື ວັນທີ 1 ພຶດສະພາ, ກຳລັງຮັກຊາດໄດ້ອອກຂໍ້ລິເລີ່ມຜ່ານສະຫະພັນ ກຳມະບານລາວ ໂດຍໄດ້ຮຽກຮ້ອງໄປຍັງຄົນງານ, ຂ້າລາດຊະ ການ, ນັກສຶກສາ, ນັກຮຽນແລະອື່ນໆ ໃຫ້ເດີນຂະບວນແລະ ຈັດຕັ້ງການໂຮມຊຸມນຸມ ເຊິ່ງໃນນັ້ນໄດ້ມີບັນດາຜູ້ຕາງໜ້າຂອງ ອົງການຈັດຕັ້ງ ທີ່ກ້າວໜ້າຕ່າງໆອອກຄຳເຫັນ ສະໜັບສະໜູນ ໂຄງການການເມືອງຂອງຄະນະນິນຕິປະສົມການເມືອງ ແລະ ໂຄງການດຳເນີນງານຂອງລັດຖະບານປະສົມ, ພ້ອມນັ້ນ ກໍ່ເຜີຍ ແບໂຫດກຳຂອງພວກຜູ້ນຳປະຕິການຂອງກຳລັງຝ່າຍຂວາ. ບັນ ດາຜູ້ຄົນທີ່ເຂົ້າຮ່ວມ ໃນການເດີນຂະບວນ ໄດ້ຍ່າງຕາມຖະໜົນ ສາຍສຳຄັນໃນນະຄອນວຽງຈັນ ພ້ອມທັງຖືແຜ່ນປ້າຍຄຳຂວັນ ຮຽກຮ້ອງໃຫ້ ຂັບໄລ່ພວກລັດຖະນິນຕິປະຕິການ ອອກຈາກລັດ ຖະບານປະສົມ ແລະ ພວກນາຍພົນປະຕິການອອກຈາກກອງ ທັບ. ຂະບວນການເດີນຂະບວນປະທ້ວງດັ່ງກ່າວ ໄດ້ເຮັດໃຫ້ພວກ ຫົວໂປ່ຂອງຝ່າຍຂວາມີຄວາມຢ້ານກົວ ແລະ ເສຍຂວັນຍ້ອນບໍ່ມີ ກຳລັງໃດທີ່ຈະປ້ອງກັນແລະ ຮັບປະກັນຕໍ່ຄວາມປອດໄພໃນຊີວິດ ຂອງພວກຕົນ, ດັ່ງນັ້ນຈຶ່ງໄດ້ພາກັນປົບໜີໄປທີ່ປະເທດໄທ.ຕໍ່ຈາກ ນັ້ນກໍ່ໄດ້ມີພວກຜູ້ນຳປະຕິການອື່ນໆ ຟ້າວໜີຕາມກັນໄປ.ສ່ວນທີ່

ປົກສາດ້ານການທະຫານ ແລະ ພະນັກງານອົງການຈັດຕັ້ງຕ່າງໆ ຂອງອາເມລິກາຢູ່ລາວ ກໍ່ໄດ້ຮີບຮ້ອນເດີນທາງອອກຈາກລາວ, ມີພຽງແຕ່ ພະນັກງານທູດຂອງ ສະຖານທູດອາເມລິກາຈຳນວນ ນ້ອຍນຶ່ງທີ່ຍັງຢູ່ເຄື່ອນໄຫວວຽກງານທາງການທູດເທົ່ານັ້ນ.

ດ້ວຍຈຸດປະສົງເພື່ອທັນເທ ເຈົ້າຊີວິດ ອອກຈາກເຫດການ ດັ່ງກ່າວ, ຄະນະບໍລິຫານງານສູນກາງແນວລາວຮັກຊາດ ຈຶ່ງ ໄດ້ເຊີນເພີ່ນພ້ອມດ້ວຍສະມາຊິກຄະນະລັດຖະບານປະສົມ ແລະ ຄະນະນິຕິປະສົມການເມືອງ ຈາກກຳລັງຝ່າຍຂວາ ໄປຢ້ຽມ ຢາມເມືອງ ວຽງໄຊ-ເຂດປົດປ່ອຍຢ່າງເປັນທາງການ ໃນທ້າຍ ເດືອນ ເມສາ 1975. ໃນໄລຍະທີ່ເຈົ້າຊີວິດຍັງຢູ່ຢ້ຽມຢາມເຂດປົດ ປ່ອຍນັ້ນ, ຄະນະບໍລິຫານງານສູນກາງພັກ ປະຊາຊົນປະຕິວັດ ລາວກໍ່ໄດ້ຮັບຮອງເອົາມະຕິ ໃຫ້ສົ່ງກຳລັງກອງທັບປົດປ່ອຍປະ ຊາຊົນລາວ ຢ່າງຮີບດ່ວນເຂົ້າສູ່ຕົວເມືອງໃຫຍ່ຂອງ ຝ່າຍກົງກັນ ຂ້າມຄືອຽງຈັນ. ປາກເຊ, ສະຫວັນນະເຂດ ແລະອື່ນໆ. ກຳລັງ ທະຫານໄດ້ຖືກຈັດສົ່ງເຂົ້າ ບັນດາຕົວເມືອງໃຫຍ່ດັ່ງກ່າວ ເລີ່ມ ຈາກວັນທີ 6 ພຶດສະພາ 1975 ເພື່ອໝົບກຳລັງທະຫານຂອງ ຝ່າຍຂວາ. ໂດຍຈັບເອົາໂອກາດພາຍຫຼັງທີ່ ສີສຸກ ນະຈຳ ປາສັກ, ລັດຖະມົນຕີກະຊວງປ້ອງກັນປະເທດ ຂອງກຳລັງຝ່າຍຂວາໄດ້ ບິນໜີໄປຕ່າງປະເທດຍ້ອນຢ້ານຂະບວນການປະທ້ວງ ຂອງມວນ ຊົນ, ທ່ານ ນາຍພົນຄຳອ້ວນ ບຸບຜາ ເຊິ່ງແມ່ນຕົວແທນ ຂອງກຳລັງຮັກຊາດ ໃນຖານະລັດຖະມົນຕີຊ່ວຍວ່າການ ຈຶ່ງໄດ້

ສະເໜີຕໍ່ ເຈົ້າສຸວັນນະພູມາ ນາຍົກລັດຖະມົນຕີ ລັດຖະບານ ປະສົມໃຫ້ເພີ່ມມອບສິດອຳນາດ ໃຫ້ຕົນເປັນຜູ້ຮັບຜິດຊອບໂດຍ ກົງຮອບ ດ້ານກອງທັບແຫ່ງຊາດຝ່າຍລັດຖະບານ ວຽງຈັນ. ຈາກນັ້ນ ທ່ານ ນາຍພົນ ຄຳອ້ວນ ບຸບຜາ ກໍ່ໄດ້ອອກ ຄຳຮຽກຮ້ອງ, ຖະແຫຼງການ ແລະ ຄຳສັ່ງໃຫ້ກຳລັງຝ່າຍຂວາ ຢູ່ໃຕ້ການບັງຄັບບັນຊາຂອງຕົນ, ບໍ່ໃຫ້ເຄື່ອນຍ້າຍກອງທັບ, ບໍ່ໃຫ້ ຕ້ານປະຊາຊົນ, ພ້ອມນັ້ນກໍ່ ໄດ້ຊັກຊ້ອນເອົານາຍທະຫານ ປະ ຕິການອອກຈາກຄະນະຮັບຜິດ ຊອບທີ່ສຳຄັນແລະເອົານາຍທະ ຫານຂອງຝ່າຍກຳລັງຮັກຊາດ ມາຮ່ວມບັນຊາ ແລະ ໄດ້ສັ່ງໃຫ້ ເອົາອາວຸດເຂົ້າສາງ. ຕໍ່ມາກໍ່ໄດ້ມີ ການຈັດຕັ້ງສຳມະນາໃຫ້ບັນ ດານາຍທະຫານຂອງຝ່າຍວຽງຈັນ. ເຫດການດັ່ງກ່າວນັ້ນໄດ້ ກາຍເປັນຜົນສຳເລັດອັນໃຫຍ່ຫລວງ ສຳລັບກຳລັງຮັກຊາດ ເພາະ ວ່າກອງກຳລັງທະຫານຂອງຝ່າຍວຽງຈັນບໍ່ໄດ້ຂັດຄຳສັ່ງ ແລະ ຕ້ານຕົນ. ດ້ວຍການຮຽກຮ້ອງຂອງມວນ ຊົນທີ່ລຸກຮືຂຶ້ນ ເຕົ້ນ ຂະບວນປະນາມພວກປະຕິການ ແລະສະໜັບສະໜູນຝ່າຍ ກຳລັງຮັກຊາດນັ້ນ ກອງກຳລັງທະຫານຂອງ ກອງທັບປົດ ປ່ອຍປະຊາຊົນລາວກໍ່ໄດ້ເຂົ້າໄປ ຍັງທຸກໆແຂວງຂອງຝ່າຍ ວຽງຈັນເຊິ່ງລ້ອມແລ້ວແຕ່ໄດ້ຮັບຄຳຊົມເຊີຍ ແລະ ຂໍ່ານັບ ຮັບຕ້ອນ ຢ່າງ ອົບອຸ່ນຈາກປະຊາຊົນທັງໝົດ.

ໃນທ້າຍເດືອນພຶດສະພາ 1975 ທຸກໆແຂວງກໍ່ໄດ້ຕົກຢູ່ ພາຍໃຕ້ການຄວບຄຸມຂອງກຳລັງຮັກຊາດ. ເຂດເປັນກາງກໍ່ໄດ້

ໝົດຄວາມໝາຍໄປໃນຕົວ. ກຳລັງທະຫານ ແລະຕຳຫຼວດປະສົມ ໃນ 2 ນະຄອນຄື ວຽງຈັນ ແລະຫຼວງພະບາງ ກໍ່ໄດ້ຖືກປະກາດ ໃຫ້ຍຸບຕົວໃນເດືອນກໍລະກົດ ໂດຍລັດຖະບານປະສົມ. ໃນເດືອນ ສິງຫາ 1975, ທົ່ວເຂດຂອງອຳນາດການປົກຄອງຂອງຝ່າຍ ວຽງຈັນ ແມ່ນໄດ້ຮັບການປົດປ່ອຍຢ່າງສົມບູນ ເຊິ່ງໃນນັ້ນ ອົງ ການອຳ ນາດລັດເກົ່າຂອງລັດຖະບານວຽງຈັນ ແມ່ນໄດ້ຖືກລົບ ລ້າງແລ້ວ ກໍ່ໄດ້ມີການສ້າງຕັ້ງຄະນະກຳມະການປົກ ຄອງປະຕິ ວັດອັນປະກອບດ້ວຍບັນດາຕົວແທນຂອງປະຊາຊົນຜູ້ກ້າວໜ້າ.

ສະພາບການລຸກຮືຂຶ້ນຢູ່ທົ່ວປະເທດໄດ້ຢຸດຕິລົງດ້ວຍການ ປົດປ່ອຍປະເທດຊາດ ຢ່າງສົມບູນອອກຈາກເງື່ອມມືຂອງ ພວກ ຕ່າງປະເທດແລະບໍລິວານຂອງພວກເຂົາ ອັນໄດ້ເຮັດໃຫ້ສະພາບ ການແບ່ງເຂດແດນຂອງປະເທດສິ້ນສຸດລົງ. ປະເທດລາວໄດ້ ຮັບ ການທ້ອນໂຮມໃຫ້ເປັນລັດເອກະພາບໃນທີ່ສຸດ,ໃນໄລຍະດັ່ງກ່າວ, ອົງການປະສົມສູງສຸດຍັງສືບຕໍ່ດຳເນີນງານຢູ່. ບັນດາຜູ້ຕາງໜ້າ ຂອງອົງການປົກຄອງຝ່າຍວຽງຈັນ ບໍ່ໄດ້ໂຕນໜີໄປຕ່າງປະເທດ ໝົດທຸກຄົນ,ຍັງມີຈຳນວນໜ້ອຍສົມຄວນທີ່ຢາກຕໍ່ສູ້ເພື່ອໃຫ້ ອົງ ການປົກຄອງຝ່າຍວຽງຈັນຄົງຕົວຢູ່ຕໍ່ໄປ. ພວກນີ້ຖືວ່າພວກປະ ຕິການໄດ້ໂຕນໜີໄປແລ້ວ, ສະນັ້ນຈຶ່ງຖືຕົນເອງວ່າເປັນຕົວແທນ ໃຫ້ ແກ່ອົງການປົກຄອງຝ່າຍວຽງຈັນທີ່ຕ້ອງໄດ້ຮັບຜົນປະໂຫຍດ ໃນການປົກຄອງລັດເອກະພາບ. ແຕ່ວ່າອຳນາດທັງໝົດໄດ້ຕົກ ຢູ່ໃນກຳມືຂອງປະຊາຊົນ ທີ່ຢູ່ພາຍໃຕ້ການນຳພາຂອງພັກປະຊາ


ຊົນປະຕິວັດລາວ ເຊິ່ງໄດ້ອອກຈາກຖານະນຳພາປິດລັບມາ ປະ ກົດ ຕົວຢ່າງເປີດເຜີຍ.

ຕໍ່ບັນດາຂ້າລາດຊະການເກົ່າຂອງອຳນາດການປົກຄອງ ຂອງຝ່າຍອຽງຈັນນັ້ນ, ຝ່າຍກຳລັງຮັກຊາດ ໄດ້ດຳເນີນການຈັດ ຕັ້ງສຳມະນາທາງການເມືອງ ເພື່ອສຶກສາອົບຮົມເຂົ້າເຈົ້າ ໃຫ້ຮັບ ເອົາສະພາບຄວາມເປັນຈິງຂອງປະເທດຊາດ ແລະ ຮ່ວມມືກັບ ອຳນາດຂອງປະຊາຊົນ.

ໃນວັນທີ 5 ຕຸລາ 1975 ຄະນະມົນຕີປະສົມການເມືອງ ແຫ່ງຊາດ ແລະ ລັດຖະບານປະສົມຊົ່ວຄາວແຫ່ງຊາດ ໄດ້ຮັບ ຮອງເອົາລະບຽບການຊົ່ວຄາວ ກ່ຽວກັບການຈັດຕັ້ງສະພາຜູ້ ແທນປະຊາຊົນ ແລະ ຄະນະອຳນາດການປົກຄອງຂັ້ນຕ່າງໆ ຄືຂັ້ນແຂວງ ຫຼື ກຳແພງນະຄອນ, ຂັ້ນເມືອງ ຫຼື ເທດສະບານ ແຂວງ, ຂັ້ນຕາແສງ ຫຼື ເທດສະບານເມືອງ ແລະລະບຽບການຊົ່ວ ຄາວກ່ຽວກັບການເລືອກ ຕັ້ງສະພາຜູ້ແທນປະຊາຊົນ ແລະ ຄະນະ ກຳມະການປົກຄອງໃນ 3 ຂັ້ນເຊັ່ນດຽວກັນ. ອີງໃສ່ລະບຽບການ ຊົ່ວຄາວດັ່ງກ່າວ ການເລືອກຕັ້ງໄດ້ດຳເນີນໄປໃນຂອບເຂດທົ່ວ ປະເທດ ແລະໄດ້ສຳເລັດຜົນໃນເດືອນພະຈິກ 1975. ເປັນອັນວ່າ ອົງການປົກຄອງເກົ່າຢູ່ຕາມ ທ້ອງຖິ່ນແມ່ນໄດ້ຖືກລົບລ້າງໄປຢ່າງ ສິ້ນເຊີງ. ຈາກນັ້ນ ອຳນາດການປົກຄອງໃໝ່ຢູ່ຕາມທ້ອງຖິ່ນກໍ່ ໄດ້ຮັບການສ້າງຕັ້ງຂຶ້ນ ຜ່ານຈາກການເລືອກຕັ້ງ ເຊິ່ງໄດ້ເປັນ ຄວາມໝາຍອັນໃຫຍ່ຫຼວງ ໃນຊີວິດຂອງຊາດ. ນີ້ກໍ່ນັບວ່າເປັນ

ເທື່ອທຳອິດໃນປະຫວັດສາດຂອງລາວ ທີ່ປະຊາຊົນໄດ້ເຂົ້າຮ່ວມ ການເລືອກຕັ້ງແບບປະຊາທິປະໄຕ. ບັນດາຜູ້ແທນປະຊາຊົນໄດ້ ຖືກເລືອກມາຈາກ ບັນດາຜູ້ຕາງໜ້າຂອງ ບັນດາຊົນຊາດ ຊົນເຜົ່າ ແລະຊັ້ນຄົນໃນລາວ ຢ່າງກ້ວາງຂວາງ.

ການປ່ຽນແປງຢ່າງໃຫຍ່ໜວງໃນກົງຈັກຂອງລັດນັ້ນ ໄດ້ ມີຂົ້ນຍ້ອນໄຊຊະນະຂອງກຳລັງການປະຕິວັດຢູ່ລາວ ເຊິ່ງບໍ່ອາດ ຈະຂະໜາຍຕົວ ໄປຄຽງຄູ່ກັບການດຳລົງຄົງຕົວຂອງ ລະບອບ ລາຊາທິປະໄຕໄດ້. ດ້ວຍເຫດນີ້ ຄວາມຮຸນແຮງທາງການເມືອງ ຂອງມວນຊົນໃນໄລຍະນັ້ນ ໄດ້ດຳເນີນໄປດ້ວຍການຮຽກຮ້ອງ ໃຫ້ມີການລົບລ້າງທຸກລະບຽບການຈັດຕັ້ງອັນເກົ່າ ລວມທັ້ງອຳ ນາດການປົກຄອງຂອງ ລະບອບພະມະຫາກະສັດ. ໃນເວລາ ດຽວກັນ, ລັດຖະບານປະສົມຊ໋ວຄາວແລະຄະນະມົນຕີປະສົມ ການເມືອງຊ໋ວຄາວ ກໍ່ບໍ່ອາດຈະສືບຕໍ່ຄົງຕົວໃນສະພາບດັ່ງກ່າວ ນັ້ນ. ໂດຍເຫັນສະພາວະຄວາມເປັນຈິງໃນໄລຍະໃໝ່, ກຳລັງຮັກ ຊາດ ຈຶ່ງໄດ້ສະເໜີໃຫ້ຈັດກອງປະຊຸມຮ່ວມລະຫວ່າງຄະນະມົນຕີ ປະສົມການເມືອງຊ໋ວຄາວ ແລະລັດຖະບານປະສົມຊ໋ວຄາວຢູ່ທີ່ ເມືອງວຽງໄຊເພື່ອຮຽກໂຮມກອງປະຊຸມໃຫ່ຍ ບັນດາຜູ້ແທນປະ ຊາຊົນທົ່ວປະເທດໃນການພິຈາລະນາບັນຫາຂອງຊາດ. ກອງປະ ຊຸມຮ່ວມລະຫວ່າງອົງການປະສົມສູງສຸດທັງ 2 ນັ້ນໄດ້ປຶກສາຫາ ລືກັນ ແລະໄດ້ໃຫ້ການສະຫລຸບວ່າບັນດາຂໍ້ສະເໜີແລະ ຄຳຮຽກ ຮ້ອງຂອງປະຊາຊົນທົ່ວປະເທດນັ້ນແມ່ນສົມເຫດສົມຜົນ ແລະ ມີ



ພະຍຸ ເດືອນ ສິງຫາ ປີ 1975

ຄວາມເປັນທຳ, ຈາກນັ້ນຈຶ່ງໄດ້ມີມະຕິຕົກລົງສົ່ງຄະນະຜູ້ແທນ ຂອງສອງອົງການປະສົມສູງສຸດໄປພົບປະເຈົ້າຊີວິດ ສີສະຫວ່າງ ວັດທະນາ ເຊິ່ງໃນທີ່ສຸດກໍ່ໄດ້ເຂົ້າໃຈສະພາບຄວາມເປັນຈິງ ຂອງ ບ້ານເມືອງ ແລະ ການຮຽກຮ້ອງຂອງປະຊາຊົນ ດັ່ງນັ້ນຈຶ່ງໄດ້ ຕົກລົງເຫັນດີສະຫຼະລາອອກຈາກບັນລັງ ໃນວັນທີ 29 ພະຈິກ 1975.

ໃນວັນທີ 1 ທັນວາ 1975, ສະເດັດເຈົ້າສຸພານຸວົງ, ປະ ທານຄະນະນິຕິປະສົມການເມືອງ ແລະສະເດັດເຈົ້າສຸວັນນະ ພູມາ, ນາຍົກລັດຖະມົນຕີລັດຖະບານປະສົມຊົ່ວຄາວໄດ້ພ້ອມ ກັນປະກາດຍຸບສອງອົງການປະສົມສູງສຸດ ແລະ ໄດ້ມອບອຳ ນາດທັງໝົດໃຫ້ແກ່ກອງປະຊຸມໃຫຍ ຜູ້ແທນປະຊາຊົນທົ່ວປະເທດ ເປັນຜູ້ຕົກລົງ ກ່ຽວກັບບັນຫາຂອງປະເທດຊາດ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ໄດ້ໄຂຂຶ້ນຢູ່ວຽງຈັນ ໃນວັນທີ 2 ທັນວາ 1975 ໂດຍມີການເຂົ້າຮ່ວມຂອງຜູ້ແທນ ທັງໝົດ 264 ທ່ານ ຊຶ່ງເປັນຕົວແທນຕາງໜ້າ ໃຫ້ແກ່ບັນດາຊົນ ຊາດຊົນເຜົ່າ, ບັນດາຊັ້ນຄົນ, ອົງການຈັດຕັ້ງມະຫາຊົນ, ກຳລັງ ປະກອບອາວຸດທີ່ໄດ້ຖືກເລືອກຕັ້ງ ໂດຍປະຊາຊົນ ຈາກທຸກໆ ແຂວງ. ກອງປະຊຸມໃຫຍ່ດັ່ງກ່າວໄດ້ດຳເນີນໄປພາຍໃຕ້ການ ເປັນປະທານຂອງສະເດັດ ເຈົ້າສຸພານຸວົງ, ປະທານສູນກາງແນວ ລາວຮັກຊາດ, ສ່ວນທ່ານໄກສອນ ພົມວິຫານ, ເລຂາທິການໃຫຍ່



ກອງກຳລັງປະຕິວັດເຂົ້າຍຶດຕົວເມືອງຕ່າງໆ ໃນທົ່ວປະເທດ

ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວແມ່ນ ໄດ້ ຮັບມອບໝາຍຈາກກອງປະຊຸມໃຫຍ່ ໃຫ້ສະເໜີບົດລາຍງານການ ເມືອງຕໍ່ກອງປະຊຸມໃຫ່ຍ ເຊິ່ງໃນນັ້ນໄດ້ ສະຫລຸບຜົນການຕໍ່ສູ້ກູ ຊາດໃນໄລະຍ່ານມາ ພ້ອມທັງໄດ້ກຳນົດ ທິດທາງໜ້າທີ່ວຽກ ງານແຫ່ງການຂະຫຍາຍຕົວຂອງລັດລາວ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ໄດ້ສຳເລັດວຽກງານ ລົງດ້ວຍການຮັບຮອງເອົາການລາອອກຈາກໜ້າທີ່ ນາຍົກລັດຖະ ມົນຕີ ຂອງເຈົ້າສຸວັນນະພູມາ ແລະການຍຸບລັດຖະບານປະສົມຊົ່ວ ຄາວແຫ່ງຊາດ, ການລາອອກບັນລັງຂອງ ເຈົ້າຊີວິດ, ຖະແຫຼງ ການຂອງເຈົ້າສຸພານຸວົງ ກ່ຽວກັບການຍຸບຄະນະມົນຕີປະສົມ ການເມືອງແຫ່ງຊາດ, ລາຍງານການເມືອງຂອງທ່ານ ໄກສອນ ພົມວິຫານ ຕໍ່ກອງປະຊຸມ, ມະຕິກ່ຽວກັບການສ້າງຕັ້ງລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ມະຕິແຕ່ງຕັ້ງ ເຈົ້າສຸພານຸວົງ ເປັນປະທານປະເທດ, ມະຕິຕົກລົງແຕ່ງຕັ້ງ ເຈົ້າສີສະຫວ່າງ ວັດທະນາ ເປັນທີ່ປຶກສາສູງສຸດຂອງປະທານ ປະເທດ, ມະຕິແຕ່ງຕັ້ງສະພາປະຊາຊົນສູງສຸດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຊິ່ງປະກອບດ້ວຍສະມາຊິກ 45 ທ່ານ ອັນມີເຈົ້າສຸພານຸວົງເປັນປະທານ, ມີຮອງປະທານ 4 ທ່ານ ຄື: ທ່ານສີສົມພອນ ລໍວັນໄຊ, ທ່ານສີທົນ ກົມມະດຳ, ທ່ານໄຟ ດ່ວງ ລໍບະເລັຍຢາວ, ທ່ານຄຳສຸກ ແກ້ວລາ ທັງເປັນເລຂາ ທິການໃຫຍ່ຂອງສະພາ. ກອງປະຊຸມຍັງໄດ້ຮັບຮອງເອົາມະຕິ



ເຈົ້າວົງສະຫວ່າງ ທາຍາດ ຂອງສະຫວ່າງ ວັດທະນາ ອ່ານຄຳຖະແຫລງ
ຈາກການເປັນກະສັດ ເດືອນ ທັນວາ ປີ 1975

ແຕ່ງຕັ້ງ ຄະນະລັດຖະບານ ເຊິ່ງປະກອບມີ 39 ທ່ານ ອັນມີທ່ານ ໄກສອນ ພົມວິຫານ ເປັນນາຍົກລັດຖະມົນຕີ, ມີຮອງນາຍົກ 4 ທ່ານຄື: ທ່ານໜູຮັກ ພູມສະຫວັນ, ທ່ານພູມີ ວົງວິຈິດ, ທ່ານ ຄໍາໄຕ ສີພັນດອນ, ທ່ານພູນ ສີປະເສີດ. ນອກນັ້ນຍັງໄດ້ມີມະຕິ ແຕ່ງຕັ້ງ ເຈົ້າສຸວັນນະພູມາ ເປັນທີ່ປຶກສາ ຂອງລັດຖະບານ. ໃນ ເວລາດຽວກັນນັ້ນ, ກອງປະຊຸມ ກໍໄດ້ຮັບຮອງເອົາມະຕິກ່ຽວກັບ ທຸງຊາດ, ມະຕິກ່ຽວກັບເພງຊາດ, ມະຕິກ່ຽວກັບພາສາກາງ ແລະ ພາສາທາງລາດຊະການ. ໃນກອງປະຊຸມໃຫຍ່ຜູ້ແທນປະຊາຊົນ ທົ່ວປະເທດ ຄັ້ງປະຫວັດສາດນີ້ ຍັງໄດ້ມີຖານະຮັບຮອງເອົາຖະ ແຫຼງການເຊິ່ງໄດ້ເວົ້າເຖິງການປ່ຽນແປງ ລະບອບການປົກຄອງ ຂອງປະ ເທດ, ເນັ້ນຄືນເຖິງບັນດາມະຕິ ແລະ ຮຽກຮ້ອງໃຫ້ປະ ຊາຊົນເຊີດ ຊູນ້ຳໃຈຮັກຊາດ, ສາມັກຄີຮ່ວມແຮງຮ່ວມໃຈ ກັນ ກໍ່ສ້າງແລະປົກ ປັກຮັກສາລະບອບໃໝ່. ພ້ອມກັນນັ້ນ ກອງປະຊຸມ ໃຫຍ່ຍັງໄດ້ ຮັບ ຮອງເອົາໂຄງການດໍາເນີນງານຂອງລັດຖະບານ ສາທາລະນະ ລັດປະຊາທິປະໄຕປະຊາຊົນລາວ ທີ່ໄດ້ກໍານົດເຖິງ ແນວທາງ ພາຍໃນ ແລະ ຕ່າງປະເທດ, ທິດທາງໜ້າທີ່ວຽກງານ ຕ່າງໆໃນການພັດທະນາເສດຖະກິດ ແລະສັງຄົມ ແລະ ການປ້ອງ ກັນຊາດ ແນໃສ່ເຮັດໃຫ້ ສປປລາວ ກາຍເປັນປະເທດທີ່ມີສັນຕິ ພາບ, ເອກະລາດ, ປະຊາທິປະໄຕ ເອກະພາບ ແລະ ວັດທະນາ ຖາວອນ.

ການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະ

ຊາຊົນລາວ ໃນວັນທີ 2 ທັນວາ 1975 ນັ້ນ ໄດ້ກາຍເປັນເຫດ ການທີ່ຍິ່ງໃຫຍ່ ແລະ ມີຄວາມໝາຍທາງປະຫວັດສາດໃນຊີວິດ ການເມືອງຂອງຊາດລາວ ເຊິ່ງປະຊາຊົນລາວທີ່ຢູ່ພາຍໃຕ້ການ ນຳພາຂອງພັກປະຊາຊົນປະຕິວັດລາວ ແລະ ແນວລາວຮັກຊາດ ໄດ້ ຮັບໄຊຊະນະໃນການຍຶດເອົາອຳນາດມາສູ່ກຳມືຂອງຕົນແລະ ກໍ່ໄດ້ກ້າວເຂົ້າສູ່ໄລຍະໃໝ່ ໃນການປະຕິບັດຈຸດໝາຍອັນສູງສົ່ງ ຂອງການປະຕິວັດ ຄື ເພື່ອຄວາມຈະເລີນຮຸ່ງເຮືອງ ຂອງປະເທດ ຊາດ ແລະ ຄວາມສົມບູນພູນສຸກຂອງປະຊາຊົນ.

3. ລະບົບອົງການອຳນາດລັດຢູ່ ສປປ ລາວ .

ນັບແຕ່ມື້ທຳອິດ ແຫ່ງການເຄື່ອນໄຫວຂອງ ອຳນາດປະ ຊາຊົນ, ບັນດາຜູ້ນຳຂອງພັກປະຊາຊົນປະຕິວັດລາວ ແລະ ລັດຖະ ບານ ສປປລາວ ໄດ້ເອົາໃຈໃສ່ ກ່ອນອື່ນໝົດໃນການປັບປຸງແລະ ພັດທະນາລະບອບປະຊາທິປະໄຕ ປະຊາຊົນ ໂດຍໄດ້ຮຽກຮ້ອງ ເຖິງປະຊາຊົນທັງໝົດ ໃຫ້ການສະໜັບສະໜູນໃນການປະຕິບັດ ໂຄງການດຳເນີນງານຂອງລັດຖະບານ ເພື່ອເຮັດໃຫ້ລັດຂອງປະ ຊາຊົນລາວ ເຕີບໃຫຍ່ຂະຫຍາຍຕົວ ເພື່ອຜົນປະໂຫຍດຂອງປະຊາ ຊົນບັນດາເຜົ່າ ໃນທົ່ວປະເທດ. ພັກປະຊາຊົນປະຕິວັດລາວ ເຊິ່ງ ເປັນຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະຂອງການ ປະຕິວັດລາວ ໄດ້ຄຳນຶງກ່ອນອື່ນໝົດ ໃນການສ້າງຕັ້ງລັດແບບໃໝ່ໃຫ້ແຕກ ຕ່າງກັບລັດລາວໃນເມື່ອກ່ອນຢ່າງຈະແຈ້ງ. ສະນັ້ນໃນໄລຍະຕົ້ນ,

ແນວທາງນະໂຍບາຍຂອງພັກຈຶ່ງໄດ້ກຳນົດແຈ້ງ ໃນການກໍ່ ສ້າງ ແລະ ປັບປຸງລັດລາວ ໃຫ້ເປັນລັດຜະເດັດການ ປະຊາທິປະໄຕ ປະ ຊາຊົນ ໂດຍໃຫ້ຕິດພັນກັບການ ເສີມຂະຫຍາຍສິດ ເປັນ ເຈົ້າລວມໝູ່ຂອງ ປະຊາຊົນຜູ້ອອກແຮງງານ ບົນພື້ນຖານການ ດຳເນີນການປະຕິວັດສາມປະການໄປພ້ອມໆກັນ, ໝາຍຄວາມ ວ່າ ຕ້ອງສຶກສາອົບຮົມແລະ ຈັດຕັ້ງນຳພາໃຫ້ປະຊາຊົນຜູ້ອອກ ແຮງງານບັນດາເຜົ່າຮູ້ນຳໃຊ້ສິດຂອງຕົນ ເຂົ້າໃນການປົກປັກຮັກ ສາ, ກໍ່ສ້າງຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ, ປະ ກອບສ່ວນຢ່າງຕັ້ງໜ້າເຂົ້າໃນການກໍ່ສ້າງເສດຖະກິດ, ຂະຫຍາຍ ວັດທະນະທຳ ແນໃສ່ເຮັດໃຫ້ລະດັບຊີວິດການເປັນຢູ່ທາງດ້ານ ວັດຖຸ ແລະວັດທະນະທຳຂອງປະຊາຊົນດີຂຶ້ນຢ່າງບໍ່ຢຸດຢັ້ງ. ເພື່ອ ປະຕິບັດແນວທາງນະໂຍບາຍ ຂອງພັກທີ່ໄດ້ກຳອຳນາດທົ່ວປະ ເທດນັ້ນ, ພັກປະຊາຊົນປະຕິວັດລາວ ໄດ້ເອົາໃຈໃສ່ຢ່າງຈິດ ຈໍ່ຕໍ່ຄວາມສາມັກຄີປອງດອງກັນ ເພື່ອການສ້າງສາພັດທະນາ ປະ ເທດຊາດ ພາຍໜ້າສິ່ງຄາມຮຸກຮານຂອງຕ່າງປະເທດ. ໃນພິທີສະ ເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນປະຕິວັດ ລາວຄົບຮອບ 40 ປີໃນວັນທີ 22 ມີນາ 1995, ທ່ານຄຳໄຕ ສີພັນດອນ, ປະທານ ຄະນະບໍລິຫານງານສູນກາງພັກ, ນາຍົກລັດຖະມົນຕີ ສາທາລະ ນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ເນັ້ນຄືນຢ່າງໜັກ ແໜ້ນວ່າ "ເມື່ອຫວນຄືນເບິ່ງຂະບວນວິວັດແຫ່ງການຂະຍາຍ ຕົວຂອງຊາດລາວເຮົາ, ພວກເຮົາຍິ່ງເຫັນແຈ້ງວ່າ ຄວາມສາມັກ ຄີປອງດອງ ເປັນປັດໄຈສຳຄັນກ່ວາໝູ່ຂອງ ຄວາມເປັນເອກກະ

ພາບແຫ່ງຊາດ, ຂອງຄວາມຢູ່ເຢັນເປັນສຸກຂອງປະຊາຊົນ ແລະ ຄວາມ ຈະເລີນຮຸ່ງເຮືອງຂອງປະເທດຊາດ."

ດ້ວຍເຫດນັ້ນ, ລະບົບອົງການອຳນາດລັດທີ່ໄດ້ ຮັບການ ສ້າງຕັ້ງຂຶ້ນພາຍໜ້າການສະຖາປະນາ ສາທາລະນະລັດ ປະຊາ ທິປະໄຕ ປະຊາຊົນລາວ ຈຶ່ງປະກອບດ້ວຍຕົວແທນຂອງປະຊາ ຊົນ ທຸກຊັ້ນຄົນ. ເຖິງວ່າຈະໄດ້ດຳເນີນດ້ວຍວິທີການບໍ່ງ ຕົວເອົາ ແຕ່ກໍ່ແມ່ນ ເພື່ອແນໃສ່ເຕົ້າໂຮມ ຄວາມສາມັກຄີປອງດອງຊາດ ເຊິ່ງ ໃນນັ້ນມີຮອດຕົວແທນຂອງເຊື້ອເຈົ້າຜູ້ສູງສຸດຄື: ເຈົ້າສີສະ ຫວ່າງ ວັດທະນາ, ອະດີດເຈົ້າຊີວິດ ແຫ່ງລາດຊະອານາຈັກ ລາວແມ່ນ ໄດ້ຖືກແຕ່ງຕັ້ງໃຫ້ເປັນ ທີ່ປຶກສາຂອງ ປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສ່ວນເຈົ້າ ສຸວັນນະພູມາ, ອາດີດນາຍົກລັດຖະມົນຕີໄດ້ຖືກແຕ່ງຕັ້ງເປັນທີ່ ປຶກສາຂອງລັດຖະບານ ແລະ ເຈົ້າວົງສະຫວ່າງ,ອະດີດອົງມົງກຸດ ລາດຊະກຸມມານ ກໍ່ໄດ້ຖືກແຕ່ງຕັ້ງເປັນ ສະມາຊິກສະພາປະ ຊາຊົນສູງສຸດ. ນອກຈາກ ນັ້ນກໍ່ໄດ້ມີຕົວແທນຂອງທຸກແຂວງ, ທຸກຊົນເຜົ່າ, ທຸກເພດໄວ ແລະ ຜູ້ຊົງຄຸນວຸດທິຈາກທ້ອງຖິ່ນ ຕ່າງໆ ລວມທັງຕົວແທນ ຂອງຊົນ ຊັ້ນກຳມະກອນ, ຊາວນາ ແລະ ນັກຮຽນຮູ້ປັນຍາຊົນ ກໍ່ໄດ້ປະກອບ ເຂົ້າໃນສະພາປະຊາຊົນ ສູງສຸດ.

ກ. <u>ອົງການນິຕິບັນຍັດ ແຫ່ງ ສປປ ລາວ</u> .

ສະພາປະຊາຊົນສູງສຸດແມ່ນອົງການອຳນາດລັດດ້ານ ນິຕິບັນຍັດທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຈາກກອງປະຊຸມໃຫຍ ຜູ້ແທນປະຊາຊົນທົ່ວປະເທດ ພ້ອມກັບປະທານປະເທດ ແລະອົງການສະພາລັດຖະມົນຕີ ໃນວັນທີ 2 ທັນວາ 1975.

ສະພາປະຊາຊົນສູງສຸດ ໄດ້ມີພາລະບົດບາດໃນການປະຕິບັດບັນດາມະຕິ ຂອງກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ, ຕິດຕາມ, ຊ່ວຍເຫຼືອ, ຊຸກຍູ້ແລະກວດກາການ ເຄື່ອນໄຫວ ຂອງສະພາລັດຖະມົນຕີ, ສະພາຜູ້ແທນປະຊາຊົນ ແລະຄະນະກຳມະການປົກຄອງປະຊາຊົນຂັ້ນຕ່າງໆ. ສ່ວນໜ້າທີ່ຕົ້ນຕໍຂອງສະພາປະຊາຊົນສູງສຸດໃນໄລຍະຫົວທີນັ້ນມີຄື:

1. ຄົ້ນຄ້ວາແລະຮ່າງລັດຖະທຳມະນູນໃໝ່ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອນຳສະເໜີຕໍ່ສະພາແຫ່ງຊາດໃນໄລຍະຕໍ່ມາ.

2. ເຮັດລັດຖະບັນຍັດກ່ຽວກັບການເລືອກຕັ້ງທົ່ວໄປ ແລະ ຮ່ວມກັບ ສະພາລັດຖະມົນຕີຈັດການເລືອກຕັ້ງທົ່ວໄປ ເພື່ອເລືອກເອົາສະພາແຫ່ງຊາດໃໝ່.

3. ພິຈາລະນາເພີ່ມເຕີມ, ດັດແປງ, ຫຼື ລົບລ້າງຂໍ້ກຳນົດ ກົດໝາຍຕ່າງໆ ທີ່ບໍ່ສອດຄ່ອງກັບລະບອບໃໝ່, ເຮັດລັດຖະບັນຍັດອັນຈຳເປັນ ເພື່ອປົກປັກຮັກສາໝາກຜົນຂອງ ການປະຕິວັດຂອງປະຊາຊົນ, ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບສຸກ ແລະ ການປ້ອງກັນຊາດ, ຟື້ນຟູ, ຂະຫຍາຍ ແລະ ກໍ່ສ້າງເສດຖະກິດ ແລະ ວັດທະນະທຳ.

4. ອະນຸມັດແຜນການພັດທະນາເສດຖະກິດ-ສັງຄົມ, ອະນຸມັດງົບປະມານແຫ່ງລັດ.

ນັບເປັນເວລາເຖິງ 14 ປີທີ່ສະພາປະຊາຊົນສູງສຸດຊຸດທີ I ໄດ້ເຄື່ອນໄຫວ ປະຕິບັດໜ້າທີ່ຕົ້ນຕໍດັ່ງກ່າວຜ່ານ 3 ກຳມາທິການ ຄື:

1. ກຳມາທິການຮ່າງລັດຖະທຳມະນູນ.
2. ກຳມາທິການລັດຖະບັນຍັດ ແລະ ກົດໝາຍເລືອກຕັ້ງທົ່ວໄປ.
3. ກຳມາທິການແຜນການແລະການເງິນ.

ນອກຈາກ 3 ກຳມາທິການແລ້ວຍັງມີຫ້ອງວ່າການຂອງ ສະພາປະຊາຊົນສູງສຸດ ເຊິ່ງມີໜ້າທີ່ຊ່ວຍ ວຽກງານຈັດຕັ້ງ, ວຽກສັງລວມ, ວຽກບໍລິຫານ ແລະ ຄຸ້ມຄອງ.

ເປັນທີ່ສັງເກດເຫັນວ່າ ສະພາປະຊາຊົນສູງສຸດຊຸດທີ 1 ແມ່ນປະກອບດ້ວຍ ສະມາຊິກທີ່ມີອາຍຸແກ່ ສ່ວນໜ້ວງໜ້າຍ, ລະດັບຄວາມຮູ້ຄວາມສາມາດ ກໍ່ມີອັນຈຳກັດເພາະມີລັກສະນະແນວໂຮມໜ້າຍກ່ວາ, ດັ່ງນັ້ນການເຄື່ອນໄຫວວຽກງານ ຈຶ່ງບໍ່ໄດ້ຮັບຜົນເທົ່າທີ່ຄວນ, ເຊັ່ນວ່າບໍ່ທັນສາມາດປະຕິບັດ ໄດ້ຕາມຖານະບົດບາດ ແລະ ລະດັບຄາດໝາຍທີ່ວາງໄວ້. ເຖິງຢ່າງໃດກໍ່ຕາມ ສະພາປະຊາຊົນສູງສຸດຊຸດທີ I ກໍ່ໄດ້ປະກອບສ່ວນ ຢ່າງສຳຄັນ ເຂົ້າໃນການເພີ່ມທະວີຄວາມປອງດອງຊາດ ພາຍໜ້ງການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ໄດ້ຮັບຮອງເອົາຂໍ້ກຳນົດກົດໝາຍທີ່ຈຳເປັນຈຳນວນໜຶ່ງ.

ເລີ່ມແຕ່ປີ 1986 ເປັນຕົ້ນມາ, ພັກປະຊາຊົນປະຕິວັດລາວ ໄດ້ດຳເນີນພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານ ເຊິ່ງໃນນັ້ນ ໄດ້ກຳນົດຄົນໃໝ່ກ່ຽວກັບລັກສະນະ ແລະ ໄລຍະຂອງການປະຕິວັດຄື: ກໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ ເພື່ອສ້າງປະຖົມປັດໄຈ ໃຫ້ແກ່ການກ້າວຂຶ້ນ ສັງຄົມນິຍົມ ເທື່ອລະກ້າວ. ນະໂຍບາຍປ່ຽນແປງໃໝ່ທາງ ດ້ານເສດຖະກິດ ໄດ້ຫັນປ່ຽນ ກົນໄກລອມສູນອຳນາດຍາສິດ, ບໍລິຫານເກົ້ອກູນໄປ ສູ່ເສດຖະກິດ ຕະໜາດແລະ ເປີດກ້ວາງການ ພົວພັນຮ່ວມ ມືທາງ ດ້ານເສດຖະກິດ ກັບຕ່າງປະເທດ. ດ້ວຍເຫດນີ້ພັກປະຊາຊົນ ປະຕິວັດລາວຈຶ່ງຕ້ອງໄດ້ປັບປຸງ ແລະ ບູລະນະລະບົບການ ເມືອງຂອງປະເທດໃຫ້ ສອດຄ່ອງກັບສະພາບຕົວຈິງ.

ໃນປີ 1989, ການນຳຂອງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວໄດ້ດຳເນີນການເລືອກຕັ້ງເອົາ ສະພາປະຊາຊົນສູງສຸດຊຸດທີ II ປ່ຽນແທນຊຸດທີ I ໂດຍເພີ່ມຈຳນວນຜູ້ແທນຂຶ້ນເປັນ 79 ທ່ານ ເຊິ່ງເປັນຜູ້ຕາງໜ້າຂອງທຸກຊັ້ນຄົນ. ສຳລັບສະພາປະຊາສູງສຸດຊຸດທີ II ນັ້ນແມ່ນ ໄດ້ປະຕິບັດພາລະບົດບາດ ແລະ ໜ້າທີ່ຕົ້ນຕໍ ເປັນສະພາຮ່າງລັດຖະທຳມະນູນ. ທ່ານໝູຮັກ ພູມສະ ຫວັນ, ກຳມະການກົມການເມືອງສູນກາງພັກ ໄດ້ຖືກເລືອກຕັ້ງ ໃຫ້ເປັນປະທານສະພາປະຊາຊົນສູງສຸດຊຸດທີ II ແລະທັງເປັນ ຫົວໜ້າກຳມາທິການຮ່າງລັດຖະທຳມະນູນ ແລະ ກົດໝາຍ. ສະພາປະຊາຊົນສູງສຸດຊຸດນີ້ ຍັງປະກອບມີ ກຳມາທິການເສດຖະກິດ, ແຜນການ, ການເງິນ; ກຳມາທິການວັດທະນະທຳ-ສັງຄົມ; ກຳມາທິການຕ່າງປະເທດ ແລະ ຫ້ອງວ່າການຂອງສະພາ. ໃນໄລຍະປີ 1990 ເຊິ່ງເປັນປີທີ່ທົ່ວພັກ, ທົ່ວກອງທັບ ແລະ ປະຊາຊົນລາວໄດ້ພ້ອມກັນສະເຫຼີມສະຫຼອງ ປີທີ15 ແຫ່ງການ ສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວນັ້ນ, ສະພາປະຊາຊົນສູງສຸດຊຸດ ທີ II ກໍ່ໄດ້ສ້າງຜົນງານອອກດ້ວຍ ການກໍ່ສ້າງກົດໝາຍ ແລະ ປະກາດໃຊ້ກົດໝາຍອາຍາ, ກົດໝາຍ ການດຳເນີນຄະດີອາຍາ, ກົດໝາຍສານປະຊາຊົນ, ກົດໝາຍອົງການໄອຍະການປະຊາຊົນ, ກົດໝາຍກຳມະສິດ,ກົດໝາຍສົບທອດມູນມໍລະດົກ, ກົດໝາຍ ແຮງງານ, ກົດໝາຍຄອບຄົວ, ກົດໝາຍ ດຳເນີນຄະດີແພ່ງ, ກົດໝາຍ

ປະກັນໄພ ແລະ ອື່ນໆ ເຊິ່ງກົດໝາຍ ແຕ່ລະສະບັບລ້ວນ ແລ້ວແຕ່ໄດ້ຕອບສະໜອງຄຸນປະໂຫຍດສຳລັບ ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມລາວ ເພາະວ່າກ່ອນໜ້ານັ້ນ ການຄຸ້ມຄອງລັດ ແລະສັງຄົມແມ່ນໄດ້ອີງໃສ່ນະໂຍບາຍ, ມະຕິ, ຄຳສັ່ງເປັນ ຈຸດໜັກ. ການທີ່ສະພາປະຊາຊົນສູງສຸດຊຸດທີ່ II ໄດ້ອອກແຮງ ຢ່າງໜວງໜາຍໃນ ການກໍ່ສ້າງ ແລະຮັບຮອງເອົາກົດໝາຍຢ່າງ ເປັນລະບົບໃຫ້ສອດຄ່ອງກັບສະພາບ ການຂະຫຍາຍ ຕົວຂອງ ລະບອບປະຊາທິປະໄຕ ປະຊາຊົນນັ້ນ ໄດ້ເຮັດໃຫ້ພະນັກງານ ແລະປະຊາຊົນລາວ ທົ່ວທັງປະເທດມີຄວາມເປີກບານມ່ວນ ຊື່ນ ແລະ ເຊື່ອໝັ້ນຕໍ່ລັດ ທີ່ໄດ້ເລີ່ມກ້າວເຂົ້າສູ່ການຄຸ້ມຄອງສັງ ຄົມດ້ວຍກົດໝາຍ ເພື່ອຮັບປະກັນສິດເປັນເຈົ້າຂອງພວກຕົນ. ບັນຫາສຳຄັນເປັນພິເສດໃນຊີວິດການເມືອງຂອງ ປະຊາຊົນລາວ ນັ້ນ ກໍ່ຄືຜົນງານຂອງຄະນະກຳມະການຮ່າງລັດຖະທຳມະນູນ ແລະ ກົດໝາຍທີ່ໄດ້ສ້າງຮ່າງລັດຖະທຳມະນູນສຳເລັດໃນເດືອນ ພຶດສະພາ ປີ 1990 ແລະກໍ່ໄດ້ເອົາຮ່າງລັດຖະທຳມະນູນດັ່ງກ່າວ ນັ້ນ ອອກຫາບຫາມເກັບກຳຄຳເຫັນ ຈາກພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນທົ່ວທັງປະເທດ. ຜ່ານການ ປະກອບຄຳ ເຫັນຂອງພະນັກງານ, ທະຫານ, ຕຳຫຼວດ ແລະປະຊາຊົນລາວ ທຸກຊັ້ນຄົນເປັນເວລາ 1 ປີກ່ວາ, ຮ່າງລັດຖະທຳມະນູນດັ່ງກ່າວ ກໍໄດ້ຖືກນຳເຂົ້າພິຈາລະນາ ແລະຮັບຮອງເອົາໃນກອງປະຊຸມສະ ພາຄັ້ງທີ 6 ຂອງສະພາປະຊາຊົນ ສູງສຸດຊຸດທີ II ດ້ວຍຄະແນນ ສຽງທີ່ເປັນເອກະສັນກັນຢ່າງສົມບູນໃນວັນທີ 14 ສິງຫາ 1991.

ໃນອາລະດອກັນນັ້ນ ກອງປະຊຸມຍັງໄດ້ຮັບຮອງເອົາກົດໝາຍ ທີ່ສຳຄັນອັນໜຶ່ງ ຄືກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະ ພາແຫ່ງຊາດ. ໃນວັນທີ 15 ສິງຫາ 1991, ກອງປະຊຸມສະ ພາຄັ້ງທີ 6 ຊຸດທີ II ກໍໄດ້ເລືອກເອົາ ທ່ານໄກສອນ ພົມວິຫານ, ປະທານຄະນະບໍລິຫານງານສູນກາງພັກ ປະຊາຊົນ ປະຕິວັດລາວ ເປັນປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ປ່ຽນແທນ ທ່ານພູມີ ວົງວິຈິດ ທີ່ໄດ້ວ່າການແທນປະທານ ປະເທດ ມາແຕ່ປີ 1986 ພາຍຫຼັງທີ່ສະເດັດ ເຈົ້າສຸພານຸວົງ ປະ ທານປະເທດ ຜູ້ທຳອິດໄດ້ລົ້ມປ່ວຍ ເປັນເວລານານສົມຄວນ. ໃນ ໂອກາດດຽວກັນນັ້ນ ກໍໄດ້ມີການແຕ່ງຕັ້ງທ່ານຄຳໄຕ ສີພັນດອນ, ເປັນນາຍົກລັດຖະມົນຕີແຫ່ງສາທາລະນະລັດ ປະຊາທິປະໄຕ ປະ ຊາຊົນລາວ ປ່ຽນແທນທ່ານໄກສອນ ພົມວິຫານ ທີ່ໄດ້ຖືກແຕ່ງ ຕັ້ງເປັນປະທານປະເທດ.

ເປັນທີ່ສັງເກດເຫັນວ່າ ສະພາປະຊາຊົນສູງສຸດຊຸດທີ II ໄດ້ປະຕິບັດໜ້າທີ່ຕົ້ນຕໍຂອງຕົນເປັນເວລາ 3 ປີກ່ວາໃນຖານະ ເປັນສະພາຮ່າງລັດຖະທຳມະນູນ. ພາຍຫຼັງທີ່ໄດ້ສຳເລັດໜ້າທີ່ ການເມືອງອັນເປັນປະຫວັດສາດດັ່ງກ່າວ ດ້ວຍການຮັບຮອງ ເອົາລັດຖະທຳມະນູນຂອງ ສາທາລະນະລັດ ປະຊາທິປະໄຕ ປະ ຊາຊົນລາວ ແລ້ວກໍໄດ້ມີການກະກຽມການເລືອກຕັ້ງເອົາສະພາ ແຫ່ງຊາດຊຸດໃໝ່ ອີງຕາມກົດໝາຍເລືອກຕັ້ງທີ່ໄດ້ຮັບຮອງເອົາ. ຈາກນັ້ນໃນວັນທີ 20 ທັນວາ1992, ຢູ່ທົ່ວປະເທດແມ່ນໄດ້ມີການ

ຈັດຕັ້ງປ່ອນ ບັດເລືອກຕັ້ງ ເອົາສະມາຊິກສະພາແຫ່ງຊາດຊຸດທີ III ດ້ວຍຜົນ ສຳເລັດອັນດີ ເຊິ່ງປະກອບດ້ວຍຜູ້ແທນຈຳນວນ ທັງໝົດ85 ທ່ານ, ໃນນັ້ນມີຜູ້ຊົງຄຸນວຸດທິ, ປັນຍາຊົນ, ນັກທຸລະ ກິດ, ນັກການເມືອງ ແລະນັກວິຊາການຕ່າງໆ. ຜົນສຳເລັດຂອງ ການເລືອກຕັ້ງ ສະມາຊິກສະ ພາແຫ່ງຊາດຊຸດທີ III ນີ້ໄດ້ຊີ ໃຫ້ເຫັນຢ່າງຈະແຈ້ງ ເຖິງການເສີມຂະຫຍາຍ ປະຊາທິປະໄຕ ຂອງພົນລະເມືອງລາວ ກໍ່ຄືການ ປະຕິບັດສິດເປັນເຈົ້າປະເທດ ຊາດອັນແທ້ຈິງຂອງຊົນເຜົ່າຕ່າງໆ ພາຍໃນປະເທດ.

ເຖິງວ່າກ່ອນໜ້ານີ້, ທ໊ອພັກ, ທ໊ອກອງທັບ ແລະ ທ໊ອປອງ ຊົນລາວໄດ້ມີ ຄວາມເສົ້າສະລົດໃຈເປັນຢ່າງຍິ່ງຫາອັນປຽບບໍ່ ໄດ້ຕໍ່ການສູນເສຍທ່ານໄກສອນ ພົມວິຫານ, ປະທານຄະນະ ບໍລິຫານງານສູນກາງພັກ, ປະທານປະເທດສາທາລະນະລັດ ປະ ຊາທິປະໄຕ ປະຊາຊົນລາວ ໃນວັນທີ 21 ພະຈິກ 1992, ເຊິ່ງ ການສູນເສຍທີ່ໜັກໜ່ວງກໍ່ຄື ການຈາກໄປຢ່າງບໍ່ມີວັນກັບຄືນມາ ຂອງ ປະທານໄກສອນ ພົມວິຫານ, ຜູ້ນຳທີ່ຍິ່ງໃຫຍ່ຂອງການ ປະຕິວັດລາວ, ຜູ້ນຳທີ່ດີເດັ່ນຂອງພັກແລະລັດລາວ, ລູກຮັກຜູ້ປະ ເສີດຂອງປະຊາ ຊົນລາວບັນດາເຜົ່າ, ນັກຕໍ່ສູ້ນັກຊາດຜູ້ກ້າແກ່ນ ທັງເປັນວິລະບຸລຸດ ຂອງຊາດລາວນັ້ນກໍ່ຕາມ, ແຕ່ປະຊາຊົນ ລາວທົ່ວປະເທດພາຍໃຕ້ການນຳພາຂອງພັກ ແລະ ລັດ ກໍ່ໄດ້ ເຮັດໃຫ້ການເຈັບປວດດັ່ງກ່າວ ກາຍເປັນການກະທຳຕົວຈິງ ເພື່ອເສີມຂະຫຍາຍມູນມໍລະດົກອັນ ລ້ຳຄ່າຄືແນວທາງ, ແນວຄິດ, ຈິນຕະນາການ ແລະ ການປ່ຽນໃໝ່ທີ່ເພິ່ນໄດ້ອຸທິດໄວ້ນັ້ນ

ແນໃສ່ສ້າງລັດປະຊາທິປະໄຕປະຊາຊົນ ໃຫ້ກາຍເປັນລັດແຫ່ງ ກົດ ໝາຍເທື່ອລະກ້າວ. ສະນັ້ນການເລືອກ ຕັ້ງເອົາສະພາແຫ່ງ ຊາດ ຊຸດທີ່ III ກໍ່ແມ່ນການຜັນຂະຫຍາຍ ແນວຄິດຈິດໃຈ ຂອງປະທານໄກສອນ ພົມວິຫານ ໃຫ້ປະກົດເປັນ ຈິງຕາມ ແຜນການ.

ສະພາແຫ່ງຊາດຊຸດທີ່ III ໄດ້ເລືອກຕັ້ງເອົາ ທ່ານສະ ໝານ ວີຍາເກດ, ກຳມະການກົມການເມືອງສູນກາງພັກ ເປັນປະ ທານ, ໄດ້ເລືອກເອົາຮອງປະທານ 2 ທ່ານ, ໄດ້ຮັບຮອງເອົາ ໂຄງ ຮ່າງການຈັດຕັ້ງຂອງສະພາຄື ຄະນະປະຈຳສະພາ ແລະ 6 ຄະ ນະກຳມາທິການ ເຊິ່ງປະກອບມີ: ກຳມາທິການກົດໝາຍ, ກຳ ມາທິການເສດຖະກິດ, ແຜນການ ແລະ ການເງິນ, ກຳມາທິການ ສຶກສາ, ວັດທະນະທຳສັງຄົມ, ກຳມາທິການຊົນເຜົ່າ, ກຳມາທິ ການຕ່າງປະເທດ ແລະກຳມາທິການ ເລຂານຸການ, ນອກນັ້ນກໍ່ ຍັງມີຫ້ອງວ່າການສະພາ. ເມື່ອທຽບໃສ່ສະພາປະຊາຊົນສູງສຸດ 2 ຊຸດກ່ອນນັ້ນ, ໃນຊຸດນີ້ແມ່ນມີການເພີ່ມເຕີມກຳມາທິການຊົນເຜົ່າ ແລະ ກຳມາທິການເລຂານຸການ ເຊິ່ງອັນນີ້ກໍ່ແມ່ນເພື່ອໃຫ້ສອດ ຄ່ອງກັບສະພາບ ວຽກງານຕົວຈິງທີ່ມີການເພີ່ມທະວີຂຶ້ນ ແລະ ຖືກຕ້ອງກັບພາລະບົດບາດຂອງສະພາ ແຫ່ງຊາດຊຸດໃໝ່.

ກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດຊຸດທີ່ III ຍັງໄດ້ເປັນເອກະສັນກັນເລືອກຕັ້ງເອົາ ທ່ານໝູຮັກ ພູມສະ ຫວັນ ເປັນປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະ

ຊາຊົນລາວ ແລະ ໄດ້ຮັບຮອງເອົາການສະເໜີແຕ່ງຕັ້ງ ທ່ານ ຄຳໄຕ ສີພັນດອນ, ປະທານຄະນະບໍລິຫານງານສູນກາງພັກ ປະ ຊາຊົນປະຕິວັດລາວ ເປັນນາຍົກລັດຖະມົນຕີ ແຫ່ງສາທາລະນະ ລັດ ປະຊາທິປະໄຕ ປະຊາຊົນລາວ.

ໃນກອງປະຊຸມ ຄັ້ງປະຖົມມະເລີກຂອງ ສະພາແຫ່ງຊາດ ຊຸດທີ່ III ໃນວັນທີ 20 ກຸມພາ 1993, ທ່ານ ໝູຮັກ ພູມສະຫວັນ, ປະທານປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ກ່າວສູນທອນຜິດວ່າ "ສະພາແຫ່ງຊາດຊຸດນີ້ ຈະເຮັດໃຫ້ພາ ລະບົດບາດຂອງອົງການນິຕິບັນຍັດ ເປັນຕົວແທນສູງສຸດແຫ່ງສິດ ຝົ້ນປະໂຫຍດຂອງປະຊາຊົນບັນດາເຜົ່າ, ເຖິງວ່າຈະເປັນຜູ້ສືບ ທອດພາລະກິດ ແຫ່ງການເຄື່ອນໄຫວຂອງ ສະພາປະຊາຊົນສູງ ສຸດທັງ 2 ຊຸດທີ່ຜ່ານມາກໍ່ຕາມ. ແຕ່ກໍ່ມີຄວາມຈຳເປັນຕ້ອງໄດ້ ເຊີດຊູຄຸນນະພາບການເມືອງຕື່ມ ອີກກ້າວນຶ່ງຈຶ່ງຈະສາມາດ ຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ແຫ່ງການປະຕິບັດພາ ລະບົດບາດຂອງ ອົງການນິຕິບັນຍັດໃນສະພາບການປະຈຸບັນ".

ສະພາແຫ່ງຊາດຊຸດນີ້ ເປັນສະພາຂັ້ນດຽວ ເຊິ່ງແຕກ ຕ່າງກັບສະພາປະຊາຊົນສູງສຸດ 2 ຊຸດກ່ອນໜ້ານັ້ນ ທີ່ໄດ້ມີການ ເລືອກຕັ້ງສະພາປະຊາຊົນຂັ້ນແຂວງ ແລະ ຂັ້ນເມືອງນຳກັນ ເພື່ອ ແບ່ງຂັ້ນຄຸ້ມຄອງ ໃນການກວດກາ ການປະຕິບັດງານຂອງອົງ ການປົກຄອງຂັ້ນດັ່ງກ່າວ. ການປ່ຽນແປງເຊັ່ນນັ້ນ ກໍ່ແມ່ນເພື່ອ

ຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນໄລຍະໃໝ່ ໃຫ້ສອດຄ່ອງກັບສະພາບການຈຸດພິເສດຂອງ ເສດ ຖະກິດ-ສັງຄົມລາວ ເຊັ່ນວ່າຢູ່ທ້ອງຖິ່ນ ຄະນະກຳມະການປົກ ຄອງໃນເມື່ອກ່ອນ ກໍໄດ້ປ່ຽນແປງໄປສູ່ ລະບອບປົກຄອງ ໂດຍ ເຈົ້າແຂວງ, ເຈົ້າເມືອງ ແລະ ນາຍບ້ານ.

ສິ່ງສຳຄັນທີ່ເປັນພື້ນຖານຂອງສະພາແຫ່ງຊາດຊຸດທີ III ນີ້ກໍຄືການຮັບຮອງເອົາກົດໝາຍວ່າດ້ວຍ ສະພາແຫ່ງຊາດໃນ ກອງປະຊຸມຄັ້ງປະຖົມມະລຶກ ໃນວາລະປະຊຸມເມື່ອວັນທີ 25 ທັນວາ 1993 ເຊິ່ງໄດ້ກຳໜົດລະອຽດກ່ຽວກັບ ພາລະບົດບາດ, ໂຄງປະກອບການຈັດຕັ້ງ, ສິດແລະໜ້າທີ່ຂອງປະທານ, ຮອງປະ ທານ, ຄະນະປະຈຳ, ບັນດາກຳມາທິການ ແລະ ສະມາຊິກ ສະພາໃນເງື່ອນໄຂຂອງການຄຸ້ມຄອງລັດດ້ວຍກົດໝາຍ ແລະ ຮັບປະກັນການເສີມຂະຫຍາຍສິດເປັນເຈົ້າຂອງ ປະຊາຊົນໃນໄລ ຍະໃໝ່. ກົດໝາຍວ່າດ້ວຍສະພາແຫ່ງຊາດສະບັບນີ້ແມ່ນປ່ຽນ ແທນກົດໝາຍວ່າດ້ວຍສະພາປະຊາຊົນສູງສຸດສະບັບລົງວັນທີ 19 ເມສາ 1988.

ຂ. <u>ອົງການບໍລິຫານ ແຫ່ງ ສປປ ລາວ</u>.

ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ທີ່ໄດ້ຮັບການສ້າງຕັ້ງພາຍຫຼັງການລົບລ້າງລະບອບລາຊາ ທິປະໄຕ ແລະ ສະຖາປະນາເປັນ ປະເທດສາທາລະນະລັດ ປະຊາ ທິປະໄຕ ປະຊາຊົນລາວນັ້ນ ໄດ້ເຄື່ອນໄຫວຢ່າງຫ້າວຫັນໃນຖາ ນະອົງການບໍລິຫານສູງສຸດຂອງປະເທດ ແລະ ກໍ່ຢູ່ພາຍໃຕ້ການ ນຳພາໂດຍກົງຂອງພັກປະຊາຊົນປະຕິວັດລາວຕະຫຼອດມາ. ນັບ ເປັນເວລາເກືອບ 16 ປີ, ທີ່ທ່ານໄກສອນ ພົມວິຫານ ປະທານ ຄະ ນະບໍລິຫານງານສູນກາງພັກ ໄດ້ຮັບຕຳແໜ່ງເປັນນາຍົກລັດຖະ ມົນຕີ ແລະເລີ່ມແຕ່ປີ 1991 ມາ, ທ່ານຄຳໄຕ ສີພັນດອນ, ປະ ທານຄະນະບໍລິຫານງານສູນກາງພັກຄົນໃໝ່ ກໍ່ໄດ້ສືບຕໍ່ຮັບຕຳ ແໜ່ງນາຍົກລັດຖະມົນຕີ ເຊິ່ງຜູ້ນຳທັງ 2 ທ່ານດັ່ງກ່າວນັ້ນ ລ້ວນ ແລ້ວແຕ່ໄດ້ນຳພາລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສ້າງສາລະບອບໃໝ່, ສ້າງສາພັດທະນາປະເທດ ຊາດລາວໃຫ້ເຕີບໃຫຍ່ຂະຫຍາຍຕົວ ເພື່ອຜົນປະໂຫຍດອັນສູງສົ່ງ ຂອງຊາດ ກໍ່ດີເພື່ອຄວາມສົມບູນພູນສຸກຂອງປະຊາຊົນລາວບັນ ດາເຜົ່າ.

ຕະຫຼອດໄລຍະ 20 ປີທີ່ຜ່ານມາ, ລັດຖະບານໄດ້ຜັນຂະ ຫຍາຍບັນດາມະຕິກອງປະຊຸມໃຫຍ່ຂອງພັກ ແລະ ກອງປະຊຸມ ຄົບຄະນະຂອງສູນກາງພັກ ແຕ່ລະເທື່ອເພື່ອວາງເປັນໂຄງການ ດຳເນີນງານອັນລະອຽດຂອງຕົນໃນແຕ່ລະໄລຍະ. ໃນນັ້ນກ່ອນ ອື່ນໝົດ, ພັກປະຊາຊົນປະຕິວັດລາວ ແລະລັດຖະບານ ສປປລາວ

ແມ່ນໄດ້ເອົາໃຈໃສ່ຢ່າງຕັ້ງໜ້າເພື່ອກໍ່ສ້າງແລະປັບປຸງບູລະນະອຳ
ນາດລັດ ປະຊາທິປະໄຕປະຊາຊົນ ໃນການປະຕິບັດ 2 ໜ້າທີ່
ຍຸດທະສາດຄື: ການປົກປັກຮັກສາ ແລະ ສ້າງສາປະເທດຊາດ.
ຄະນະລັດຖະບານທີ່ໄດ້ຮັບການປະກອບຂຶ້ນໃນວັນທີ 2 ທັນວາ
1975 ນັ້ນນອກຈາກນາຍົກລັດຖະມົນຕີແລ້ວ ໄດ້ມີຮອງນາຍົກ
ລັດຖະມົນຕີ 4 ທ່ານ ເຊິ່ງລ້ວນແລ້ວ ແຕ່ແມ່ນກຳມະການກົມ
ການເມືອງສູນກາງພັກຄື : ທ່ານ ໝູຮັກ ພູມສະຫວັນ, ທ່ານພູມ
ວົງວິຈິດ, ທ່ານຄຳໄຕ ສີພັນດອນ ແລະ ທ່ານພູມ ສີປະເສີດ.
ສ່ວນລັດຖະມົນຕີວ່າການກະຊວງຕ່າງໆນັ້ນ ແມ່ນມີ 12 ທ່ານ,
ຫົວໜ້າຄະນະກຳມະການມີ 4 ທ່ານ ແລະ ລັດຖະມົນຕີຊ່ວຍ
ວ່າການມີ 17 ທ່ານ. ໃນນັ້ນສ່ວນຫຼາຍກໍ່ແມ່ນກຳມະການສູນ
ກາງ, ກຳມະການສຳຮອງສູນກາງ, ສະມາຊິກພັກອາວຸໂສ ແລະ
ບັນດາທ່ານ ທີ່ກ້າວໜ້າຈຳນວນໜຶ່ງ.

ໜ້າທີ່ຕົ້ນຕໍຂອງລັດຖະບານ ຫຼັງຈາກວັນທີ 2 ທັນວາ
1975 ເຖິງປີ 1980 ນັ້ນ ແມ່ນການເຕົ້າໂຮມ ຄວາມສາມັກຄີປະ
ຊາຊົນບັນດາເຜົ່າທົ່ວທັງປະເທດເພື່ອຄວາມປອງດອງຊາດ, ເພື່ອ
ປົກປັກຮັກສາໝາກຜົນຂອງການປະຕິວັດທີ່ຍາດມາໄດ້, ອອກ
ແຮງຮຳບາດແຜສົງຄາມ, ຟື້ນຟູເສດຖະກິດ-ວັດທະນະທຳ-ສັງ
ຄົມ ແລະປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນໃຫ້ເປັນປົກກະ
ຕິດີຂຶ້ນເທື່ອລະກ້າວ. ໃນໄລຍະດັ່ງກ່າວນັ້ນ ລັດຖະບານ ສາທາ
ລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ໜຸ່ມນ້ອຍແມ່ນໄດ້

ປະເຊີນໜ້າໂດຍກົງກັບຄວາມພະຍາຍາມຕ່າວໂຈມຕີ ມ້າງເພທຳລາຍຂອງພວກປະຕິກາມລາວພັດຖິ່ນ ທີ່ໄດ້ໄປອາໄສຕ່າງປະເທດແລ້ວ ກັບ ເຂົ້າມາກໍ່ກວນຄວາມສະຫງົບສຸກຂອງປະຊາຊົນ, ໃຊ້ກາມນາບຂູ່ທາງທະຫາມ, ດຳເນີນກາມປິດລ້ອມທາງ ດ້ານເສດຖະກິດ. ແຕ່ຍ້ອນກາມນຳພາອັນປີຊາສາມາດຂອງ ພັກປະຊາຊົນປະຕິວັດລາວ, ລັດຖະບາມ ສປປລາວ ໄດ້ສະກັດກັ້ນ ແລະ ທັບມ້າງກົນອຸບາຍມ້າງເພທຳລາຍຂອງສັດຕູ ທັງໄດ້ປົກປັກຮັກສາເອກະລາດ, ອຳນາດອະທິປະໄຕຂອງຊາດ ແລະ ຄວາມສະຫງົບສຸກຂອງປະຊາຊົນໄວ້ໄດ້ຢ່າງໝັ້ນຄົງ.

ສະນັ້ນ, ໃນໄລຍະ 5 ປີທຳອິດ ພາຍຫຼັງກາມສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ລັດຖະບາມໄດ້ເອົາໃຈໃສ່ແກ້ໄຂສະພາບຊີວິດກາມເປັນຢູ່ຂອງປະຊາຊົນ ທີ່ຕ່ຳຕ້ອຍດ້ອຍພັດທະນາ ອັນເນື່ອງມາຈາກຜົນສະທ້ອນຂອງສົງຄາມທຳລາຍຢ່າງໜັກໜ່ວງ ກໍ່ຄືຜົນຮ້າຍ ແລະ ເສດເຫຼືອຂອງລະບອບເກົ່າປະໄວ ້ໂດຍໄດ້ປະຕິບັດຕາມແນວທາງນະໂຍບາຍຂອງພັກ ເພື່ອນຳພາປະເທດຊາດ ກ້າວຂຶ້ນສັງຄົມນິຍົມໂດຍບໍ່ຜ່ານໄລຍະກາມຂະຫຍາຍຕົວຂອງທຶນນິຍົມ.

ເພື່ອປະຕິບັດຈຸດໝາຍອັນສູງສົ່ງດັ່ງກ່າວ, ພັກແລະລັດລາວ ໄດ້ເສີມຂະຫຍາຍລະບົບຜະເດັດກາມກຳມາຊີບ ໂດຍມີພັກນຳພາ, ລັດຄຸ້ມຄອງແລະປະຊາຊົນເປັນເຈົ້າ ພ້ອມທັງດຳເນີນ

ການປະຕິວັດ 3 ປະການໄປພ້ອມກັນຄື: ການປະຕິວັດໃນການຜົວພັນການຜະລິດ, ການປະຕິວັດທາງດ້ານວິທະຍາສາດເຕັກນິກ, ການປະຕິວັດທາງດ້ານແນວຄິດ-ວັດທະນະທຳ. ສິ່ງສຳຄັນໃນໄລຍະດັ່ງກ່າວນັ້ນ, ລັດຖະບານໄດ້ຄົ້ນຄ້ວາແລະວາງໂຄງປະກອບເສດຖະກິດໃໝ ' ສຳລັບການພັດທະນາເສດຖະກິດ-ສັງຄົມ ໂດຍອີງໃສ່ຈຸດພິເສດແລະທ່າແຮງຂອງປະເທດຊາດຄື: ເອົາການກະສິກຳ-ປ່າໄມ້ເປັນພື້ນຖານ ໃຫ້ແກ່ການຂະຫຍາຍອຸດສະຫະກຳ; ເອົາການຄົມມະນາຄົມຂົນສົ່ງເປັນປາຍແໜມ; ຂະຫຍາຍເສດຖະກິດສູນກາງ ແລະເສດຖະກິດທ້ອງຖິ່ນໄປພ້ອມໆກັນ; ເອົາການຜະລິດກັບການຈໍລະຈອນແຈກຢາຍໄປພ້ອມກັນ. ອີງໃສ່ສະພາບການຕົວຈິງແລະຈຸດພິເສດຂອງສັງຄົມລາວ, ການນຳຂອງພັກແລະລັດຖະບານລາວ ໄດ້ວາງນະໂຍບາຍສົ່ງເສີມ 5 ພາກສ່ວນເສດຖະກິດ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດຂອງຊາດ ຄື: ເສດຖະກິດຂອງລັດ, ເສດຖະກິດລວມໝູ່, ເສດຖະກິດລັດ-ເອກະຊົນ, ເສດຖະກິດທຶນນິຍົມ, ເສດຖະກິດຂອງຜູ້ຜະລິດນ້ອຍ.

ໃນບາດກ້າວເດີນຕາມເສັ້ນທາງສັງຄົມນິຍົມ ພາຍຫຼັງທີ່ໄດ້ສຳເລັດການປະຕິວັດຊາດປະຊາທິປະໄຕຂັ້ນພື້ນຖານ, ລັດຖະບານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກໍ່ໄດ້ຜັນຂະຫຍາຍມະຕິກອງປະຊຸມຄົບຄະນະຂອງສູນກາງພັກຄັ້ງທີ 4 ສະໄໝທີ 2 ດ້ວຍການເລີ່ມຕົ້ນວາງແຜນການພັດທະນາເສດຖະ

ກິດ-ສັງຄົມສຳລັບໄລຍະ 3 ປີ, 1978-1980. ໃນການປະຕິບັດ ວຽກງານຂົງເຂດຕ່າງໆ ທີ່ໄດ້ກຳນົດອອກໃນ ແຜນການພັດທະ ນາເສດຖະກິດ ແລະ ສັງຄົມດັ່ງກ່າວ, ລັດຖະບານໄດ້ໝູນໃຊ້ທິດ ສະດີມາກ-ເລນິນ ກໍ່ຄືບົດຮຽນຂອງບັນດາປະເທດສັງຄົມນິຍົມ ເຂົ້າໃນສະພາບການຕົວຈິງຂອງລາວ. ການປະຕິບັດແຜນການ 3 ປີ, 1978-1980 ນັ້ນໄດ້ສະຫລຸບດ້ວຍຜົນສຳເລັດໃນການແກ້ໄຂ ຝ່າຍບັນຫາໃນຂົງເຂດເສດຖະກິດ, ວັດທະນະທຳ, ການສຶກສາ, ສາທາລະນະສຸກ ແລະອື່ນໆ ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງ ປະຊາຊົນບັນດາເຜົ່າເປັນປົກກະຕິດີຂຶ້ນເທື່ອລະກ້າວ, ໂດຍສະ ເພາະ ກອງປະຊຸມສູນກາງພັກຄັ້ງທີ 7 ແລະຄັ້ງທີ 8 ໄດ້ ຖອດຖອນບົດຮຽນໃນການດັດສ້າງແລະກໍ່ສ້າງສັງຄົມນິຍົມ, ໃນ ການພັດທະນາເສດຖະກິດແຫ່ງຊາດ ອັນໄດ້ພາໄປເຖິງການວາງ ທິດທາງແຜນການ 5 ປີ ແຫ່ງລັດຄັ້ງທຳອິດ ສຳລັບປີ 1981-1985. ທິດທາງແຜນການແຫ່ງລັດດັ່ງກ່າວ ໄດ້ຖືກນຳສະເໜີ ລາຍງານຕໍ່ກອງປະຊຸມໃຫຍ່ຄັ້ງທີ III ຂອງພັກປະຊາຊົນປະຕິວັດ ລາວໃນເດືອນເມສາ 1982 ເພື່ອການພິຈາລະນາຫຼັງຈາກນັ້ນກໍ່ ໄດ້ເອົາໄປຜ່ານກອງປະຊຸມສະພາປະຊາຊົນສູງສຸດ ເພື່ອການຮັບ ຮອງເອົາ.

ໃນໄລຍະດັ່ງກ່າວ, ການຈັດຕັ້ງຂອງລັດຖະບານໄດ້ຫັນ ໄປສູ່ລະບອບສະພາລັດຖະມົນຕີ ເພື່ອການປະຕິບັດແນວທາງ ພາຍໃນ ແລະຕ່າງປະເທດຂອງພັກ ແບບລວມສູນດ້ວຍການປະ ຊຸມ ພິຈາລະນາຢ່າງລະອຽດຖີ່ຖ້ວນກ່ຽວກັບໂຄງການ ແລະ

ວຽກງານອັນສຳຄັນທີ່ພົວພັນເຖິງຊະຕາກຳຂອງຊາດ. ໂດຍອີງໃສ່ບົດຮຽນ ແລະຜົນສຳເລັດໃນການສ້າງສັງຄົມນິຍົມຂອງບັນດາປະເທດທີ່ໄດ້ກ້າວໜ້າໄປກ່ອນແລ້ວ, ສະພາລັດຖະມົນຕີ ສປປ ລາວ ໄດ້ວາງແນວທາງແລະໜ້າທີ່ ວຽກງານເພື່ອແກ້ໄຂສະພາບໜ້າຫຼັງ ແລະດ້ອຍພັດທະນາຂອງປະເທດ ເພື່ອຫຍໍ້ໄລຍະກ້າວຂຶ້ນສັງຄົມນິຍົມ ໂດຍອີງໃສ່ການຊ່ວຍເຫຼືອທາງດ້ານວັດຖຸ ແລະ ຈິດໃຈຂອງບັນດາປະເທດສັງຄົມນິຍົມ. ໃນນັ້ນໄດ້ມີການວາງແຜນນະໂຍບາຍເປີດ ຂະບວນການຫັນເປັນສະໜະກອນກະເສດຢູ່ທົ່ວປະເທດ, ໄດ້ພະຍາຍາມກໍ່ສ້າງພື້ນຖານອຸດສະຫະກຳໃຫ້ເປັນຕົ້ນເປັນໂຕດ້ວຍ ການປັບປຸງກໍ່ສ້າງໂຮງຈັກໂຮງງານຈຳນວນນຶ່ງເພື່ອເປັນໜ່ແໜງໃຫ້ແກ່ອຸດສະຫະກຳສັງຄົມນິຍົມ.

ດ້ວຍຈຸດປະສົງເພື່ອຈະ ປະຕິບັດແຜນການແຫ່ງການພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ 1 ໃຫ້ປະກົດເປັນຈິງ, ສະພາລັດຖະມົນຕີໄດ້ປັບປຸງ ແລະ ເພີ່ມທະວີວຽກງານຂອງລັດຖະບານດ້ວຍການເຮັດໃຫ້ກົງຈັກໃຫຍ່ໂຕຂຶ້ນຕື່ມ ຄືໄດ້ຕັ້ງກະຊວງ ແລະ ຄະນະກຳມະການທຽບເທົ່າເພີ່ມອີກຈຳນວນໜຶ່ງ ຕົວຢ່າງ ກະຊວງການຄ້າ, ກະຊວງຂົນສົ່ງໄປສະນີ, ກະຊວງສະໜອງວັດຖຸເຕັກນິກ, ກະຊວງກໍ່ສ້າງ, ກະຊວງວັດທະນະທຳ, ຄະນະກຳມະການແຜນການແຫ່ງລັດ, ຄະນະກຳມະການຂ່າວສານ, ໜັງສືພິມ, ວິທະຍຸກະຈາຍສຽງ ແລະ ໂທລະພາບແຫ່ງລັດ, ຄະນະກຳມະການສະຫວັດດີການສັງຄົມ ແລະນັກຮົບເກົ່າ. ໃນນັ້ນ, ສ່ວນໜຶ່ງ

ກໍ່ແມ່ນ ການແຍກອຽກຈາກບາງກະຊວງມາຕັ້ງເປັນກະຊວງໃໝ່ ສະເພາະ. ຈຳນວນກະຊວງທັງໝົດໄດ້ເພີ່ມຈາກ 12 ເປັນ 14, ຄະນະກຳມະການຈາກ 2 ເປັນ 4, ນອກນັ້ນກໍ່ຍັງມີຄະນະກຳມະການທະນາຄານແລະ ຫ້ອງວ່າການສະພາລັດຖະມົນຕີ. ການປັບປຸງສະພາລັດຖະມົນຕີໄດ້ມີການ ປ່ຽນແປງໜ້າທີ່ຕຳແໜ່ງຂອງຂັ້ນນຳຈຳນວນນຶ່ງ ເຊັ່ນວ່າ: ທ່ານໝູຮັກ ພູມສະຫວັນ ແລະ ທ່ານ ພູມີ ວົງວິຈິດ ໄດ້ຮັບຕຳແໜ່ງຮອງປະທານສະພາລັດຖະມົນຕີຜູ້ທີ 1 ແລະ ຮອງປະທານສະພາລັດຖະມົນຕີ ຕາມລຳດັບຊຶ່ນຳກຸ່ມອຽກງານ ແຕ່ບໍ່ກຳກະຊວງໂດຍກົງຄືເມື່ອກ່ອນ, ໄດ້ມີການແຕ່ງຕັ້ງ ທ່ານສາລີ ວົງຄຳຊາວ ເປັນຮອງປະທານສະພາລັດຖະມົນຕີ ທັງເປັນປະທານຄະນະກຳມະການແຜນການແຫ່ງລັດ. ນອກນັ້ນ ກໍ່ໄດ້ມີການແຕ່ງຕັ້ງລັດຖະມົນຕີ ແລະ ປະທານຄະນະກຳມະການໃໝ່ຫຼາຍທ່ານ ສ່ວນຮອງລັດຖະມົນຕີກະຊວງ ແລະ ຄະນະກຳມະການຕ່າງໆ ກໍ່ໄດ້ຮັບການແຕ່ງຕັ້ງໃໝ່ ເປັນຈຳນວນຫຼາຍ ເຊິ່ງລວມທັງລັດຖະມົນຕີ ແລະ ຮອງລັດຖະມົນຕີແມ່ນມີເກືອບ 100 ທ່ານ. ໃນນັ້ນ ກະຊວງໃຫຍ່ແມ່ນມີຮອງລັດຖະມົນຕີເຖິງ 5-6 ທ່ານ. ສ່ວນບັນດາກະຊວງໃນຄະນະລັດຖະບານກໍ່ໄດ້ມີການ ປັບປຸງຈຳນວນກົມ ດ້ວຍການເພີ່ມຕື່ມຈາກ 10 ກົມຂຶ້ນເປັນຮອດ 20 ກົມ ໂດຍສະເພາະແມ່ນບັນດາກະຊວງ ຂະແໜງການເສດຖະກິດ.

ໃນໄລຍະແຕ່ປີ 1986 ເຖິງປີ 1990, ລັດຖະບານ ສປປ ລາວ ໄດ້ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງພັກ

ແລະ ປະຕິບັດຕາມທິດທາງ ໜ້າທີ່ວຽກງານທີ່ໄດ້ວາງອອກໃນ ແຜນການພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ 2. ຜ່ານການ ຖອດຖອນບົດຮຽນຈາກການປະຕິບັດແຜນການ 5 ປີຄັ້ງທີ 1, 1981-1985 ກໍ່ຄືການສັງເກດຕີລາຄາສະພາບການປະຕິບັດ ແນວທາງການດັດສ້າງແລະກໍ່ສ້າງສັງຄົມນິຍົມຕະຫຼອດໄລຍະ 10 ປີ ພາຍຫຼັງວັນທີ 2 ທັນວາ 1975 ນັ້ນ, ພັກແລະລັດ ຖະບານລາວ ໄດ້ສາມາດປົກປັກຮັກສາເອກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນໄວ້ໄດ້ຢ່າງໝັ້ນຄົງ ໄດ້ຮັບຜົນສຳ ເລັດໃນຫຼາຍດ້ານ ແລະ ໄຊຊະນະອັນໃຫຍ່ຫຼວງໃນການປົວແປງ ແກ້ໄຂຊີວິດການເປັນຢູ່ ຂອງປະຊາຊົນໃຫ້ປົກກະຕິດີຂຶ້ນຢ່າງຈະ ແຈ້ງ, ໄດ້ສ້າງກົນໄກຄຸ້ມຄອງເສດຖະກິດໃໝ່ຂຶ້ນໃຫ້ສອດຄ່ອງ ກັບສະພາບການຕົວຈິງຂອງປະເທດ,ໄດ້ເຮັດໃຫ້ການຈັດຕັ້ງການ ຜະລິດທຸລະກິດຫັນອອກຈາກລະບອບການຄຸ້ມຄອງແບບລວມສູນ ອຳນາດສິດບໍລິຫານເກືອກຸນໄປສູ່ການປະຕິບັດລະບອບໄລ່ລຽງທຸ ລະກິດສັງຄົມນິຍົມ. ຂົງເຂດການສຶກສາ, ສາທາລະນະສຸກ ແລະ ວັດທະນະທຳ ກໍ່ໄດ້ມີການຂະຫຍາຍຕົວຢ່າງກ້າວໜ້າ. ຜົນສຳ ເລັດດັ່ງ ກ່າວນັ້ນ ໄດ້ຊີ້ໃຫ້ເຫັນວ່າ ດ້ວຍການຊີ້ນຳ ນຳພາຂອງ ພັກ ແລະ ລັດຖະບານ, ລັດປະຊາທິປະໄຕປະຊາຊົນ ໄດ້ມີຄວາມເຂັ້ມແຂງ,ຮາກຖານການເມືອງ ຢູ່ຕາມເຂດແຂວງ ຕ່າງໆທົ່ວປະເທດໄດ້ຮັບ ການປັບປຸງຢ່າງໜັກແໜ້ນ, ນ້ຳໃຈຮັກ ຊາດຂອງປະຊາຊົນບັນດາເຜົ່າໄດ້ຮັບການເຊີດຊູຂຶ້ນຢ່າງບໍ່ລົດລະ

ອັນໄດ້ເຮັດ ໃຫ້ອິດ ທິພົນຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສູງ ເດັ່ນຂຶ້ນເທື່ອລະກ້າວໃນເວທີສາກົນ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ການນຳຂອງພັກແລະລັດ ຖະບານກໍ່ບໍ່ໄດ້ປະຕິເສດກ່ຽວກັບຈຸດອ່ອນ ແລະ ຂໍ້ຂາດຕົກບົກ ຜ່ອງໃນການປະຕິບັດແນວທາງ ນະໂຍບາຍທີ່ໄດ້ວາງອອກ, ດັ່ງ ທີ່ ທ່ານໄກສອນ ພົມວິຫານ ເລຂາທິການໃຫຍ່ ຄະນະບໍລິຫານ ງານສູນກາງພັກ, ປະທານສະພາລັດຖະມົນຕີ ສປປ ລາວໄດ້ ກ່າວອອກ ໃນບົດລາຍງານການເມືອງຂອງຄະນະບໍລິຫານ ງານສູນກາງພັກ ຕໍ່ກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກວ່າ : "ຂໍ້ ຂາດຕົກບົກຜ່ອງຕົ້ນຕໍຂອງພວກເຮົາແມ່ນ ອັດຕະວິໄສ, ຝ່າຝືງ, ບໍ່ຮູ້ສົມທຽບລະຫວ່າງການດັດສ້າງກັບການກໍ່ສ້າງ, ຢາກລົບ ລ້າງບັນດາພາກສ່ວນເສດຖະກິດ ທີ່ບໍ່ເປັນສັງຄົມນິຍົມໂດຍທັນ ທີທັນໃດເຊັ່ນ : ໃນດ້ານອຸດສະຫະກຳ, ໄດ້ຝ່າຝືງໂອນເອົາບັນ ດາໂຮງງານທີ່ບໍ່ຈຳເປັນ ມາເປັນກຳມະສິດຂອງລັດ ໃນຂະນະທີ່ ລັດບໍ່ທັນມີເງື່ອນໄຂພຽງພໍໃນດ້ານການຄຸ້ມຄອງ ອັນພາໃຫ້ການ ຜະລິດຕົກຕ່ຳລົງ. ໃນດ້ານການຄ້າ, ປະກົດການເກືອດຫ້າມ ການຈໍລະຈອນສິນຄ້າລະຫວ່າງທ້ອງຖິ່ນຕ່າງໆດ້ວຍກັນ ໄດ້ແຜ່ ຂະຫຍາຍພໍສົມຄວນຢູ່ໃນຫຼາຍທ້ອງຖິ່ນ ອັນໄດ້ສົ່ງຜົນສະທ້ອນ ບໍ່ດີເຖິງການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ, ຍິ່ງ ໄປກ່ວານັ້ນ ຢູ່ໃນບາງບ່ອນກໍ່ໃຊ້ມາດຕະການບໍລິຫານ, ອອກຄຳ ສັ່ງລົບລ້າງການຄ້າເອກະຊົນ. ໃນດ້ານກະສິກຳ, ຢາກຫັນເປັນ

ສະຫະກອນໃຫ້ສຳເລັດໂດຍທັນທີທັນໃດໂລດ ໂດຍຄິດວ່າເຮັດຄືແນວນັ້ນຈະພາໃຫ້ມີສັງຄົມນິຍົມຢ່າງໄວວາ".

ເພື່ອແກ້ໄຂຂໍ້ຂາດຕົກບົກຜ່ອງດັ່ງກ່າວ, ລັດຖະບານກໍ່ຄື ສະພາລັດຖະມົນຕີ ສປປລາວ ໄດ້ຈຳຕ້ອງດຳເນີນການດັດແປງກົນໄກຄຸ້ມຄອງເສດຖະກິດ ດ້ວຍການຍົດຖືບັນດາທັດສະນະຟື້ນຖານ ຄືການນຳໃຊ້ການພົວພັນສິນຄ້າ-ເງິນຕາ ເຂົ້າໃນການຫັນເສດຖະກິດແຫ່ງຊາດເປັນແຜນການໃຫ້ຄົບຖ້ວນ ແລະຖືກຕ້ອງ, ນຳໃຊ້ຄວາມອາດສາມາດ ບົ່ມຊ້ອນຂອງບັນດາພາກສ່ວນເສດຖະກິດ, ນຳໃຊ້ການຮ່ວມມືທາງດ້ານເສດຖະກິດກັບຕ່າງປະເທດໃຫ້ມີປະສິດທິຜົນ, ລົບລ້າງກົນໄກຄຸ້ມຄອງແບບລວມສູນອາດຍາສິດບໍ່ລິຫານເກື້ອກຸນ, ປະຕິບັດກົນໄກໄລ່ລຽງທຸລະກິດສັງຄົມນິຍົມ ທັງຮັບປະກັນຄວາມເປັນເຈົ້າຕົນເອງທາງດ້ານການເງິນ ແລະ ເປັນເຈົ້າຕົນເອງທາງດ້ານແຜນການ.

ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກໃຫ້ປະກົດເປັນຈິງ, ການນຳຂອງພັກ ແລະ ລັດຖະບານ ຍັງໄດ້ວາງທັດສະນະກ່ຽວກັບ ຈິນຕະນາການໃໝ່ອອກ ເພື່ອເຮັດໃຫ້ພະນັກງານ, ທະຫານ ແລະ ປະຊາຊົນມີຄວາມຮັບຮູ້ຂະບວນການຕົວຈິງຂອງສັງຄົມຢ່າງຖືກຕ້ອງ ນັບແຕ່ຈິດສຳນຶກໄປ ເຖິງພຶດຕິກຳຕົວຈິງ. ພ້ອມກັນນັ້ນກໍ່ໄດ້ມີການຈຳແນກກ່ຽວກັບຈິນຕະນາການເກົ່າທີ່ເບິ່ງບັນຫາບໍ່ຖືກສະພາວະຄວາມເປັນຈິງ. ສິ່ງສຳ

ຄັ້ນເພື່ອຊຸກຍູ້ການປະຕິບັດແຜນການ 5 ປີແຫ່ງລັດຄັ້ງທີ 2 ໃຫ້ມີຜົນສຳເລັດອັນໃໝ່ໃຫຍ່ກ່ວາເກົ່ານັ້ນ, ພັກແລະລັດຖະບານ ຍັງໄດ້ຮັບຮອງເອົາ ແນວທາງແຫ່ງການປ່ຽນແປງໃໝ່ທາງດ້ານ ການຈັດຕັ້ງ, ດ້ານພະນັກງານແລະແບບແຜນວິທີເຮັດວຽກ ໃຫ້ ສອດຄ່ອງກັບ ຂະບວນວິວັດຂອງວຽກງານ.

ດ້ວຍເຫດນີ້, ສະພາລັດຖະມົນຕີ ຈຶ່ງໄດ້ປັບປຸງກົງຈັກ ການຈັດຕັ້ງຂອງລັດຖະບານຄົນໃໝ່ ໂດຍໄດ້ຍຸບຄະນະກຳມະ ການແຜນການແຫ່ງລັດ ແລ້ວມາຕັ້ງເປັນກະຊວງເສດຖະກິດ, ແຜນການແລະການເງິນ, ໄດ້ຍຸບກະຊວງສະໜອງອັດຖຸ ແລະຈັດ ເອົາກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະ ກໍ່ສ້າງເຂົ້າ ເປັນກະຊວງດຽວ, ໄດ້ມີການຈັດຕັ້ງກະຊວງພົວພັນເສດຖະກິດ ກັບຕ່າງປະເທດ ແລະ ການຄ້າ, ໄດ້ເອົາກະຊວງຖະແຫຼງຂ່າວ ແລະ ວັດທະນະທຳເຂົ້າກັນ. ໄດ້ຈັດຕັ້ງກະຊວງວິທະຍາສາດ ແລະເຕັກໂນໂລຊີໃໝ່ ແລະອື່ນໆ ທີ່ໄດ້ແຍກອອກຈາກກັນຫຼີໂຮມ ເຂົ້າກັນ ອີງຕາມຄວາມເໝາະສົມໃນໄລຍະນັ້ນ. ບັນຫາບົ່ງທີ່ສະ ພາລັດຖະມົນຕີ ຄົ້ນເຫັນຈາກບົດຮຽນໃນໄລຍະຜ່ານມານັ້ນ ກໍ່ຄື ຂອດລະຫວ່າງການງານຢູ່ ພາຍໃນກະຊວງຕ່າງໆ ດັ່ງນັ້ນຈຶ່ງໄດ້ຕົກ ລົງລົບລ້າງບໍ່ໃຫ້ມີຂັ້ນກົມ ໃນໄລຍະໜຶ່ງພຽງແຕ່ ໃຫ້ມີໜ່ວຍ ງານທີ່ຂຶ້ນກັບຮອງລັດຖະມົນຕີໂດຍກົງ.

ໃນຕົ້ນປີ 1989, ສູນກາງພັກ ໄດ້ດຳເນີນກອງປະຊຸມ ຄົບຄະນະຄັ້ງທີ 7 ຂຶ້ນ ໂດຍໄດ້ເນັ້ນເຖິງການ ຫັນໄປສູ່ຊຶ່ນນະບົດ ແລະ ເປີດກ້ວາງການພົວພັນກັບຕ່າງປະເທດ. ບັນຫາເດັ່ນ ອັນ ນຶ່ງທີ່ໄດ້ມີການພິຈາລະນາ ໃນກອງປະຊຸມນັ້ນກໍ່ຄື ການກຳນົດ ລັກສະນະຂອງການປະຕິວັດຢູ່ລາວຄືນໃໝ. ທ່ານໄກສອນ ພົມວິ ຫານ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະ ທານສະພາລັດຖະມົນຕີ ສປປລາວ ໄດ້ກ່າວປາໄສ ໃນກອງປະ ຊຸມວ່າ: "ໃນຊຸມປີທຳອິດ, ຍ້ອນມີຄວາມຮັບຮູ້ບໍ່ຖືກຕ້ອງ, ພວກເຮົາ ໄດ້ຟ້າວຟັ່ງດຳເນີນການດັດສ້າງສັງຄົມນິຍົມໂດຍເຮັດ ໄປຕາມຕົວແບບອັນດັ້ງເດີມ ເຊັ່ນລົບລ້າງກຳມະສິດເອກະຊົນ, ລົບລ້າງຕະຫຼາດ, ປະຕິບັດລະບອບການຄຸ້ມຄອງແບບ ລວມສູນ ອຳນາດສິດແລະຜົນມັດ. ມາດຮອນ້ີ, ພວກເຮົາຕ້ອງປ່ຽນແປງ ໃໝ່ກ່ຽວກັບທັດສະນະໂດຍຢືນຢັນວ່າ ພວກເຮົາກ້າວຂຶ້ນສັງຄົມ ນິຍົມເທື່ອລະກ້າວ ຈາກການປັບປຸງ, ຂະຫຍາຍ ແລະບູລະນະ ລະ ບອບປະຊາທິປະໄຕປະຊາຊົນ." ຈາກນັ້ນ ສູນກາງພັກຈຶ່ງມີຂໍ້ສະ ຫລຸບວ່າ ການປະຕິວັດຂອງລາວໃນໄລຍະໃໝ່ ແມ່ນໄລຍະແຫ່ງ ການປັບປຸງ, ຂະຫຍາຍ ແລະບູລະນະລະບອບປະຊາທິປະໄຕ ປະ ຊາຊົນ ຂ້າມຜ່ານຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ.

ຍ້ອນສະພາບການຕົວຈິງໃນໄລຍະດັ່ງກ່າວ, ສະພາລັດ ຖະມົນຕີ ຈຶ່ງໄດ້ສຸມໃສ່ 4 ຈຸດຄື: 1/. ຫັນລົງຮາກຖານ, ຫັນໄປ ສູ່ຊຶ່ນນະບົດ, ຂຶ້ນໄປສູ່ເຂດພູດອຍ. 2/. ປະຕິບັດນະໂຍບາຍເປີດ

ກ້ວາງການພົວພັນກັບຕ່າງປະເທດ, ດຶງດູດ ແລະນຳໃຊ້ແຫຼ່ງທຶນ ຊ່ວຍເຫຼືອ, ກູ້ຢືມແລະການລົງທຶນຂອງຕ່າງປະເທດໃຫ້ມີປະສິດທິ ຜົນຂຶ້ນຕື່ມ. 3/. ປະຕິບັດການຫັນໄປສູ່ກົນໄກຄຸ້ມຄອງ ໃໝ່ຢ່າງ ຂາດຂັ້ນໃນທຸກໆຫົວໜ່ວຍ ນັບແຕ່ຂົງເຂດ ການຜະລິດໄປເຖິງ ຂົງເຂດຈໍລະຈອນ, ໃນທຸກຂະແໜງການແລະທ້ອງຖິ່ນ. 4/. ສຳ ເລັດການປັບປຸງສັບຊ້ອນການຈັດຕັ້ງກົງຈັກ, ເຮັດໃຫ້ມັນມີປະສິດ ທິພາບຂຶ້ນກ່ວາເກົ່າ.

ໃນໄລຍະແຕ່ປີ 1991 ເຖິງປີ 1995, ແມ່ນໄລຍະທີ່ ສະ ພາລັດຖະມົນຕີ ສປປ ລາວໄດ້ກ້າວເຂົ້າສູ່ການ ປະຕິບັດທິດທາງ ໜ້າທີ່ໆ ໄດ້ກຳນົດອອກໃນກອງປະຊຸມໃຫຍ່ຄັ້ງທີ່ V ຂອງພັກ ປະຊາຊົນປະຕິວັດລາວນັ້ນ ກໍ່ຄືການສືບຕໍ່ສ້າງ ແລະ ຂະຫຍາຍ ລະບອບປະຊາທິປະໄຕ ປະຊາຊົນ. ກອງປະຊຸມໃຫຍ່ຄັ້ງທີ່ V ຂອງພັກທີ່ໄດ້ດຳເນີນໄປໃນທ້າຍເດືອນ ມີນາ 1991 ໄດ້ສັງເກດ ຕີລາຄາກ່ຽວກັບ ຜົນສຳເລັດແລະໄຊຊະນະອັນໃຫຍ່ຫຼວງທີ່ ຍາດ ມາໄດ້ໃນຂະບວນວິວັດ ແຫ່ງ ການປະຕິບັດແນວທາງປ່ຽນແປງ ໃໝ່ທັງໄດ້ໄຈ້ແຍກ ແລະຕຳນິວິຈານກ່ຽວກັບຈຸດອ່ອນ ແລະ ຂໍ້ຄົງ ຄ້າງອັນເກີດມາຈາກສາຍເຫດອັດຕະວິໄສ ແລະ ພາວະວິໄສ. ຜ່ານການຖອດຖອນບົດຮຽນ ດ້ານຕ່າງໆທີ່ໄດ້ຮັບຈາກພິດຕິກຳ ຕົວຈິງໃນໄລຍະຜ່ານມາ, ສະພາລັດຖະມົນຕີ ໄດ້ປັບປຸງແລະວາງ ແຜນການພັດທະນາເສດຖະກິດ ແລະ ສັງຄົມໃຫ້ສອດຄ່ອງກັບ ສະພາບໃນໄລຍະໃໝ່ຂອງການປະຕິວັດ ພ້ອມນັ້ນກໍ່ໄດ້ມີການປັບ

ປ່ຽກ່ຽຈັກກາມຈັດຕັ້ງ ຂອງສະພາລັດຖະມົນຕີມາສູ່ຮູບກາມຈັດ
ຕັ້ງລັດຖະບາມ ໂດຍໃຫ້ສິດຕັດສິນບັນຫາຢູ່ທີ່ນາຍົກລັດຖະມົນຕີ.
ພາຍຫຼັງທີ່ສະພາປະຊາຊົນສູງສຸດ ໄດ້ຮັບຮອງເອົາລັດຖະທຳມະ
ນູນ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ສະບັບທຳ
ອິດ ໃນວັນທີ 14 ສິງຫາ 1991 ແລ້ວໃນມື້ຕໍ່ມາຂອງກອງປະຊຸມ
ສະພາປະຊາຊົນສູງສຸດເທື່ອທີ 6 ກໍ່ໄດ້ມີກາມແຕ່ງຕັ້ງໃຫ້ ທ່ານ
ຄຳໄຕ ສີພັນດອນ ເປັນນາຍົກລັດຖະມົນຕີ ປ່ຽນແທນ ທ່ານໄກ
ສອນ ພົມວິຫານ ທີ່ຖືກເລືອກຕັ້ງເປັນປະທານປະເທດ. ບັນດາ
ກະຊວງຂອງລັດຖະບານກໍ່ໄດ້ຮັບກາມປັບປຸງເຊັ່ນດຽວກັນ ຄືໄດ້
ມີກາມຍຸບກະຊວງເສດຖະກິດ, ແຜນກາມແລະກາມເງິນແລ້ວຕັ້ງ
ເປັນຄະນະກຳມະກາມແຜນກາມ ແລະກາມຮ່ວມມື,ສ່ວນດ້ານ
ກາມເງິນນັ້ນ ກໍ່ໄດ້ຈັດຕັ້ງໃຫ້ເປັນກະຊວງກາມເງິນ ສະເພາະ.
ສ່ວນກະຊວງພົວພັນເສດຖະກິດກັບຕ່າງປະເທດ ແລະກາມຄ້ານັ້ນ
ກໍ່ໄດ້ຖືກແຍກເອົາວຽກງາມ ກາມຮ່ວມມືແລະກາມ ລົງທຶນໄປຂຶ້ນ
ກັບຄະນະກຳມະກາມແຜນກາມແລະກາມຮ່ວມມື.ສຳລັບຂະແໜງ
ກາມຄ້ານັ້ນ ເຊິ່ງມີໄລຍະນຶ່ງກໍ່ໄດ້ຖືກຈັດຕັ້ງເປັນກະຊວງກາມຄ້າ
ແລະທ່ອງທ່ຽວ, ໃນພາຍລຸນມາກໍ່ແຍກໃຫ້ເປັນ ກະຊວງກາມຄ້າ
ສະເພາະ, ສ່ວນຂະແໜງກາມທ່ອງທ່ຽວ ທີ່ໄດ້ ຮັບກາມຂະຫຍາຍ
ຕົວຕາມແນວທາງເປີດກ້ວາງ ກາມພົວພັນ ກັບຕ່າງປະເທດນັ້ນ
ກໍ່ໄດ້ຖືກປັບປຸງໃຫ້ເປັນອົງກາມ ທ່ອງທ່ຽວແຫ່ງຊາດ ຂຶ້ນກັບ
ສຳນັກງາມນາຍົກລັດຖະມົນຕີ. ທາງດ້ານກະຊວງສາທາລະ
ນະສຸກ ແລະ ສະຫວັດດີກາມສັງຄົມກໍ່ໄດ້ຖືກແຍກເປັນ ກະຊວງ

ສາທາລະນະສຸກສະເພາະ. ສ່ວນວຽກງານສະຫວັດ ດີການ ສັງຄົມ ກໍ່ໄດ້ ຖືກຈັດເຂົ້າຢູ່ໃນກະຊວງແຮງງານ ແລະສະຫວັດ ດີການສັງຄົມ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃໝ່. ສຳລັບກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີກໍ່ໄດ້ປ່ຽນແປງໃຫ້ເປັນ ອົງການນຶ່ງທີ່ຂຶ້ນກັບ ສຳນັກງານນາຍົກລັດຖະມົນຕີ, ເຊັ່ນດຽວ ກັນກັບວຽກງານກິລາ ກໍ່ໄດ້ແຍກອອກຈາກ ກະຊວງສຶກສາ ມາເປັນ ຄະນະກຳມະການ ລາແຫ່ງຊາດທີ່ຂຶ້ນກັບສຳ ນັກງານ ນາຍົກລັດຖະມົນຕີ. ນອກຈາກນັ້ນກໍ່ຍັງໄດ້ມີການປັບ ປຸງໂຮມ ເອົາບາງວຽກງານເຂົ້າໃນກະຊວງ ຫຼື ແຍກອອກຈາກກະຊວງ ໃດນຶ່ງ ໂດຍອີງໃສ່ຄວາມ ກ່ຽວພັນຕົວຈິງ ຂອງວຽກງານ.

ຄະນະລັດຖະບານທີ່ໄດ້ຮັບການສະເໜີຂຶ້ນໃໝ່ແລະໄດ້ຖືກ ຮັບຮອງເອົາ ໂດຍກອງປະຊຸມສະພາແຫ່ງຊາດຄັ້ງປະຖົມມະລຶກ ເມື່ອວັນທີ 23 ກຸມພາ 1993 ນັ້ນແມ່ນປະກອບມີ 13 ກະຊວງ, 2 ຄະນະກຳມະການ ແລະ ສຳນັກງານນາຍົກ ລັດຖະມົນຕີ. ໃນນັ້ນ ຄກະຊວງ ໄດ້ມີການຈັດຕັ້ງກັນຂຶ້ນໃຫ້ເໝາະສົມກັບວຽກງານ ຕາມທິດກະທັດລັດ, ເບົາບາງ, ເຂັ້ມແຂງ ແລະມີປະສິດທິຜົນ ເພື່ອຕອບສະໜອງ ກັບຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ ການເມືອງທີ່ພັກໄດ້ວາງອອກ.

ຄະນະລັດຖະບານທີ່ໄດ້ຮັບການປັບປຸງໃໝ່ນັ້ນ ແມ່ນໄດ້ ເດັດດ່ຽວປະຕິບັດ ຕາມມະຕິກອງປະຊຸມໃຫຍ່ຄັ້ງທີ່ V ຂອງພັກ

ທີ່ໄດ້ເນັ້ນເຖິງການ "ສືບຕໍ່ພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານ, <u>ເພີ່ມທະວີຄວາມສາມັກຄີເປັນອັນນຶ່ງອັນດຽວ</u> ຂອງປະຊາຊົນລາວທັງຊາດ ບົນພື້ນຖານພັນທະພາບ ກຳມະກອນ-ກະສິກອນ ແລະປັນຍາຊົນນັກຮຽນຮູ້ ພາຍໃຕ້ການນຳພາຂອງພັກ. ຕັ້ງໜ້າສົ່ງເສີມເສດຖະກິດຫຼາຍພາກສ່ວນ ແນໃສ່ຂະຫຍາຍກຳລັງການຜະລິດຢ່າງແຂງແຮງ, ຫັນປ່ຽນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ, ເຮັດໃຫ້ຊີວິດການເປັນຢູ່ທາງດ້ານ ວັດຖຸ ແລະວັດທະນະທຳ ຂອງປະຊາຊົນເຜົ່າຕ່າງໆ ນັບມື້ນັບດີຂຶ້ນ. ເສີມຂະຫຍາຍປະຊາທິປະໄຕ ໃນທຸກຂົງເຂດຂອງຊີວິດສັງຄົມ, ເຊີດຊູບົດບາດຂອງອົງ ການຈັດຕັ້ງມະຫາຊົນ ແລະ ອົງການ ຈັດຕັ້ງສັງຄົມ, ກໍ່ສ້າງກົງຈັກລັດໃຫ້ເປັນຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອປະຊາຊົນຢ່າງແທ້ຈິງ ທີ່ເຄື່ອນໄຫວ ຕາມລັດຖະທຳມະນູນ ແລະ ກົດໝາຍ."

ຜ່ານການປະຕິບັດກົດໝາຍວ່າດ້ວຍ ສະພາລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບລົງວັນທີ 20 ກໍລະກົດ ປີ 1982 ມາເປັນເວລາ 13 ປີ, ສະພາແຫ່ງຊາດກໍ່ໄດ້ຮັບຮອງເອົາກົດໝາຍວ່າດ້ວຍ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນກອງປະຊຸມ ເທື່ອທີ 6 ສະໄໝສາມັນຊຸດທີ III ໃນວັນທີ 8 ມີນາ 1995 ແລະ ໄດ້ປະກາດໃຊ້ ໂດຍປະທານປະເທດໃນວັນທີ 30 ມີນາ 1995 ເພື່ອໃຫ້

ລັດຖະບານສາມາດ ເຄື່ອນໄຫວວຽກງານໃຫ້ສອດຄ່ອງກັບສະ ພາບຕົວຈິງໃນໄລຍະໃໝ່.

ຄ. <u>ອົງການຕຸລາການ ແຫ່ງ ສປປ ລາວ</u> .

ອົງການຕຸລາການຢູ່ ສານປະຊາຊົນສູງສຸດ ປະຊາທິປະໄຕ ປະຊາຊົນລາວ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຄ່ຽງຄູ່ກັບອຳນາດ ການປົກຄອງພາຍຫຼັງການສະຖາປະນາ ສານປະຊາຊົນສູງສຸດ ປະຊາ ທິປະໄຕ ປະຊາຊົນລາວ ວັນທີ 2 ທັນວາ 1975 ນັ້ນແມ່ນອົງ ການແຫ່ງອຳນາດ ໃນການປະຕິບັດ ກົດໝາຍພາຍໃຕ້ລະບອບ ໃໝ່ຂອງປະຊາຊົນລາວ.

ເຖິງວ່າໃນໄລຍະພາຍຫຼັງການສະຖາປະນາ ສປປ ລາວ ຈະຍັງບໍ່ທັນໄດ້ມີການ ກະກຽມປະກາດໃຊ້ ລັດຖະທຳມະນູນໃນ ທັນໃດນັ້ນກໍ່ຕາມ, ແຕ່ລັດປະຊາທິປະໄຕປະຊາຊົນລາວ ກໍ່ໄດ້ ຄຳນຶງເຖິງກ່ອນອື່ນໝົດ ສິດເສລີພາບປະຊາທິປະໄຕ, ສິດເປັນ ເຈົ້າຂອງປະເທດຊາດ, ເຈົ້າຂອງສັງຄົມ, ເຈົ້າອຳນາດການປົກ ຄອງຜ່ານສະພາຜູ້ແທນປະຊາຊົນ, ສິດສະເໝີພາບຕໍ່ໜ້າກົດໝາຍ, ຕໍ່ສານແລະອື່ນໆ.

ໃນເມື່ອວ່າໄດ້ມີການລຶບລ້າງ ລະບອບລາຊາທິປະໄຕຢູ່ ລາວແລ້ວ, ກົງຈັກການປົກຄອງກໍ່ຄືກົດໝາຍ, ລະບົບການຈັດຕັ້ງ

ຂອງສານລອມຫັ້ງເຄື່ອງມືຮັບໃຊ້ ລະບອບເກົ່າກໍ່ລ້ອມແລ້ວ ແຕ່ ໄດ້ຖືກຍົກເລີກໄປນຳກັນ. ດັ່ງນັ້ນລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈຶ່ງໄດ້ວາງໂຄງການດຳເນີນ ງານອອກເຊິ່ງໃນນັ້ນກໍ່ໄດ້ເນັ້ນເຖິງການກໍ່ສ້າງ ແລະປັບປຸງ ລະ ບົບອົງການແຫ່ງອຳນາດລັດເຊັ່ນດຽວກັນກັບລະບົບການ ຈັດຕັ້ງ ຕຸລາການຂອງລະບອບໃໝ່ ເພື່ອຮັບປະກັນໃຫ້ແກ່ການຄຸ້ມຄອງ ລັດແລະສັງຄົມໃຫ້ມີຄວາມເປັນລະບຽບຮຽບຮ້ອຍ. ເຖິງແມ່ນວ່າ ໃນໄລຍະຫົວທີ່ຢູ່ ສປປລາວ ຍັງບໍ່ທັນໄດ້ມີການສ້າງກົດໝາຍໃໝ່ ເທື່ອກໍ່ຕາມແຕ່ເພື່ອຕອບສະໜອງກັບສະພາບການຈັດຕັ້ງຂອງສັງ ຄົມ, ນາຍົກລັດຖະມົນຕີຈຶ່ງໄດ້ອອກຄຳສັ່ງເລກທີ 53/ນຍ ລົງ ວັນທີ 15 ຕຸລາ 1976 ກ່ຽວກັບລະບົບການຈັດຕັ້ງສານ ແລະ ໄອຍະການລອມຫັ້ງລະບຽບຫຼັກການອື່ນໆ ເພື່ອດຳເນີນຄະດີ.

ສານທີ່ໄດ້ຮັບການຈັດຕັ້ງຂຶ້ນໃໝ່ນັ້ນ ໄດ້ໃຫ້ຊື່ວ່າສານ ປະຊາຊົນ ເຊິ່ງມີພາລະໜ້າທີ່ໃນການປະຕິບັດຜະເດັດການປະຊາ ທິປະໄຕປະຊາຊົນ ໝາຍຄວາມວ່າຜະເດັດການຕໍ່ພວກທີ່ບໍ່ດີ, ພວກທີ່ຝືນການປະຕິວັດ ແຕ່ຫາກປະຊາທິປະໄຕ ທີ່ສຸດຕໍ່ປະຊາ ຊົນຜູ້ອອກແຮງງານທົ່ວໄປ. ສານປະຊາຊົນແມ່ນມີໜ້າທີ່ດຳເນີນ ຄະດີຕໍ່ຜູ້ທີ່ກະທຳຜິດຢ່າງເດັດຂາດ ໂດຍສົມທົບກັບການອົບຮົມ ດັດສ້າງ ເພື່ອຊຸກຍູ້ໃຫ້ປະຊາຊົນສະໜັບສະໜູນແນວທາງນະໂຍ ບາຍຂອງພັກແລະລັດຖະບານ ປະກອບສ່ວນຢ່າງຫ້າວຫັນເຂົ້າ ໃນການປົກປັກຮັກສາລະບອບ ສາທາລະນະລັດປະຊາທິປະໄຕ

ປະຊາຊົນລາວ, ເພື່ອສິດຜົນປະໂຫຍດອັນຊອບທຳດ້ວຍກົດໝາຍ ຂອງ ປະຊາຊົນ ແນໃສ່ສ້າງຄົນໃໝ່ສັງຄົມນິຍົມທີ່ສູນກາງພັກ ໄດ້ວາງອອກ. ຕົວຢ່າງການດຳເນີນຄະດີແພ່ງຂອງ ສານໃນລະ ບອບໃໝ່ນັ້ນ ແມ່ນດຳເນີນໄປຕາມທິດທາງຂອງພັກ ດ້ວຍການ ໄກ່ເກ່ຍໃຫ້ ລູກຄວາມມີຄວາມຖືກຕ້ອງປອງດອງກັນ, ສຶກສາອົບ ຮົມທາງດ້ານການເມືອງແນວຄິດໄປພ້ອມ ເພື່ອຢຸດຕິການ ປະປັກກັນ ແລະ ເຮັດໃຫ້ມີ ຄວາມສາມັກຄີກັນ ບົນພື້ນຖານ ຄວາມຍຸດຕິທຳ. ເວົ້າເຖິງທາດແທ້ຂອງສານລະບອບເກົ່າແລ້ວ ກໍ່ແມ່ນສານທີ່ຮັບ ໃຊ້ໃຫ້ແກ່ລະບອບ ການປົກຄອງຂອງຕົນ, ສ່ວນໃຫຍ່ກໍ່ແມ່ນຮັບ ໃຊ້ຊົນຊັ້ນຮັ່ງມີທີ່ອີງໃສ່ເງິນ ເປັນຕົ້ນຕໍ ໃນການດຳເນີນຄະດີຈ້າງ. ທະນາຍຄວາມແລະຕຸລາການສານ ເພື່ອໃຫ້ຕັດສິນໄປຕາມຈຸດ ປະສົງຂອງພວກຕົນ, ສ່ວນປະຊາຊົນ ຜູ້ທີ່ຂາດເຂີນກໍ່ບໍ່ອາດຈະໃຊ້ ສິດຕາມກົດໝາຍທີ່ບົ່ງໄວ້.

ໃນໄລຍະ 7 ປີທຳອິດແຫ່ງລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຫຼັກການກ່ຽວກັບການຈັດຕັ້ງ ສານປະຊາຊົນມີຄື: ໃນເມື່ອວ່າພັກນຳພາທຸກການເຄື່ອນໄຫວ ຂອງອົງການລັດ, ສະນັ້ນສານປະຊາຊົນທີ່ເປັນອົງການນຶ່ງຂອງ ລັດ ກໍ່ຈຶ່ງຢູ່ພາຍໃຕ້ການນຳພາຂອງພັກຄືກັນ. ໃນໄລຍະດັ່ງກ່າວ ການຕັດສິນຄະດີແມ່ນດຳເນີນໄປ ໃນເງື່ອນໄຂທີ່ບໍ່ທັນມີກົດໝາຍ, ພຽງແຕ່ມີຂໍ້ກຳໜົດຈຳນວນນຶ່ງທີ່ໄດ້ປະກາດໃຊ້ໂດຍລັດຖະບານ ສປປ ລາວ. ດ້ວຍເຫດນີ້ ໃນການຕັດ ສິນຄະດີສ່ວນຫຼາຍ, ທົ່ວໜ້າ ສານໄດ້ອີງໃສ່ແຕ່ແນວທາງນະໂຍບາຍ ຂອງພັກແລະລັດ.ເມື່ອ

ເບິ່ງ ຕາມຫຼັກການຈັດຕັ້ງຂອງສານ ໃນເວລານັ້ນຈະເຫັນໄດ້ວ່າ, ຜູ້ທີ່ ເປັນຫົວໜ້າສານສູນກາງຈະແມ່ນຫົວໜ້າກົມ ຫຼື ຮອງ ກົມພິພາກ ສາກະຊວງຍຸດຕິທຳ, ຜູ້ທີ່ເປັນຫົວໜ້າສານແຂວງ ຫຼື ກຳແພງນະຄອນ ຈະແມ່ນຫົວໜ້າຫຼືຮອງຫົວໜ້າພະແນກຍຸດຕິທຳ ຂອງແຂວງ ຫຼືກຳແພງນະຄອນ ແລະ ຜູ້ທີ່ເປັນຫົວ ໜ້າສານ ເມືອງ ກໍ່ແມ່ນ ຫົວໜ້າພະແນກ ຍຸດຕິທຳຂັ້ນເມືອງນັ້ນເອງ ເຊິ່ງ ລ້ວນແລ້ວ ແຕ່ໄດ້ຖືກແຕ່ງຕັ້ງຈາກ ອຳນາດການປົກຄອງ. ແຕ່ວ່າ ໃນຂະນະດຽວກັນ ສານປະຊາຊົນແມ່ນ ໄດ້ປະຕິບັດຕາມ ລະບອບການເລືອກ ຕັ້ງຕຸລາການປະຊາຊົນ. ໃນຄຳສັ່ງຂອງ ນາຍົກລັດຖະມົນຕີເລກທີ 53 ລົງວັນທີ15 ຕຸລາ 1976 ນັ້ນ ໄດ້ມີການກຳໜົດໄວ້ວ່າ ຕຸລາການປະຊາຊົນຂັ້ນໃດ ແມ່ນສະພາ ປະຊາຊົນຂັ້ນນັ້ນເປັນຜູ້ ເລືອກຕັ້ງເອົາທັງນີ້ກໍ່ຍ້ອນວ່າ ພັກໄດ້ອີງ ໃສ່ລະບອບເປັນ ເຈົ້າປະເທດຊາດ ແລະເປັນເຈົ້າສັງ ຄົມຂອງ ປະຊາຊົນ ດັ່ງນັ້ນຈຶ່ງໄດ້ມີ ການຄັດເລືອກເອົາບັນດາຜູ້ຄົນທີ່ປະ ຊາຊົນມີຄວາມໄວ້ວາງໃຈ ເພື່ອເຂົ້າຮ່ວມໃນການດຳ ເນີນອຽກ ງານຂອງສານ. ສ່ວນຈຳນວນຕຸລາການ ປະຊາຊົນນັ້ນ ຈະຕ້ອງມີຈຳນວນ ສີ່ເທື່ອໜ້າຍກ່ວາ ຈຳນວນທີ່ຈະປະກອບເຂົ້າ ເປັນຄະນະສານແຕ່ລະຂັ້ນ ເພື່ອໃຫ້ສາ ມາດສັບປ່ຽນຝຽນກັນ ແລະຮັບປະກັນໃຫ້ສານ ໄດ້ດຳເນີນງານ ຕາມກຳນົດເວລາ ແລະຄົບຄະນະ. ອີງໃສ່ຄວາມຮັບຜິດຊອບຕໍ່ພັກ, ລັດແລະປະຊາ ຊົນ, ສານປະຊາຊົນ ໄດ້ປະຕິບັດລະບົບລາຍ ງານການເຄື່ອນ ໄຫວຂອງ ຕົນຕໍ່ສະພາປະຊາຊົນຂອງຕົນຢ່າງ ນ້ອຍປີລະເທື່ອ

ເພື່ອໃຫ້ໂອກາດແກ່ປະຊາຊົນໂດຍຜ່ານ ຜູ້ແທນ ຂອງຕົນ ກວດກາ ການດຳເນີນງານຂອງສານ. ໃນເມື່ອວ່າ ຕຸລາການປະຈຳບໍ່ ໄດ້ຮັບການ ໄວ້ວາງໃຈຈາກປະຊາຊົນ ຫຼືປະຕິບັດ ໜ້າທີ່ບໍ່ຖືກ ຕ້ອງກໍ່ຈະຖືກປົດ ໂດຍຄະນະປະຈຳການປົກຄອງ, ສ່ວນວ່າຕຸລາ ການປະຊາຊົນ ນັ້ນຖ້າເຄື່ອນໄຫວຜິດພາດກໍ່ຈະຖືກ ປົດໂດຍສະ ພາປະຊາຊົນເອງ.

ຕາມຫຼັກການແລ້ວ ສານປະຊາຊົນ ແມ່ນປະຕິບັດລະ ບອບພິພາກສາລວມໝູ່ ແລະອີງຕາມສຽງສ່ວນຫຼາຍ. ການປະ ກອບຄະນະສານຕັດສິນນັ້ນ ຂັ້ນເມືອງຈະມີ 3 ຄົນ ເຊິ່ງແມ່ນ ຕຸລາການປະຈຳເປັນຫົວໜ້າສານ, ສ່ວນຕຸລາການປະຊາຊົນ 2 ຄົນນັ້ນເປັນຄະນະ ແຕ່ການລົງມະຕິຕັດສິນຄະດີນັ້ນທັງ 3 ແມ່ນ ມີສິດອອກສຽງເທົ່າທຽມກັນ ແລະເອົາສຽງສ່ວນຫຼາຍ. ນອກນັ້ນ ຍັງມີຈ່າສານຜູ້ບັນທຶກ ກອງປະຊຸມສານ ແລະ ໄອຍະການຜູ້ກ່າວ ຟ້ອງເຂົ້າຮ່ວມນຳ. ສຳລັບການປະກອບຄະນະສານແຂວງ ຫຼື ກຳແພງນະຄອນ ຂັ້ນອຸທອນນັ້ນ ແມ່ນມີ 5 ຄົນ. ສ່ວນສານປະຊາ ຊົນທີ່ຕັ້ງຂຶ້ນເປັນພິເສດ ສະເພາະຕັດສິນຄະດີໃຫຍ່ນັ້ນ ແມ່ນມີ ຄວາມສາມາດເພີ່ມ ຈຳນວນຕຸລາການປະຊາຊົນເປັນສີ່ຄົນ, ສຳ ລັບ ສານປະຊາຊົນພິເສດ ແມ່ນເປັນທັງສານຂັ້ນຕົ້ນ ແລະຂັ້ນ ເດັດ ຂາດໂດຍບໍ່ມີການອຸທອນ.

ໃນຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 53 ດັ່ງກ່າວ ຍັງໄດ້ກ່າວໄວ້ວ່າ ການຕັດສິນຂອງສານຕ້ອງ ໄດ້ເປີດເຜີຍຕໍ່ໜ້າ

ປະຊາຊົນ. ອັນນີ້ກໍ່ເພື່ອໃຫ້ໂອກາດແກ່ ປະຊາຊົນໄດ້ຕິດຕາມ ການເຮັດວຽກຂອງສານ, ໃຫ້ເຫັນໄດ້ຄວາມຍຸດຕິທຳໃນສັງຄົມ ພ້ອມນັ້ນກໍ່ ຍັງມີຈຸດປະສົງ ແນໃສ່ສຶກສາອົບຮົມປະຊາຊົນຢ່າງ ກ້ວາງຂວາງ.

ລະບົບການຈັດຕັ້ງຂອງ ສານປະຊາຊົນໃນຊຸມປີທຳອິດ ຂອງລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມີຄື:

- ຂັ້ນຕາແສງ: ບໍ່ມີການຈັດຕັ້ງສານ, ມີພຽງແຕ່ການຈັດ ຕັ້ງທີ່ສາມາດປະກອບຂຶ້ນໄດ ້ໃນເມື່ອມີບັນຫາການຜິດຖຽງໃນ ໝູ່ປະຊາຊົນ ໂດຍແມ່ນເຈົ້າໜ້າທີ່ປ້ອງກັນຄວາມສະຫງົບຮ່ວມ ກັບອົງການຈັດຕັ້ງມະຫາຊົນຢູ່ທ້ອງຖິ່ນເປັນຜູ້ເຮັດ ໜ້າທີ່ໄກ່ເກ່ຍ.

- ຢູ່ຂັ້ນເມືອງ: ມີສານເມືອງທີ່ມີສິດຕັດສິນແຕ່ຄະດີສະ ຖານເບົາ ເຊິ່ງໃສ່ໂທດຈຳຄຸກໄດ້ແຕ່ 1 ມື້ ເຖິງ 3 ເດືອນເທົ່ານັ້ນ. ເມື່ອຕັດສິນຈຳຄຸກແຕ່ 3 ເດືອນ ຂຶ້ນໄປຈະຕ້ອງໃຫ້ອຸທອນຂຶ້ນຫາ ສານແຂວງພາຍ ໃນເວລາ 15 ວັນ ແລະຕ້ອງສົ່ງ ນັກໂທດພ້ອມ ດ້ວຍສຳນວນຄະດີໃຫ້ສານແຂວງໂລດ ເພາະວ່າຢູ່ເມືອງບໍ່ມີຄຸກ, ມີພຽງແຕ່ຫ້ອງຄຸມຂັງຊົ່ວຄາວ.

- ຢູ່ແຂວງ ຫຼືກຳແພງນະຄອນ: ມີການຈັດຕັ້ງສານເປັນ 2 ຂັ້ນຄື: ຂັ້ນຕົ້ນ ແລະຂັ້ນອຸທອນ. ສານຂັ້ນຕົ້ນມີໜ້າທີ່ຕັດສິນ

ແລະອະນຸຍາດໃຫ້ອຸທອນຂໍ້ນຫາສານອຸທອນໄດ້. ສ່ວນສານອຸທອນມີສິດຕັດສິນສະຖານອຸທອນ ແລະ ເດັດຂາດຕໍ່ທຸກຄະດີທີ່ສານເມືອງໄດ້ຕັດສິນເປັນຂັ້ນຕົ້ນ ເຊິ່ງລູກຄວາມ ຫຼືໄອຍະການໄດ້ອຸທອນຂຶ້ນມາ ລວມທັງຄະດີທີ່ຂັ້ນຕົ້ນໄດ້ອຸທອນຂຶ້ນຫາສານສູນກາງ. ທຸກຄະດີ ທີ່ມີໂທດຈຳຄຸກເກີນ 10 ປີເຖິງຂັ້ນປະຫານຊີວິດ ເຊິ່ງການຕັດສິນຄະດີປະຫານຊີວິດນັ້ນ ຈະຕ້ອງໄດ້ຮັບຄວາມເຫັນດີເຫັນພ້ອມຈາກຄະນະປະຈຳສະພາລັດຖະມົນຕີກ່ອນ. ສະເພາະກ່ຽວ ກັບຄະດີການເມືອງທີ່ສຳຄັນນັ້ນອາດສາມາດ ເປີດສານຕັດ ສິນໂລດໂດຍບໍ່ ຕ້ອງມີການອຸທອນກໍ່ໄດ້.

- ສານສູນກາງ; ແມ່ນຂຶ້ນກັບຄວາມຮັບຜິດຊອບຊົ່ວຄາວຂອງກະຊວງຍຸດຕິທຳ. ສ່ວນການແຕ່ງຕັ້ງ ສານສູນກາງຈະຕ້ອງຂໍອະນຸມັດຈາກສະພາລັດຖະມົນຕີ ເຊິ່ງມີໜ້າທີ່ຕັດສິນຢ່າງເດັດຂາດທຸກຄະດີທີ່ສານແຂວງ ຫຼືກຳແພງນະຄອນ ໄດ້ຕັດສິນລົງໂທດຈຳຄຸກເກີນ 10 ປີຂຶ້ນໄປເຖິງການປະຫານຊີວິດ. ສານສູນກາງແມ່ນປະກອບດ້ວຍຫົວໜ້າສານນຶ່ງຄົນ, ຕຸລາການວິຊາສະເພາະ 2 ຄົນ, ຕຸລາ ການປະຊາຊົນ 4 ຄົນ, ຈາສານນຶ່ງຄົນ ແລະ ອະທິໄອຍະການນຶ່ງຄົນ.

ສຳລັບລະບົບການຈັດຕັ້ງໄອຍະການນັ້ນ ແມ່ນໄດ້ຮັບການສ້າງຕັ້ງຂຶ້ນໃນ ລັກສະນະລວມສູນ ອີງໃສ່ລະບອບຫົວໜ້າ

ເຊິ່ງຂັ້ນລຸ່ມຕ້ອງຢູ່ໃຕ້ການຊີ້ນຳ ນຳພາຂອງຂັ້ນເທິງ. ການຈັດຕັ້ງໄອຍະການ ກໍ່ໄດ້ມີ 4 ຂັ້ນຄື ກັບການຈັດຕັ້ງຂອງສານຄື:

- ຢູ່ສານເມືອງ: ໄອຍະການແມ່ນໄດ້ຮັບການແຕ່ງຕັ້ງ ຕາມການຕົກລົງຂອງປະທານປົກຄອງແຂວງ ຫຼື ກຳແພງນະຄອນ ອີງຕາມການສະເໜີຂອງ ຄະນະກຳມະການປົກຄອງເມືອງ. ໄອຍະການເມືອງອາດຈະ ແຕ່ງຕັ້ງເອົາຈາກຄະນະກຳມະການປົກຄອງເມືອງ, ພະນັກງານຝ່າຍປົກຄອງ ຫຼື ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບຂັ້ນເມືອງ.

- ຢູ່ສານແຂວງ ຫຼື ກຳແພງນະຄອນ: ໄອຍະການ ແມ່ນ ຈະໄດ້ຮັບການແຕ່ງຕັ້ງ ອີງຕາມການຕົກລົງຂອງລັດຖະມົນຕີ ກະຊວງຍຸດຕິທຳ ເຊິ່ງມາຈາກຄະນະກຳມະການປົກຄອງ ຫຼື ຄະນະກອງບັນຊາການປ້ອງກັນຄວາມສະຫງົບ ຂອງແຂວງ ຫຼື ກຳແພງນະຄອນ.

- ຢູ່ສານຂັ້ນອຸທອນຂອງແຂວງ ຫຼືກຳແພງນະຄອນກໍ່ເຊັ່ນດຽວກັນຢູ່ ສານຂັ້ນຕົ້ນຂອງແຂວງ ຫຼື ກຳແພງນະຄອນ ເຊິ່ງ ໄອຍະການ ກໍ່ຈະໄດ້ຮັບການແຕ່ງຕັ້ງແລະຂັດເລືອກເອົາໂດຍ ທຳນອງດຽວກັນ.

- ຢູ່ສູນກາງ: ຜູ້ທີ່ເຮັດໜ້າທີ່ໄອຍະການນັ້ນ ກໍ່ແມ່ນຫົວໜ້າກົມໄອຍະການ ກະຊວງຍຸຕິທຳ ເຊິ່ງຖືກແຕ່ງຕັ້ງຈາກນາຍົກລັດຖະມົນຕີ ອີງຕາມຄຳສະເໜີຂອງລັດຖະມົນຕີກະຊວງຍຸຕິທຳ.

ກ່ຽວກັບພາລະໜ້າທີ່ຂອງໄອຍະການນັ້ນ ແມ່ນໄດ້ມີການບົ່ງໄວ້ໃນຄຳສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 53/ນຍ ລົງວັນທີ 15 ຕຸລາ 1976 ຄື:

1. ກວດກາຄວບຄຸມການປະຕິບັດຕາມກົດໝາຍຂອງບັນດາອົງການລັດຕ່າງໆ.

2. ດຳເນີນການສືບສວນ, ຟ້ອງຮ້ອງຜູ້ຕ້ອງຫາໃນຄະດີຕ່າງໆ.

3. ຕິດຕາມກວດກາຊີ້ນຳການປະຕິບັດລະບຽບຫຼັກການໃນການສອບສວນສືບສວນຂອງ ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບສຸກໃນຄະດີຕ່າງໆ.

4. ຕິດຕາມການພິພາກສາຕັດສິນຂອງສານແລະການປະຕິບັດຄຳຕັດສິນ.

5. ຕິດຕາມຟ້ອງຮ້ອງຄະດີແພ່ງ ທີ່ສຳຄັນເຊິ່ງມີການພົວພັນເຖິງຜົນປະໂຫຍດຂອງລັດແລະປະຊາຊົນ.

6. ຕິດຕາມຊີ້ນຳ ກວດກາການປະຕິບັດລະບຽບຫຼັກການ, ລະບຽບວິໄນແລະນະໂຍບາຍຕ່າງໆໃນຄ້າຍຄຸມຂັງ ແລະ ຄ້າຍດັດສ້າງ.

ໃນໄລຍະແຕ່ປີ 1976 ເຖິງປີ 1982 ນັ້ນ, ການແຕ່ງຕັ້ງໄອຍະການແມ່ນ ມີລັກສະນະຊົ່ວຄາວ ເພາະຈະເຫັນໄດ້ວ່າ ເມື່ອໃດຕ້ອງການເປີດສານ ເພື່ອຕັດສິນຄະດີແລ້ວ ຈຶ່ງມີການສະເໜີໃຫ້ແຕ່ງຕັ້ງໄອຍະການ. ໃນໄລຍະດັ່ງກ່າວ ອຽກງານຂອງສານ ແລະ ໄອຍະການແມ່ນ ຂຶ້ນກັບຄວາມຮັບຜິດຊອບ ຊີ້ນຳຂອງກະຊວງຍຸຕິທຳເຊິ່ງເປັນຜູ້ຈັດຕັ້ງປະຕິບັດ ອີງຕາມແນວທາງ ນະໂຍບາຍ, ນະຕິ, ຄຳສັ່ງ, ຂໍ້ກຳໜົດກົດລະບຽບຂອງພັກແລະລັດ.

ນັບແຕ່ປີ 1983 ເຖິງປີ 1989, ອຽກງານຂອງສານສູງສຸດ ແລະ ອະທິໄອຍະການ ແມ່ນໄດ້ຖືກມອບໂອນໃຫ້ຂຶ້ນກັບສະພາປະຊາຊົນສູງສຸດ. ສ່ວນວ່າສານແລະໄອຍະການຂັ້ນແຂວງ ແລະເມືອງນັ້ນ ຍັງຂຶ້ນກັບການຊີ້ນຳຂອງກະຊວງຍຸຕິທຳຢູ່. ໃນໄລຍະດັ່ງກ່າວ ສະພາປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ກໍ່ໄດ້ຖອດຖອນບົດຮຽນ ຈາກການປະຕິບັດໜ້າທີ່ວຽກງານ ຂອງອົງການແຫ່ງ ອຳນາດຕຸລາການ ຢູ່ສູນກາງກໍ່ຄື ທ້ອງຖິ່ນ ພ້ອມນັ້ນກໍ່ໄດ້ເອົາໃຈໃສ່ໃນການກໍ່ສ້າງລະບົບກົດໝາຍ ແນໃສ່ເພີ່ມທະວີການຄຸ້ມຄອງລັດ ແລະ ຄຸ້ມຄອງສັງຄົມ. ສະພາບການຂະຫຍາຍຕົວທາງດ້ານເສດຖະກິດວັດທະນະທຳ, ສັງຄົມແລະອື່ນໆ

ຢູ່ ສປປລາວ ໂດຍສະເພາະໃນໄລຍະພາຍຫຼັງທີ່ ພັກ-ລັດ ໄດ້ດຳ
ເນີນການປ່ຽນແປງໃໝ່ຢ່າງຮອບດ້ານນັ້ນ, ມັນໄດ້ຮຽກຮ້ອງໃຫ້
ສ້າງກົດໝາຍໃໝ່ຫຼາຍສະບັບ ເພື່ອຮັບປະກັນໃຫ້ແກ່ການເສີມຂະ
ຫຍາຍ ປະຊາທິປະໄຕ ແລະ ຄວາມຍຸດຕິທຳຢູ່ພາຍໃນລັດ ແລະ
ທົ່ວສັງຄົມລາວ.

ໃນໄລຍະແຕ່ທ້າຍປີ 1989 ຫາທ້າຍປີ 1990 ເຊິ່ງເປັນໄລ
ຍະເພື່ອການ ຂ່ຳນັບຮັບຕ້ອນວັນຄົບຮອບ 15 ປີແຫ່ງການ ສະຖາ
ປະນາ ສປປລາວ ນັ້ນ, ສະພາປະຊາຊົນສູງສຸດ ໄດ້ສຸມໃສ່ສ້າງ
ກົດໝາຍທີ່ສຳຄັນຫຼາຍສະບັບ, ໃນນັ້ນໄດ້ມີກົດໝາຍ ວ່າດ້ວຍໄອ
ຍະການ ປະຊາຊົນແລະ ກົດໝາຍວ່າດ້ວຍສານປະຊາຊົນ ເຊິ່ງ
ໄດ້ຖືກຮັບຮອງເອົາຢ່າງ ເປັນເອກະສັນໃນກອງປະຊຸມສະໄໝສາ
ມັນຄົບຄະນະ ເທື່ອທີ່ສອງຂອງປະຊາຊົນສູງສຸດ ຊຸດທີ່ II ໃນ
ວັນທີ 23 ພະຈິກ 1989 ແລະປະກາດໃຊ້ຕາມຄຳສັ່ງຂອງ ປະ
ທານປະເທດ ສປປ ລາວເລກທີ 05 ແລະ 06 ລົງ ວັນທີ 9
ມັງກອນ 1990.

ນັບເປັນເວລາເກືອບ 15 ປີທີ່ອົງການຈັດຕັ້ງຕຸລາການ ຢູ່
ລາວໄດ້ປະຕິບັດຕາມຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 53/
ນຍ ສະບັບລົງວັນທີ 15 ຕຸລາ 1976 ເພື່ອຮັບປະກັນຄວາມເປັນ
ລະບຽບຮຽບຮ້ອຍ ແລະ ຄວາມຍຸດຕິທຳໃນສັງຄົມ ໂດຍອີງໃສ່
ນະໂຍບາຍ, ຂໍ້ກຳໜົດກົດລະບຽບ, ຮີດຄອງປະເພນີແລະ ອຳ

ນາດບໍລິຫານຂອງລັດ. ສະນັ້ນການປະກາດໃຊ້ກົດໝາຍວ່າດ້ວຍ ໄອຍະການແລະ ກົດໝາຍວ່າດ້ວຍສານປະຊາຊົນ ສອງສະບັບ ດັ່ງກ່າວໄດ້ກາຍເປັນຂີດໝາຍ ໃໝ່ໃຫ້ແກ່ອົງການຈັດຕັ້ງຕຸລາ ການໃນການປະຕິບັດ ໜ້າທີ່ດ້ວຍກົດໝາຍ ໃຫ້ມີປະຊາທິປະໄຕ ຢ່າງກ້ວາງຂວາງກ່ວາເກົ່າ.

ກົດໝາຍວ່າດ້ວຍອົງການ ໄອຍະການປະຊາຊົນປະກອບ ມີ 6 ພາກ ແລະ 27 ມາດຕາ. ເມື່ອເວົ້າເຖິງ ທີ່ຕັ້ງແລະພາລະ ບົດບາດຂອງອົງການໄອຍະການ ປະຊາຊົນໃນສະພາບການໃໝ່ ແລ້ວ, ມາດຕາ 1 ຂອງກົດໝາຍດັ່ງກ່າວໄດ້ບົ່ງໄວ້ຈະແຈ້ງວ່າ "ອົງການໄອຍະການປະຊາຊົນ ແມ່ນລະບົບນຶ່ງຂອງອົງການລັດ ທີ່ຂຶ້ນກັບອົງການອຳນາດແຫ່ງລັດສູງສຸດ ມີພາລະບົດບາດຕິດ ຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງແລະ ເປັນເອກະ ພາບຂອງທຸກກະຊວງ, ຄະນະກຳມະການແຫ່ງລັດ, ສຳນັກ ງານ, ວິສາຫະກິດ, ອົງການຈັດຕັ້ງ ອື່ນໆ ຂອງລັດ ແລະ ສັງຄົມ, ຄະນະກຳມະການປົກຄອງທ້ອງຖິ່ນ, ລັດຖະກອນ ແລະ ພົນລະ ເມືອງ". ກ່ຽວກັບໜ້າທີ່ຂອງອົງການໄອຍະການປະຊາຊົນນັ້ນ, ມາດຕາ 2 ໄດ້ກຳໜົດອອກຢ່າງລະອຽດກ່ວາຄຳສັ່ງເລກທີ 53/ນຍ ປີ 1976 ເຊັ່ນວ່າ 8 ໜ້າທີ່ຄື :

1. ຕິດຕາມກວດກາການປະຕິບັດກົດໝາຍຂອງທຸກອົງການຂອງລັດ, ສຳນັກງານ, ວິສາຫະກິດ, ອົງການຈັດຕັ້ງອື່ນໆ ຂອງລັດ ແລະ ສັງຄົມ,ລັດຖະກອນ ແລະພົນລະເມືອງ;

2. ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການ ສືບສວນ-ສອບສວນ;

3. ຕິດຕາມກວດກາການປະຕິບັດກົດໝາຍໃນການດຳ ເນີນຄະດີຢູ່ສານ ແລະ ການປະຕິບັດຄຳຕັດສິນຂອງສານ;

4. ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ ກັກຕົວ, ສະຖານທີ່ກັກຂັງ, ໃນເວລາປະຕິບັດໂທດຕັດອິດສະລະ ພາບ ແລະມາດຕະການບັງຄັບ ອື່ນໆຂອງສານ;

5. ດຳເນີນການຕໍ່ສູ້ຕ້ານອາດຊະຍາກຳ ແລະການລະ ເມີດກົດໝາຍອື່ນໆ ເພື່ອກຳຈັດແລະລົບລ້າງບັນດາສາເຫດ ແລະ ເງື່ອນໄຂທີ່ພາໃຫ້ການກະທຳຜິດ ເກີດຂຶ້ນ;

6. ຮັບປະກັນການສືບສວນ-ສອບສວນທຸກຄະດີອາຍາ ໃຫ້ຄົບຖ້ວນ, ຮອບດ້ານ ແລະພາວະວິໄສ ແລະອາດມາດຕະການ ສະກັດກັ້ນການກະທຳຜິດ ໂດຍສົມທົບກັບບັນດາອົງການລັດແລະ ອົງການຈັດຕັ້ງສັງຄົມອື່ນໆ;

7. ຮັບປະກັນໃຫ້ຜູ້ກະທຳຜິດຕ້ອງໄດ້ຮັບການລົງໂທດ ຕາມກົດໝາຍແລະ ບໍ່ໃຫ້ຜູ້ທີ່ບໍ່ໄດ້ກະທຳຜິດຖືກລົງໂທດ;

8. ດຳເນີນການສືບສວນ-ສອບສວນ ຄະດີບາງສ່ວນ ຫຼືທັງໝົດຂອງ ຄະດີໃດຄະດີນຶ່ງ ທີ່ຕົນຢູ່ໃນສິດອຳນາດຂອງຕົນ ຕາມກົດໝາຍໄດ້ກຳໜົດໄວ້.

ໜ້າທີ່ລະອຽດດັ່ງກ່າວ ຂອງອົງການໄອຍະການປະຊາຊົນໄດ້ຊີ້ໃຫ້ເຫັນເຖິງ ຄວາມຮັບຜິດຊອບທີ່ແນໃສ່ເພີ່ມທະວີຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ປົກປັກຮັກສາ ສິດຜົນປະໂຫຍດຂອງບັນດາ ອົງການຈັດຕັ້ງຂອງລັດ ແລະ ສິດ ເສລີພາບປະຊາທິປະໄຕ ຂອງພົນລະເມືອງລາວທຸກຊັ້ນຄົນ. ສ່ວນ ໜ້າທີ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການໄອຍະການ ປະຊາຊົນນັ້ນໄດ້ມີການ ບັນຍັດໄວ້ໃນມາດຕາ 3 ເຊັ່ນວ່າ ໄອ ຍະການປະຊາຊົນທ້ອງຖິ່ນ (ແຂວງ, ນຳ ແພງນະຄອນ, ເມືອງ) ແລະ ໄອຍະການທະຫານປະຕິບັດ ໜ້າທີ່ຢ່າງເປັນເອກະລາດ ບໍ່ ຂຶ້ນກັບອົງການລັດທ້ອງຖິ່ນ ມີແຕ່ຂຶ້ນກັບອະທິໄອຍະການປະຊາ ຊົນເທົ່ານັ້ນ ເຊິ່ງຖ້າທຽບໃສ່ໄລຍະຫົວທີ ພາຍຫຼັງການສະຖາ ປະນາ ສປປລາວ ໄອຍະການແມ່ນໄດ້ຂຶ້ນກັບອຳນາດການ ປົກ ຄອງຂັ້ນຂອງຕົນ. ໃນເມື່ອກ່ອນໄອຍະການປະຊາຊົນ ແມ່ນໄດ້ ຖືກແຕ່ງຕັ້ງ ໂດຍລັດຖະມົນຕີກະຊວງຍຸດຕິທຳ ແລະ ຖ້າແມ່ນຂັ້ນ ສູນກາງ ກໍ່ແມ່ນນາຍົກລັດຖະມົນຕີແຕ່ງຕັ້ງໂດຍການສະເໜີ ຂອງ

ລັດຖະມົນຕີກະຊວງຍຸດຕິທຳ.ແຕ່ອີງຕາມກົດໝາຍ ວ່າດ້ວຍໄອຍະ ການປະຊາຊົນມາດຕາ 4 ອະທິໄອຍະການປະ ຊາຊົນ ແມ່ນຖືກ ແຕ່ງຕັ້ງແລະປົດໂດຍສະພາປະຊາຊົນສູງສຸດ ຕາມຄຳສະເໜີ ຂອງຄະນະປະຈຳສະພາສູງສຸດແລະບັນດາ ຮອງອະທິໄອຍະການ ແມ່ນຖືກແຕ່ງຕັ້ງແລະປົດຕຳ ແໜ່ງໂດຍ ຄະນະປະຈຳສະພາປະຊ າຊົນສູງສຸດຕາມ ການສະເໜີ ຂອງ ອະທິໄອຍະການປະຊາຊົນ. ມາດຕາ 22 ໄດ້ເວົ້າເຖິງ ສິດອຳນາດ ຂອງອະທິໄອຍະການປະ ຊາຊົນໃນການແຕ່ງຕັ້ງ ແລະ ນຳພາ ອົງການໄອຍະການປະຊາ ຊົນແຫ່ງສປປລາວ,ຊີ້ນຳແລະກວດກາ ວຽກງານຂອງໄອຍະການ ,ແຕ່ງຕັ້ງແລະປົດ ຕຳແໜ່ງບັນດາ ໄອຍະການປະຊາຊົນທ້ອງຖິ່ນ, ພະນັກງານສອບສວນແລະ ພະນັກງານນຳພາກົງຈັກຊ່ວຍວຽກ ງານ ຂອງອົງການໄອຍະ ການປະຊາຊົນ.

ໃນກົດໝາຍວ່າດ້ວຍໄອຍະການປະຊາຊົນ ຍັງໄດ້ມີການ ກຳໜົດເຖິງຂອບເຂດສິດອຳນາດ ຂອງອະທິໄອຍະການປະຊາ ຊົນ ແລະ ບັນດາໄອຍະການຂັ້ນລຸ່ມ ໃນການຕິດຕາມກວດກາ ການປະຕິບັດກົດໝາຍ, ການປົກປ້ອງກົດໝາຍ, ປົກປັກຮັກສາ ຜົນປະໂຫຍດຂອງລັດແລະປະຊາຊົນ ກ່ຳນະໂຍບາຍຕ່າງໆ ເພື່ອ ຮັບປະກັນໃຫ້ແກ່ຄວາມຍຸດຕິທຳໃນສັງຄົມລາວ.

ສ່ວນກົດໝາຍວ່າດ້ວຍສານປະຊາຊົນນັ້ນ ແມ່ນປະກອບ ມີ 6 ພາກ ແລະ 38 ມາດຕາ. ເວົ້າເຖິງທີ່ຕັ້ງ ແລະພາລະບົດບາດ

ສ່ວນກົດໝາຍວ່າດ້ວຍສານປະຊາຊົນນັ້ນ ແມ່ນປະກອບ ມີ 6 ພາກ ແລະ 38 ມາດຕາ. ເວົ້າເຖິງທີ່ຕັ້ງ ແລະພາລະບົດບາດ ຂອງສານປະຊາຊົນນັ້ນ ແມ່ນໄດ້ກຳໜົດອອກໃນມາດຕາ 1 ວ່າ "ສານປະຊາຊົນແມ່ນລະບົບນຶ່ງ ຂອງອົງການລັດທີ່ຂຶ້ນກັບອົງ ການອຳນາດແຫ່ງລັດ ມີພາລະບົດບາດດຳເນີນການພິພາກສາ ຄະດີແພ່ງ ເພື່ມທະວີນິຕິທຳ ແລະຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ, ກຳຈັດແລະສະກັດກັ້ນການກະທຳຜິດ ແລະ ການ ລະເມີດກົດໝາຍອື່ນໆ." ອີງຕາມມາດຕາ 2, ສານປະຊາຊົນ ແມ່ນມີ 5 ໜ້າທີ່ລະອຽດ :

1. ປົກປັກຮັກສາ ແລະເສີມຂະຫຍາຍໝາກຜົນຂອງ ການ ປະຕິວັດ, ລະບອບການເມືອງ, ເສດຖະກິດ, ວັດທະນະທຳ-ສັງ ຄົມ, ອົງການຈັດຕັ້ງຂອງລັດ ແລະ ສັງຄົມ ແລະວິສາຫະກິດ;

2. ລົງໂທດ ແລະສຶກສາອົບຮົມຜູ້ລະເມີດກົດໝາຍ;

3. ຊອກຫາ ແລະກຳຈັດສາເຫດ ແລະເງື່ອນໄຂທີ່ພາໃຫ້ ມີການກະທຳຜິດ;

4. ຍົກລະດັບສະຕິການເມືອງ ແລະ ສະຕິກົດໝາຍຂອງ ພົນລະເມືອງ, ສຶກສາອົບຮົມພົນລະເມືອງໃຫ້ມີນ້ຳໃຈຮັກຊາດ, ຮັບລະບອບປະຊາທິປະໄຕ, ເຄົາລົບລະບຽບວິໄນແຫ່ງລັດ ແລະ ລະບຽບຂອງການດຳລົງຊີວິດຂອງສັງຄົມ, ປະຕິບັດກົດໝາຍ

ຢ່າງເຂັ້ມງວດ, ເອົາໃຈໃສ່ປົກປັກຮັກສາຜົນປະໂຫຍດຂອງລັດ ແລະສັງຄົມ, ເຄົາລົບສິດ, ເສລີພາບ ແລະກຽດສັກສີຂອງພົນລະ ເມືອງ;

5. ຊຸກຍູ້ໃຫ້ພົນລະເມືອງເຄື່ອນໄຫວຮັບໃຊ້ຜົນປະໂຫຍດ ສ່ວນລວມຢ່າງຫ້າວຫັນ ແລະ ນັບມື້ນັບກ້ວາງຂວາງ.

ຄວາມຈິງແລ້ວ ໜ້າທີ່ດັ່ງກ່າວແມ່ນຕິດພັນກັບລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຊິ່ງຜ່ານ ຂະ ບວນວິວັດຂອງການປະຕິວັດໃນໄລຍະໃໝ່, ພັກປະຊາຊົນ ປະຕິ ວັດລາວ ໄດ້ປັບປຸງແລະເພີ່ມທະວີໃຫ້ຕິດແໜ ກັບສະພາບຕົວ ຈິງກ່ວາເກົ່າ. ສ່ວນລະບົບສານ ເຊິ່ງກ່າວໄວ້ໃນມາດຕາ 3 ແມ່ນ ປະກອບດ້ວຍ: ສານປະຊາຊົນສູງສຸດ; ສານປະຊາຊົນທ້ອງຖິ່ນ (ສານປະຊາຊົນ ແຂວງ, ນະຄອນຫຼວງ, ສານປະຊາຊົນ ເມືອງ); ສານທະຫານ. ເພື່ອຮັບປະກັນໃຫ້ແກ່ການເສີມຂະ ຫຍາຍລະບອບປະຊາທິປະໄຕປະຊາຊົນ, ສານປະຊາຊົນຈຶ່ງສ້າງ ຕັ້ງຂຶ້ນ ບົນຫຼັກການເລືອກຕັ້ງຜູ້ພິພາກສາ ແລະ ຕຸລາການປະຊາ ຊົນ (ມາດ ຕາ 4). ໃນນັ້ນໄດ້ບັນຍັດໄວ້ວ່າ ສານປະຊາຊົນ ຂັ້ນໃດແມ່ນສະພາປະຊາຊົນຂັ້ນນັ້ນເປັນຜູ້ເລືອກຕັ້ງ ແລະ ປົດຕຳ ແໜ່ງ ແລະ ມີອາຍຸການເທົ່າກັນກັບອາຍຸການຂອງສະພາປະຊາ ຊົນຂັ້ນນັ້ນ. ແຕ່ຜ່ານການປະຕິບັດນະໂຍບາຍປ່ຽນແປງໃໝ່ຢູ່ ສປປ ລາວ ກໍໄດ້ມີການປ່ຽນແປງລະບົບການເມືອງ ອັນພາໃຫ້ມີ

ການໂຈະການເລືອກຕັ້ງສະພາປະຊາຊົນຂັ້ນທ້ອງຖິ່ນ, ດັ່ງນັ້ນ ຈຶ່ງມີແຕ່ຂັ້ນສານສູງສຸດເທົ່ານັ້ນ ທີ່ໄດ້ເລືອກຕັ້ງເອົາປະທານຈາກ ສະພາປະຊາຊົນສູງສຸດ, ສ່ວນຂັ້ນຖັດລົງມານັ້ນ ສະພາປະຊາຊົນ ສູງສຸດບໍ່ທັນໄດ້ຈັດການຂັດເລືອກເອົາຫົວໜ້າສານເທື່ອ ແລະ ຍັງ ແມ່ນລັດຖະມົນຕີກະຊວງຍຸດຕິທຳແຕ່ງຕັ້ງເອົາຜູ້ວ່າການແທນ ຄື ກັບໄລຍະກ່ອນ. ມາດຕາ 6 ຂອງກົດໝາຍວ່າດ້ວຍ ສານປະຊາ ຊົນໄດ້ບົ່ງໄວ້ວ່າ "ພົນລະເມືອງລາວທຸກຄົນມີຄວາມສະເໝີພາບ ຕໍ່ໜ້າກົດໝາຍ ແລະສານ ໂດຍບໍ່ຂຶ້ນກັບຕົ້ນກຳເໜີດ, ຖານະທາງ ດ້ານເສດຖະກິດ ແລະສັງຄົມ, ເຊື້ອຊາດ, ເຜົ່າຊົນ, ພາສາ, ເພດ, ລະດັບວັດທະນະທຳ, ອາຊີບ, ສາດສະໜາ, ພູມລຳເນົາແລະ ອື່ນໆ." ອັນນີ້ກໍ່ເປັນການຢັ້ງຢືນໃຫ້ເຫັນເຖິງຄວາມຍຸດຕິທຳ ໂດຍບໍ່ມີການຈຳແນກຊົນຊັ້ນວັນນະ ຂອງຜູ້ທີ່ກ່ຽວກ້ອງກັບຄະ ດີ ບໍ່ວ່າທາງແພ່ງກໍ່ຄືອາຍາ. ກົດໝາຍວ່າດ້ວຍສານປະຊາຊົນ ຍັງໄດ້ເວົ້າເຖິງການພິຈາລະນາຄະດີເປັນໝູ່ຄະນະ (ມາດຕາ 8). ໃນນັ້ນໄດ້ມີການບົ່ງໄວ້ວ່າ ຄະນະສານຕັດສິນຂັ້ນຕົ້ນປະກອບ ດ້ວຍຜູ້ພິພາກສາຜູ້ນຶ່ງເປັນປະທານ ແລະ ຕຸລາການສອງຄົນເປັນ ຄະນະ. ຄະນະສານຕັດສິນຂັ້ນລຶບລ້າງຂັ້ນຕິດຕາມກວດການັ້ນ ປະກອບດ້ວຍຜູ້ພິພາກສາ 3 ຄົນ, ໃນນັ້ນຜູ້ນຶ່ງເປັນປະທານແລະ ອີກ 2 ຄົນເປັນຄະນະ. ຜູ້ພິພາກສາແລະຕຸລາການປະຊາຊົນມີສິດ ເທົ່າທຽມກັນ, ຄຳຕັດສິນຂອງສານກໍ່ຖືເອົາສຽງສ່ວນຫຼາຍ. ຫຼັກ ການທີ່ໄດ້ຂຽນໄວ້ໃນມາດຕານີ້ ກໍ່ແມ່ນລັກສະນະດຽວກັນກັບ ຄຳສັ່ງເລກທີ 53/ນຍ ສະບັບປີ 1976. ສຳລັບການປະກອບ

ແລະສິດອຳນາດຂອງສານປະຊາຊົນຂັ້ນເມືອງ ແລະ ແຂວງນັ້ນ ໄດ້ມີການກຳໜົດໄວ້ໃນມາດຕາ18 ແລະ 19 ເຊັ່ນວ່າ ສານປະຊາຊົນເມືອງປະກອບດ້ວຍປະທານ, ຜູ້ພິພາກສາ ແລະ ຕຸລາການປະຊາຊົນ ເຊິ່ງຖືກເລືອກຕັ້ງແລະປົດຕຳແໜ່ງໂດຍສະພາປະຊາຊົນເມືອງ. ສານປະຊາຊົນເມືອງ ມີສິດພິຈາລະນາເປັນຂັ້ນຕົ້ນ: ຄະດີແພ່ງ ຊຶ່ງມີມູນຄ່າບໍ່ເກີນ ຫ້າຮ້ອຍພັນກີບ ແລະ ບໍ່ຂັດກັບສິດອຳນາດຂອງສານອື່ນ, ຄະດີອາຍາທີ່ກົດໝາຍກຳນົດໂທດ ຕັດອິດສະລະພາບສູງສຸດບໍ່ເກີນສອງປີ ແລະ ບໍ່ຂັດກັບສິດອຳນາດຂອງສານອື່ນ ແລະ ຄະດີອື່ນໆ ທີ່ກົດໝາຍໄດ້ກຳໜົດໄວ້. ກ່ຽວກັບສິດອຳນາດຂອງສານປະຊາຊົນເມືອງນີ້ ແມ່ນໄດ້ມີການປັບປຸງປ່ຽນແປງໃໜ້ກ້ວາງຂວາງກ່ວາເກົ່າ ເມື່ອທຽບໃສ່ສານ ເມືອງ ອີງຕາມຄຳສັ່ງເລກທີ 53/ນຍ ປີ 1976 ເຊິ່ງສານເມືອງມີສິດຕັດສິນຄະດີສະຖານເບົາໃສ່ໂທດຈຳຄຸກໄດ້ພຽງແຕ່ 1 ມື້ເຖິງ 3 ເດືອນເທົ່ານັ້ນ.

ສຳລັບສານປະຊາຊົນແຂວງ, ກຳແພງນະຄອນກໍ່ໄດ້ຮັບການປັບປຸງດ້ວຍ ໜ້າທີ່ການອັນໃໝ່ ເຊິ່ງປະກອບມີປະທານ, ບັນດາຮອງປະທານ, ຜູ້ພິພາກສາ ແລະ ຕຸລາການປະຊາຊົນ ທີ່ຖືກເລືອກຕັ້ງແລະປົດຕຳແໜ່ງໂດຍສະພາປະຊາຊົນແຂວງ, ກຳແພງນະຄອນ. ສານປະຊາຊົນຂັ້ນແຂວງ, ກຳແພງນະຄອນ ຖືກແບ່ງອອກເປັນຄະນະສານແພ່ງ ແລະ ຄະນະສານອາຍາ ແລະກໍ່ມີ ຄະນະປະທານ. ສ່ວນຄະນະສານແພ່ງແລະຄະນະສານອາຍາ ແມ່ນ

ປະກອບດ້ວຍຮອງປະທານສານປະຊາຊົນແຂວງ ແລະ ກຳແພງ ນະຄອນເປັນປະທານ ແລະ ບັນດາຜູ້ພິພາກສາ ຈຳນວນນຶ່ງ.

ສານຂັ້ນແຂວງ, ກຳແພງນະຄອນມີສິດອຳນາດ ພິຈາລະ ນາເປັນຂັ້ນຕົ້ນຄະດີແພ່ງ ແລະ ຄະດີອາຍາທີ່ບໍ່ຂຶ້ນກັບສິດອຳ ນາດຂອງສານປະຊາຊົນເມືອງ ແລະ ສານອື່ນໆ; ນອກນັ້ນກໍ່ຍັງ ເປັນຂັ້ນລຶບລ້າງສຳລັບຄະດີທີ່ສານປະຊາຊົນເມືອງ ຕັດສິນແລ້ວ.

ສ່ວນຄະນະປະທານສານປະຊາຊົນແຂວງ, ກຳແພງນະ ຄອນແມ່ນມີສິດອຳນາດ ໃນການພິຈາລະນາຄຳຕັດສິນທີ່ໃຊ້ໄດ້ ຢ່າງເດັດຂາດຂອງ ສານປະຊາຊົນເມືອງເປັນຂັ້ນຕິດຕາມການ ກວດ.

ໃນກົດໝາຍ ວ່າດ້ວຍ ສານປະຊາຊົນໄດ້ມີການບັນຍັດ ກ່ຽວກັບການປະກອບຂອງສານປະຊາຊົນສູງສຸດຢູ່ມາດຕາ 20 ຄື: ປະທານຖືກເລືອກຕັ້ງ ແລະປົດຕຳແໜ່ງໂດຍສະພາປະຊາຊົນ ສູງສຸດຕາມຄຳສະເໜີຂອງ ຄະນະປະຈຳສະພາປະຊາຊົນສູງສຸດ; ບັນດາຮອງປະທານແລະຜູ້ພິພາກສາແມ່ນຖືກເລືອກ ແລະປົດຕຳ ແໜ່ງໂດຍຄະນະປະຈຳສະພາປະຊາຊົນສູງສຸດ ຕາມຄຳສະເໜີ ຂອງປະທານສານ ປະຊາຊົນສູງສຸດ; ສ່ວນຕຸລາການປະຊາຊົນ ແມ່ນຖືກເລືອກຕັ້ງແລະປົດຕຳແໜ່ງ ໂດຍຄະນະປະຈຳສະພາປະ ຊາຊົນສູງສຸດ. ສານປະຊາຊົນສູງສຸດໄດ້ແບ່ງອອກເປັນຄະນະ ສານແພ່ງ, ຄະນະສານອາຍາ, ຄະນະສານທະຫານ ແລະ ຄະນະ

ປະທານ ເພື່ອພິຈາລະນາຄະດີຕາມສິດອຳນາດຂອງໃຜລາວ. ກ່ຽວກັບໜ້າທີ່ຂອງສານປະຊາຊົນສູງສຸດນັ້ນ ແມ່ນໄດ້ກຳໜົດໄວ້ໃນມາດຕາ 21 ມີຄື:

1. ແນະນຳທາງດ້ານກົດໝາຍ ແລະ ກວດກາການພິຈາລະນາຄະດີຂອງສານປະຊາຊົນ ແລະ ສານທະຫານທຸກຂັ້ນ ທັງຮັບປະກັນຄວາມ ເປັນເອກະພາບ ທາງດ້ານກົດໝາຍ;

2. ພິຈາລະນາຄະດີເປັນຂັ້ນຕົ້ນ, ຂັ້ນລຶບລ້າງ ແລະ ຂັ້ນຕິດຕາມກວດກາ;

3. ປະກາດນຳໃຊ້ບົດອະທິບາຍຊີ້ນຳຂອງກອງປະຊຸມໃຫຍ່ຂອງຜູ້ພິພາກສາກ່ຽວກັບຄວາມເຂົ້າໃຈ ແລະການປະຕິບັດຕໍ່ໜ້າກົດໝາຍໃຫ້ຖືກຕ້ອງ.

ເມື່ອເວົ້າເຖິງສິດອຳນາດ ຂອງຄະນະສານຂອງສານປະຊາຊົນສູງສຸດນັ້ນ ແມ່ນມີຢູ່ໃນມາດຕາ 22 ຄື: ການພິຈາລະນາເປັນຂັ້ນຕົ້ນແລະ ເດັດຂາດຕໍ່ຄະດີ ທີ່ມີຄວາມສຳຄັນຫຼືທີ່ມີຄວາມຫຍຸ້ງຍາກເປັນພິເສດ; ເປັນຂັ້ນລຶບລ້າງສຳລັບຄຳຕັດສິນເປັນຂັ້ນຕົ້ນ ຂອງສານປະຊາຊົນແຂວງ, ກຳແພງນະຄອນ ແລະ ສານທະຫານ; ເປັນຂັ້ນຕິດຕາມກວດກາຄຳຕັດສິນແລະຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນແຂວງ, ກຳແພງນະ ຄອນ

ແລະ ສານທະຫານ. ໃນກົດໝາຍວ່າດ້ວຍສານປະຊາຊົນ ສະບັບນີ້ ຍັງໄດ້ກ່າວເຖິງ ການປະກອບ ແລະ ສິດອຳນາດຂອງຄະ ນະປະທານສານປະຊາຊົນສູງສຸດ, ສິດອຳນາດຂອງປະທານແລະ ຮອງປະທານ ແລະອື່ນໆ ເພື່ອການດຳເນີນແລະພິຈາລະນາຄະດີ ຕ່າງໆ. ໃນນັ້ນ ຍັງໄດ້ມີການກຳໜົດເຖິງທີ່ຕັ້ງ, ພາລະບົດບາດ ແລະ ການປະກອບຂອງກອງປະຊຸມໃຫຍ່ຂອງຜູ້ພິພາກສາ ໂດຍ ຖືວ່າແມ່ນການຈັດຕັ້ງສູງສຸດຂອງອົງການພິພາກສາ ເພື່ອຊີ້ນຳ ບັນດາສານປະຊາຊົນ ໃນການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະເປັນເອກະພາບກັນໃນທົ່ວປະເທດ. ເວົ້າລວມແລ້ວ ການປະ ຕິບັດກົດໝາຍວ່າດ້ວຍໄອຍະການປະຊາຊົນ ແລະ ກົດໝາຍວ່າ ດ້ວຍສານປະຊາຊົນທີ່ໄດ້ປະກາດໃຊ້ແຕ່ເດືອນມັງກອນ 1990 ເປັນຕົ້ນມານັ້ນ ແມ່ນໄດ້ເປັນ ການສ້າງ ຄວາມເຊື່ອໝັ້ນໃນໝູ່ປະ ຊາຊົນ ຕໍ່ອຳນາດການນຳພາຂອງພັກແລະລັດ ທີ່ໄດ້ປັບປຸງບູລະ ນະກົດໝາຍຢູ່ລາວ ໃຫ້ນັບມື້ນັບມີຄວາມສົມບູນແບບ. ອົງການ ຈັດຕັ້ງຕຸລາການຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ເຊິ່ງແມ່ນລະບົບນຶ່ງຂອງອົງການອຳນາດລັດນັ້ນ ໄດ້ເຮັດ ໜ້າທີ່ຂອງຕົນເປັນຢ່າງດີຕະຫຼອດໄລຍະທີ່ຜ່ານມາ ທັງໄດ້ປະ ກອບສ່ວນຢ່າງສຳຄັນ ເຂົ້າໃນການພັດທະນາ ລະບົບຍຸດຕິທຳຢູ່ ລາວໃຫ້ມີຄວາມກ້າວໜ້າ, ປະຊາທິປະໄຕໃນເງື່ອນໄຂທີ່ປະເທດ ໄດ້ເປີດກ້ວາງ ການພົວພັນທາງດ້ານ ເສດຖະກິດກັບຕ່າງປະເທດ ແລະດຳເນີນນະໂຍບາຍເສດຖະກິດຕະຫຼາດ.

4. ລັດຖະທຳມະນຸນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ - 1991 .

ລັດຖະທຳມະນຸນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ໄດ້ຖືກຮັບຮອງເອົາດ້ວຍຄະແນນສຽງເປັນເອກະສັນກັນຢູ່ກອງປະຊຸມຄັ້ງທີ 6 ສະໄໝສາມັນ ຂອງ ສະພາປະຊາຊົນສູງສຸດໃນວັນທີ 14 ສິງຫາ 1991 ແລະ ໄດ້ ຮັບການປະກາດໃຊ້ໂດຍລັດຖະດຳລັດຂອງປະທານປະເທດ ໃນວັນທີ 15 ສິງຫາ 1991 ນັ້ນ, ໄດ້ເປັນລັດຖະທຳມະນຸນ ສະບັບທຳອິດແຫ່ງລະບອບສາທາລະນະ ລັດ ປະຊາທິປະໄຕ ປະຊາຊົນລາວ.

ລັດຖະທຳມະນຸນ 1991 ໄດ້ເປັນຂີດໝາຍແຫ່ງການຂະຫຍາຍຕົວຂອງລັດ ປະຊາທິປະໄຕ ປະຊາຊົນລາວ ໃນໄລຍະໃໝ່ ເພາະແມ່ນລັດຖະທຳມະນຸນ ທີ່ມາຈາກປະຊາຊົນ, ເປັນຂອງ ປະຊາຊົນ ແລະ ເພື່ອປະຊາຊົນບັນດາເຜົ່າ. ກ່ອນໜ້າທີ່ໄດ້ນຳເອົາມາຜ່ານສະພາປະຊາຊົນສູງສຸດເພື່ອການຮັບຮອງເອົາ, ຄະນະກຳມະການຮ່າງລັດຖະທຳມະນຸນແມ່ນ ໄດ້ເອົາຮ່າງລັດຖະທຳມະນຸນ ສະບັບດັ່ງກ່າວລົງສູ່ ປະຊາຊົນທຸກຊັ້ນຄົນ, ທົ່ວພັກ,ທົ່ວກອງທັບ, ພະນັກງານທຸກຂັ້ນເພື່ອການປະກອບຄຳເຫັນຢ່າງກ້ວາງ ຂວາງ. ຖ້າຫາກວ່າການນຳຂອງພັກປະຊາຊົນປະຕິວັດລາວ ແລະລັດຖະບານສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ບໍ່ໄດ້ຕັ້ງບັນຫາເພື່ອຮັບຮອງເອົາລັດຖະທຳມະນຸນແຕ່ຫົວທີໂລດພາຍຫຼັງການ ສະຖາປະນາລະບອບໃໝ່ນັ້ນ ກໍ່ຍ້ອນວ່າໄດ້ມີການ ສຸມໃສ່ກ່ອນ

ອິ່ນ ໝົດໃນການປະຕິບັດ 2 ໜ້າທີ່ຍຸດທະສາດຄື: ການປົກປັກ ຮັກສາ ແລະ ສ້າງສາປະເທດຊາດ. ພ້ອມນັ້ນການນຳ ຂອງພັກ ແລະລັດ ກໍ່ໄດ້ເສີມຂະຫຍາຍສິດເປັນເຈົ້າຕົນເອງຂອງ ປະຊາຊົນ ໃນການພັດທະນາເສດຖະກິດ ແລະ ສັງຄົມ ໂດຍອີງໃສ່ສະພາບ ການຕົວຈິງ ແລະ ຈຸດພິເສດຂອງປະເທດຊາດ ບ້ານເມືອງຫວັງ ໃຫ້ປະຊາຊົນມີຄວາມຕື່ນຕົວທາງການເມືອງ ປະກອບສ່ວນ ເຂົ້າ ໃນການສ້າງພື້ນຖານວັດຖຸ-ເຕັກນິກ ຂອງເສດຖະກິດແຫ່ງຊາດ. ຜ່ານຂະບວນວິວັດຂອງການພັດທະນາເສດຖະກິດແລະ ສັງຄົມ ເປັນເວລາເຖິງ 15 ປີ, ພາຍຫຼັງທີ່ພັກ ແລະ ລັດໄດ້ເຫັນວ່າ ສະ ພາບການໃນປະເທດໄດ້ສຸກງອມ ທັງເຫັນຄວາມຈຳເປັນໃຫ້ມີ ການຄຸ້ມຄອງລັດ ແລະ ສັງຄົມດ້ວຍລັດຖະທຳມະນູນແລະ ກົດ ໝາຍແລ້ວ ຈຶ່ງໄດ້ມີການສະເໜີໃຫ້ຄະນະກຳມະການຮ່າງລັດ ຖະ ທຳມະນູນ ແລະ ກົດໝາຍຄຳເນີນງານຮ່າງ ເນື້ອໃນລັດຖະທຳ ມະນູນອອກສູ່ປະຊາຊົນໃນປີ 1990. ໃນເວລາ ທີ່ໄດ້ຫາບຫາມ ເອົາຄຳຄິດຄຳເຫັນຈາກປະຊາຊົນນັ້ນ, ຮ່າງລັດຖະທຳມະນູນ ໄດ້ມີ ພຽງ 73 ມາດຕາ, ແຕ່ຜ່ານການປະກອບຄຳເຫັນຈາກ ທົ່ວສັງຄົມລາວ ຮ່າງລັດຖະທຳມະນູນກໍ່ໄດ້ຖືກດັດແປງແລະ ເພີ່ມ ເຕີ່ມໃຫ້ສົມບູນກ່ວາເກົ່າ. ໃນກອງປະຊຸມເທື່ອທີ່ 6 ຂອງສະພາປະ ຊາຊົນສູງສຸດຊຸດທີ່ II, ທ່ານໝູຮັກ ພູມສະຫວັນ, ປະທານ ສະພາປະຊາຊົນສູງສຸດ, ຫົວໜ້າຄະນະກຳມະການ ຮ່າງລັດຖະ ທຳມະນູນໄດ້ກ່າວອອກໃນສຸນທອນພິດໄຂກອງປະຊຸມ ໃນມື້ວັນ ທີ 13 ສິງຫາ 1991 ວ່າ "ຮ່າງລັດຖະທຳມະນູນ ທີ່ໄດ້ນຳມາສະ

ໝີ່ຕ່ໍສະພາປະຊາຊົນສູງສຸດ ພິຈາລະນາໃນມື້ນີ້ ກ່ໍໄດ້ນ່ໍາອອກ ໃຫ້ພະນັກງານ ແລະ ປະຊາຊົນ ປະກອບຄ່ໍາຄິດ ຄ່ໍາເຫັນ ໃນຂັ້ນດ່ໍາເນີນຊີວິດການເມືອງ ບົນພື້ນຖານເສີມ ຂະຫຍາຍປະ ຊາທິປະໄຕ່ຢ່າງກ້ວາງຂວາງ. ນັ້ນແມ່ນການສ້າງ ເງື່ອນໄຂ ໃຫ້ປະຊາຊົນ ໄດ້ເຂ້ົາຮ່ວມໃນວຽກງານຂອງລັດ, ເປັນການເຊີດ ຊູສ່ວນຮັບຜິດຊອບຂອງພົນລະເມືອງ, ຍົກສູງ ນ້ໍາໃຈ ຮັກຊາດ ແລະ ຮັກລະບອບໃໝ່."

ລັດຖະທ່ໍາມະນູນ ທີ່ໄດ້ຖືກຮັບຮອງເອ້ົາໃນວັນທີ 14 ສິງຫາ 1991 ນັ້ນປະກອບມີຄ່ໍານ່ໍາ, 10 ໝວດແລະ 80 ມາດຕາ. ໃນຄ່ໍານ່ໍາຂອງລັດຖະທ່ໍາມະນູນ ໄດ້ມີການສະຫລຸບຫຍ້ໍ້ໃຫ້ເຫັນ ເຖິງປະຫວັດສາດ ແລະ ຄວາມເປັນມາຂອງຊາດລາວ ເຊ່ິງໃນ ນັ້ນໄດ້ມີການຂຽນໄວ້ວ່າ "ລັດຖະທ່ໍາມະນູນນ້ີ ແມ່ນລັດຖະທ່ໍາ ມະນູນຂອງລະບອບປະຊາທິປະໄຕ ປະຊາຊົນຢູ່ປະເທດເຮ້ົາ, ມັນ ໄດ້ຮັບຮູ້ຜົນງານອັນຍ່ິງໃຫຍ່ທ່ີປະຊາຊົນເຮ້ົາຍາດມາໄດ້ ໃນພາ ລະກິດຕ່ໍ້ສູ້ປົດປ່ອຍຊາດ ແລະ ສ້າງສາປະເທດຊາດ. ກ່ໍາໜົດລະ ບອບການເມືອງ, ເສດຖະກິດ-ສັງຄົມ, ສິດແລະພັນທະ ພື້ນຖານ ຂອງພົນລະເມືອງ ແລະ ລະບົບການຈັດຕ້ັງກົງຈັກລັດໃນໄລຍະ ໃໝ່. ໃນປະຫວັດສາດຂອງຊາດເຮ້ົາເທ່ືອນ້ີເປັນເທ່ືອທ່ໍາອິດ ທ່ີໄດ້ ກ່ໍາໜົດສິດເປັນເຈ້ົາຂອງປະຊາຊົນ ຢູ່ໃນກິດໝາຍພື້ນຖານຂອງ ຊາດ." ໝວດທ່ີ I ຂອງລັດຖະທ່ໍາມະນູນ ແມ່ນເວ້ົາເຖິງລະບອບ ການເມືອງ (ມາດຕາ 1-12) ອັນ ເປັນບັນຫາພື້ນຖານ ແຫ່ງ ລະບອບການຈັດຕ້ັງຂອງສັງຄົມ. ເປັນທ່ີສັງເກດເຫັນວ່າໃນໄລ

ຍະປະຫວັດສາດຜ່ານມາປະເທດລາວ ໄດ້ຕົກຢູ່ໃນແອກຂອງລະ
ບອບລ່າເມືອງຂຶ້ນແບບເກົ່າ, ແບບໃໝ່ ແລະ ເຄິ່ງສັກດິນ, ປະຊາ
ຊົນລາວໄດ້ດຳເນີນ ການຕໍ່ສູ້ກູ້ຊາດເພື່ອຄວາມ ເປັນອິດສະລະ
ພາບ ແລະ ເອກະລາດຂອງຊາດ ສະນັ້ນມາດຕາ 1 ຂອງລັດ
ຖະທຳມະນູນຈຶ່ງໄດ້ເນັ້ນເຖິງ "ສາທາລະນະລັດ ປະຊາທິປະໄຕ
ປະຊາຊົນລາວ ເປັນປະເທດເອກະລາດ, ມີອຳນາດອະທິປະໄຕ
ແລະ ຜືນແຜ່ນດິນອັນຄົບຖ້ວນ ລວມທັງເຂດນ່ານນ້ຳ ແລະນ່ານ
ຟ້າ; ເປັນປະເທດເອກະພາບຂອງທຸກຊົນເຜົ່າທີ່ຕັດແຍກອອກ
ຈາກກັນບໍ່ໄດ້." ການລຶບລ້າງລະບອບລາຊາທິປະໄຕຢູ່ລາວ ໄດ້
ດຳເນີນໄປໂດຍອີງໃສ່ ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນ
ທຸກຊັ້ນຄົນ. ດັ່ງນັ້ນ ໃນມາດຕາ 2 ຈຶ່ງໄດ້ມີການບັນຍັດໄວ້ວ່າ
"ລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແມ່ນ
ລັດປະຊາທິປະໄຕປະຊາຊົນ. ອຳນາດທັງໝົດເປັນຂອງປະຊາ
ຊົນ, ໂດຍປະຊາຊົນ ແລະ ເພື່ອຜົນປະໂຫຍດຂອງປະຊາຊົນບັນ
ດາເຜົ່າ ເຊິ່ງປະກອບດ້ວຍຊັ້ນຄົນຢູ່ໃນສັງຄົມ ໂດຍແມ່ນກຳມະ
ກອນ, ກະສິກອນ ແລະນັກຮຽນຮູ້ບັນຍາຊົນເປັນຫຼັກແຫຼ່ງ." ກ່ຽວ
ກັບສິດເປັນເຈົ້າປະເທດຊາດຂອງປະຊາຊົນບັນດາເຜົ່າ ໄດ້ມີການ
ບົ່ງໄວ້ໃນມາດຕາ 3, ເຊິ່ງສິດດັ່ງກ່າວ ຈະໄດ້ ຮັບການປະຕິບັດ
ແລະຮັບປະກັນດ້ວຍ ການເຄື່ອນໄຫວຂອງລະບົບການເມືອງເຊິ່ງ
ມີພັກປະຊາຊົນປະຕິວັດລາວເປັນແກນນຳ." ການທີ່ລັດຖະທຳ
ມະນູນໄດ້ມີການເຊີດຊູ ບົດບາດການນຳພາ ຂອງພັກປະຊາຊົນ
ປະຕິວັດລາວນັ້ນກໍ່ຍ້ອນວ່າໃນຕະຫຼອດຫລາຍ10ປີຜ່ານມາ, ປະ

ຊາຊົນລາວບັນດາເຜົ່າ ໄດ້ເປັນຜູ້ຮູ້ເຫັນກ່ຽວກັບສິນຈາມອັນຍິ່ງ ໃຫຍ່ຂອງພັກປະຊາຊົນປະຕິວັດລາວ ເຊິ່ງເປັນຜູ້ຈັດຕັ້ງ ແລະ ນຳພາທຸກໄຊຊະນະຂອງການປະຕິວັດລາວ ສະນັ້ນຈຶ່ງໄດ້ສະ ໜັບສະໜູນເຫັນດີ ເຫັນພ້ອມໃຫ້ພັກປະຊາຊົນປະຕິວັດລາວ ສືບຕໍ່ເປັນແກນນຳຂອງລະບົບການເມືອງຢູ່ລາວໃນເງື່ອນໄຂໃໝ່. ນອກນັ້ນໝວດທີ I ຂອງລັດຖະທຳມະນູນ ຍັງໄດ້ມີການກຳໜົດ ກ່ຽວກັບເນື້ອໃນ ອື່ນໆຂອງລະບອບການເມືອງເຊັ່ນວ່າ ສະພາ ແຫ່ງຊາດແມ່ນອົງການຕົວແທນຂອງປະຊາຊົນ(ມາດຕາ 4); ສະ ພາແຫ່ງຊາດ ແລະ ທຸກອົງການຂອງລັດ ໄດ້ຮັບການຈັດຕັ້ງ ແລະ ເຄື່ອນໄຫວຕາມຫຼັກການລວມສູນ ປະຊາທິປະໄຕ (ມາດຕາ5). ໃນໝວດທີ I ຄືລະບອບການເມືອງ ທີ່ລັດຖະ ທຳມະນູນ ໄດ້ບົ່ງ ໄວ້ຍັງເວົ້າເຖິງ ລັດປົກປ້ອງສິດອິດສະລະພາບ ແລະ ສິດປະ ຊາທິປະໄຕຂອງປະຊາຊົນ ທີ່ບໍ່ມີໃຜຈະລ່ວງລະ ເມີດໄດ້. ພ້ອມນັ້ນ ຍັງມີການຫ້າມທຸກການ ກະທຳແບບອາຍາ ສິດ, ຂົ່ມຂູ່ອັນ ຈະກໍ່ຄວາມເສຍຫາຍເຖິງກຽດສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສົມບັດ ຂອງປະຊາຊົນ (ມາດຕາ 6). ອັນນີ້ໄດ້ເປັນການ ຊີ້ໃຫ້ເຫັນເຖິງພາລະບົດບາດ ແລະ ໜ້າທີ ຂອງລັດທີ່ສະແດງ ເຖິງຄວາມເປັນຫ່ວງເປັນໃຍ ແລະ ໃຫ້ຄວາມ ເປັນທຳແກ່ປະຊາ ຊົນຢ່າງສຸດຊຶດ. ກ່ຽວກັບມາດຕາ 7 ຂອງລັດຖະທຳມະນູນແມ່ນ ໄດ້ເວົ້າເຖິງທີ່ຕັ້ງ ແລະ ພາລະບົດ ບາດຂອງບັນດາອົງການຈັດ ຕັ້ງມະຫາຊົນ ເຊິ່ງເປັນພາກສ່ວນ ທີ່ ສຳຄັນຂອງລະບອບການເມືອງຄື:ແນວລາວສ້າງຊາດ, ສະຫະ

ພັນກຳມະບານ, ຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນ ແມ່ຍິງລາວ ແລະ ບັນດາອົງ ການຈັດຕັ້ງສັງຄົມ ທີ່ເຮັດໜ້າ ທີ່ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມບັນດາຊັ້ນ ຄົນຂອງ ທຸກຊົນເຜົ່າເຂົ້າຮ່ວມໃນພາລະກິດ ປົກປັກຮັກສາ ແລະ ສ້າງສາປະເທດຊາດ. ການທີ່ລັດຖະທຳ ມະນູນໄດ້ກຳໜົດເຖິງ ບົດບາດຂອງບັນດາອົງການຈັດຕັ້ງ ມະຫາຊົນດັ່ງກ່າວນັ້ນ ກໍ່ ຍ້ອນວ່າ ປະຊາຊົນທົ່ວປະເທດໄດ້ໃຫ້ຄວາມ ສຳຄັນຕໍ່ການປະ ກອບສ່ວນ ຂອງແຕ່ລະອົງການຈັດຕັ້ງທີ່ໄດ້ເສີມ ຂະຫຍາຍສິດ ເປັນເຈົ້າຂອງ ປະຊາຊົນຕະຫຼອດມາ. ສ່ວນເນື້ອ ໃນມາດຕາ 8 ເຖິງ 12 ຂອງ ໝວດທີ I ນີ້ໄດ້ມີການລະບຸ ໄວ້ເຖິງ ບົດບາດຂອງລັດໃນການປະຕິ ບັດນະໂຍບາຍສາມັກຄີ ແລະສະ ເໝີພາບລະຫວ່າງຊົນເຜົ່າຕ່າງໆ, ຫ້າມທຸກການກະທຳແບ່ງແຍກ ລະຫວ່າງຊົນເຜົ່າ; ເຄົາລົບ ແລະ ປົກປ້ອງການເຄື່ອນ ໄຫວອັນຖືກກົດໝາຍຂອງພຸດທະສາສະນິກະຊົນ ແລະ ສາສະນິ ກະຊົນອື່ນໆ, ຫ້າມທຸກການກະທຳແບ່ງແຍກ ສາດສະໜາແລະ ແບ່ງແຍກປະຊາຊົນ; ຄຸ້ມຄອງສັງຄົມດ້ວຍ ລັດຖະທຳມະນູນ ແລະ ກົດໝາຍ; ປະຕິບັດນະໂຍບາຍປ້ອງກັນຊາດປ້ອງກັນ ຄວາມສະຫງົບທົ່ວປວງຊົນ ແລະ ຮອບດ້ານ, ປົກປັກຮັກສາ ໜ້າທີ່ຜົນຂອງການປະຕິວັດ, ປົກປັກຮັກສາຊີວິດ, ຊັບສິນ ແລະ ການອອກແຮງງານຂອງປະຊາຊົນ. ນອກນັ້ນ ກໍ່ໄດ້ເວົ້າເຖິງ ການປະຕິບັດນະໂຍບາຍການຕ່າງປະເທດ ສັນຕິພາບ, ເອກະ ລາດ, ມິດຕະພາບ ແລະ ການຮ່ວມມື, ຂະຫຍາຍ ສາຍພົວພັນ

ແລະ ການຮ່ວມມືກັບທຸກປະເທດ ບົນຫຼັກການຢູ່ຮ່ວມກັນໂດຍ ສັນຕິ, ເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນ ຂອງກັນ, ບໍ່ແຊກແຊງເຂົ້າວຽງການພາຍໃນຂອງກັນ, ສະເໝີ ພາບ ແລະ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ. ເນື້ອໃນແລະຈິດ ໃຈດັ່ງກ່າວມານັ້ນ ລ້ວນແລ້ວແຕ່ສອງແສງເຖິງລະບອບການ ເມືອງຂອງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ທີ່ໄດ້ ບັນຍັດໄວ້ໃນລັດຖະທຳມະນູນສະບັບນີ້ ໂດຍແມ່ໃສ່ປຸກລະດົມ ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນປະກອບສ່ວນ ເຂົ້າໃນ ການຈັດຕັ້ງຂອງລະບົບການເມືອງ ເພື່ອປະຕິບັດໜ້າທີ່ຍຸດທະ ສາດຂອງປະເທດຊາດ.

ໝວດທີ II ຂອງລັດຖະທຳມະນູນໄດ້ກ່າວເຖິງລະບອບ ເສດຖະກິດສັງຄົມ (ມາດຕາ 13 ເຖິງ 20) ເຊິ່ງມີຄວາມໝາຍ ສຳຄັນທີ່ສຸດ ສຳລັບປະເທດທີ່ຍັງມີ ຄວາມດ້ອຍພັດທະນາຄື ສາ ທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ດ້ວຍເຫດນີ້, ພັກ ປະຊາຊົນປະຕິວັດລາວ ທີ່ເປັນແກນນຳຂອງລະບົບການເມືອງຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈຶ່ງໄດ້ວາງ ແນວທາງນະໂຍບາຍ ເພື່ອບັນລຸຈຸດໝາຍອັນສູງສົ່ງ ຂອງຊາດ ດ້ວຍການກຳໜົດລະບອບເສດຖະກິດ ແລະ ສັງຄົມອອກໃຫ້ສອດ ຄ່ອງກັບລະບອບການເມືອງ ໂດຍອີງໃສ່ສະພາບຕົວຈິງ ແລະ ຈຸດພິເສດຂອງສັງຄົມລາວ ເຊັ່ນມາດຕາ 13 ໄດ້ບັນຍັດໄວ້ວ່າ: "ລະບອບເສດຖະກິດຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ແມ່ນເສດຖະກິດຫຼາຍພາກສ່ວນ ທີ່ມີຈຸດໝາຍຂະ

ຫຍາຍການຜະລິດ ແລະ ເປີດກ້ວາງການຈະລາຈອນ, ຫັນເສດ ຖະກິດທຳມະຊາດໄປສູ່ ເສດຖະກິດສິນຄ້າ, ເຮັດໃຫ້ພົ້ນຖານເສດ ຖະກິດແຫ່ງຊາດມີການຂະຫຍາຍຕົວຍິ່ງຂຶ້ນ ແລະ ຍົກລະດັບຊີ ວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນບັນ ດາເຜົ່າໃຫ້ສູງຂຶ້ນເລື້ອຍໆ."

ດ້ານນຶ່ງອີກ ລັດຖະທຳມະນູນ ສະບັບນີ້ ແມ່ນໄດ້ຮັບຮອງ ເອົາພາຍຫຼັງທີ່ພັກ ແລະ ລັດໄດ້ດຳເນີນ ແນວທາງປ່ຽນແປງໃໝ່ ແລະ ເປີດກ້ວາງການພົວພັນທາງດ້ານ ເສດຖະກິດກັບຕ່າງ ປະເທດ, ສະນັ້ນຈຶ່ງໄດ້ມີການບົ່ງໄວ້ຢ່າງຈະແຈ້ງ ໃນມາດຕາ 14 ວ່າ: "ລັດປົກປ້ອງແລະເສີມຂະຫຍາຍບັນດາຮູບການກຳມະ ສິດຂອງລັດ, ລວມໝູ່, ເອກະເທດ, ກຳມະສິດເອກະຊົນຂອງ ນາຍທຶນພາຍໃນ ແລະ ກຳມະສິດຂອງຊາວຕ່າງປະເທດທີ່ ເຂົ້າ ມາລົງທຶນຢູ່ ສປປ ລາວ. ລັດສົ່ງເສີມໃຫ້ ທຸກພາກສ່ວນເສດຖະ ກິດແຂ່ງຂັນແລະຮ່ວມມືກັນຂະຫຍາຍການຜະລິດ ແລະ ທຸລະກິດ. ທຸກພາກສ່ວນເສດຖະກິດ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດ ໝາຍ." ສິ່ງສຳຄັນທີ່ ກ່ຽວຂ້ອງກັບລະບອບເສດຖະກິດ ແລະສົ່ງ ຄືນນັ້ນກໍ່ຄືການທີ່ລັດ ໃຫ້ການປົກປ້ອງສິດ ກ່ຽວກັບກຳມະສິດ ແລະ ສືບທອດຊັບສົມບັດຂອງການຈັດຕັ້ງ ແລະບຸກຄົນ, ຮັບປະ ກັນສິດນຳໃຊ້ທີ່ດິນ, ໂອນແລະສືບທອດຕາມກົດໝາຍ ເຖິງຈະ ກຳໜົດໄວ້ວ່າ ທີ່ດິນເປັນກຳມະສິດຂອງອົງຄະນະຍາດແຫ່ງຊາດ (ມາດຕາ 15). ເວົ້າເຖິງ ການຄຸ້ມຄອງເສດຖະກິດ, ມາດຕາ 16

ໄດ້ກຳໜົດໄວ້ເຖິງ ການປະຕິບັດຕາມກົນໄກ ເສດຖະກິດຕະຫຼາດ ທີ່ມີການດັດສົມຂອງລັດ. ອັນນີ້ກໍ່ແມ່ນເພື່ອເຮັດໃຫ້ການຄຸ້ມຄອງ ລວມສູນເປັນເອກະພາບ ລະຫວ່າງຂະແໜງການຂອງສູນກາງ ແລະ ການແບ່ງປັນຄວາມຮັບຜິດຊອບ ໃຫ້ທ້ອງຖິ່ນທີ່ຍັງຂາດຝືນ ຖານໂຄງລ່າງອັນຈຳເປັນ.

ເວົ້າເຖິງການຂະຫຍາຍການສຶກສາ, ວັດທະນະທຳ, ສາທາລະນະສຸກ ແລະ ກິລາກາຍະກຳນັ້ນ ໄດ້ມີການບົ່ງໄວ້ໃນມາດຕາ 19, 20 ຂອງລັດຖະທຳມະນູນ ເຊິ່ງໄດ້ສ່ອງແສງໃຫ້ເຫັນເຖິງແນວທາງຂອງພັກ-ລັດ ທີ່ໄດ້ເອົາໃຈໃສ່ ຢ່າງສະເໝີຕົ້ນສະເໝີປາຍ ເພື່ອສ້າງຄົນລຸ້ນໃໝ່ໃຫ້ມີລະດັບການສຶກສາ ແລະ ວັດທະນະທຳ, ພ້ອມນັ້ນກໍ່ຍັງມີການອະນຸຍາດໃຫ້ເອກະຊົນເປີດໂຮງຮຽນ ເພື່ອເສີມຂະຫຍາຍການສຶກສາໃຫ້ກ້ວາງຂວາງ. ໃນນັ້ນກໍ່ໄດ້ເນັ້ນເຖິງ ການເສີມຂະຫຍາຍ ວັດທະນະທຳທີ່ເປັນມູນເຊື້ອອັນດີງາມຂອງຊາດ ສົມທົບກັບການຮັບເອົາ ວັດທະນະທຳອັນກ້າວໜ້າຂອງໂລກ, ກຳຈັດທຸກປະກົດການທີ່ເຫັນວ່າ ຫຍໍ້ທໍ້ທາງດ້ານແນວຄິດ ແລະວັດທະນະທຳ. ໃນການຂະຫຍາຍສາທາລະນະສຸກນັ້ນ ລັດຖະທຳມະນູນ ຍັງໄດ້ເວົ້າເຖິງການອະນຸຍາດໃຫ້ເອກະຊົນ ເປີດການບໍລິການທາງດ້ານການແພດ ຕາມລະບຽບການຂອງລັດ. ນະໂຍບາຍທາງດ້ານສະຫວັດດີການສັງຄົມ ກໍ່ໄດ້ມີການເນັ້ນອອກຄື ການເອົາໃຈໃສ່ເບິ່ງແຍງນັກຮົບເສຍອົງ

ຄະ, ຄອບຄົວຂອງຜູ້ທີ່ເສຍສະຫຼະ, ຄອບຄົວຂອງຜູ້ທີ່ມີຄຸນງາມ ຄວາມດີຕໍ່ປະເທດຊາດ ແລະ ພະນັກງານເບ້ຍບຳນານ.

ບັນຫາສິດແລະພັນທະພື້ນຖານຂອງພົນລະເມືອງໄດ້ຖືກຖືວ່າເປັນບັນຫາ ທີ່ມີຄວາມໝາຍສຳຄັນເປັນພິເສດ ເພາະມັນກ່ຽວຂ້ອງໂດຍກົງກັບຊີວິດຈິດໃຈຂອງຄົນເຮົາ ເຊິ່ງບໍ່ພຽງແຕ່ຕ້ອງການຄວາມມີອິດສະລະພາບ ຫາກຍັງຮຽກຮ້ອງຕ້ອງການສິດທິໃນການດຳລົງຄົງຕົວ, ເຮັດວຽກເຮັດງານ, ປະກອບສ່ວນ ເຂົ້າໃນພາລະກິດສ່ວນລວມເພື່ອປະເທດຊາດ ບ້ານເມືອງກໍ່ດີເພື່ອຄອບຄົວຂອງຕົນເອງ. ໃນສະໄໝການຕໍ່ສູ້ເພື່ອປົດປ່ອຍຊາດໃນເມື່ອກ່ອນນັ້ນ, ບັນຫາສິດເສລີພາບ ປະຊາທິປະໄຕໄດ້ເປັນເປົ້າໝາຍທີ່ສູງສົ່ງອັນນຶ່ງຂອງປະຊາຊົນ ລາວບັນດາເຜົ່າ ເມື່ອງຈາກ ວ່າ ລະບອບລ່າເມືອງຂຶ້ນແບບເກົ່າ, ແບບໃໝ່ເຊັ່ນດຽວກັບລະບອບສັກດິນາ ແມ່ນລ້ວນແລ້ວແຕ່ໄດ້ຈຳກັດຮັດແຄບສິດທີພື້ນຖານຂອງພົນລະເມືອງລາວ. ສະນັ້ນ ພາຍຫຼັງການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຕົ້ນມາ ການນຳຂອງພັກປະຊາຊົນປະຕິວັດລາວ ແລະລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈຶ່ງໄດ້ເອົາໃຈໃສ່ປັບປຸງ ແລະ ເສີມຂະຫຍາຍສິດເສລີພາບ, ປະຊາທິປະໄຕ ຂອງປະຊາຊົນລາວບັນດາເຜົ່າ. ດ້ວຍເຫດນີ້ ລັດຖະທຳມະນູນ 1991 ຈຶ່ງໄດ້ລະບຸໄວ້ຢ່າງລະອຽດ ແລະຈະແຈ້ງກ່ຽວກັບສິດ ແລະ ພັນທະພື້ນຖານຂອງພົນລະເມືອງໄວ້ໃນໝວດ III (ມາດຕາ 21-38).

ເວົ້າເຖິງຖານະຂອງພົນລະເມືອງລາວນັ້ນ, ມາດຕາ 22 ໄດ້ບົ່ງໄວ້ວ່າ : "ພົນລະເມືອງລາວ ໂດຍບໍ່ຈຳແນກຍິງຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະຊົນເຜົ່າ ລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ." ສຳລັບສິດຂອງພົນລະເມືອງລາວນັ້ນ ແມ່ນໄດ້ມີການບັນຍັດໄວ້ຢ່າງຈະແຈ້ງເຊັ່ນ ຜູ້ທີ່ມີອາຍຸແຕ່ 18 ປີຂຶ້ນໄປມີສິດປ່ອນບັດເລືອກຕັ້ງ ແລະຜູ້ທີ່ມີອາຍຸແຕ່ 21 ປີຂຶ້ນໄປ ມີສິດສະໝັກຮັບເລືອກຕັ້ງ (ມາດຕາ 23). ພົນລະເມືອງລາວຍິງຊາຍມີສິດເທົ່າທຽມກັນໃນດ້ານການ ເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະຄອບຄົວ(ມາດຕາ24). ແຕ່ມາດຕາ 25 ເຖິງມາດຕາ 32 ຂອງລັດຖະທຳມະນູນ ກໍ່ລ້ວນແຕ່ໄດ້ເວົ້າເຖິງສິດໃນການສຶກສາຮ່ຳຮຽນ, ສິດທຳ ງານ ແລະປະກອບອາຊີບທີ່ບໍ່ຂັດກັບ ກົດໝາຍ;ສິດເສລີພາບໃນການ ຕັ້ງພູມລຳເນົາ; ສິດຮ້ອງຂໍຕ່ໍວ່າ, ກ່າວຟ້ອງແລະສະເໜີ ຄວາມເຫັນຕໍ່ອົງການທີ່ກ່ຽວຂ້ອງຂອງລັດ ກ່ຽວກັບບັນຫາທີ່ ພົວພັນເຖິງສິດ ແລະຜົນປະໂຫຍດລວມ ແລະສ່ວນຕົວ; ສິດໂດຍ ບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຮ່າງກາຍ ແລະ ເກຍະສະ ຖານ; ສິດເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາດສະໜາ; ສິດ ເສລີພາບໃນການປາກເວົ້າ, ຂີດຂຽນ, ໂຮມຊຸມນຸມ, ຈັດຕັ້ງສະ ມາຄົມ ແລະເດີນຂະບວນທີ່ບໍ່ຂັດກັບລະບຽບກົດໝ່າຍ; ສິດເສລີ ພາບໃນການຄົ້ນຄ້ວາແລະນຳໃຊ້ ຄວາມກ້າວໜ້າທາງດ້ານວິທະ ຍາສາດ-ເຕັກນິກ ແລະເຕັກໂນໂລຊີ. ບັນດາສິດ ດັ່ງກ່າວນັ້ນ ກໍ່ ລ້ວນແລ້ວແຕ່ສະແດງໃຫ້ເຫັນເຖິງລັກສະນະ ປະຊາທິປະໄຕຂອງ

ສັງຄົມລາວ. ກ່ຽວກັບພົນລະເມືອງລາວທີ່ຢູ່ຕ່າງປະເທດນັ້ນ, ລັດ ກໍໄດ້ໃຫ້ການ ປົກປ້ອງສິດ ແລະ ຜົນປະໂຫຍດອັນຖືກກົດໝາຍ (ມາດ ຕ 33).

ຕົວຈິງບັນດາສິດດັ່ງກ່າວນັ້ນ, ນອກຈາກຈະມີການຮັບປະກັນໂດຍລັດຖະທຳມະນູນທີ່ແມ່ນກົດໝາຍພື້ນຖານແລ້ວ ຍັງໄດ້ມີການຮັບປະກັນໂດຍກົດໝາຍອື່ນໆ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວອີກຕື່ມ ອັນສະແດງອອກເຖິງ ການເຄົາລົບນັບຖືສິດທິມະນຸດຢູ່ລາວ.

ກ່ຽວກັບພັນທະຂອງພົນລະເມືອງລາວນັ້ນ ແມ່ນໄດ້ມີ ການກຳໜົດໄວ້ໃນມາດຕ 34, 35, 36 ເຊິ່ງ ໃນນັ້ນມີພັນທະ ເຄົາລົບລັດຖະທຳມະນູນ ແລະ ກົດໝາຍ, ປະຕິບັດລະບຽບການ ອອກແຮງງານ, ລະບຽບການດຳລົງຊີວິດຂອງສັງຄົມ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງບ້ານເມືອງ; ມີພັນທະ ເສຍພາ ສີ ແລະ ຊ່ວຍສາອາກອນຕາມລະບຽບກົດໝາຍ; ມີພັນທະປົກປັກ ຮັກສາປະເທດຊາດ ແລະ ປ້ອງກັນຄວາມສະຫງົບ, ປະຕິບັດພັນ ທະການທະຫານ ຕາມທີ່ໄດ້ກຳໜົດໄວ້ໃນກົດໝາຍ.

ສຳລັບປະຊາຊົນລາວ ທີ່ເຄີຍມີມູນເຊື້ອຄຸໝັ່ນຂະຫຍັນ ພຽນອອກແຮງງານ, ມີຄວາມເສຍສະຫຼະໃນການຕໍ່ສູ້ກູ້ຊາດ ຕ້ານການຮຸກຮານຂອງອິດທິກຳລັງຕ່າງປະເທດນັ້ນ ບໍ່ໄດ້ຖືວ່າ

ເປັນການໝັ້ນໜ່ວງແຕ່ຢ່າງໃດ ໃນການປະຕິບັດພັນທະຟື້ນຖານ ຂອງຕົນ. ໄປຄຽງຄູ່ກັບການໄດ້ຮັບສິດ ທີ່ຮັບປະກັນດ້ວຍກົດ ໝາຍພົນລະເມືອງລາວກໍ່ໄດ້ເຂົ້າໃຈແລະປະກອບສ່ວນ ຢ່າງສົມ ສັກສີໃນການປະຕິບັດພັນທະຂອງຕົນ ໃນຕະຫຼອດໄລຍະປະຫວັດ ສາດທີ່ຜ່ານມາ.

ນອກຈາກສິດ ແລະ ພັນທະທີ່ກ່ຽວຂ້ອງກັບພົນລະເມືອງ ລາວໂດຍກົງ, ໃນລັດຖະທຳມະນຸນມາດຕາ 37 ຍັງໄດ້ເອົ້າເຖິງ ຊາວຕ່າງດ້າວ ແລະ ຜູ້ບໍ່ມີສັນຊາດກໍ່ມີສິດໄດ້ຮັບການປ້ອງກັນ ສິດແລະເສລີພາບ ຕາມທີ່ໄດ້ກຳໜົດໄວ້ໃນກົດໝາຍ, ມີສິດຮ້ອງ ຟ້ອງຕໍ່ສານ ແລະອົງການທີ່ກ່ຽວຂ້ອງຂອງລາວ ແລະກໍ່ມີພັນທະ ເຄົາ ລົບລັດຖະທຳມະນຸນ ແລະ ລະບຽບກົດໝາຍຂອງລາວ.

ສ່ວນມາດຕາ 38 ໃນໝວດທີ III ຂອງລັດຖະທຳມະ ນຸນໄດ້ລະບຸໄວ້ຫາງ ດ້ານນະໂຍບາຍຂອງ ສາທາລະນະລັດ ປະ ຊາທິປະໄຕ ປະຊາຊົນລາວ ໃນການເຄົາລົບສິດທິມະນຸດ ເຊັ່ນ ການອະນຸຍາດໃຫ້ການລີ້ໄພແກ່ຄົນຕ່າງປະເທດທີ່ຖືກ ປາບປາມ ຍ້ອນໄດ້ທຳການຕໍ່ສູ້ເພື່ອອິດສະລະພາບ, ຄວາມເປັນທຳ, ສັນຕິ ພາບ ແລະ ພາລະກິດວິທະຍາສາດ.

ກ່ຽວກັບໝວດທີ IV ເຖິງໝວດທີ X ຂອງລັດຖະທຳ ມະນຸນ 1991 ນັ້ນແມ່ນໄດ້ມີການກຳໜົດການຈັດຕັ້ງ, ພາລະ

ບົດບາດ, ສິດແລະໜ້າທີ່ຂອງສະພາແຫ່ງຊາດ, ປະທານປະເທດ, ລັດຖະບານ, ການປົກຄອງທ້ອງຖິ່ນ, ອົງການຕຸລາການ, ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ ແລະ ນະຄອນຫຼວງ ແລະບົດບັນຍັດສຸດທ້າຍ (ມາດຕາ 80) ທີ່ໄດ້ ລະບຸໄວ້ວ່າ ມີແຕ່ກອງປະຊຸມສະພາແຫ່ງຊາດເທົ່ານັ້ນ ຈຶ່ງມີສິດ ປ່ຽນແປງລັດຖະທຳມະນຸນ ແລະ ກໍ່ຕ້ອງມີສະມາຊິກສະພາແຫ່ງ ຊາດ ສອງສ່ວນສາມຂອງຈຳນວນສະມາຊິກທັງໝົດເປັນຜູ້ລົງ ຄະແນນສຽງເຫັນດີ ຈຶ່ງມີຜົນບັງຄັບໃຊ້ໄດ້.

ດັ່ງທີ່ໄດ້ກ່າວມາໃນຂ້າງເທິງແລ້ວວ່າ ລັດຖະທຳມະນຸນ ທີ່ໄດ້ຮັບຮອງເອົາໂດຍສະພາປະຊາຊົນສູງສຸດໃນວັນທີ 14 ສິງ ຫາ 1991 ນັ້ນແມ່ນລັດຖະທຳມະນຸນສະບັບທຳອິດຂອງລະບອບ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ແຕ່ໃນປະຫວັດ ສາດ ການຂະຫຍາຍຕົວຂອງລັດລາວ ແມ່ນເຄີຍມີລັດຖະທຳມະ ນຸນທີ່ໄດ້ຮັບຮອງເອົາ ໃນມື້ປະກາດ ຄວາມເປັນເອກະລາດຂອງ ລາວ ອອກຈາກການເປັນຫົວເມືອງຂຶ້ນຂອງຝລັ່ງໃນວັນທີ 12 ຕຸລາ 1945 ໂດຍຄະນະກຳມະການລາດຊະອານາ ເຊີ່ງປະກອບ ດ້ວຍບັນດາຊັ້ນຄົນຜູ້ຮັກຊາດທີ່ຕໍ່ສູ້ ເພື່ອຄວາມເປັນເອກະລາດ ຂອງປະເທດຊາດ ແລະ ລັດຖະທຳມະນຸນ ທີ່ໄດ້ຖືກຮັບຮອງເອົາ ໃນວັນທີ 11 ພຶດສະພາ 1947 ໂດຍສະພາຮ່າງລັດຖະທຳມະນຸນ ຂອງລາດຊະອານາຈັກລາວ ທີ່ຮ່າງຂຶ້ນໂດຍມີການເຂົ້າຮ່ວມ ຂອງຊ່ຽວຊານຝລັ່ງ. ເປັນອັນວ່າ ລັດຖະທຳມະນຸນ 1945 ແລະ ລັດຖະທຳມະນຸນ 1947 ແມ່ນໄດ້ຮັບການສ້າງຂຶ້ນໃນສະພາບ

ແລະ ເງື່ອນໄຂຕ່າງກັນ ເຊັ່ນລັດຖະທຳມະນູນ 1945 ແມ່ນເພື່ອ ຢັ້ງຢືນຄວາມເປັນເອກະລາດອອກຈາກຝລັ່ງເສດ ແລະ ຄວາມ ເປັນອິດສະລະພາບຂອງປະຊາຊົນລາວ, ສ່ວນລັດຖະທຳມະນູນ 1947 ທີ່ໄດ້ຮັບຮອງເອົາພາຍຫຼັງຝລັ່ງກັບຄືນມາປົກຄອງລາວ ເທື່ອທີ 2 ກໍ່ໄດ້ເວົ້າເຖິງຄວາມເປັນເອກະລາດ ແລະ ອະທິປະໄຕ ຂອງລາວ ແຕ່ຫາກຢູ່ພາຍໃຕ້ການເຂົ້າຮ່ວມໃນ ສະຫະພາບ ຝລັ່ງ ເສດ ແລະພາຍລຸນມາ ກໍ່ໄດ້ດັດແກ້ແລະປັບປຸງເພີ່ມເຕີ່ມໃນ ລະ ບອບລາຊາທິປະໄຕຂອງລາດຊະອານາຈັກລາວ.

ດ້ວຍເຫດນີ້, ການຮັບຮອງແລະປະກາດໃຊ້ລັດຖະທຳ ມະນູນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໃນປີ 1991 ຈຶ່ງສະຫລຸບດ້ວຍໄຊຊະນະ ອັນໃຫຍ່ຫຼວງ ທີ່ມີລັກສະນະ ປະຫວັດສາດຂອງປະຊາຊົນ ລາວບັນດາເຜົ່າ ທີ່ໄດ້ມີລະບອບ ການເມືອງ, ລະບອບເສດຖະກິດ-ສັງຄົມໃໝ່, ມີການນຳພາຂອງ ພັກປະຊາຊົນປະຕິວັດລາວ, ມີອົງການອຳນາດລັດສູງສຸດ ທີ່ໄດ້ ປະຕິບັດຕາມຄວາມມຸ້ງຫວັງຂອງປະຊາຊົນຄື: ອົງການນິຕິບັນ ຍັດ, ອົງການບໍລິຫານ, ອົງການຕຸລາການ ເຊິ່ງເຄື່ອນໄຫວອີງ ຕາມລັດຖະທຳມະນູນ ແລະ ກົດໝາຍ ຂອງສາທາລະນະລັດ ປະ ຊາທິປະໄຕ ປະຊາຊົນລາວ ເພື່ອສັນຕິພາບ, ເອກະລາດ, ປະຊາ ທິປະໄຕ, ເອກະພາບ ແລະ ວັດທະນາຖາວອນ.

---==****==---



ພົງສະຫວັດ ບຸບຜາ, ເກີດທີ່ຫລວງພະບາງ,ນັກການທູດ, ໄດ້ຈົບການສຶກສາກົດໝາຍ ຊັ້ນສູງຢູ່ມົດສະກູ-ອະດົດສະຫະພາບໂຊວຽດ, ໄດ້ຜ່ານຊີວິດການເປັນພະນັກງານປຸກລຸກ ຢູ່ຕາແສງ ຊຽງຄູນ, ເມືອງຊຽງຄໍ້, ແຂວງຫົວພັນແລະພະນັກງານຫ້ອງການຕ່າງປະເທດ ສູນກາງແນວລາວອັກຊາດທີ່ເມືອງ ວຽງໄຊ. ຈາກນັ້ນ, ໄດ້ຮັບຕຳແໜ່ງເປັນຮອງຫົວໜ້າກົມ, ຫົວໜ້າກົມ ກະຊວງການຕ່າງປະເທດ, ເຄີຍເປັນອຸປະທູດປະຈຳສະຖານທູດລາວທີ່ ສະຫະພາບໂຊວຽດ, ໄດ້ເປັນເອກອັກຄະລັດຖະທູດລາວ ປະຈຳ ສປ ຈີນ ຈົນເຖິງຕຳແໜ່ງຮອງລັດຖະມົນຕີກະຊວງການຕ່າງປະເທດ. ດ້ວຍຈຸດປະສົງເພື່ອຢາກໃຫ້ຄົນລາວ ທົ່ວໄປ ໂດຍສະເພາະ ຄົນລຸ້ນຫລັງຮູ້ຈັກສະພາບຄວາມເປັນຈິງ ທາງການເມືອງ ແລະ ປະຫວັດສາດຂອງລາວ, ພົງສະຫວັດ ບຸບຜາ ຈຶ່ງໄດ້ອຸທິດເວລາແລະເຫື່ອແຮງ ເພື່ອຄົ້ນຄວ້າແລະຂຽນປຶ້ມ " ການຂະຫຍາຍຕົວຂອງລັດລາວ " ອອກສູ່ສາຍຕາຂອງທ່ານ ຜູ້ອ່ານໂດຍໄດ້ພະຍາຍາມຊ້ຳໃຫ້ເຫັນໄລຍະປະຫວັດສາດ ຂອງລາວທີ່ໄດ້ຕົກຢູ່ໃຕ້ ລະບອບລ່າເມືອງຂຶ້ນແບບເກົ່າແລະໃໝ່ ຈົນເຖິງກາຍເປັນສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ. ຍ້ອນເຫັນວ່າປຶ້ມນີ້ນອກຈາກເປັນການສະແດງເຖິງ ຄວາມສາມາດທາງດ້ານວິຊາການ ຄົ້ນຄວ້າແລ້ວກໍຍັງ ເປັນຜົນງານເພີ່ມເຕີມໃນລະດັບອັນແນ່ນອນໃຫ້ແກ່ສັງຄົມເຮົາເພື່ອຊ່ວຍໃຫ້ນັກຄົ້ນຄ້ວາ, ນັກອ່ານ ແລະ ຜູ້ທີ່ສົນໃຈທັງຫລາຍເຂົ້າໃຈເນື້ອໃນ ແຫ່ງການຂະຫຍາຍຕົວຂອງລັດລາວ.....